# ການຈັດການຮຽນ-ການສອນພາສາລາວ ເລື່ອງ ການອ່ານຈັບໃຈຄວາມ ໂດຍໃຊ້ວິທີສອນແບບຮ່ວມມືເທັກນິກ STAD ສຳລັບນັກສຶກສາປີ1 ລະບົບ 12 +4 ສາຍຄູພາສາລາວ-ວັນນະຄະດີວິທະຍາໄລຄູຫຼວງພະບາງ ສົກ 2014-2015

ທອມ ຈະເລີນສີ

ວິທະຍານິພົນປະລິນຍາໂທ ສຶກສາສາດ

ສາຂາວິຊາ ຫຼັກສູດ ແລະ ການສອນ

ຄະນະສຶກສາສາດ

ມະຫາວິທະຍາໄລແຫ່ງຊາດລາວ

**FED0124/15**

# ການຈັດການຮຽນ-ການສອນພາສາລາວ ເລື່ອງ ການອ່ານຈັບໃຈຄວາມ ໂດຍໃຊ້ວິທີສອນແບບຮ່ວມມືເທັກນິກ STAD ສຳລັບນັກສຶກສາ ປີ 1 ລະບົບ 12 +4 ສາຍຄູພາສາລາວ-ວັນນະຄະດີວິທະຍາໄລຄູຫຼວງພະບາງ ສົກ 2014-2015

**THE TEACHING - LEARNING LAO LANQUAGE : BY USING STAD FOR YEAR 1 STUDENTS, 12+4 SYSTEM , LAO LAN QUAGE SECTION AT LUANG PRABANG TEACHER TRAINING COLLEGE 2014-2015**

ທອມ ຈະເລີນສີ

ວິທະຍານິພົນເປັນສ່ວນໜຶ່ງຂອງການສຶກສາ

ຫຼັກສູດປະລິນຍາໂທສຶກສາສາດ

ສາຂາວິຊາຫຼັກສູດ ແລະ ການສອນ

ຄະນະສຶກສາສາດ

ມະຫາວິທະຍາໄລແຫ່ງຊາດລາວ

**FED0124/15**

ວິທະຍານິພົນສະບັບນີ້ ສະເໜີຕໍ່ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ

**ຫອມ ຈະເລີນສີ**

ຄະນະກຳມະການທີ່ປຶກສາ ແລະ ຄະນະກຳມະການສອບເສັງວິທະຍານິພົນ ໄດ້ມີການ ພິຈາລະນາ ວິທະຍານິພົນສະບັບນີ້ແລ້ວ ເຫັນວ່າສົມຄວນຮັບເປັນສ່ວນໜຶ່ງຂອງການສຶກສາຕາມຫຼັກສູດ ປະລິນຍາໂທສຶກສາສາດ ສາຂາວິຊາຫຼັກສູດ ແລະ ການສອນ ຂອງຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວໄດ້.

**ຄະນະກຳມະການທີ່ປຶກສາ**

**ປະທານກຳມະການ** ...............................
ຮສ. ດຣ. ໄຫງວ ແກ້ວສະດາ

**ກຳມະການ**.......................................
ອາຈານ ບຸດຕາ ສົມສະນິດ

**ຄະນະກຳມະການສອບເສັງວິທະຍານິພົນ**

**ປະທານກຳມະການ**...........................
ຮສ. ລຳໄມ ພິພັກຂະວົງ

**ກຳມະການ**....................................
ຮສ.ດຣ. ຄຳແສງ ທະລັງສີ

**ກຳມະການ**....................................
ຮສ. ບົວພັນ ລີເດດມູນສອນ

**ກຳມະການ**....................................
ຮສ.ດຣ ບຸນຈັນ ຄຸນພິລາພັນ

**ກຳມະການ** ...................................
ດຣ. ໜຽວ ສີລາວົງ

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ອະນຸມັດຮັບເອົາວິທະຍານິພົນສະບັບນີ້ ເປັນສ່ວນໜຶ່ງຂອງການສຶກສາຕາມຫລັກສູດປະລິນຍາໂທສຶກສາສາດ ສາຂາຫຼັກສູດ ແລະ ການສອນ ຂອງຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ.

**ຄະນະບໍດີ ຄະນະສຶກສາສາດ**

# ປະກາດກຽດຕິຄຸນ

ການສຶກສາແມ່ນເສັ້ນທາງນໍາໄປສູ່ແສງສະຫວ່າງທີ່ສົດໃສ ແລະ ຮຸ່ງເຮືອງສີວິໄລຂອງຈຸດມຸ່ງໝາຍໃນອານາຄົດ, ທຸກໆຄົນລ້ວນແຕ່ປາຖະໜາຢາກໃຫ້ຕົນເອງກ້າວເດີນໄປຕາມຄວາມມຸ່ງຫວັງຂອງຕົນທຸກຢ່າງ. ຂ້າພະເຈົ້າກໍເຊັ່ນດຽວກັນກ່ອນຈະກ້າວເດີນມາເຖິງຈຸດນີ້ແມ່ນໄດ້ຜ່ານຜ່າອຸປະສັກນາໆປະການ ແຕ່ດ້ວຍການຊ່ວຍເຫຼືອຈາກພາກສ່ວນຕ່າງໆ ເປັນຕົ້ນແມ່ນ ສະຖາບັນການສຶກສາ, ຄູອາຈານຂະແໜງວິຊາສະເພາະ, ຄອບຄົວ ແລະ ເພື່ອນສະຫາຍທຸກຄົນຈຶ່ງເຮັດໃຫ້ຂາພະເຈົ້າກ້າວມາເຖິງຈຸດນີ້

ດັ່ງນັ້ນຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອມາຫຍັງສະຖາບັນການສຶກສາວິທະຍາໄລຄູຫຼວງພະບາງເຊິ່ງເປັນສະຖາບັນແຫ່ງສຶກສາຄົ້ນຄວ້າຂອງຂ້າພະເຈົ້າ. ຂໍຂອບໃຈມາຍັງຄະນະນໍາມະຫາວິທະຍາໄລແຫ່ງຊາດ ທຸກທ່ານ ທີ່ໄດ້ຊີ້ທິດເຍືອງທາງແກ່ຂ້າພະເຈົ້າຕະຫຼອດໄລຍະເວລາທີ່ສຶກສາຫຼັກສູດ ແລະ ຂຽນບົດວິທະຍານິພົນຈົນສໍາເລັດ, ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງມາຍັງຄູອາຈານທີ່ຢູ່ມະຫາວິທະຍາໄລແຫ່ງຊາດໂດຍສະເພາະແມ່ນຄູອາຈານທີ່ສອນຢູ່ໃນສາຂາຫຼັກສູດ ແລະ ການສອນທີ່ໄດ້ເອົາໃຈໃສ່ຕໍ່ວຽກງານການສິດສອນ ທຸ່ມເທຖ່າຍທອດຄວາມຮູ້ອັນປະເສີດເລີດລໍ້າ ແລະ ໃຫ້ການສະໜັບສະໜູນທີ່ດີແກ່ຂ້າພະເຈົ້າມາໂດຍຕະຫຼອດ, ຂໍຂອບໃຈມາຍັງຄະນະຮັບຜິດຊອບການຂຽນບົດລາຍງານ ແລະ ອາຈານທີ່ເປີກສາທີ່ໄດ້ໃຫ້ຄໍາແນະນໍາ ເປີກສາຫາລື ແລະ ໃຫ້ຄວາມຊ່ວຍເຫຼືອໃນການຂຽນບົດລາຍງານຂອງຂ້າພະເຈົ້າ ໃຫ້ມີເນື້ອໃນທີ່ສົມບູນຂຶ້ນ, ຂໍຂອບໃຈມາຍັງຄະນະບໍດີກໍຄືຄູອາຈານສາຂາຫຼັກສູດ ແລະ ການສອນຕະລອດຮອດນັກສຶກສາວິທະຍາໄລຄູຫຼວງພະບາງໂດຍສະເພາະຫ້ອງປີ 1 ຂ ລະບົບ 12+4 ສາຍພາສາລາວ-ວັນນະຄະດີ ທີ່ໄດ້ໃຫ້ຄວາມຮ່ວມມືໃນການວິໄຈຂອງຂ້າພະເຈົ້າໃນຄັ້ງນີ້, ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງຄະນະຮັບຜິດຊອບຫ້ອງສະໝຸດ ແລະ ຫ້ອງ ICT ທີ່ໄດ້ອໍານວຍຄວາມສະດວກ, ຊ່ວຍເຫຼືອ ແລະ ຕອບສະໜອງຂໍ້ມູນຂ່າວສານຕ່າງໆ ໃຫ້ແກ່ການຂຽນບົດລາຍງານ ກໍຄືການສຶກສາຄົ້ນຄວ້າຂອງຂ້າພະເຈົ້າສະເໜີມາຈົນສໍາເລັດຜົນ.

ສຸດທ້າຍນີ້; ຂ້າພະເຈົ້າຂໍອວຍໄຊໃຫ້ພອນແດ່ທຸກໆທ່ານຈົ່ງມີສຸຂະພາບເຂັ້ມແຂງ, ມີພາລະນາໄມສົມບູນ ແລະ ປະສົບຜົນສໍາເລັດໃນໜ້າທີ່ວຽກງານທຸກປະການດັ່ງຄໍາອວຍພອນທີ່ວ່າ ພອນໃດທີ່ປະເສີດ ສຸກໃດທີ່ເລີດລໍ້າຈົ່ງບັງເກີດແດ່ທຸກທ່ານຕະຫຼອດໄປເທີ້ດ.

**ຫົວຂໍ້ວິທະຍານິພົນ:** ການຈັດການຮຽນ-ການສອນພາສາລາວ ເລື່ອງ ການອ່ານຈັບໃຈຄວາມໂດຍໃຊ້ວິທີສອນແບບຮ່ວມມືເທັກນິກ STAD ສຳລັບນັກສຶກສາປີ 1 ລະບົບ 12 +4 ສາຍຄູພາສາລາວ-ວັນນະຄະດີວິທະຍາໄລຄູຫຼວງພະບາງ ສົກ 2014-2015

**ຜູ້ຄົ້ນຄວ້າ:** ຫອມ ຈະເລີນສີ

**ປະລິນຍາ:** ປະລິນຍາໂທສຶກສາສາດ, ສາຂາວິຊາ ຫຼັກສູດ ແລະ ການສອນ
ມະຫາວິທະຍາໄລແຫ່ງຊາດ, 2015

**ທີ່ປຶກສາວິທະຍານິພົນ:** ຣສ. ດຣ. ໄຫງວ ແກ້ວສະດາ
ອາຈານ ບຸດຕາ ສົມສະນິດ
158 ໜ້າ, MFED0053/11


# ບົດຄັດຫຍໍ້


ການຈັດກິດຈະກຳການຮຽນຮູ້ແບບເທັກນິກ STAD ເປັນການຈັດກິດຈະກຳການຮຽນຮູ້ທີ່ສະໜັບສະໜູນໃຫ້ນັກຮຽນໄດ້ຮຽນຮູ້ຮ່ວມກັນເປັນກຸ່ມຂະໜາດນ້ອຍໂດຍເປີດໂອກາດໃຫ້ສະມາຊິກໃນກຸ່ມໄດຊ່ວຍເຫຼືອກັນ, ແລະ ປະຕິບັດກິດຈະກຳຮ່ວມກັນເສີມສ້າງຄວາມສຳເລັດຂອງວຽກງານທີ່ໄດ້ຮັບມອບໝາຍແລະ ຜູ້ຮຽນໃຊ້ທັກສະການເຮັດວຽກກຸ່ມ, ມີທັກສະທາງສັງຄົມ. ການສຶກສາຄັ້ງນີ້ມີຈຸດປະສົງ

1. ເພື່ອຊອກຫາປະສິດທິພາບຂອງບົດສອນ ເລື່ອງ ການອ່ານຈັບໃຈຄວາມ ໂດຍການຮຽນແບບຮ່ວມມືເທັກນິກ STAD ທີ່ມີປະສິດທິພາບຕາມເກນ 80/80

2. ເພື່ອຊອກຫາປະສິດທິຜົນຂອງການຮຽນ ເລື່ອງ ການອ່ານຈັບໃຈຄວາມໂດຍການຮຽນແບບຮ່ວມມື ເທັກນິກ STAD

3. ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກິດຈະກຳ ການສອນ ເລື່ອງການອ່ານຈັບໃຈຄວາມໂດຍການຮຽນແບບຮ່ວມມື ຕາມເທັກນິກ STAD

ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ໄດ້ແກ່ນັກສຶກສາຊັ້ນປະລິນຍາຕີ ປີ 1 ຂ ລະບົບ 12+4 ສາຍພາສາລາວ-ວັນນະຄະດີພາກຮຽນທີ 1 ປີສຶກສາ 2014 ວິທະຍາໄລຄູຫຼວງພະບາງຈຳນວນ 30 ຄົນໄດ້ມາໂດຍການເລືອກແບບເຈາະຈົງ, ເຄື່ອງມືໃນການສຶກສາຄົ້ນຄວ້າໄດ້ແກ່

1. ແຜນການຈັດກິດຈະກຳການຮຽນຮູ້ແບບSTAD ເລື່ອງການອ່ານຈັບໃຈຄວາມຊັ້ນປະລິນຍາຕີປີທີ່ 1 ຈຳນວນ 5 ແຜນໃຊ້ເວລາການຮຽນແຜນລະ 2 ຊົ່ວໂມງລວມ 10 ຊົ່ວໂມງ

2. ແບບທົດສອບວັດຜົນສຳເລັດທາງການຮຽນເປັນແບບປາລາໄນ 4 ຕົວເລືອກຈຳນວນ 40 ຂໍ້, ມີຄ່າອຳນາດຈຳແນກ p ຕັ້ງແຕ່ 0.31- 0.80 ມີຄ່າອຳນາດຈຳແນກ r ເທົ່າກັບ 0.13-0.75.

3. ແບບວັດຄວາມເພິ່ງພໍໃຈໃນການຮຽນເປັນແບບມາດຕາສ່ວນ 5 ລະດັບ, ຈຳນວນ 24 ຂໍ້, ມີຄວາມເຊື່ອໝັ້ນ rxy= 0.8 ຄ່າຄວາມເຊື່ອໝັ້ນ $\alpha$ = 0,88 ສະຖິຕິທີໃຊ້ໃນການວິເຄາະຄ່າສະເລ່ຍ ແລະ ຜັນປ່ຽນມາດຕະຖານ

**ຜົນການສຶກສາຄົ້ນຄວ້າມີດັ່ງນີ້**

1. ແຜນການຈັດກິດຈະກຳການຮຽນຮູ້ແບບSTAD ເລື່ອງການອ່ານຈັບໃຈຄວາມກຸ່ມສາລະການຮຽນຮູ້ພາສາລາວຊັ້ນປະລິນຍາຕີປີທີ 1 ມີປະສິດທິພາບເທົ່າກັບ 82.33/85,33

2. ດັດຊະນີປະສິທິຜົນຂອງແຜນການຈັດກິດຈະກຳການຮຽນຮູ້ແບບSTAD ເລື່ອງການອ່ານຈັບໃຈຄວາມກຸ່ມສາລະການຮຽນຮູ້ພາສາລາວຊັ້ນປະລິນຍາຕີປີທີ 1 ມີຄ່າເທົ່າກັບ0.6879 ໝາຍຄວາມວ່ານັກສຶກສາມີຄວາມກ້າວໜ້າທາງການຮຽນຄິດເປັນສ່ວນຮ້ອຍ 68.79 ເປີເຊັນ

3. ນັກສຶກສາຊັ້ນປະລິນຍາຕີປີທີ 1 ມີຄວາມເພິ່ງພໍໃຈໃນການຈັດກິດຈະກຳການຮຽນຮູ້ແບບSTAD ເລື່ອງການອ່ານຈັບໃຈຄວາມໂດຍລວມ ຢູ່ໃນລະດັບຫຼາຍ

ໂດຍສະຫຼຸບແຜນການຈັດກິດຈະກຳການຮຽນຮູ້ແບບSTAD ກຸ່ມສາລະການຮຽນຮູ້ພາສາລາວນັກສຶກສາຊັ້ນປະລິນຍາຕີປີທີ 1 ມີປະສິທິພາບ ແລະ ປະສິທິຜົນເໝາະສົມສາມາດນຳໄປປະຍຸກໃຊ້ພັດທະນາການຮຽນຮູ້ຂອງຜູ້ຮຽນດ້ານການອ່ານຈັບໃຈຄວາມ ແລະ ເຮັດໃຫ້ນັກຮຽນມີຜົນສຳເລັດສູງຂຶ້ນ ເກີດມີຄວາມເພິ່ງພໍໃຈໃນການຮຽນຮູ້ສາມາດນຳໄປໃຊໃນການຈັດການຮຽນ-ການສອນພາສາລາວ ແລະ ກຸ່ມອື່ນໆ.

**TITLE:** THETEA CHING - LEANIND LAO LANQUAGE: BYUSING STAD FOR YEAR 1 STUDENTS, 12+4 SYSTEM, LAO LANQUAGE SECTION AT LUANG PRABANG TEACHER TRAINING COLLEGE 2014-2015

**RESEARCHER:** HOME CHALEARNSY

**DEGEE:** MASTER OF EDUCATION PROGRAM IN CURRICULUM AND INSTRUCTION, NATIONAL UNIVERSITY OF LAOS, 2015

**THESIS ADVISORS:** ASSOC.PROF. Dr. NGOUAY KEOSADA
NOUTTA SOMSANIDH
158 PAGES, MFED0053/11

# ABSTRACT

The Student Teams Achievement Divisions (STAD) is the teaching method which supports students to work collaboratively. Students will maximize their chance to help each other to achieve the assigned tasks. Apart from this, students will have the skills to work as a team and they can socialize with others.

**The purposes of the research were as follows:**

1. to identify the effectiveness of the lesson plans based on the skim reading by using STAD with the set criteria of 80/80.
2. to identify the efficiency of the lesson plans based on the skim reading by using STAD.
3. to investigate the satisfaction of students on their learning by skim reading activities through the using of STAD technique.

The sampling group was Year 1 students 12+4 Lao Language-Literature Program, the research was conducted in the first semester of the academic year 2014 in Luang Prabang Teacher Training College. The number of the sample group was 30 students selected by the “purposive sampling “ method.

**The instruments were:**

1. five lesson plans on how to get the main idea from reading by using the STAD technique. Each lesson plan took 2 hours and totally 10 hours.

2. pre and post tests were used to test students’ learning outcomes. There were 40 questions with 4 choices. The discrimination levels ranging from p=0.36 to 0.88, while the Alpha coefficient levels ranging from r=0.13 to 0.75.

3. Questionnaire was designed to test students’ satisfaction with 5 different scales. There were 24 questions with the discrimination levels from rxy=0.30 -0.60, the Alpha coefficient (a) =0.88.

The statistics used to analyze data were mean and standard deviation.

The research findings were as follows.

1. the effectiveness of the skim reading lesson plans by using STAD technique were 82.33/85.33.

2. an efficiency index of students' learning outcomes by using STAD was 0.6879 which means students made progress or 68.79 percent.

3. students were generally very satisfied with the activities using STAD.

In conclusion, using STAD technique in teaching Lao Language revealed good outcomes since it was very effective and efficient. Thus, it would be able to adapt into teaching how to read for the main idea to achieve better results in teaching skim reading.

# ສາລະບານ

**ໜ້າ**

ໜ້າອະນຸມັດ ..... i

ປະກາດກຽດຕິຄຸນ ..... ii

ບົດຄັດຫຍໍ້ (ພາສາລາວ) ..... iii

ບົດຄັດຫຍໍ້ (ພາສາອັງກິດ) ..... v

ສາລະບານ ..... vii

ສາລະບານຕາຕະລາງ ..... x

ສາລະບານພາບປະກອບ ..... xi

**ບົດທີ 1 ບົດນຳ ..... 1**

1. ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ ..... 1
2. ຄຳຖາມຂອງການຄົ້ນຄວ້າ ..... 2
3. ຈຸດປະສົງຂອງການຄົ້ນຄວ້າ ..... 2
4. ສົມມຸດຕິຖານຂອງການຄົ້ນຄວ້າ ..... 2
5. ຂອບເຂດຂອງການຄົ້ນຄວ້າ ..... 3
   5.1. ດ້ານປະຊາກອນ ແລະ ກຸ່ມຕົວຢ່າງ ..... 3
   5.2. ຂອບເຂດດ້ານເນື້ອໃນ ..... 3
   5.3. ຂອບເຂດດ້ານຕົວປ່ຽນ ..... 3
   5.4. ໄລຍະເວລາ ..... 4
6. ຂອບແນວຄິດໃນການຄົ້ນຄ້ວາ ..... 4
7. ນິຍາມສັບສະເພາະ ..... 4
8. ຜົນປະໂຫຍດຄາດວ່າຈະໄດ້ຮັບ ..... 5

**ບົດທີ 2 ແນວຄິດທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ ..... 6**

1. ຫຼັກສູດວິຊາພາສາລາວ 2 ..... 6
2. ແນວຄິດທິດສະດີການສອນແບບ STAD ..... 18
3. ແນວຄິດທິດສະດີກ່ຽວກັບວິທີການສ້າງແຜນການສອນ ..... 23

4. ແນວຄິດທິດສະດີກ່ຽວກັບການຫາປະສິທິພາບຂອງແຜນການສອນ............................... 25

5. ແນວຄິດທິດສະດີກ່ຽວກັບວິທີການສ້າງແບບທົດສອບ.................................................... 28

6. ທິດສະດີການຫາຄຸນນະພາບຂອງຂໍ້ສອບ........................................................................ 33

7. ແນວຄິດທິດສະດີກ່ຽວກັບວິທີສ້າງແບບວັດຄວາມເພິ່ງພໍໃຈໃນການຮຽນຮູ້...................... 38

8. ບົດຄົ້ນຄວ້າທີ່ກ່ຽວຂອງ................................................................................................ 41

**ບົດທີ 3 ວິທີດຳເນີນການສຶກສາ..........................................................................................44**

1. ປະຊາກອນ ແລະ ກຸ່ມຕົວຢ່າງ......................................................................................... 44

1.1. ປະຊາກອນ ................................................................................................................. 44

2. ເນື້ອໃນທີນຳມາໃຊ້ໃນການທົດລອງ ................................................................................ 44

3. ໄລຍະເວລາທີ່ດຳເນີນການທົດລອງ.................................................................................. 44

4. ເຄື່ອງມືທີໃຊ້ໃນການທົດລອງ.......................................................................................... 45

4.1. ເຄື່ອງມືສຳລັບພັດທະນານັກຮຽນ ປະກອບດ້ວຍ ............................................................ 45

4.2. ເຄື່ອງມືທີໃຊ້ເກັບຂໍ້ມູນ ປະກອບດ້ວຍ ........................................................................... 45

5. ການສ້າງ ແລະ ການກວດສອບຄຸນນະພາບຂອງແຜນການສອນ.......................................... 46

6. ການສ້າງ ແລະ ການກວດສອບຄຸນນະພາບບົດທົດສອບ.................................................... 47

7. ການວິເຄາະຂໍ້ມູນ ......................................................................................................... 48

8. ສະຖິຕິທີໃຊ້ໃນການວິເຄາະຂໍ້ມູນ ................................................................................... 49

**ບົດທີ 4 ການວິເຄາະຂໍ້ມູນ................................................................................................52**

1. ຜົນການວິເຄາະປະສິດທິພາບຂອງບົດສອນ...................................................................... 52

1.1 ຜົນການວິເຄາະປະສິດທິພາບຂອງຂະບວນການຈັດການຮຽນ-ການສອນ ($E_1$)........... 52

1.2 ຜົນການວິເຄາະປະສິດທິພາບຂອງຜົນການຮຽນ ($E_2$) ....................................... 54

1.3 ຜົນການວິເຄາະປະສິດທິພາບ ($E_1/E_2$) ......................................................... 55

2. ຜົນການວິເຄາະປະສິດທິຜົນການຮຽນ............................................................................ 56

3. ຜົນການວິເຄາະປະສິດທິພາບຄວາມເພິ່ງພໍໃຈ ................................................................ 56

**ບົດທີ 5 ສະຫລຸບຜົນ ອະພິປາຍຜົນ ແລະ ຂໍ້ສະເໜີແນະ ......................................................59**

1. ສະຫລຸບຜົນ ................................................................................................................ 59

2. ອະພິປາຍຜົນ ........................................................................................ 59

3. ຂໍ້ສະເໜີແນະ ........................................................................................ 61

3.1 ຂໍ້ສະເໜີແນະໃນການນຳໄປໃຊ້........................................................................ 61

3.2 ຂໍ້ສະເໜີແນະໃນການສຶກສາຄົ້ນຄວ້າເທື່ອຕໍ່ໄປ ................................................ 61

**ເອກະສານອ້າງອີງ ........................................................................................63**

**ເອກະສານຊ້ອນທ້າຍ ........................................................................................66**

ກ. ໜັງສືສະເໜີຕ່າງໆ ........................................................................................67

ຂ. ເຄື່ອງມືໃນການຄົ້ນຄວ້າແບບຕ່າງໆ........................................................................71

ຄ. ລາຍຊື່ຜູ້ຊ່ຽວຊານກວດສອບເຄື່ອງມື ................................................................124

ງ. ດັດສະນີຄວາມສອດຄ່ອງ ........................................................................126

ຈ. ຄ່າຄວາມທ່ຽງຕົງຂອງເຄື່ອງມື ........................................................................139

**ປະຫວັດຂອງຜູ້ຄົ້ນຄວ້າ ........................................................................144**

# ສາລະບານຕາຕະລາງ

**ໜ້າ**

**ຕາຕະລາງທີ 1:** ຊື່ກຸ່ມ:...................................................................................... 21

**ຕາຕະລາງທີ 2:** ແຜນເວລາການຈັດກິດຈະກຳການຮຽນ-ການສອນ .......................................... 44

**ຕາຕະລາງທີ 3:** ສະແດງປະສິດທິພາບຂະບວນການຮຽນ-ການສອນແຕ່ລະບົດສອນ (E1). ............... 52

**ຕາຕະລາງທີ 4:** ສະແດງປະສິດທິພາບຂອງຜົນການຮຽນ (E2)................................................ 54

**ຕາຕະລາງທີ 5:** ສະແດງປະສິດທິພາບບົດ. (E1/E2)........................................................... 55

**ຕາຕະລາງທີ 6:** ສະແດງດັດສະນີປະສິທິຜົນ ...................................................................... 55

**ຕາຕະລາງທີ 7:** ຜົນການວິເຄາະຄວາມພຶງພໍໃຈຂອງນັກສຶກຕໍ່ການສອນ..................................... 56

# ສາລະບານພາບປະກອບ

**ໜ້າ**

**ພາບປະກອບທີ 1:** ຂອບແນວຄິດໃນການຄົ້ນຄວ້າ ................................................................4

**ພາບປະກອບທີ 2:** ຂັ້ນຕອນການສອນແບບ STAD ..........................................................22

**ພາບປະກອບທີ 3:** ສະຫຼຸບຂະບວນການທັງໝົດ ................................................................51

# ບົດທີ 1

# ບົດນຳ

## 1. ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ

ການອ່ານແມ່ນທັກສະໜຶ່ງທີ່ມີຄວາມສຳຄັນ ແລະ ຈຳເປັນທີ່ສຸດໃນຂະບວນການຮຽນຮູ້ເພື່ອພັດທະນາສະຕິປັນຍາ, ເປັນໝາກຫົວໃຈຂອງການພັດທະນາທັກສະທາງພາສາທຸກດ້ານບໍ່ວ່າຈະເປັນການເວົ້າ, ການຟັງ ແລະ ການຂຽນ. ການອ່ານແມ່ນຂະບວນການຄົ້ນຄ້ວາຫາຄວາມໝາຍຈາກເນື້ອເລື່ອງ ຫຼື ຂໍ້ຄວາມທີ່ຜູ້ຂຽນໄວ້ເຊິ່ງເລີ່ມຈາກການຮັບຮູ້ຄຳ, ການອອກສຽງຂອງຄຳ, ການຮູ້ຄວາມໝາຍຂອງຄຳ,ການຕີຄວາມໝາຍ ເພື່ອນຳໄປໃຊ້ໃຫ້ເກີດປະໂຫຍດ ສະນັ້ນການອ່ານມີຄວາມຈຳເປັນສຳລັບ ນັກສຶກສາ ເພາະການອ່ານແມ່ນການຊອກຫາຂໍ້ມູນ, ຂ່າວສານຕ່າງໆຈາກສິ່ງພິມ; ການອ່ານມີຄວາມສຳຄັນໃນຊີວິດປະຈຳວັນເພື່ອຊ່ວຍໃຫ້ຮູ້ເຫດການທີ່ປ່ຽນແປງໄປໂດຍສະເພາະໃນປັດຈຸບັນແມ່ນຍຸກແຫ່ງການສື່ສານໄຮ້ພົມແດນ (ຍຸກໂລກາພິວັດ) ເຮັດໃຫ້ທັນສະພາບການ ຕໍ່ຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເທັກໂນໂລຊີໃໝ່ໆ, ເຮັດໃຫ້ເຮົາໄດ້ຮັບຄວາມຮູ້, ຄວາມເຂົ້າໃຈເພື່ອນຳມາຊ່ວຍໃນການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ. ການອ່ານເປັນເຄື່ອງມືສຳຄັນໃນການສະແຫວງຫາຄວາມຮູ້ເພາະວິຊາຄວາມຮູ້ຕ່າງໆຢູ່ໃນໂລກນີ້ມີຢ່າງລວງຫຼາຍ, ເຫດການຕ່າງໆ ແລະ ການເຄື່ອນໄຫວຈາກທຸກມູມໂລກເຮົາຈະຮູ້ໄດ້ຈາກການອ່ານ, ການອ່ານເປັນພື້ນຖານໃນການຮຽນວິຊາຕ່າງໆຕ້ອງອາໄສການອ່ານເປັນຕົ້ນຕໍນອກຈາກນັ້ນການອ່ານເຮັດໃຫ້ຜູ້ອ່ານສາມາດເຝິກອ່ານໃຫ້ຄ່ອງແຄ້ວ ແລະ ປະຢັດເວລາໃນການອ່ານ ສາມາດຈັບໃຈຄວາມສຳຄັນຂອງເລື່ອງໄດ້, ການອ່ານຈະຊ່ວຍໃຫ້ມີຄວາມຮູ້ກວ້າງໄກ, ມີທັດສະນະຄະຕິທີ່ດີ ສາມາດນຳເອົາຄວາມຮູ້ໄປພັດທະນາໃນການປະກອບອາຊີບ, ການອ່ານຍັງຊ່ວຍໃຫ້ເຮົາເພີດເພີນມ່ວນຊື່ນຕາມຈິນຕະນາການຂອງຜູ້ແຕ່ງ ມີຄຸນຄ່າທາງອາລົມ, ສັງຄົມ, ມີວິໄສທັດທີ່ກວ້າງໄກທີ່ເປັນແນວທາງຊ່ວຍໃນການພັດທະນາຄຸນນະພາບຊີວິດໃຫ້ດີຂຶ້ນເລື້ອຍໆ. ໃນໄລຍະຜ່ານມາການດຳເນີນກິດຈະກຳການຮຽນ-ການສອນພາສາລາວຢູ່ວິທະຍາໄລຄູຫຼວງພະບາງຍັງມີລັກສະນະແບບລວມໆບໍ່ໄດ້ເຈາະຈີງລົງເລິກໂດຍສະເພາະ ແມ່ນການສອນ ອ່ານເພື່ອຈັບໃຈຄວາມສຳຄັນ ຄູສອນພົບບັນຫານັກຮຽນບໍ່ສາມາດວິເຄາະ, ສັງເຄາະ ແລະ ສະຫຼຸບບັນຫາໄດ້. ນັກຮຽນບໍ່ມີຄວາມຫ້າວຫັນ, ເກີດມີຄວາມເບື່ອໜ່າຍບໍ່ມັກອ່ານໜັງສື ອີກຢ່າງໜຶ່ງສັງຄົມລາວບັນຫາໃນການອ່ານຍັງບໍ່ທັນສູງຖ້າທຽບໃສ່ບັນດາປະເທດທີ່ພັດທະນາແລ້ວ, ປະກົດການດັ່ງກ່າວອາດເປັນສາເຫດມາຈາກການປູກຈິດສຳນຶກໃນການຮັກອ່ານຂອງຄົນລາວຍັງບໍ່ທັນ ເລິກເຊິ່ງ ແລະ ບໍ່ທັນເຫັນຄວາມຈຳເປັນຂອງການອ່ານ ພ້ອມດຽວກັນນັ້ນ, ໃນຂະບວນການຮຽນ-ການສອນຂອງຄູຍັງບໍ່ທັນໜັກແໜ້ນ.

ການພັດທະນາ ແລະ ປັບປຸງວິທີການຈັດການຮຽນ-ການສອນຂອງຄູອາຈານກໍເປັນສິ່ງສຳຄັນໃນການພັດທະນາວິຊາຊີບຄູ; ສະນັ້ນຜູ້ຄົ້ນຄ້ວາໄດ້ສຶກສາ ວິທີການຈັດການຮຽນ-ການສອນແບບຮ່ວມມືເທັກນິກ STAD ເຫັນວ່າມີຄວາມຈຳເປັນ ແລະ ສຳຄັນຫຼາຍ ເພາະ ມີນັກຄົ້ນຄ້ວາຫຼາຍທ່ານທີ່ໄດ້ນຳໃຊ້ ແລະ ທົດ

ລອງວິທີສອນແບບນີ້ ເຫັນວ່າມີຜົນດີຫຼາຍເປັນຕົ້ນແມ່ນ Johnson and Johnson (1992:44 ອ້າງຈາກ ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ 2545). ແລະ ຜູ້ອື່ນໆ ເພາະການຮຽນ-ການສອນແບບນີ້ສົ່ງເສີມໃຫ້ຜູ້ຮຽນເອົາໃຈໃສ່ຮັບຜິດຊອບຕໍ່ຕົວເອງ, ມີຄວາມຕື່ນຕົວ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີແນວຄິດແຂ່ງຂັນກັນ.

ດ້ວຍເຫດຜົນດັ່ງກ່າວ ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າຈຶ່ງມີຄວາມຕ້ອງການຢາກທົດລອງສອນອ່ານຈັບໃຈຄວາມໂດຍວິທີສອນແບບ STAD ສຳລັບນັກສຶກສາປີ 1 ລະບົບ 12+4 ສາຍຄູພາສາລາວ-ວັນນະຄະດີທີ່ວິທະຍາໄລຄູຫຼວງພະບາງ ແລະ ຮັບເອົາມາເປັນບົດຄົ້ນຄວ້າ ເພື່ອປະກອບເຂົ້າໃນການຂຽນວິທະຍານິພົນໃນວິທີສອນແບບນີ້. ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ສ້າງຄຳຖາມຄົ້ນຄວ້າອອກຄືດັ່ງນີ້:

## 2. ຄຳຖາມຂອງການຄົ້ນຄວ້າ

1. ປະສິທິພາບຂອງບົດສອນ ເລື່ອງ ການອ່ານຈັບໃຈຄວາມໂດຍການຮຽນແບບ STAD ຈະເປັນແນວໃດໃດ ?

2. ປະສິທິຜົນການຮຽນເລື່ອງ ການອ່ານຈັບໃຈຄວາມໂດຍການຮຽນແບບ STAD ຈະຢູ່ໃນລະດັບໃດ?

3. ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກິດຈະກຳ ການຮຽນ-ການສອນ ເລື່ອງ ການອ່ານຈັບໃຈຄວາມໂດຍການຮຽນ ແບບ STADຈະເປັນແນວໃດ ?

## 3. ຈຸດປະສົງຂອງການຄົ້ນຄວ້າ

1. ເພື່ອສຶກສາປະສິດທິພາບຂອງບົດສອນ ເລື່ອງ ການອ່ານຈັບໃຈຄວາມ ໂດຍການຮຽນແບບຮ່ວມມືເທັກນິກ STAD ທີ່ມີປະສິດທິພາບຕາມເກນ 80/80.

2. ເພື່ອສຶກສາປະສິດທິຜົນການຮຽນຂອງນັກສຶກສາ ເລື່ອງ ການອ່ານຈັບໃຈຄວາມໂດຍການຮຽນແບບ STAD.

3. ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກິດຈະກຳ ການສອນ ເລື່ອງການອ່ານຈັບໃຈຄວາມໂດຍການຮຽນແບບ STAD.

## 4. ສົມມຸດຕິຖານຂອງການຄົ້ນຄວ້າ

1. ປະສິດທິພາບຂອງບົດສອນ ເລື່ອງ ການອ່ານຈັບໃຈຄວາມໂດຍການຮຽນແບບ STAD ສູງກວ່າເກນກຳນົດ.

2. ປະສິດທິຜົນການຮຽນ ເລື່ອງ ການອ່ານຈັບໃຈຄວາມໂດຍການຮຽນແບບ STAD ແມ່ນດີຫຼາຍ

3. ນັກສຶກສາມີຄວາມເພິ່ງພໍໃຈຕໍ່ການສອນ ເລື່ອງ ການອ່ານຈັບໃຈຄວາມໂດຍການຮຽນແບບ STAD.

## 5. ຂອບເຂດຂອງການຄົ້ນຄວ້າ

### 5.1. ດ້ານປະຊາກອນ ແລະ ກຸ່ມຕົວຢ່າງ

- **ປະຊາກອນ**

ໃນການຄົ້ນຄວ້າຄັ້ງນີ້ໄດ້ກຳນົດເອົານັກສຶກສາປີ 1 ລະບົບ 12+4 ສາຍຄູພາສາລາວວັນນະຄະດີ ຈຳນວນ 69 ຄົນ, ຍິງ 34 ຄົນ.

- **ກຸ່ມຕົວຢ່າງ**

ເປັນນັກສຶກສາປີ 1 ຫ້ອງ ຂ. ລະບົບ 12+4 ສາຍຄູພາສາລາວ-ວັນະຄະດີຈຳນວນ 30 ຄົນຍິງ 20 ຄົນໄດ້ມາໂດຍການເລືອກແບບເຈາະຈົງ.

### 5.2. ຂອບເຂດດ້ານເນື້ອໃນ

- **ດ້ານເນື້ອໃນ**

ການທົດລອງຄັ້ງນີ້ແມ່ນວິຊາ ພາສາລາວ2 ລະບົບ 12+4 ສາຍຄູພາສາລາວ-ວັນນະຄະດີ, ເຊິ່ງມີປະເດັນສຳຄັນດັ່ງນີ້:

1. ບັນຫາໃນການອ່ານໃນໃຈ
2. ການເຝິກອ່ານເພື່ອຄວາມເຂົ້າໃຈ
3. ອັດຕາຄວາມໄວໃນການອ່ານໃນໃຈ
4. ການເຝິກອ່ານໃນໃຈ
5. ທົດສອບຄວາມໄວໃນການອ່ານໃນໃຈ

- **ດ້ານວິທີການສອນ**

ໃນການຄົ້ນຄວ້າ ຄັ້ງນີ້ຜູ້ຄົ້ນຄວ້າແມ່ນໄດ້ນຳໃຊ້ວິທີການຮຽນ-ການສອນ ແບບ STAD

### 5.3. ຂອບເຂດດ້ານຕົວປ່ຽນ

- **ຕົວປ່ຽນຕົ້ນ**

-ວິທີການສອນ ແບບ STAD

- **ຕົວປ່ຽນຕາມ**

- ປະສິດທິພາບຂອງບົດສອນ ເລື່ອງການອ່ານຈັບໃຈຄວາມ ໂດຍການຮຽນແບບ STAD
- ປະສິດທິຜົນການຮຽນ ເລື່ອງການອ່ານຈັບໃຈຄວາມ ໂດຍການຮຽນແບບ STAD

-ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນ ເລື່ອງ ການອ່ານຈັບໃຈຄວາມໂດຍການຮຽນແບບ STAD

### 5.4. ໄລຍະເວລາ

ການຄົ້ນຄວ້າຄັ້ງນີ້ແມ່ນດໍາເນີນການໃນພາກຮຽນ 2 ສົກຮຽນ 2014-2015

## 6. ຂອບແນວຄິດໃນການຄົ້ນຄົ້ວາ




**ພາບປະກອບທີ 1:** ຂອບແນວຄິດໃນການຄົ້ນຄວ້າ

## 7. ນິຍາມສັບສະເພາະ

**(STAD)** ໝາຍເຖິງການຈັດກິດຈະກໍາການຮຽນ-ການສອນໂດຍແບ່ງນັກ ຮຽນອອກເປັນກຸ່ມຍ່ອຍກຸ່ມລະ 4-5 ຄົນແຕ່ລະກຸ່ມມີນັກຮຽນທີ່ມີຄວາມແຕກຕ່າງກັນທາງດ້ານຄວາມຮູ້, ຄວາມສາມາດຄື: ເກັ່ງ, ກາງ,ອ່ອນ ໃນອັດສ່ວນເທົ່າກັນໂດຍກໍານົດໃຫ້ສະມາຊິກຂອງກຸ່ມໄດ້ຮຽນຮູ້ເນື້ອໃນທີ່ຜູ້ສອນໄດ້ຕຽມໄວ້ເຮັດການທົດລອງຄວາມຮູ້. STAD ຫຍໍ້ມາຈາກ: Student Teams Achievement Division

**ການອ່ານຈັບໃຈຄວາມ** ໝາຍເຖິງການອ່ານເພື່ອຄວາມເຂົ້າໃຈເນື້ອໃນສິ່ງທີ່ອ່ານຢ່າງລະອຽດວ່າເລື່ອງນີ້ເວົ້າເຖິງຫຍັງສາມາດວິເຄາະ, ສັງເຄາະ ຕະຫຼອດຮອດເຈຕະນາລົມຂອງຜູ້ຂຽນ

**E.I** ໝາຍເຖິງປະສິດທິຜົນການຮຽນຂອງນັກສຶກສາທີ່ເປັນໄປຕາມຄວາມຄາດຫວັງທີ່ໄດ້ກໍານົດໄວ້ໃນຈຸດປະສົງ ຫຼື ເປົ້າໝາຍສະເພາະ

**E1** ໝາຍເຖິງເປີເຊັນຂອງຄະແນນສະເລ່ຍຂອງນັກຮຽນທີ່ໄດ້ຈາກການເຮັດກິດຈະກໍາຍ່ອຍໃນລະຫວ່າງຮຽນຂອງແຕ່ລະແຜນການສອນຂອງຜູ້ຮຽນ (ປະສິດທິພາບຂອງຂະບວນການຮຽນ) ຫຼື ໝາຍເຖິງການປະເມີນພຶດຕິກໍາຍ່ອຍໆຈາກການເຮັດກິດຈະກໍາຂອງນັກຮຽນໃນບົດຮຽນທຸກໆກິດຈະກໍາ

**E2** ໝາຍເຖິງເປີເຊັນຂອງຄະແນນສະເລ່ຍທີ່ໄດ້ຈາກການເຮັດບົດທົດສອບຫຼັງຈາກການຮຽນຂອງຜູ້ຮຽນຫຼື ຫຼັງທີ່ສອນແລ້ວ(ປະສິດທິພາບ ຫຼື ຜົນລັບການຮຽນ)ຫຼື ການປະເມີນຜົນລັບຂອງຜູ້ຮຽນໂດຍການພິຈາລະນາຈາກຄະແນນຜົນການທົດສອບຫຼັງການຮຽນຂອງນັກສຶກສາ

**ປະຊາກອນ** ໝາຍເຖິງກຸ່ມຄົນ,ສັດ,ສິ່ງຂອງຕ່າງໆຫຼືຄຸນລັກສະນະຂອງຈິດຕະວິທະຍາທີ່ຈະສຶກສາຄົ້ນຄວ້າວິໄຈ

## 8. ຜົນປະໂຫຍດຄາດວ່າຈະໄດ້ຮັບ

1. ຮູ້ປະສິດທິພາບຂອງບົດສອນແບບຮ່ວມມື ເທັກນິກ STAD .

2. ຮູປະສິດທິຜົນການຮຽນຂອງນັກສຶກສາ

3. ຮູ້ຄວາມເພິ່ງພໍໃຈຂອງນັກສຶກປີທີ 1, ລະບົບ 12+4 ສາຍຄູພາສາລາວ-ວັນນະຄະດີ ຕໍ່ກິດຈະກໍາການຮຽນ-ການສອນແບບຮ່ວມມື ເທັກນິກ STAD.

4. ເປັນຂໍ້ມູນໃຫ້ແກ່ຄູ ແລະ ຜູ້ສົນໃຈວິທີສອນແບບເທັກນິກ STAD. ເພື່ອພັດທະນາການຈັດການຮຽນ-ການສອນໃຫ້ດີຂື້ນ

5. ຮູ້ວິທີການສ້າງແຜນການສອນ ແບບຮ່ວມມື ເທັກນິກ STAD .

# ບົດທີ 2

# ແນວຄິດທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ໃນການຄົ້ນຄວ້າຄັ້ງນີ້ຜູ້ວິໄຈໄດ້ສະເໜີ ເອກະສານ, ທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ ເພື່ອສະແດງເຖິງອີງຄວາມຮູ້ ທີ່ນໍາມາໃຊ້ໃນການວິໄຈ ເຊິ່ງໄດ້ນໍາສະເໜີຢູ່ 8 ປະເດັນຕົ້ນຕໍຄື:

1. ຫຼັກສູດວິຊາ ພາສາລາວ 2
2. ແນວຄິດທິດສະດີການສອນແບບ STAD
3. ແນວຄິດທິດສະດີກ່ຽວກັບວິທີການສ້າງແຜນການສອນ
4. ແນວຄິດທິດສະດີກ່ຽວກັບວິທີການຫາຄຸນນະພາບຂອງແຜນການສອນ
5. ແນວຄິດທິດສະດີກ່ຽວກັບວິທີການສ້າງແບບທົດສອບ
6. ແນວຄິດທິດສະດີກ່ຽວກັບວິທີການຫາຄຸນນະພາບຂອງຂໍ້ສອບ.
7. ແນວຄິດທິດສະດີກ່ຽວກັບການສ້າງແບບວັດຄວາມເພິ່ງພໍໃຈ
8. ບົດຄົ້ນຄວ້າທີ່ກ່ຽວຂ້ອງ.

## 1. ຫຼັກສູດວິຊາພາສາລາວ 2

### ໂຄງສ້າງຂອງຫຼັກສູດ

ວິຊາພາສາລາວ 2 ແມ່ນວິຊາໜຶ່ງທີ່ຈັດເຂົ້າໃນໂຄງສ້າງຫຼັກສູດ ລະບົບ 12+4, ສາຍວິຊາ ພາສາລາວ-ວັນນະຄະດີ ປີທີ 1 ໃນພາກຮຽນທີ 2, ມີທັງໝົດ 2 ໜ່ວຍກິດ, ເທົ່າກັບ 3 ຊົ່ວໂມງຕໍ່ອາທິດ, ລວມທັງໝົດແມ່ນ 48 ຊົ່ວໂມງຕໍ່ພາກຮຽນ,ລວມ 16 ອາທິດວິຊານີ້ເວົ້າເຖິງຄວາມຮູ້ກ່ຽວວິທີການອ່ານ, ອ່ານໃຫ້ຜູ້ອື່ນຟັງ, ອ່ານໃນໃຈ, ວະຈີວິພາກ ແລະ ວາກາຍະສຳພັນ.

### ຈຸດປະສົງຂອງຫຼັກສູດ

ເມື່ອຮຽນຈົບວິຊານີ້ແລ້ວນັກຮຽນຄູຈະສາມາດຈຳແນກການອ່ານໃນໃຈ ແລະ ອ່ານອອກສຽງ, ໄຈ້ແຍກຄຳເວົ້າອອກເປັນແຕ່ລະຊະນິດ, ແຕ່ລະປະເພດ, ແຕ່ລະລັກສະນະ ແລະ ຈຳແນກໄດ້ຄຳປ່ຽວ, ຄຳອະລິ, ປະໂຫຍກ ແລະ ສາມາດວິເຄາະປະໂຫຍກໄດ້.

### ເນື້ອໃນຂອງຫຼັກສູດ

- **ບົດທີ 1 ຄວາມຮູ້ທົ່ວໄປກ່ຽວກັບການອ່ານ**

  1 ຄວາສຳຄັນຂອງການອ່ານ.

  2.ຄວາມໝາຍຂອງການອ່ານ

  3. ຈຸດປະສົງ ແລະ ຄຸນຄ່າຂອງການອ່ານ

4. ສ້າງຄວາມສົນໃຈໃນການອ່ານຂອງນັກຮຽນ

- **ບົດທີ 2 ການອ່ານໃນໃຈ ແລະ ການອ່ານອອກສຽງ**
    1. ບັນຫາໃນການອ່ານໃນໃຈ
    2. ການເຝິກອ່ານເພື່ອຄວາມເຂົ້າໃຈ
    3. ອັດຕາຄວາມໄວໃນການອ່ານໃນໃຈ
    4. ການເຝິກອ່ານໃນໃຈ
    5. ທົດສອບຄວາມໄວໃນການອ່ານໃນໃຈ
    6. ການອ່ານອອກສຽງ
    7. ເຝິກອ່ານອອກສຽງບົດຄວາມເປັນມາຂອງຊົນເຜົ່າລື້
- **ບົດທີ 3 ວະຈີວິພາກ**
    1. ວະຈີວິພາກ
    2. ຄຳເຄົ້າລາວເດີມທີ່ມາຈາກພາສາບາລີ-ສັນສະກິດ
    3. ປະເພດຄຳເວົ້າ
    4.ລັກສະນະຄຳເວົ້າໃນພາສາລາວ
- **ບົດທີ 4 ວາກາຍະສຳພັນ**
    1. ຄຳປ່ຽວ
    2. ຄຳວະລີ
    3. ປະໂຫຍກ
    4. ວິເຄາະປະໂຫຍກ

ເຊິ່ງເນື້ອໃນຫລັກສູດທີ່ຈະນຳມາທົດລອງຄັ້ງນີ້ແມ່ນຄວາມຮູ້ທົ່ວໄປກ່ຽວກັບການອ່ານໂດຍສະເພາະແມ່ນ**ບົດທີ 2 ການອ່ານໃນໃຈ ແລະ ອ່ານອອກສຽງ**. ວິທະຍາໄລຄັງໄຂ (2012: 1-5)

1. **ການອ່ານໃນໃຈ**

ມະຫາວິທະຍາໄລສີນະຄະລິນວິໂລດ (2533: 36 - 39 ອ້າງຈາກ ໂອເລັດ ແສງໄສ, 2554: 19)

• ການອ່ານໃນໃຈ ເປັນການອ່ານງຽບ ຜູ້ອ່ານຕ້ອງມີຄວາມສາມາດດ້ານພາສາແລະຄວາມຄິດສາມາດເກັບຄວາມຄິດຈາກຂໍ້ຄວາມທີ່ອ່ານໄດ້ ການອ່ານໃນໃຈທີ່ມີປະສິດທິພາບມີລັກສະນະດັ່ງນີ້:

- ອ່ານໄດ້ໄວ ໝາຍເຖິງ ໃຊ້ເວລານ້ອຍ ແຕ່ອ່ານໄດ້ຫລາຍ.
- ອ່ານໄດ້ຄວາມ ໝາຍເຖິງຈັບໃຈຄວາມໄດ້.
- ອ່ານຕີຄວາມ ໝາຍເຖິງ ບອກຄວາມຫມາຍຂອງຂໍ້ຄວາມທີ່ອ່ານ.
- ອ່ານວິເຄາະ ໝາຍເຖິງ ສາມາດແຍກສ່ວນຕ່າງໆ ເພື່ອພິຈາລະນາເຮັດຄວາມເຂົ້າໃຈ
- ອ່ານຂະຫຍາຍຄວາມ ໝາຍເຖິງ ການອະທິບາຍເພີ່ມເຕີມໃຫ້ລະອຽດ.
- ອ່ານຢ່າງມີວິຈາລະນະຍານ ໝາຍເຖິງ ໃຊ້ປັນຍາພິຈາລະນາໄຕ່ຕອງຫາເຫດຜົນ.

**1.1 ບັນຫາໃນການອ່ານ**

ບັນຫາໃນການອ່ານແບ່ງອອກເປັນ 2 ບັນຫາ ຄື ການອ່ານບໍ່ເຂົ້າໃຈ ແລະ ການອ່ານຊັກຊ້າ, ສອງບັນຫານີ້ມີການພົວພັນກັນ ເພາະຄົນບໍ່ເຂົ້າໃຈຈະອ່ານຊັກຊ້າ ແລະ ຄົນທີ່ອ່ານຊັກຊ້າຄື ຄົນທີໃຊ້ເວລາຫຼາຍໃນການອ່ານເພື່ອໃຫ້ເຂົ້າໃຈ. ສາເຫດພາໃຫ້ການອ່ານມີບັນຫາມີດັ່ງນີ້:

**ກ. ສະຕິປັນຍາ ແລະ ພື້ນຖານຄວາມຮູ້**

ຄົນທີມີສະຕິປັນຍາ ແລະພື້ນຖານຄວາມຮູ້ໃນເລື່ອງທີອ່ານບໍ່ດີເປັນການອ່ານບໍ່ເຂົ້າໃຈ, ອ່ານເຂົ້າໃຈຊ້າເປັນເລື່ອງທຳມະດາຖ້າວ່າຈຳເປັນຕ້ອງອ່ານໃຫ້ເຂົ້າໃຈລະອຽດເລິກເຊິ່ງ, ຍິ່ງເປັນການຍາກ ແລະ ໃຊ້ເວລາຫຼາຍ. ການແກ້ບັນຫານີ້ຕ້ອງສຶກສາໃຫ້ລະອຽດ, ອ່ານຫຼາຍໆຄັ້ງຈົນກ່ວາຈະເຂົ້າໃຈ.

**ຂ. ສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດໃຈ**

ສຸຂະພາບຮ່າງກາຍ, ມັນສະໝອງ ແລະ ສາຍຕາເປັນສິ່ງສຳຄັນຕໍ່ການອ່ານຜູ້ທີເຈັບປ່ວຍ, ປວດຫົວ, ອິດນອນ, ສະໝອງມຶນງົງ, ໜ້າມືດຕາລາຍ, ສາຍຕາສັ້ນ ຫຼື ສາຍຕາຍາວແມ່ນມີບັນຫາຕໍ່ການອ່ານ ຄື ອ່ານບໍ່ເຂົ້າໃຈ ແລະ ອ່ານຊ້າ, ສຸຂະພາບຈິດກໍ່ມີຄວາມສຳຄັນເໝືອນກັນ, ຜູ້ມີບັນຫາອື່ນໆເຊັ່ນ: ຄອບຄົວຕິດຂັດ, ຈິດໃຈບໍ່ສະຫງົບ, ເປັນໂລກຫົວໃຈວາຍເລົ່ານີ້ເປັນຕົ້ນກໍຈະມັກຄິດວິຕົກກັງວົນ, ຂາດຄວາມເຊື່ອໝັ້ນໃນຕົນເອງເຮັດໃຫ້ການອ່ານບໍ່ໄດ້ຮັບຜົນດີ.

**ຄ. ສິ່ງແວດລ້ອມ**

ບາງຄົນສຸຂະພາບດີ, ສະຕິປັນຍາດີ, ແຕ່ອ່ານປຶ້ມໃນສິ່ງແວດລ້ອມບໍ່ດີເຊັ່ນ: ມີສຽງລົບກວນ, ອາກາດຮ້ອນ ຫຼື ໜາວເກີນໄປ, ສິ່ງຮອບຕົວບໍ່ເອື້ອອຳນວຍສິ່ງເຫຼົ່ານີ້ພາໃຫ້ການອ່ານໜັງສືບໍ່ໄດ້ຮັບຜົນດີສະນັ້ນຄວນເລືອກສະພາບແວດລ້ອມທີ່ດີການອ່ານກໍ່ຈະໄດ້ຮັບຜົນ

**ງ. ຄວາມສົນໃຈ**

ເຖິງແມ່ນວ່າສະຕິປັນຍາດີ, ພື້ນຖານຄວາມຮູ້ດີ, ສຸຂະພາບດີ ແລະ ສິ່ງແວດລ້ອມດີ ແຕ່ວ່າຂາດຄວາມສົນໃຈໃນເລື່ອງທີອ່ານເຮັດໃຫ້ການອ່ານບໍ່ເຂົ້າໃຈເຮັດໃຫ້ຈິດໃຈເລື່ອນລອຍ ສະນັ້ນຈຶ່ງຕ້ອງຄວບຄຸມສະຕິປັນຍາໃຫ້ດີ, ພິຈາລະນາເລື່ອງທີອ່ານ, ຕັ້ງຈຸດມຸ່ງໝາຍໃນເລື່ອງທີອ່ານວ່າອ່ານເພື່ອຫຍັງ?ຄວນໃຫ້ກຳລັງໃຈຕົນເອງ.ບາງຄົນອ່ານປຶ້ມໄດ້ຫຼາຍພໍສົມຄວນແຕ່ວ່າອ່ານບໍ່ຖືກວິທີເຊັ່ນ ອ່ານເລື່ອງທີ່ສົມຄວນອ່ານແຕ່ອ່ານແລ້ວບໍ່ວິເຄາະອ່ານຢ່າງວ່ອງໄວ, ເພື່ອໃຫ້ຈົບໄວໆ ບໍ່ຮູ້ຈັກຈັບໃຈຄວາມສຳຄັນ, ບໍ່ສັງເກດປະເດັນສຳຄັນທີຄວນເອົາໃຈໃສ່ເປັນພິເສດ ກໍ່ຈະເຮັດໃຫ້ການອ່ານມີບັນຫາ. ສະນັ້ນ, ຕ້ອງດຸໝັ່ນເຝິກຝົນວິທີອ່ານເຊັ່ນ ຫຼັງຈາກອ່ານຈົບແລ້ວຕ້ອງຕັ້ງຄຳຖາມເພື່ອຖາມຕົນເອງວ່າເຂົ້າໃຈຫຼືບໍ່? ຈັບໃຈຄວາມຂອງເລື່ອງໄດ້ໜ້ອຍ; ຫຼາຍປານໃດທັງນີ້ກໍ່ເພື່ອພັດທະນາສະມັດທະພາບໃນການອ່ານໃຫ້ດີຂຶ້ນເປັນກ້າວໆ.

**1.2 ການເຝິກອ່ານເພື່ອຄວາມເຂົ້າໃຈ**

ການເຝິກອ່ານເພື່ອຄວາມເຂົ້າໃຈ ກ່ອນອື່ນຕ້ອງສຶກສາອົງປະກອບຂອງປຶ້ມເສຍກ່ອນຈຶ່ງລົງມືອ່ານເປັນຂັ້ນຕອນ, ເມື່ອອ່ານຈົບແລ້ວກໍ່ທົດສອບຄວາມເຂົ້າໃຈຂອງຕົນເອງ ດັ່ງລາຍລະອຽດຕໍ່ໄປນີ້.

**ກ. ສຶກສາອົງປະກອບຂອງປຶ້ມ**

ຄຳນຳ, ສາລະບານ, ເນື້ອເລື່ອງ, ເຊີງອັດ, ດັດສະນີ, ບັນນານຸກົມ.

**ຂ. ຂັ້ນຕອນໃນການອ່ານ**

- **ອ່ານຜ່ານໆ.**

ເປັນຂັ້ນຕອນເບື້ອງຕົ້ນຂອງການອ່ານ ຄວນອ່ານຄຳນຳ ແລະ ສາລະບານກ່ອນ ເພື່ອໃຫ້ຮູ້ໂຄງເລື່ອງ ຫຼື ເບິ່ງຫົວເລື່ອງສຳຄັນ, ການອ່ານຂັ້ນທຳອິດຈະອ່ານເຫຼັ້ມໃດກໍ່ຄວນອ່ານຜ່ານໆເສຍກ່ອນເພື່ອໃຫ້ເຫັນພາບລວມຂອງປຶ້ມ.

- **ອ່ານເອົາເລື່ອງ**

ເປັນການອ່ານໃຫ້ຮູ້ເລື່ອງ, ຈັບໃຈຄວາມສຳຄັນໄດ້ ການອ່ານຂັ້ນນີ້ຄວນອ່ານຕິດຕໍ່ກັນຈົນກ່ວາຈະຈົບເນື້ອຄວາມ ເພື່ອໃຫ້ໄດ້ແນວຄິດ, ໃຈຄວາມສຳຄັນ ໂດຍບໍ່ຂາດຕອນ, ຖ້າຫາກມີຄຳສັບຍາກ ຫຼື ຂໍ້ຄວາມຍາກອາດອ່ານຜ່ານເສຍກ່ອນ ຖ້າຫາກຢຸດສະງັກເພື່ອອ່ານຊ້ຳ ຫຼື ຄົ້ນຫາຄຳສັບຈະພາໃຫ້ແນວຄິດບໍ່ຕໍ່ເນື່ອງ ບາງຄັ້ງຂໍ້ຄວາມຖັດໄປອາດເປັນການອະທິບາຍຂະຫຍາຍຄວາມໃຫ້ເຂົ້າໃຈໄດ້  ຫຼື ອາດຂີດເສັ້ນລຸ່ມຂໍ້ຄວາມສຳຄັນ, ບໍ່ຄວນຈົດບັນທຶກສາລະສຳຄັນໃນລະຫວ່າງນີ້:

- **ການອ່ານຊ້ຳ**

ຫຼັງຈາກອ່ານລະອຽດແລ້ວ ຫາກມີຕອນໃດ, ຄຳສັບໃດບໍ່ເຂົ້າໃຈຕ້ອງຊອກຫາຄວາມໝາຍຂອງຄຳສັບ ແລະ ທຳຄວາມເຂົ້າໃຈໃຫ້ລະອຽດ

- **ການບັນທຶກສາລະສຳຄັນ**

ເມື່ອເຂົ້າໃຈຢ່າງລະອຽດທັງພາກສ່ວນລວມ ແລະ ສ່ວນຍ່ອຍແລ້ວຈຶ່ງຄ່ອຍລົງມືບັນທຶກເອົາສາລະສຳຄັນຈາກການອ່ານ, ຕ້ອງບັນທຶກໂດຍຫຍໍ້ ແລະ ນຳໃຊ້ຄຳເວົ້າຂອງຕົນ.

**ຄ. ທົດສອບຄວາມເຂົ້າໃຈຂອງຕົນເອງ**

ການທົດສອບຄວາມເຂົ້າໃຈຈະເຮັດໃຫ້ຮູ້ວ່າຕົນເອງມີຄວາມຮູ້ໃນເລື່ອງທີ່ອ່ານພຽງໃດອາດເຮັດແບບທົດສອບທ້າຍເລື່ອງໂດຍໃຫ້ໝູ່ຕັ້ງຄຳຖາມ; ຕົນເອງຕອບ ຫຼື ຕັ້ງຄຳຖາມດ້ວຍຕົນເອງການທົດສອບຄວນໃຫ້ກວມລວມພຶດຕິກຳດ້ານຄວາມຈຳ, ຄວາມເຂົ້າໃຈ, ການນຳໄປໃຊ້, ການວິເຄາະ ແລະ ການປະເມີນຜົນ

**1.3 ອັດຕາຄວາມໄວໃນການອ່ານໃນໃຈ**

ອັດຕາຄວາມໄວໃນການອ່ານໃນໃຈ ແບ່ງອອກເປັນ 3 ຢ່າງ ອັດຕາຄວາມໄວໃນການອ່ານຂອງນັກຮຽນ, ການປັບປຸງຂອງອັດຕາຄວາມໄວໃນການອ່ານ ແລະ ວິທີຫາອັດຕາຄວາມໄວໃນການອ່ານ.

**ກ. ອັດຕາຄວາມໄວໃນການອ່ານຂອງນັກຮຽນ**

ອັດຕາຄວາມໄວໃນການອ່ານພາສາລາວໃນໃຈໂດຍກຳນົດຈຳນວນຄຳຕໍ່ນາທີ, ການຫາອັດຕາຄວາມໄວໃນການອ່ານຂອງບຸກຄົນອາດຈະທົດລອງຈັບເວລາເບິ່ງວ່ານາທີໜຶ່ງອ່ານໄດ້ຈັກຄຳ ແລະ ເຂົ້າໃຈປະມານຈັກເປີເຊັນດັ່ງຕົວຢ່າງຕໍ່ໄປນີ້:

- ນັກຮຽນ ປ 5 ອ່ານໄດ້ 153 ຄຳຕໍ່ນາທີລະດັບຄວາມເຂົ້າໃຈສະເລ່ຍ 74,07%
- ນັກຮຽນ ມ1 ອ່ານໄດ້ 108 ຄຳຕໍ່ນາທີລະດັບຄວາມເຂົ້າໃຈສະເລ່ຍ 82%
- ນັກຮຽນ ມ2 ອ່ານໄດ້ 279 ຄຳຕໍ່ນາທີລະດັບຄວາມເຂົ້າໃຈສະເລ່ຍ 60%
- ນັກຮຽນ ມ3 ອ່ານໄດ້ 263 ຄຳຕໍ່ນາທີລະດັບຄວາມເຂົ້າໃຈສະເລ່ຍ 64%

- ນັກສຶກສາມະຫາວິທະຍາໄລປີທີ 1 ອ່ານໄດ້ 389 ຄຳຕໍ່ນາທີລະດັບຄວາມເຂົ້າໃຈສະເລ່ຍ 71,19%

**ຂ. ການປັບປຸງຂອງອັດຕາຄວາມໄວໃນການອ່ານ**

ໂດຍປົກກະຕິອັດຕາຄວາມໄວໃນການອ່ານຈະປັບປ່ຽນໄປຕາມຈຸດມຸ່ງໝາຍຂອງການອ່ານວ່າຈະອ່ານລະອຽດພຽງໃດ ຫຼື ຕາມປະເພດຂອງປຶ້ມເປັນສາລະຄະດີ ຫຼື ບັນເທີງ ການປັບປ່ຽນອາດຈັດ ເປັນ 3 ລະດັບຄື:

- ການອ່ານທີ່ມີອັດຕາຄວາມໄວໃນລະດັບສູງ ໃຊ້ການອ່ານເພື່ອຄວາມເພີດເພີນ
- ການອ່ານທີ່ມີອັດຕາຄວາມໄວໃນລະດັບກາງ ໃຊ້ໃນການອ່ານເອົາເລື່ອງເພື່ອຈັບໃຈຄວາມສຳຄັນ
- ການອ່ານທີ່ມີອັດຕາຄວາມໄວໃນລະດັບຕ່ຳເປັນການອ່ານຊ້ຳ ອ່ານມີຈຸດປະສົງເພື່ອວິເຄາະ ແລະ ປະເມີນ ແມ່ນບົດກະວີ, ປັດຊະຍາ.

ຕົວຢ່າງ: ທ່ານ George D. Spach and Paul Berg ໄດ້ກຳນົດອັດຕາຄວາມໄວໃນການອ່ານດັ່ງນີ້:

- ອ່ານລະດັບຊ້າລະມັດລະວັງ 250 ຄຳ/ນາທີ
- ອ່ານລະດັບທຳມະດາ 250-350 ຄຳ/ນາທີ
- ອ່ານລະດັບໄວທຳມະດາ 350-500 ຄຳ/ນາທີ
- ອ່ານລະດັບໄວ 600-700 ຄຳ/ນາທີ

**1.4 ການເຝິກອ່ານໃນໃຈ**

ການອ່ານໃນໃຈເປັນການອ່ານທີ່ຜູ້ອ່ານສາມາດທຳຄວາມເຂົ້າໃຈ ແລະ ສະຫຼຸບປະເດັນສຳຄັນຂອງເລື່ອງໄດ້ຢ່າງຖືກຕ້ອງວ່ອງໄວໃນສະໝອງຂອງຕົນ, ໂດຍບໍ່ຕ້ອງເປັ່ງສຽງອອກມາ. ການອ່ານແບບນີ້ໃຊ້ກັນຫຼາຍໃນຊີວິດປະຈຳວັນເພາະສາມາດອ່ານເລື່ອງຕ່າງໆໄດ້ວ່ອງໄວ ແລະ ດີກວ່າການອ່ານອອກສຽງ, ສາມາດອ່ານໄດ້ທຸກເວລາ, ທຸກສະຖານທີ່.

ວິທີເຝິກຕົນເອງໃນການອ່ານໃຫ້ວ່ອງໄວ ແລະ ມີປະສິທິພາບມີດັ່ງນີ້:

- ອ່ານຂໍ້ຄວາມທີ່ງ່າຍບໍ່ມີຄຳສັບຍາກ
- ຈັບເວລາໃນການອ່ານຂໍ້ຄວາມນັ້ນ (ນານເທົ່າໃດ) ຕັ້ງຄຳຖາມໆຕົນເອງກ່ຽວກັບເລື່ອງຕ່າງໆ
- ຕອບຄຳຖາມໄດ້ໜ້ອຍ ຫຼາຍປານໃດ
- ອ່ານຂໍ້ຄວາມນັ້ນຄືນອີກຄັ້ງໜຶ່ງ, ພະຍາຍາມໃຊ້ເວລາໃຫ້ໜ້ອຍກ່ວາຄັ້ງທຳອິດ
- ຕອບຄຳຖາມທີ່ຕັ້ງໄວໃນຂໍ້ທີ 3 ອີກຄັ້ງໜຶ່ງວ່າຕອບໄດ້ດີກ່ວາຄັ້ງກ່ອນ ຫຼື ບໍ່.

ຫາກປະຕິບັດໄດ້ 6 ຂໍ້ແລ້ວປາກົດວ່າຕອບຄຳຖາມໄດ້ຫຼາຍຂຶ້ນ ແລະ ໃຊ້ເວລາອ່ານໜ້ອຍລົງກໍ່ສະແດງວ່າສາມາດອ່ານໄດ້ໄວຂຶ້ນ ຈາກນັ້ນກໍ່ຄວນຫາບົດຄວາມທີ່ຍາກຂຶ້ນມາເຝິກອ່ານຕໍ່ໄປເລື້ອຍໆຄວນຈຳໄວ້ວ່າອ່ານຫຼາຍໆເທົ່າໃດກໍ່ຈະເພີ່ມປະສິດທິພາບຂຶ້ນເທົ່ານັ້ນ.

**1.5 ທົດສອບຄວາມໄວໃນການອ່ານໃນໃຈ**

ຈັດໃຫ້ນັກຮຽນອ່ານບົດເລື່ອງ 3 ອ້າຍນ້ອງແລ້ວໃຫ້ແຕ່ລະຄົນນຳເອົາຜົນການອ່ານຂອງຕົນມາທຽບກັບການກຳນົດອັດຕາຄວາມໄວຂອງ George D. Spach and Paul Berg ໄດ້ລະດັບໃດ (ຄຳເມີງ ດວງມາລາ ແລະ ມອນຄຳ ໄພຍະວົງ, 2008: 37-57).

- **ການອ່ານ**

ການອ່ານເປັນໜຶ່ງໃນສີ່ທັກສະທາງພາສາທີ່ຈຳເປັນຕ້ອງເຝິກຝົນຢູ່ສະເໝີ ແລະບໍ່ມີມື້ສິ້ນສຸດ ສາມາດເຝິກໄດ້ເລື້ອຍໆ ຕາມໄວແລະປະສົບການຂອງຜູ້ອ່ານ ເພາະການອ່ານນັ້ນຈະກ່ຽວຂ້ອງກັບຊີວິດປະຈຳວັນຂອງມະນຸດ ເປັນເຄື່ອງມືສຳຄັນທີ່ຈະຊ່ວຍໃຫ້ມະນຸດໄດ້ຮັບຄວາມຮູ້ ຄວາມຄິດ ແລະຄວາມບັນເທີງໃຈ ຊ່ວຍປັບປຸງຊີວິດໃຫ້ສົດໃສສົມບູນ ດັ່ງຄຳກ່າວຂອງ ເຊີລ໌ ຟະລານຊິດ ເບຄອນນັກປັດຊະຍາເມທີຊາວອັງກະຫລິດທີ່ວ່າ "ການອ່ານເຮັດໃຫ້ຄົນເປັນຄົນໂດຍສົມບູນ"ການອ່ານເປັນພຶດຕິກຳການຮັບສານທີ່ສຳຄັນ. ປະຈຸບັນມີຜູ້ຮູ້ນັກວິຊາການແລະນັກຂຽນນຳສະເໜີຄວາມຮູ້ ຂໍ້ມູນ ຂ່າວສານແລະງານສ້າງສັນ ຕີພິມ ໃນໜັງສືແລະສິ່ງພິມອື່ນ ໆ ນອກຈາກນີ້ແລ້ວຂ່າວສານສຳຄັນ ໆ ຫລັງຈາກການນຳສະເໜີດ້ວຍການເວົ້າ ຫລື ອ່ານໃຫ້ຟັງຜ່ານສື່ຕ່າງ ໆ ສ່ວນໃຫຍ່ຈະຕີພິມໄວ້ເປັນຫລັກຖານແກ່ຜູ້ອ່ານ, ຄວາມສາມາດໃນການອ່ານຈຶ່ງສຳຄັນ ແລະຈຳເປັນຍິ່ງຕໍ່ການເປັນພົນລະເມືອງທີ່ມີຄຸນນະພາບໃນສັງຄົມປະຈຸບັນ.

- **ຄວາມຫມາຍຂອງການອ່ານ**

ສຸລິ ຢາຕອບ (2541: 33 ອ້າງຈາກ ໂອເລັດ ແສງໄສ, 2554:15) ອະທິບາຍວ່າ ການອ່ານ ເປັນຂະບວນການທາງສະຫມອງໃນການແປສັນຍະລັກ ຖອດຄວາມຫມາຍຈາກສັນຍາລັກນັ້ນ ແລ້ວກໍ່ໃຫ້ເກີດຄວາມຮູ້ຄວາມເຂົ້າໃຈ ຄວາມຄິດຢ່າງມີເຫດຜົນ ການອ່ານຈຶ່ງເປັນການສື່ຄວາມໝາຍລະຫວ່າງຜູ້ຂຽນກັບຜູ້ອ່ານ ເພື່ອໃຫ້ເກີດຄວາມຄິດຂອງຜູ້ຂຽນຊຶ່ງຕ້ອງອາໄສທັກສະການອ່ານ.

ຈະຫລັນ ສຸກສຳລານ (2542: 10 ອ້າງຈາກ ໂອເລັດ ແສງໄສ, 2554: 15) ອະທິບາຍວ່າ ການອ່ານ ຄື ຂະບວນການແປຄວາມຫມາຍຈາກຕົວອັກສອນ ສັນຍາລັກ ກຸ່ມຄຳ ຫລື ວະລີ ແລະ ປະໂຫຍກອອກມາຢ່າງມີເຫດຜົນ ໂດຍອາໄສຄວາມສາມາດໃນການແປ, ການຕີຄວາມ, ການຈັບໃຈຄວາມສຳຄັນ ແລະການສະຫລຸບຄວາມ ເພື່ອໃຫ້ເກີດຄວາມເຂົ້າໃຈຢ່າງມີຈຸດມຸ້ງໝາຍ.

ວັດລີ ບູລົນສີງ ແລະ ນິນມົນ ສຶດວຸທິ (2542: 2 ອ້າງຈາກ ໂອເລັດ ແສງໄສ, 2554: 15) ໃຫ້ຄວາມຫມາຍຂອງການອ່ານໄວ້ວ່າການອ່ານ ໝາຍເຖິງ ການອ່ານຕາມການອອກສຽງ ຫລືຄວາມເຂົ້າໃຈຕາມຕົວຫນັງສື ການຄົ້ນຫາຄວາມໝາຍ ຫລື ເຄື່ອງໝາຍ ຫລື ສັນຍາລັກໃດ ໆ ທີ່ສາມາດນຳມາຕີຄວາມສື່ຄວາມຫມາຍໃຫ້ເກີດຄວາມເຂົ້າໃຈໃນສິ່ງນັ້ນໆ ໄດ້ຈາກຄວາມຫມາຍຂອງການອ່ານຂັ້ນຕົ້ນ ພໍສະຫລຸບໄດ້ວ່າ ການອ່ານ ຄື ຂະບວນການແປຄວາມໝາຍຈາກສິ່ງທີ່ອ່ານທາງສາຍຕາ ເພື່ອເກັບລວບລວມຄວາມຄິດຢ່າງມີເຫດຜົນ ຈົນເກີດຄວາມຮູ້ຄວາມເຂົ້າໃຈຢ່າງຖືກຕ້ອງໃນສິ່ງທີ່ອ່ານ.

- **ຄວາມສຳຄັນຂອງການອ່ານ**

ສະຫວີລັກສິນ ບຸນຍະກາຍົດ (2523: 1 ອ້າງຈາກ ໂອເລັດ ແສງໄສ, 2554: 16) ກ່າວເຖິງຄວາມຈຳເປັນໃນການອ່ານວ່າ ການອ່ານມີຄວາມຈຳເປັນຕໍ່ຊີວິດຂອງຄົນໃນຍຸກປະຈຸບັນຍິ່ງກວ່າຍຸກທີ່ຜ່ານມາ ເພາະໂລກປະຈຸບັນເປັນໂລກທີ່ປ່ຽນໄປທາງດ້ານວັດຖຸ ວິທະຍາການ ເທັກໂນໂລຍີ ແລະ ຄວາມນຶກຄິດ ແລະ ອື່ນໆຈຶ່ງຈຳເປັນຢ່າງຍິ່ງທີ່ມະນຸດເກີດມາໃນປະຈຸບັນຕ້ອງສົນໃຈການອ່ານ ແລະ ຕ້ອງອ່ານເພື່ອໃຫ້ສາມາດຕິດຕາມຄວາມເຄື່ອນໄຫວ ຄວາມກ້າວໜ້າ ແລະ ເຫດການຕ່າງໆ ເພື່ອໃຫ້ທັນຕໍ່ເຫດການ.

ສະນິດ ຕັ້ງທະວີ (2526: 4 ອ້າງຈາກ ໂອເລັດ ແສງໄສ, 2554:16) ກ່າວເຖິງຄວາມສຳຄັນຂອງການອ່ານໄວ້ວ່າ ການອ່ານບໍ່ແມ່ນແຕ່ພຽງອ່ານສະກົດຕົວຖືກແລະຮູ້ທີ່ອ່ານເທົ່ານັ້ນ ຫາກຍັງຕ້ອງສາມາດພິຈາລະນາ ພິນິດພິຈາລະນາຄວາມໝາຍທີ່ໄດ້ຈາກການອ່ານນັ້ນໄດ້ຢ່າງເລິກເຊິ່ງ ເກີດມີຄວາມຄິດສ້າງສັນ ແລະ ສາມາດນຳຄວາມຄິດຈາກການອ່ານນັ້ນໄປໃຊ້ໃຫ້ເກີດປະໂຫຍດໃນຊີວິດປະຈຳວັນຂອງຕົນເອງ ແລະຜູ້ອື່ນໄດ້.

ສຸຊຸມ ເສລີບຊັບ (2531: 14 ອ້າງຈາກ ໂອເລັດ ແສງໄສ, 2554:16) ສະຫລຸບຄວາມສຳຄັນຂອງການອ່ານໄດ້ 3 ປະການຄື:

1. ດ້ານພັດທະນາເສດຖະກິດແລະສັງຄົມການອ່ານຈະຊ່ວຍໃຫ້ປະຊາຊົນປ່ຽນແປງທັນກັບຄວາມຈະເລີນກ້າວໜ້າຂອງວິຊາການໃນທຸກ ໆ ສາຂາ ການອ່ານຈຶ່ງເປັນສິ່ງຈຳເປັນ ເປັນສິ່ງຊ່ວຍໃຫ້ເກີດການຮຽນຮູ້ ໃນຂະນະທີ່ສັງຄົມປັດຈຸບັນປ່ຽນແປງກ້າວໜ້າຂະຫຍາຍຕົວໃນທຸກທາງໂດຍສະເພາະໃນດ້ານວິຊາການບຸກຄົນຈຶ່ງຈຳເປັນຕ້ອງປັບປຸງຕົນເອງໃຫ້ທັນກັບຄວາມປ່ຽນແປງ ແລະ ສິ່ງແວດລ້ອມຢ່າງຖືກຕ້ອງເພື່ອຈະມີຄວາມສາມາດຊ່ວຍຕົນເອງ ແລະ ຊ່ວຍຜູ້ອື່ນໃຫ້ຢູ່ໃນຖານະທີ່ໜ້າປາດຖະໜາ.

2. ດ້ານຂອງຄວາມເປັນຊາດທີ່ມີອະລິຍະທຳ ຖ້າປະຊາຊົນຂອງປະເທດມີຈຳນວນເປີເຊັນຂອງການອ່ານອອກ, ຂຽນໄດ້ຫຼາຍ ກໍສະແດງວ່າປະເທດນັ້ນເປັນຊາດທີ່ມີອະລິຍະທຳສູງ ໃນຂະນະດຽວກັນຖ້າພົນລະເມືອງຂອງປະເທດໃດມີຄວາມສົນໃຈໃນການອ່ານຫນັງສືຫລາຍ ກໍເປັນອັນຕັດສິນໄດ້ທັນທີວ່າພົນລະເມືອງຂອງປະເທດນັ້ນກໍເປັນຜູ້ມີສິນລະທຳແລະວັດທະນະທຳສູງ.

3. ດ້ານການດຳລົງຊີວິດ ການອ່ານຈະຊ່ວຍໄດ້ເປັນຢ່າງດີ ເພາະການອ່ານເປັນການສ້າງປະສົບການພື້ນຖານ ຄົນເຮົາສາມາດແກ້ບັນຫາໄດ້ດ້ວຍການອ່ານຍັງເປັນການຕຽມຕົວສ້າງປະສົບການພື້ນຖານ ຄົນເຮົາສາມາດແກ້ບັນຫາໄດ້ດ້ວຍການອ່ານ ທັງຍັງເປັນການຕຽມຕົວເພື່ອອາຊີບອີກດ້ວຍ ນອກຈາກນັ້ນການອ່ານຍັງສົ່ງເສີມໃຫ້ຄົນເກີດຄວາມເຂົ້າໃຈ ແລະມີຄວາມຊຳນານໃນວິຊາຊີບປະເພດຕ່າງໆ ຫລາຍຂຶ້ນ.

ວັນນະໂສມ ປະຍູນ (2537: 121 ອ້າງຈາກ ໂອເລັດ ແສງໄສ, 2554: 16) ສະຫລຸບຄວາມສຳຄັນຂອງການອ່ານໄວ້ ດັ່ງນີ້:

1. ການອ່ານເປັນເຄື່ອງມືທີ່ສຳຄັນຍິ່ງໃນການສຶກສາຮໍ່າຮຽນທຸກລະດັບ ຜູ້ຮຽນຈຳເປັນຕ້ອງອາໄສທັກສະການອ່ານເຮັດຄວາມເຂົ້າໃຈເນື້ອໃນຂອງວິຊາການຕ່າງ ໆ ເພື່ອໃຫ້ຕົນເອງໄດ້ຮັບຄວາມຮູ້ແລະປະສົບການຕາມທີ່ຕ້ອງການ.

2. ໃນຊີວິດປະຈຳວັນທົ່ວໄປ ຄົນເຮົາຕ້ອງອາໄສການອ່ານຕິດຕໍ່ສື່ສານເພື່ອເຮັດຄວາມເຂົ້າໃຈກັບບຸກຄົນອື່ນລວມໄປກັບທັກສະການຟັງ ການເວົ້າ ແລະ ການຂຽນ ທັງໃນດ້ານພາລະກິດສ່ວນຕົວແລະການປະກອບອາຊີບການງານຕ່າງ ໆ ໃນສັງຄົມ.

3. ການອ່ານຊ່ວຍໃຫ້ບຸກຄົນສາມາດນຳຄວາມຮູ້ ແລະ ປະສົບການຈາກສິ່ງທີ່ອ່ານໄປປັບປຸງ ແລະ ພັດທະນາອາຊີບ ຫຼື ທຸລະກິດການງານທີ່ຕົວເອງກະທຳຢູ່ໃຫ້ຈະເລີນກ້າວໜ້າ ແລະປະສົບຄວາມສຳເລັດໄດ້ໃນທີ່ສຸດ

4. ການອ່ານສາມາດທອດຖອນຄວາມຕ້ອງການພື້ນຖານຂອງບຸກຄົນໃນດ້ານຕ່າງ ໆໄດ້ເປັນຢ່າງດີ ເຊັ່ນ ຊ່ວຍໃຫ້ໝັ້ນຄົງປອດໄພ, ຊ່ວຍໃຫ້ໄດ້ຮັບປະສົບການໃໝ່, ຊ່ວຍໃຫ້ເປັນທີ່ຍອມຮັບຂອງສັງຄົມຊ່ວຍໃຫ້ມີກຽດຕິຍົດແລະຊື່ສຽງ ແລະ ອື່ນໆ.

5. ການອ່ານສ່ວນຫຼາຍຈະຊ່ວຍໃຫ້ບຸກຄົນໄດ້ຂະຫຍາຍຄວາມຮູ້ແລະປະສົບການເພີ່ມຂຶ້ນຢ່າງເລິກເຊິ່ງແລະກວ້າງຂວາງ ເຮັດໃຫ້ເປັນຜູ້ຮອບຮູ້ ເກີດຄວາມໝັ້ນໃຈໃນການເວົ້າປາໄສ ການບັນລະຍາຍ ຫຼືການອະພິປາຍບັນຫາຕ່າງ ໆ ນັບວ່າເປັນການເພີ່ມບຸກຄະລິກກະພາບ ແລະຄວາມໜ້າເຊື່ອຖືໃຫ້ແກ່ຕົນເອງ.

6. ການອ່ານໜັງສື ຫຼື ສື່ສິ່ງພິມຫຼາຍຊະນິດ ນັບວ່າເປັນກິດຈະກຳນັນທະນາການທີ່ໜ້າສົນໃຈຫລາຍ ເຊັ່ນ ອ່ານໜັງສືພິມ, ນິຕິສານ, ວາລະສານນະວະນິຍາຍ, ກາຕູນ ແລະ ອື່ນໆເປັນການຊ່ວຍໃຫ້ບຸກຄົນຮູ້ຈັກການໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ ແລະເກີດຄວາມເພີດເພີນສະໜຸກສະໜານໄດ້ເປັນຢ່າງດີ.

7. ການອ່ານເລື່ອງລາວຕ່າງ ໆ ໃນອະດີດ ເຊັ່ນ ສິລາຈາເລີກປະຫວັດສາດ ເອກະສານສຳຄັນວັນນະຄະດີ ແລະ ອື່ນໆ ຈະຊ່ວຍໃຫ້ອະນຸຊົນຮູ້ຈັກອະນຸລັກມໍລະດົກທາງວັດທະນະທຳຂອງຄົນເຮົາໄວ້ ແລະສາມາດພັດທະນາໃຫ້ຈະເລີນຮຸ່ງເຮືອງຕໍ່ໄປໄດ້.

ສະຫວີວັນ ຄູຫາພິນັນທົນ (2542: 2 ອ້າງຈາກ ໂອເລັດ ແສງໄສ, 2554:16) ກ່າວເຖິງຄວາມສຳຄັນຂອງການອ່ານວ່າ ການອ່ານມີຄວາມສຳຄັນຕໍ່ຊີວິດມະນຸດ ຊ່ວຍໃຫ້ເກີດການຮຽນຮູ້ຕະຫຼອດຊີວິດ ແລະຊ່ວຍສະໜອງຄວາມຢາກຮູ້ຢາກເຫັນຕາມທຳມະຊາດຂອງມະນຸດໄດ້ທຸກເລື່ອງທຸກປະເພດ ໂດຍສະເພາະຄວາມຢາກຮູ້ຂໍ້ມູນ ຂ່າວສານຕ່າງ ໆ ໃນໂລກນີ້.

ພະນິດນັນ ບຸນພາມີ (2542: 3 ອ້າງຈາກ ໂອເລັດ ແສງໄສ, 2554: 15) ໄດ້ສະຫລຸບຄວາມສຳຄັນຂອງການອ່ານໄດ້ວ່າ ການອ່ານມີຄວາມຈຳເປັນຕໍ່ຊີວິດຂອງຄົນໃນຍຸກປັດຈຸບັນ ເພາະມີການປ່ຽນແປງຢ່າງວ່ອງໄວທາງດ້ານວັດຖຸວິທະຍາການ ແລະຄວາມນຶກຄິດ ການອ່ານຊ່ວຍໃຫ້ເຮົາສາມາດຕິດຕາມຄວາມ

ເຄື່ອນໄຫວ ແລະ ຄວາມກ້າວໜ້າໄດ້ທັນການ ການອ່ານຈະຊ່ວຍເພີ່ມພູນປະສົບການ ຄວາມຮູ້ ຄວາມຄິດ ແລະວິຈາລະນາຍານໃຫ້ຄົນເຮົາມີຄວາມງອກງາມທາງວຸທິພາວະ ວຸທິປັນຍາ ແລະ ຄວາມສາມາດຫຼາຍຍິ່ງຂຶ້ນ ການອ່ານສົ່ງເສີມໃຫ້ເກີດຂະບວນການພັດທະນາຄຸນນະພາບຊີວິດ ແລະ ຈິດວິນຍານຂອງຜູ້ອ່ານໃຫ້ເປັນໄປໃນທາງທີ່ດີງາມໄດ້ໂດຍຕົນເອງ ລວມທັງສາມາດພັດທະນາຄົນໃຫ້ເປັນປະໂຫຍດຕໍ່ສ່ວນລວມໄດ້ຢ່າງດີ ການອ່ານປຽບເໝືອນຂົວເຊື່ອມປະສານຄວາມຮູ້ຄວາມເຂົ້າໃຈຂອງມະນຸດທຸກຊາດທຸກພາສາໃຫ້ເຖິງກັນ ໃຫ້ປະຈັກໃນຄວາມຈິງຢ່າງດຽວ ແລະໃຫ້ສາມາດປະກອບກິດຈະການຕ່າງ ໆ ອັນເປັນເຈົ້າປະໂຫຍດຮ່ວມກັນໄດ້ເປັນຢ່າງດີຫລືກ່າວອີກຢ່າງໜຶ່ງວ່າ ການອ່ານນຳມະນຸດຜ່ານພົມແດນທາງພູມີປະເທດ ແລະວັດທະນະທຳຂະນະດຽວກັນການອ່ານຊ່ວຍໃຫ້ຜູ້ອ່ານໄດ້ຮັບຄວາມເພີດເພີນໃນຊີວິດຫລາຍຂຶ້ນ ເພາະການອ່ານວັນນະກຳດີໆ ກໍ່ໃຫ້ເກີດຄວາມເພີດເພີນໃນຍາມຫວ່າງຈະເຫັນໄດ້ວ່າການອ່ານມີຄວາມສຳຄັນຕໍ່ການດຳລົງຊີວິດຂອງມະນຸດທຸກຄົນຢ່າງຫຼວງຫລາຍມະນຸດຈຳເປັນຕ້ອງໃຊ້ການອ່ານໃນການຕິດຕໍ່ສື່ສານ ເຮັດຄວາມເຂົ້າໃຈກັບບຸກຄົນອື່ນ ແລະນຳຄວາມຮູ້ປະສົບການຕ່າງ ຈາກເລື່ອງທີ່ອ່ານໄປສ້າງປະໂຫຍດແກ່ຕົນເອງໄດ້.

- **ຈຸດປະສົງຂອງການອ່ານ**

ວັນນະໂສມ ປະຍູນ (2537: 127 ອ້າງຈາກ ໂອເລັດ ແສງໄສ, 2554: 20) ກ່າວວ່າ ການອ່ານເປັນທັກສະທີ່ຈຳເປັນໃນການດຳລົງຊີວິດ ການອ່ານແຕ່ລະເທື່ອຈະມີການເນັ້ນຄວາມໝາຍແຕກຕ່າງກັນອອກໄປ ຖ້າຜູ້ອ່ານຕັ້ງຈຸດມຸ້ງໝາຍໃນການອ່ານແຕ່ລະເທື່ອໄວ້ ຈະຊ່ວຍໃຫ້ການອ່ານມີປະສິດທິພາບສູງ ຈຸດມຸ້ງໝາຍທີ່ຕັ້ງໄວ້ໄດ້ແກ່.

1. ການອ່ານເພື່ອຄົ້ນຄວ້າຫາຄວາມຮູ້ເພີ່ມເຕີມ ເຊັ່ນ ອ່ານຕຳລາ ອ່ານບົດຄວາມອ່ານສາລະຄະດີ
2. ການອ່ານເພື່ອຄວາມບັນເທີງ ເຊັ່ນ ອ່ານນະວະນິຍາຍອ່ານກາຕູນ ອ່ານວັນນະຄະດີ
3. ການອ່ານເພື່ອໃຊ້ເວລາວ່າງໃຫ້ເປັນປະໂຫຍດ ເຊັ່ນ ອ່ານຫນັງສືປະເພດຊວນຫົວຕ່າງ ໆ
4. ການອ່ານເພື່ອຫາລາຍລະອຽດຂອງເລື່ອງ ເຊັ່ນ ອ່ານສາລະຄະດີ ອ່ານປະຫວັດສາດ

ໄພທູນ ສິນລາລັດ (2538: 56 ອ້າງຈາກ ໂອເລັດ ແສງໄສ, 2554:20) ໄດ້ແບ່ງຈຸດປະສົງໃນການອ່ານເປັນ 2 ປະເພດໃຫຍ່ໆຄື:

1. ອ່ານເພື່ອຄວາມເພີດເພີນ ໄດ້ແກ່ ການອ່ານນະວະນິຍາຍເລື່ອງສັ້ນ ຫນັງສືພິມ ຫຼື ສິ່ງພິມ ເປັນການອ່ານເພື່ອພັກຜ່ອນຢ່ອນໃຈ ແຕ່ໃນຂະນະດຽວກັນກໍຈະໄດ້ຮັບຄວາມຮູ້ໄປດ້ວຍ ການອ່ານຊະນິດນີ້ເຮັດໄດ້ງ່າຍພຽງແຕ່ເຂົ້າໃຈເລື່ອງລາວ ແລະຈັບໃຈຄວາມສຳຄັນໃຫ້ໄດ້ກໍພຽງພໍແລ້ວ.

2. ອ່ານເພື່ອຄວາມຮູ້ ໄດ້ແກ່ ການອ່ານຕຳລາວິຊາການ ສານຄະດີ ບົດຄວາມ ຊຶ່ງຈະລະອຽດພຽງໃດນັ້ນຂຶ້ນຢູ່ກັບຈຸດປະສົງຂອງຜູ້ອ່ານເປັນປະການສຳຄັນ ຜູ້ອ່ານບາງຄົນຕ້ອງການອ່ານເພື່ອທະວີປັນຍາ ຊຶ່ງຕ້ອງອ່ານຊ້ຳ ໆ ອ່ານໄປຄິດໄປ ຍິ່ງອ່ານຊ້ຳຍິ່ງກໍ່ໃຫ້ເກີດປັນຍາ ຫຼື ບາງຄົນຕ້ອງການອ່ານເພື່ອຂຽນລາຍງານຕຳລາ

ຫຼື ວິທະຍານິພົນກໍຈະຕ້ອງອ່ານຫນັງສືຫລາຍໆ ເຫຼັ້ມເພື່ອປະມວນຄວາມຄິດທີໄດ້ຈາກການອ່ານແລ້ວນໍາໄປຂຽນ

ຜອບ ໂປສະກະຫລິດນະ (2538: 109 ອ້າງຈາກ ໂອເລັດ ແສງໄສ, 2554: 21) ແຍກປະເພດຈຸດ ໝາຍໄດ້ເປັນປະເພດໃຫຍ່ໆ 2 ປະເພດຄື:

1. ເພື່ອໃຫ້ຮູ້ ການອ່ານບໍ່ວ່າເລື່ອງນ້ອຍ ຫຼື ເລື່ອງໃຫຍ່ ໆ ຈຸດປະສົງທີມາກ່ອນກໍຄືເພື່ອໃຫ້ຮູ້ ເຊັ່ນ ການອ່ານບົດຮາກຢາເພື່ອໃຫ້ຮູ້ຈະໄດ້ກິນຢາຖືກ.

2. ອ່ານປະກາດ ອ່ານຕໍາລາອ່ານຂ່າວ ແລະ ອື່ນໆເພື່ອໃຫ້ເກີດຄວາມບັນເທີງ ການອ່ານເປັນຢາອາຍຸວັດທະນະຢ່າງໜຶ່ງ ເປັນອາຫານໃຈເຮັດໃຫ້ເກີດຄວາມເພີດເພີນ, ຫນັງສືສາມາດສ້າງຈິນຕະນາການແລະເລົ້າອາລົມຜູ້ອ່ານໃຫ້ຄ້ອຍຕາມເກີດຄວາມສະໜຸກສະໜານ.

ເອກສັດ ຈາລຸເມທີນ (2539:37 ອ້າງຈາກ ໂອເລັດ ແສງໄສ, 2554: 21) ກ່າວວ່າ ໂດຍທົ່ວໄປເຮົາອ່ານຫນັງສືເພື່ອຈຸດປະສົງດັ່ງຕໍ່ໄປນີ້:

1. ອ່ານເພື່ອສຶກສາເລື່ອງລາວໂດຍລະອຽດ ໄດ້ແກ່ ການອ່ານຕໍາລາວິຊາການຕ່າງໆ

2. ອ່ານເພື່ອຫາຄໍາຕອບໃນສິ່ງທີ່ຕ້ອງການ ໄດ້ແກ່ ການອ່ານຄໍາແນະນໍາ ອ່ານເພື່ອຫາຄໍາຕອບຂອງຄໍາຖາມຫຼື ບັນຫາ ອ່ານເພື່ອຕ້ອງການປະໂຫຍດໃນເລື່ອງໃດເລື່ອງໜຶ່ງ ໂດຍສະເພາະອ່ານເພື່ອຫາຂໍ້ມູນເພື່ອກໍ່ການວິໄຈ ເປັນຕົ້ນ.

3. ອ່ານເພື່ອຄວາມເພີດເພີນບັນເທີງໃຈ ໄດ້ແກ່ ການອ່ານຫນັງສືປະເພດບັນເທີງຄະດີນະວະນິຍາຍ ວັນນະຄະດີ ເປັນຕົ້ນ.

- **ຫລັກ ແລະ ທິດສະດີການສອນອ່ານ**

ສຸມິດ ອັງວັດນະກຸນ (2527: 108-111 ອ້າງຈາກ ໂອເລັດ ແສງໄສ, 2554:23) ໄດ້ກ່າວເຖິງທິດສະດີການສອນອ່ານໄວ້ດັ່ງນີ້:

1. ການອ່ານເພື່ອເນັ້ນພຶດຕິກໍາການຮຽນຮູ້ ເປັນການເຊື່ອມຕໍ່ລະຫວ່າງການຕອບສະຫນອງໂດຍໃຫ້ການເສີມແຮງທີ່ເໝາະສົມໃນຂະນະທີ່ຕອບສະຫນອງຕໍ່ສິ່ງທີຕ້ອງການຈະເຮັດໃຫ້ເກີດການຮຽນຮູ້ໄດ້ດີຂຶ້ນ ດັ່ງນັ້ນ ການອ່ານຈຶ່ງກ່ຽວຂ້ອງກັບການຮຽນຮູ້ທີ່ມີການຈັດລໍາດັບໄວ້ຢ່າງຕໍ່ເນື່ອງ ເຊິ່ງໝາຍເຖິງການອ່ານຕ້ອງປະກອບດ້ວຍທັກສະເບື້ອງຕົ້ນ ແລະ ທັກສະທີມີຄວາມຊັບຊ້ອນ ແຕ່ທັກສະທີເປັນພື້ນຖານກໍຈະຖືກລວບລວມເຂົ້ານໍາກັນ ໂດຍຜ່ານກົນວິທີການເຝິກໃຫ້ນັກຮຽນໄຈແຍກໄດ້ວ່າສ່ວນໃດເປັນເລື່ອງທີກ່ຽວກັບອັກສອນ ແລະ ສ່ວນໃດເປັນເລື່ອງທີກ່ຽວກັບເນື້ອຫາ.

2. ການອ່ານທີ່ເນັ້ນຄວາມຮູ້ຄວາມເຂົ້າໃຈ ທິດສະດີຄວາມຮູ້ຄວາມເຂົ້າໃຈມີແນວຄິດວ່າພຶດຕິກໍາທຸກຢ່າງຈະຕ້ອງປະກອບດ້ວຍອົງປະກອບ 3 ຢ່າງ ຄື ປະສົບການໃນການຮຽນຮູ້,ການຮູ້ຈັກສະສົມຄວາມຮູ້ ແລະ

ການນຳຄວາມຮູ້ໄປໃຊ້ ດັ່ງນັ້ນ ຈຶ່ງເປັນໜ້າທີ່ຂອງສະໝອງສ່ວນກາງໃນການຕີຄວາມຕົວແປຕ່າງໆ ການຮຽນຮູ້ຈຶ່ງຂຶ້ນຢູ່ກັບການເຊື່ອມຕໍ່ຄວາມຮູ້ໃໝ່ເຂົ້າກັບປະສົບການເດີມແລະສະແດງອອກມາຢ່າງເໝາະສົມ.

3. ການອ່ານທີ່ເນັ້ນທິດສະດີພັດທະນາການ ມີແນວຄິດໃນການຮຽນຮູ້ເກີດຂຶ້ນຕັ້ງແຕ່ໄວທີຕ້ອງເພິ່ງຜູ້ອື່ນ ແລະ ຈະພັດທະນາໄປເລື່ອຍໆຕາມໄວ ສິ່ງສຳຄັນຂອງຊ່ວງອາຍຸ ຄືຈະມີການຮຽນຮູ້ທັກສະສະເພາະໃນແຕ່ລະຊ່ວງອາຍຸ ຖ້າຊ່ວງນັ້ນບໍ່ເກີດການຮຽນຮູ້ທີ່ເໝາະສົມ ພັດທະນາການຮຽນຮູ້ໃນຊ່ວງນັ້ນກໍຈະບົກຜ່ອງໄປ ແລະຈະມີຜົນກະທົບຕໍ່ການຮຽນຮູ້ໃນສ່ວນພາຍຫຼັງ ດັ່ງນັ້ນ ການອ່ານຈຶ່ງເປັນຂະບວນການຮັບຮູ້ ເຊິ່ງມີພື້ນຖານມາຈາກຊ່ວງພັດທະນາການຕ່າງ ໆ ຕາມຄວາມສາມາດທີນັກຮຽນສະແດງອອກໃນການອ່ານ ເປັນເຄື່ອງຊີ້ໃຫ້ເຫັນລະດັບພັດທະນາການຂອງຜູ້ຮຽນວິທີສອນເພື່ອພັດທະນາໂຄງສ້າງຄວາມຮູ້ ຫຼື ແບບແຜນຄວາມຮູ້ມີດັ່ງນີ້

1. ສອນອ່ານຈາກບົດສັ້ນໆໂດຍສອນຈາກຄຳໄປສູ່ວະລີ ຈາກວະລີໄປສູ່ປະໂຫຍກ ແລະ ຈາກປະໂຫຍກໄປສູ່ຫຍໍ້ໜ້າ.

2. ສອນອ່ານໂດຍໃຫ້ນັກຮຽນອ່ານ ແລ້ວທຳນາຍວ່າເຫດການທີ່ເກີດຂຶ້ນນີ້ ຕໍ່ໄປຈາກເຫດການນີ້ຄວນເປັນຢ່າງໃດ

3. ຖ້ານັກຮຽນບໍ່ມີໂຄງສ້າງຄວາມຮູ້ ຫຼື ແບບແຜນຄວາມຮູ້ ຫຼື ທີ່ມາຂອງເລື່ອງທີ່ອ່ານ ຄູຄວນສ້າງພື້ນຖານໂດຍການສົນທະນາເລື່ອງໃນບົດອ່ານ ເພື່ອສ້າງຂອບເຂດຄວາມຮູ້ໃນບົດຮຽນເປັນພື້ນຖານການອ່ານ

4. ໃຫ້ນັກຮຽນຕັ້ງຄຳຖາມກ່ອນອ່ານແລະຄຳຖາມຫລັງອ່ານ. ທິດສະດີການອ່ານທີ່ກ່າວມານັ້ນ ເປັນທິດສະດີການອ່ານທີ່ເນັ້ນການຈັດລຳດັບຂໍ້ຄວາມ ເນັ້ນການວິເຄາະ ແລະ ເຊື່ອມຕໍ່ຂໍ້ຄວາມ ລວມທັງທິດສະດີການອ່ານທີເນັ້ນພຶດຕິກຳ ເນັ້ນຄວາມຮູ້ ຄວາມເຂົ້າໃຈ ແລະ ເນັ້ນທິດສະດີພັດທະນາການຕະຫຼອດຈົນວິທີການຮຽນອ່ານຂອງເດັກ ເຊີ່ງມີຢູ່ 3 ທາງນຳກັນ ຄື ການສັງເກດພາບທີສຳພັນກັບຄຳ ອ່ານໂດຍໃຊ້ສຽງພາໄປການຈຳຮູບຄຳ ຊຶ່ງທິດສະດີເຫຼົ່ານີ້ສາມາດນຳໄປໃຊ້ເປັນຫຼັກໃນການຈັດກິດຈະກຳການຮຽນການ-ສອນອ່ານເພື່ອຄວາມເຂົ້າໃຈໃຫ້ເກີດຜົນດີ.

- **ຄວາມໝາຍຂອງການອ່ານຈັບໃຈຄວາມ**

ສະສິທອນ ທັບລັກສະໝານົນ (2542: 236 ອ້າງຈາກ ໂອເລັດ ແສງໄສ, 2554: 25) ກ່າວວ່າເປັນການອ່ານແລ້ວສະຫລຸບໃຈຄວາມສຳຄັນ ຫຼື ຂໍ້ຄວາມທີ່ສຳຄັນດ້ວຍການຈົດບັນທຶກຫຍໍ້ ຫຼື ຈົດຈຳໄວ້ໃນສະໝອງ ຫຼື ດ້ວຍການຂີດກ້ອງໄວ້ໃນໜັງສືນີ້ໃຈຄວາມສຳຄັນທີຜູ້ອ່ານໄດ້ຮັບ ອາດມີຫຼາຍລັກສະນະຕາມແຕ່ຈະຕ້ອງການ ເຊັ່ນ ເປັນສາລະສຳຄັນຂອງເນື້ອເລື່ອງ ເປັນຄວາມຮູ້ ຫຼື ຂໍ້ມູນທີຜູ້ອ່ານສົນໃຈເປັນແນວຄວາມຄິດ ຫຼື ທັດສະນະຂອງຜູ້ຂຽນ ຫຼື ເປັນຈຸດມຸ້ງໝາຍສຳຄັນຂອງເລື່ອງ.

ນັດສຸພາງ ຍິ່ງີດງ່າ (2550: 9 ອ້າງຈາກ ໂອເລັດ ແສງໄສ, 2554: 25) ກ່າວວ່າ ການອ່ານຈັບໃຈຄວາມ ໝາຍເຖິງ ຄວາມຮູ້ຄວາມເຂົ້າໃຈໃນການອ່ານເນື້ອເລື່ອງ ຈົນສາມາດຈັບໃຈຄວາມສຳຄັນຂອງເລື່ອງຕີຄວາມ, ຂະຫຍາຍຄວາມຄິດ, ວິເຄາະ ແລະ ຄິດສັງເຄາະລວມທັງຂຽນສື່ຄວາມຈາກເລື່ອງທີ່ອ່ານໄດ້ດັ່ງນັ້ນ

ຈຶ່ງສະຫລຸບໄດ້ວ່າ ການອ່ານຈັບໃຈຄວາມ ໝາຍເຖິງ ການອ່ານເລື່ອງແລ້ວສາມາດບອກສ່ວນສຳຄັນຂອງເລື່ອງ ເຊິ່ງກົງກັບທີ່ຜູ້ຂຽນຕ້ອງການສື່ໃຫ້ຮູ້ໄດ້ ໂດຍການໃຊ້ຄວາມຄິດຂອງຕົນແປຄວາມ,ຕີຄວາມ, ຂະຫຍາຍຄວາມ ແລະໃຊ້ຄວາມຄິດວິເຄາະໃນການຕັດສິນເລືອກໃຈຄວາມສຳຄັນ ແລະ ເວົ້າ ຫຼື ຂຽນສື່ຄວາມຫມາຍອອກມາໄດ້.

- **ຫລັກສຳຄັນໃນການອ່ານຈັບໃຈຄວາມ**

ໃນການສອນທັກສະການອ່ານເພື່ອຈັບໃຈຄວາມ ຄູຕ້ອງພະຍາຍາມສ້າງຄວາມສົນໃຈໃຫ້ນັກຮຽນເຫັນຄຸນຄ່າແລະຄວາມສຳຄັນຂອງການອ່ານຈັບໃຈຄວາມ ໂດຍຝຶກໃຫ້ນັກຮຽນອ່ານເພື່ອຄວາມເຂົ້າໃຈໃນເລື່ອງລາວທີ່ກຳນົດໃຫ້ ໂດຍຄູຕັ້ງຄຳຖາມໃຫ້ນັກຮຽນຕອບເປັນຕອນໆຕາມເນື້ອເລື່ອງນັ້ນໆ

ທັດນີ ສຸບເມທີ (2534: 88 ອ້າງຈາກ ໂອເລັດ ແສງໄສ, 2554: 26) ກ່າວເຖິງການສອນອ່ານເພື່ອຈັບໃຈຄວາມວ່າຄູຄວນແນະແນວທາງໃນການອ່ານ ຫຼື ບອກຈຸດມຸ້ງໝາຍໃນການອ່ານເສຍກ່ອນທີ່ຈະຊ່ວຍໃຫ້ການອ່ານໄດ້ຜົນດີເຊັ່ນ:

1. ອະທິບາຍຄຳບາງຄຳທີ່ມີຄວາມຫມາຍພິເສດ ຫຼື ຄຳທີ່ຄວນຮູ້ກ່ອນ ເພື່ອບໍ່ໃຫ້ມີບັນຫາໃນການເຂົ້າໃຈຄວາມຫມາຍໃນຂະນະທີ່ອ່ານເພື່ອຈັບໃຈຄວາມ.

2. ໃຫ້ນັກຮຽນຮູ້ຈຸດມຸ້ງໝາຍໃນການອ່ານ ຫຼື ອາດມີການຕັ້ງຄຳຖາມເພື່ອໃຫ້ຄົ້ນຫາຄຳຕອບ ຈະຊ່ວຍໃຫ້ນັກຮຽນອ່ານຈັບໃຈຄວາມໄດ້ດີຂຶ້ນ.

3. ມີການສົນທະນາກ່ຽວກັບເຄົ້າໂຄງເລື່ອງທີ່ຈະໃຫ້ອ່ານກ່ອນ ຫຼື ສົນທະນາກ່ຽວກັບພາບ ຫຼື ປະສົບການທີ່ກ່ຽວຂ້ອງກັບເນື້ອເລື່ອງທີ່ຈະໃຫ້ອ່ານ.

4. ກຳນົດເນື້ອໃນ ແລະ ເວລາທີ່ໃຫ້ອ່ານໄດ້ຢ່າງເໝາະສົມກັບລະດັບໄວ ແລະ ຄວາມສາມາດ

5. ຄວນມີກິດຈະກຳຕໍ່ເນື່ອງຫລັງຈາກການອ່ານ ເຊັ່ນ ໃຫ້ຕອບຄຳຖາມ ຫຼື ໃຫ້ຂຽນສະຫຼຸບເລື່ອງລາວເພື່ອທົດສອບຄວາມເຂົ້າໃຈ ຫຼື ອາດໃຫ້ອ່ານອອກສຽງຊ້ຳໃນເນື້ອຫານັ້ນອີກກໍໄດ້.

ບັນລື ພະລົກສະມີ (2532: 146 ອ້າງຈາກ ໂອເລັດ ແສງໄສ, 2554: 26) ໄດ້ກ່າວເຖິງຂັ້ນຕອນການເຝິກອ່ານເພື່ອຈັບໃຈຄວາມໄວ້ດັ່ງນີ້:

1. ອ່ານເລື່ອງລາວຜ່ານໆໂດຍຕະຫຼອດ ເພື່ອໃຫ້ຮູ້ວ່າເລື່ອງນັ້ນວ່າດ້ວຍເລື່ອງຫຍັງນຳຈຸດໃດນຳຕອນໃດເປັນຕອນສຳຄັນຂອງເລື່ອງ.

2. ອ່ານຊ້ຳຕອນທີ່ບໍ່ເຂົ້າໃຈ ແລະກວດສອບຄວາມເຂົ້າໃຈໃຫ້ຖືກຕ້ອງ

3. ຕອບຄຳຖາມສັ້ນໆ ໃຜເຮັດຫຍັງ? ຢູ່ໃສ? ເມື່ອໃດ? ຫຼື ເຮັດບັນທຶກຫຍໍ້ເພື່ອທົດສອບຄວາມເຂົ້າໃຈຂອງຕົນເອງ.

4. ລຽບລຽງໃຈຄວາມສຳຄັນຂອງເລື່ອງດ້ວຍຕົນເອງຂໍ້ສະເໜີແນະໃນການຝຶກ

1). ສ່ວນຄຳທີ່ຄວນສຶກສາ ຫຼື ມີຄວາມຫມາຍພິເສດໃຫ້ກ່ອນ ເພື່ອບໍ່ໃຫ້ມີບັນຫາກ່ຽວກັບການຕີຄວາມແລະ ຈັບໃຈຄວາມ

2). ຕັ້ງຄຳຖາມເພື່ອຄົ້ນຫາຄຳຕອບ ເພື່ອໃຫ້ນັກຮຽນຮູ້ຈຸດປະສົງກ່ອນອ່ານ

3). ສະຫລຸບໂຄງເລື່ອງໃຫ້ຟັງກ່ອນອ່ານ

4). ສົນທະນາກ່ຽວກັບພາບ ຫຼື ປະສົບການທີ່ມີສ່ວນກ່ຽວຂ້ອງກັບເນື້ອເລື່ອງທີ່ອ່ານ

5). ກຳນົດເວລາໃນການອ່ານໃຫ້ເໝາະສົມກັບຈຳນວນຄຳ ແລະ ຫຼຸດເວລາໃຫ້ນ້ອຍລົງເທື່ອລະນ້ອຍ

6). ຄວນແນະນຳໃຫ້ຮູ້ວ່າຂໍ້ຄວາມສຳຄັນ ຫຼື ໃຈຄວາມສຳຄັນຂອງແຕ່ລະຫຍໍ້ໜ້າຈະຢູ່ຕອນຕົ້ນໆຂອງຫຍໍ້ໜ້າ ຫຼື ຕອນທ້າຍຂອງຫຍໍ້ໜ້າແລະສະຫຼຸບຈະຢູ່ຕອນທ້າຍຂອງເລື່ອງ ແຕ່ຖ້າເປັນບົດສົນທະນາ ຈະຕ້ອງອ່ານເພື່ອຈັບໃຈຄວາມທຸກປະໂຫຍກ.

7). ຄວນນຳເລື່ອງງ່າຍໆ ສັ້ນໆ ໃຫ້ຝຶກກ່ອນແລ້ວເພີ່ມຄວາມຍາວຂຶ້ນຕາມລຳດັບ

8). ໃຫ້ປະຕິບັດກິດຈະກຳຕໍ່ເລື່ອງທີ່ອ່ານ ເຊັ່ນ ຕອບຄຳຖາມສະຫລຸບເລື່ອງເພື່ອທົດສອບຄວາມເຂົ້າໃຈ

9). ຫລັງການອ່ານໃນໃຈແລ້ວ ອາດໃຫ້ອ່ານອອກສຽງອີກ ໂດຍສະເພາະເນື້ອເລື່ອງເປັນບົດລະຄອນ

## 2. ແນວຄິດທິດສະດີການສອນແບບ STAD

ການຈັດກິດຈະກຳການຮຽນຮູ້ແບບຮ່ວມມື ແບ່ງກຸ່ມຜົນສຳເລັດ (Student Team Achievement Division).

- **ຄວາມໝາຍການຮຽນຮູ້ແບບຮ່ວມມື ແບ່ງກຸ່ມຜົນສຳເລັດ**

ການຈັດກິດຈະກຳການຮຽນຮູ້ແບບຮ່ວມມື ແບ່ງກຸ່ມຜົນສຳເລັດ ເປັນການຮຽນຮູ້ແບບຮ່ວມມືກັນອີກຮູບແບບໜຶ່ງ ທີ່ແບ່ງຜູ້ຮຽນທີ່ມີຄວາມສາມາດແຕກຕ່າງກັນອອກເປັນກຸ່ມ ກຸ່ມລະປະມານ 4-5 ຄົນ ເພື່ອເຮັດວຽກຮ່ວມກັນ ໂດຍກຳນົດໃຫ້ສະມາຊິກຂອງກຸ່ມໄດ້ຮຽນຮູ້ເນື້ອໃນບົດຮຽນທີ່ຜູ້ສອນຈັດກຽມໄວ້ ແລ້ວເຮັດການທົດສອບຄວາມຮູ້ ຄະແນນທີ່ໄດ້ຈາກການທົດສອບຂອງສະມາຊິກແຕ່ລະຄົນນຳເອົາມາບວກເປັນຄະແນນລວມຂອງກຸ່ມ, ຜູ້ສອນຈະຕ້ອງໃຊ້ເຕັກນິກເສີມແຮງ ເຊັ່ນ ໃຫ້ລາງວັນ, ຄຳຊົມເຊີຍ ເປັນຕົ້ນ. ດັ່ງນັ້ນ, ສະມາຊິກກຸ່ມທຸກຄົນຈະຕ້ອງໄດ້ກຳນົດເປົ້າໝາຍຮ່ວມກັນ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອຄວາມສຳເລັດຂອງກຸ່ມ. (ສຸວິດ ມູນຄຳ, 2545: 170).

- **ຈຸດປະສົງຂອງການຮຽນຮູ້ແບບຮ່ວມມື ແບ່ງກຸ່ມຜົນສຳເລັດ**

1. ເພື່ອສົ່ງເສີມໃຫ້ຜູ້ຮຽນສຶກສາຄົ້ນຄວ້າຫາຄວາມຮູ້ດ້ວຍຕົນເອງ

2. ເພື່ອສົ່ງເສີມໃຫ້ຜູ້ຮຽນເຝິກທັກສະຂະບວນການທາງສັງຄົມ ເຊັ່ນ ທັກສະຂະບວນການກຸ່ມ, ທັກສະການເປັນຜູ້ນຳ ແລະ ເຝິກຄວາມຮັບຜິດຊອບ. (ສຸວິດ ມູນຄຳ, 2545: 170)

- **ອົງປະກອບສຳຄັນການຮຽນຮູ້ແບບຮ່ວມມື ແບ່ງກຸ່ມຜົນສຳເລັດ**

ການຈັດກິດຈະກຳການຮຽນຮູ້ແບບຮ່ວມມື ແບ່ງກຸ່ມຜົນສຳເລັດມີອົງປະກອບສຳຄັນດັ່ງນີ້:

1. ການສະເໜີເນື້ອໃນ ຜູ້ສອນທົບທວນບົດຮຽນທີ່ຮຽນຜ່ານມາ ແລະ ນຳສະເໜີເນື້ອໃນບົດຮຽນ ຫຼື ແນວຄິດລວມຍອດໃໝ່

2. ການເຮັດວຽກເປັນທີມ ຫຼື ກຸ່ມ ຜູ້ສອນຈັດຜູ້ຮຽນທີ່ມີຄວາມສາມາດຕ່າງກັນໃຫ້ເທົ່າທຽມກັນ ແລະ ຊີ້ແຈງໃຫ້ຜູ້ຮຽນຮັບຮູ້ເຖິງບົດບາດໜ້າທີ່ຂອງສະມາຊິກໃນກຸ່ມທີ່ຈະຕ້ອງຊ່ວຍ ແລະ ຮ່ວມກັນຮຽນຮູ້ ເພາະຜົນການຮຽນຂອງສະມາຊິກແຕ່ລະຄົນສົ່ງຜົນຕໍ່ຜົນລວມຂອງກຸ່ມ.

3. ການສອບຍ່ອຍ ຫຼັງຈາກຮຽນຮູ້ ຫຼື ເຮັດກິດຈະກຳສຳເລັດແລ້ວ ສະມາຊິກທຸກຄົນແມ່ນເຮັດແບບທົດສອບຍ່ອຍເປັນລາຍບຸກຄົນ.

4. ຄະແນນພັດທະນາການຂອງຜູ້ຮຽນ ເປັນຄະແນນການພັດທະນາ ຫຼື ຄວາມກ້າວໜ້າຂອງສະມາຊິກແຕ່ລະຄົນ ເຊິ່ງຜູ້ສອນ ແລະ ຜູ້ຮຽນອາດຮ່ວມກັນກຳນົດຄະແນນການພັດທະນາເປັນເກນຂຶ້ນມາກໍ່ໄດ້

5. ການຮັບຮອງຜົນງານ ແລະ ເຜີຍແຜ່ຜົນງານຂອງກຸ່ມ ເປັນການປະກາດຜົນງານຂອງກຸ່ມ ເພື່ອຮັບຮອງ ແລະ ຍ້ອງຍໍຊົມເຊີຍຜົນງານໃນຮູບແບບຕ່າງໆ ເຊັ່ນ ຕິດປະກາດຜົນງານກຸ່ມ, ໃຫ້ລາງວັນ (ສຸວິດ ມູນຄຳ, 2545: 171)

- **ຂັ້ນຕອນການຈັດການຮຽນ-ການສອນແບບ STAD**

ມີນັກຄົ້ນຄວ້າຫຼາຍທ່ານໄດ້ໃຫ້ຂໍ້ມູນກ່ຽວກັບຂັ້ນຕອນການຈັດດັ່ງນີ້:

ສະໜອງ ອິນລະຄອນ (2546: 118) ມີຂັ້ນຕອນການ ດຳເນີນການດັ່ງນີ້:

1. ແບ່ງນັກສຶກສາທີ່ມີຂະໜາດຄວາມສາມາດທຽມເທົ່າກັນ ກຸ່ມລະ 4-6 ຄົນ, ແຕ່ລະກຸ່ມປະກອບດ້ວຍນັກສຶກສາທີ່ເກັ່ງ 1 ຄົນ, ປານກາງ 2-4 ຄົນ ແລະ ອ່ອນ 1 ຄົນ ເລືອກຫົວໜ້າກຸ່ມ ແລະ ເລຂານຸການກຸ່ມ

2. ຄູນຳສະເໜີເນື້ອໃນບົດຮຽນໃໝ່ ແລ້ວໃຫ້ນັກສຶກສາແຕ່ລະກຸ່ມເຮັດແບບເຝິກຫັດ ຫຼື ກິດຈະກຳ ໂດຍໃຫ້ຄົ້ນຄວ້າ ເພື່ອທຳຄວາມເຂົ້າໃຈກັບເນື້ອໃນບົດຮຽນໃໝ່ ແລະ ເຮັດແບບເຝິກຫັດ ຫຼື ກິດຈະກຳໄປພ້ອມໆກັນ.

3. ແຕ່ລະກຸ່ມກຽມຕົວທົດສອບ.

4. ດຳເນີນການທົດສອບເປັນລາຍບຸກຄົນ ໂດຍຄູຈັດຫ້ອງສອບ ດຳເນີນການທົດສອບ ແລະ ກວດ ຂໍ້ສອບລາຍບຸກຄົນ ຫຼື ຄູໃຫ້ນັກສຶກສາກວດກັນເອງ ໂດຍແລກປ່ຽນເຈ້ຍຄຳຕອບກັນກໍ່ໄດ້.

5. ແຕ່ລະກຸ່ມລວມຄະແນນຂອງນັກຮຽນແຕ່ລະຄົນເປັນຄະແນນລວມ ຫຼື ສະເລ່ຍ ຄະແນນຂອງ ກຸ່ມເປັນຄະແນນຂອງແຕ່ລະຄົນ (ທຸກຄົນໃນກຸ່ມໄດ້ຄະແນນເທົ່າກັນ).

6. ມອບລາງວັນ ຫຼື ປະກາດຜົນງານໃຫ້ກຸ່ມທີ່ໄດ້ຄະແນນສູງສຸດຮອງອັນດັບໜຶ່ງ ແລະ ຮອງອັນດັບສອງ ຫຼື ຄູໃຫ້ຄະແນນໂບນັດ ກຸ່ມທີໄດ້ຄະແນນລວມ ຫຼື ຄະແນນສະເລ່ຍສູງສຸດ 5 ຄະແນນ, ກຸ່ມຮອງອັນດັບໜຶ່ງ ໃຫ້ 3 ຄະແນນ ແລະ ກຸ່ມຮອງອັນດັບ 3 ໃຫ້ 1 ຄະແນນ. ແຕ່ລະກຸ່ມສະສົມໂບນັດໄດ້ເພື່ອຮັບລາງວັນຕໍ່ໄປ.

ສັກສ ປະນະກຸນ (2549:154) ໄດ້ສະເໜີຂະບວນການດຳເນີນການຈັດການຮຽນ-ການສອນແບບແບບຮ່ວມມື ແບ່ງກຸ່ມຜົນສຳເລັດໄວ້ດັ່ງນີ້:

1. ຄູນຳສະເໜີບົດຮຽນໃໝ່ ອາດໃຊ້ການອະທິບາຍ, ອະພິປາຍ, ການສາທິດ ຫຼື ໃຊ້ສື່ປະກອບ

2. ຄູແນະນຳການເຮັດວຽກກຸ່ມແບບຮ່ວມມືຄືທຸກຄົນເຮັດວຽກເປັນທີມ ແລະ ຊ່ວຍເຫຼືອກັນລະຫວ່າງຮຽນໃຫ້ທຸກຄົນໄດ້ຮຽນຮູ້ ແລ້ວເຮັດແບບທົດສອບຍ່ອຍໃນແຕ່ລະຄັ້ງຂອງການສອນຄະແນນຂອງແຕ່ລະຄົນຈະເປັນຄະແນນຂອງກຸ່ມ ກຸ່ມໃດຄະແນນດີທີສຸດຈະຕິດປະກາດໄວ້.

1. ຈັດກຸ່ມ ແຕ່ລະກຸ່ມ ຮັບບັດກິດຈະກຳ ແລະ ເຈ້ຍຄຳຕອບ ນັກສຶກສາເຝິກເຮັດກິດຈະກຳດ້ວຍກັນຊ່ວຍໝູ່ເພື່ອນທຸກຄົນໃນກຸ່ມໃຫ້ຮຽນຮູ້ໄດ້ດີທີ່ສຸດ ຈົນແນ່ໃຈວ່າໝູ່ເພື່ອນທຸກຄົນເຮັດທຸກຂໍ້ໃນບັດກິດຈະກຳໄດ້ຖືກຕ້ອງ ແລະ ເຂົ້າໃຈ.

2. ເຮັດແບບທົດສອບຍ່ອຍ ຫຼັງຈາກນັ້ນອາດໃຫ້ຜູ້ຮຽນແລກກັນກວດ ແລ້ວຄູກວດສອບອີກຄັ້ງ ຫຼື ຄູອາດເປັນຜູ້ກວດເອງ ແຕ່ຈະຕ້ອງໃຫ້ຜູ້ຮຽນຮູ້ຜົນກ່ອນທີຈະຮຽນບົດໃໝ່ຕໍ່ໄປ.

ສຸວິດ ມູນຄຳ (2551:172-174) ມີຂັ້ນຕອນການດຳເນີນການສອນ ດັ່ງນີ້:

**1. ຂັ້ນກະກຽມເນື້ອໃນ ປະກອບດ້ວຍ**

1). ການຈັດກຽມເນື້ອໃນບົດຮຽນ ຜູ້ສອນຈັດກຽມເນື້ອໃນບົດຮຽນ ຫຼື ເລື່ອງທີ່ຈະໃຫ້ຜູ້ຮຽນໄດ້ຮຽນຮູ້ເປັນເນື້ອໃນໃໝ່ ໂດຍກິດຈະກຳໃຫ້ຜູ້ຮຽນສຶກສາຮຽນຮູ້ດ້ວຍຕົນເອງ ລວມທັງສື່, ວັດສະດຸອຸປະກອນ ຫຼື ແຫຼ່ງຮຽນຮູ້ ໃບຄວາມຮູ້ ແລະ ກິດຈະກຳເປັນຕົ້ນ.

2). ການຈັດກຽມແບບທົດສອບຍ່ອຍ ເຊັ່ນ ຂໍ້ທົດສອບ, ຂະໜານຕອບ, ເກມການໃຫ້ຄະແນນເປັນຕົ້ນ.

**2. ຂັ້ນຈັດກຸ່ມ ຫຼື ທີມ**

ຜູ້ສອນຈັດກຸ່ມຜູ້ຮຽນໂດຍໃຫ້ເທົ່າກັນທັງເພດ ແລະ ຄວາມສາມາດ ກຸ່ມລະປະມານ 4-5 ຄົນ ເຊັ່ນ: ກຸ່ມທີ່ມີສະມາຊິກ 4 ຄົນ ອາດປະກອບດ້ວຍຊາຍ 2, ຍິງ 2 ຄົນ, ເປັນຄົນເກັ່ງ 1, ປານກາງ 2 ແລະ ອ່ອນ 1 ຄົນ ເປັນຕົ້ນ.

**3. ຂັ້ນຈັດກິດຈະກຳການຮຽນ-ການສອນ ປະກອບດ້ວຍ**

1). ຜູ້ສອນແນະນຳການຮຽນຮູ້

2). ກຸ່ມວາງແຜນການຮຽນຮູ້ ໂດຍແບ່ງພາລະໜ້າທີກັນ ເຊັ່ນ ຜູ້ອ່ານ, ຜູ້ຫາຄຳຕອບ, ຜູ້ສະໜັບໜູນ ຜູ້ຈົດບັນທຶກ ແລະ ຜູ້ປະເມີນຜົນ ເປັນຕົ້ນ.

3). ສະມາຊິກຂອງແຕ່ລະກຸ່ມສຶກສາເນື້ອໃນບົດຮຽນ ແລະ ບັດກິດຈະກຳຕາມທີ່ຜູ້ສອນກຳນົດໃຫ້.

4). ຜູ້ຮຽນ ຫຼື ສະມາຊິກແຕ່ລະກຸ່ມປະເມີນເພື່ອທົບທວນຄວາມຮູ້ ແລະ ຄວາມເຂົ້າໃຈໃນເນື້ອໃນບົດຮຽນ.

**4. ຂັ້ນທົດສອບ**

1). ຜູ້ຮຽນແຕ່ລະຄົນເຮັດການທົດສອບຍ່ອຍ ເພື່ອວັດຄວາມຮູ້ ຄວາມເຂົ້າໃຈໃນເນື້ອໃນບົດຮຽນທີ່ໄດ້ຮຽນຮູ້ຈາກຂໍ້ທົດສອບຂອງຜູ້ສອນ.

2). ຜູ້ສອນ ແລະ ຜູ້ຮຽນອາດຮ່ວມກັນກວດສອບຜົນການທົດສອບຂອງສະມາຊິກແຕ່ລະຄົນ.

3). ກຸ່ມຈັດຄະແນນພັດທະນາຂອງສະມາຊິກແຕ່ລະຄົນ ແລະ ຄະແນນພັດທະນາຂອງກຸ່ມ ໂດຍອາດຈັດເປັນຕາຕະລາງດັ່ງລຸ່ມນີ້:

**ຕາຕະລາງທີ 1:** ກຸ່ມ:..............................................

| ລຳດັບທີ | ຊື່ສະມາຊິກ | ຄະແນນທົດສອບຍ່ອຍ | ຄະແນນຖານ | ຄະແນນພັດທະນາ |
|---|---|---|---|---|
| | | | | |
| | ລວມ | | | |

4. ໃຫ້ແຕ່ລະກຸ່ມນຳຄະແນນການພັດທະນາຂອງກຸ່ມໄປທຽບກັບເກນ ເພື່ອຫາລະດັບຄຸນນະພາບ ເຊິ່ງອາດກຳນົດດັ່ງຕົວຢ່າງ:

**5. ຂັ້ນການຮັບຮອງຜົນງານ ແລະ ເຜີຍແຜ່ຊື່ສຽງຂອງກຸ່ມ** ເປັນການປະກາດຜົນງານຂອງກຸ່ມແຕ່ລະກຸ່ມຢູ່ໃນລະດັບຄຸນນະພາບໃດ, ຮັບຮອງຍົກຍ້ອງ, ຊົມເຊີຍ ກຸ່ມທີ່ມີຄະແນນພັດທະນາສູງໃນຮູບແບບຕ່າງໆ ເຊັ່ນ ຕິດປະກາດໃຫ້ລາງວັນ, ລົງຈົດໝາຍຂ່າວ, ປະກາດຊື່ສຽງຕາມສາຍ ເປັນຕົ້ນ.

ຂັ້ນຕອນການຈັດກິດຈະກຳການຮຽນຮູ້ແບບຮ່ວມມືເທັກນິກ STAD ສາມມາດສະຫຼຸບເປັນແຜ່ນພູມໄດ້ດັ່ງນີ້:

1. ຂັ້ນກຽມເນື້ອໃນ: ກຽມເນື້ອໃນບົດຮຽນ ແລະ ກຽມແບບທົດສອບ

2. ຂັ້ນຈັດກຸ່ມ ຫຼື ທີມ: ຈັດນັກຮຽນເຂົ້າເປັນກຸ່ມ

3. ຂັ້ນການຮຽນຮູ້: - ແນະນຳວິທີການຮຽນຮູ້ - ວາງແຜນການຮຽນຮູ້ - ສຶກສາ ແລະ ເຮັດກິດຈະກຳ - ປະເມີນທົບທວນຄວາມຮູ້

4. ຂັ້ນວັດ ແລະ ປະເມີນຜົນ: - ທົດສອບຍ່ອຍ - ກວດຜົນການທົດສອບ - ຈັດຄະແນນພັດທະນາ - ນຳຄະແນນທຽບລະດັບຄຸນນະພາບ

5. ຂັ້ນການຮັບຮອງຜົນງານ ແລະ ເຜີຍແຜ່ຊື່ສຽງຂອງກຸ່ມ: - ປະກາດຜົນ - ໃຫ້ລາງວັນ ຍົກຍ້ອງ ຊົມເຊີຍ

**ພາບປະກອບທີ 2:** ຂັ້ນຕອນການສອນແບບ STAD

- **ຂໍ້ດີ ແລະ ຂໍ້ຈຳກັດ**

ສຸວິດ ມູນຄຳ (2551:175) ໄດ້ກ່າວວ່າ ຂໍ້ດີ ແລະ ຂໍ້ຈຳກັດຂອງການຈັດກິດຈະກຳການຮຽນ-ການສອນແບບຮ່ວມມື ແບ່ງກຸ່ມຜົນສຳເລັດມີດັ່ງນີ້:

- **ຂໍ້ດີ**

1. ຜູ້ຮຽນມີຄວາມເອົາໃຈໃສ່ຮັບຜິດຊອບຕົວເອງ ແລະ ກຸ່ມຮ່ວມກັບສະມາຊິກຄົນອື່ນ.
2. ສົ່ງຜົນໃຫ້ຜູ້ຮຽນທີ່ມີຄວາມສາມາດຕ່າງກັນໄດ້ຮຽນຮູ້ຮ່ວມກັນ.
3. ສົ່ງເສີມໃຫ້ຜູ້ຮຽນໄດ້ຜັດປ່ຽນກັນເປັນຜູ້ນຳ.
4. ສົ່ງເສີມໃຫ້ຜູ້ຮຽນໄດ້ເຝິກ ແລະ ຮຽນຮູ້ທັກສະທາງສັງຄົມໂດຍກົງ.
5. ຜູ້ຮຽນມີຄວາມຕື່ນເຕັ້ນ ແລະ ສະໜຸກສະໜານກັບການຮຽນຮູ້.

- **ຂໍ້ຈຳກັດ**

1. ຖ້າຜູ້ຮຽນຂາດຄວາມເອົາໃຈໃສ່ ແລະ ຄວາມຮັບຜິດຊອບຈະສົ່ງຜົນໃຫ້ຜົນງານຂອງກຸ່ມ ແລະ ການຮຽນຮູ້ບໍ່ປະສົບຜົນສຳເລັດ.

2. ເປັນວິທີການທີ່ຜູ້ສອນຈະຕ້ອງກຽມພ້ອມ, ເອົາໃຈໃສ່ໃນຂະບວນການຮຽນຮູ້ຂອງຜູ້ຮຽນຢ່າງໃກ້ຊິດຈຶ່ງຈະໄດ້ຮັບຜົນດີ.

3. ຜູ້ສອນມີພາລະວຽກງານຫຼາຍຂຶ້ນ

## 3. ແນວຄິດທິດສະດີກ່ຽວກັບວິທີການສ້າງແຜນການສອນ

- **ຄວາມໝາຍຂອງແຜນການສອນ**

ວັດທະນາພອນ ຣະງັບທຸກ (2542: 1) ໄດ້ໃຫ້ຄວາມໝາຍຂອງແຜນການສອນວ່າ ເປັນແຜນການ ຫຼື ໂຄງການທີ່ຂຽນເປັນລາຍລັກອັກສອນເພື່ອໃຊ້ໃນການປະຕິບັດການສອນໃນລາຍວິຊາໃດໜຶ່ງ, ເປັນການກຽມການສອນຢ່າງມີລະບົບ ແລະ ເປັນເຄື່ອງມືທີ່ຊ່ວຍໃຫ້ຄູພັດທະນາການຈັດການຮຽນ-ການສອນໄປສູ່ຈຸດປະສົງການຮຽນຮູ້ ແລະ ຈຸດໝາຍຂອງຫຼັກສູດໄດ້ຢ່າງມີປະສິດທິພາບ.

ແຜນການຈັດການຮຽນຮູ້ໝາຍເຖິງແຜນງານ ຫຼື ໂຄງການທີ່ຄູຜູ້ສອນໄດ້ກຽມການຈັດການຮຽນຮູ້ໄວ້ລ່ວງໜ້າເປັນລາຍລັກອັກສອນເພື່ອໃຊ້ປະຕິບັດການຮຽນຮູ້ໃນລາຍວິຊາໃດໜຶ່ງຢ່າງເປັນລະບຽບໂດຍໃຊ້ເປັນເຄື່ອງມືສຳລັບຈັດການຮຽນຮູ້ເພື່ອນຳຜູ້ຮຽນໄປສູ່ຈຸດປະສົງການຮຽນຮູ້ ແລະ ຈຸດມຸ່ງໝາຍຂອງຫຼັກສູດຢ່າງມີປະສິດທິພາບ (ວິມົນ ສູນທອນໂລດ, 2545: 59)

ຄວາມໝາຍໃນທັດສະນະຂອງຜູ້ຄົ້ນຄວ້າ, ແຜນການສອນຄື ສິ່ງທີ່ຄູກຽມໄວ້ລ່ວງໜ້າທີ່ເປັນລາຍລັກອັກສອນເພື່ອໃຊ້ໃນການຈັດກິດຈະກຳການຮຽນ-ການສອນໃນແຕ່ລະລາຍວິຊາເພື່ອຈະຊ່ວຍໃຫ້ຜູ້ຮຽນບັນລຸຕາມຈຸດປະສົງທີ່ກຳນົດໄວ້ໃນຫຼັກສູດຢ່າງມີປະສິດທິພາບ.

- **ຄວາມສຳຄັນຂອງແຜນການສອນ**

ສະງົບ ລັກສະນະ (2535: 3-4) ໄດ້ສະເໜີໄວ້ວ່າ ຜູ້ເປັນຄູຈະຂາດແຜນການສອນບໍ່ໄດ້, ແຜນການສອນເປັນແຜນທີ່ຄູມຸ່ງໃຫ້ຜູ້ຮຽນເກີດພຶດຕິກຳການຮຽນຮູ້ຍິ່ງຜູ້ສອນໄດ້ເຮັດແຜນການສອນດ້ວຍຕົນເອງກໍ່ຈະຍິ່ງໃຫ້ປະໂຫຍດແກ່ຕົນເອງຫຼາຍເທົ່ານັ້ນ ແລະ ຜົນດີຂອງແຜນການສອນສະຫຼຸບໄດ້ດັ່ງນີ້

1.ເຮັດໃຫ້ເກີດການວາງແຜນວິທີສອນ, ວິທີຮຽນມີຄວາມໝາຍຫຼາຍຂຶ້ນເພາະເປັນການປະຕິບັດຢ່າງມີຫຼັກການ.

2. ຊ່ວຍໃຫ້ຄູມີຄູ່ມືການສອນທີ່ເຮັດດ້ວຍຕົນເອງເຮັດໃຫ້ເກີດຄວາມສະດວກໃນການຈັດການຮຽນ-ການສອນ, ໄດ້ຄົບຖ້ວນຕາມຫຼັກສູດ ແລະ ສອນໄດ້ທັນຕາມເວລາ.

3. ເປັນຜົນງານວິຊາການທີ່ສາມາດເຜີຍແຜ່ເປັນຕົວຢ່າງໄດ້.

4. ຊ່ວຍໃຫ້ຄວາມສະດວກແກ່ຄູຜູ້ມາສອນແທນໃນກໍລະນີທີ່ຜູ້ສອນບໍ່ສາມາດມາສອນ.

ສະຫຼຸບໄດ້ວ່າ ແຜນການສອນ ຫຼື ແຜນການຈັດກິດຈະກຳການຮຽນມີຄວາມສຳຄັນກໍ່ໃຫ້ເກີດຄວາມສະດວກໃນການຈັດການຮຽນ-ການສອນ, ເຖິງຜູ້ສອນບໍ່ສາມາດເຂົ້າສອນໄດ້ຜູ້ສອນແທນກໍ່ສາມາດດຳເນີນການຈັດກິດຈະກຳການຮຽນ-ການສອນໄດ້.

- **ອົງປະກອບຂອງແຜນການສອນ**

ສະໝອງ ອິນລະຄອນ (2546) ແຜນການສອນປະກອບດ້ວຍ

1. ຈຸດປະສົງການຮຽນຮູ້

2. ເວລາທີ່ໃຊ້ສອນ

3. ເນື້ອໃນ

4. ກິດຈະກຳການຮຽນ-ການສອນ

5. ສື່ການຮຽນ-ການສອນ

6. ການວັດຜົນປະເມີນຜົນ

ນອກຈາກນີ້ແຜນການສອນ ຫຼື ແຜນການຈັດການຮຽນຮູ້ອາດຈະມີ

1. ເນື້ອໃນໃຈຄວາມ

2. ກິດຈະກຳທີ່ນຳມາສະເໜີ

3. ໃບກິດຈະກຳ

4. ເຄື່ອງມືວັດຜົນປະເມີນຜົນ

• **ຂັ້ນຕອນການຂຽນແຜນການສອນ**

ວິມົນ ສູນທອນໂລດ (2545: 277-288) ໄດ້ໃຫ້ຄວາມໝາຍເຖິງການຂຽນແຜນການສອນ ຫຼື ແຜນການຈັດກິດຈະກຳການຮຽນຮູ້ວ່າ ເປັນງານສຳຄັນຍິ່ງຂອງຜູ້ເປັນຄູ ເພາະເປັນການກຽມຄວາມພ້ອມການສອນທີ່ສົມບູນເຊິ່ງຈະຊ່ວຍໃຫ້ການຮຽນ-ການສອນບັນລຸຈຸດໝາຍຂອງຫຼັກສູດຢ່າງແທ້ຈິງ, ການສ້າງແຜນການສອນ ຫຼື ແຜນການຈັດກິດຈະກຳການຮຽນຮູ້ມີຂັ້ນຕອນສຳຄັນດັ່ງນີ້

1. ສຶກສາ ແລະ ວິເຄາະຫຼັກສູດໃນວິຊາທີ່ຈະສອນ

    1.1. ຈຸດປະສົງປະຈຳວິຊາ

    1.2. ຄຳອະທິບາຍລາຍວິຊາ

2. ຕື່ມຜົນການວິເຄາະລົງໃນຕາຕະລາງວິເຄາະຫຼັກສູດ

3. ໄຈ້ແຍກເນື້ອໃນໃຈຄວາມ,ໄຈ້ແຍກຈຸດປະສົງການຮຽນຮູ້ ແລະ ຈັດຄາບເວລາໃຫ້ເໝາະສົມ

4. ສຶກສາວິທີສິດສອນເພື່ອ

    4.1. ສຶກສາລາຍລະອຽດຂອງເນື້ອໃນໃຈຄວາມວ່າກົງກັບການວິເຄາະຫຼັກສູດທີ່ວິເຄາະໄວ້ແລ້ວ ຫຼື ອາດຈະມີຫຍັງເພີ່ມເຕີມອີກໃຫ້ສົມບູນຄົບຕາມຄາບເວລາ

    4.2. ນຳເອົາກິດຈະກຳໃນວິທີສິດສອນມາພິຈາລະນາປະກອບການຈັດກິດຈະກຳການຮຽນ-ການສອນໃນການຂຽນແຜນການສອນຕໍ່ໄປ

ຂັ້ນການຂຽນແຜນການສອນ ຫຼື ແຜນການຈັດການຮຽນຮູ້ເປັນຂັ້ນສຳຄັນເຊິ່ງຜູ້ຂຽນຕ້ອງວາງແຜນຢ່າງຮອບຄອບ. ສິ່ງທີ່ຄວນຂຽນໃຫ້ຊັດເຈນໃນແຜນການຈັດການຮຽນຮູ້ໄດ້ແກ່

1. ຊື່ເລື່ອງ

2. ຈຳນວນຄາບ

3. ເນື້ອໃນສຳຄັນ

4. ຜົນການຮຽນຮູ້ທີ່ຄາດຫວັງ

5. ເນື້ອໃນການຮຽນຮູ້

6. ສື່ການຮຽນ-ການສອນ

7. ກິດຈະກຳການຮຽນ-ການສອນ

8. ການວັດຜົນປະເມີນຜົນ

- **ລັກສະນະຂອງແຜນການສອນທີ່ດີ**

ອາພອນ ໃຈທ່ຽງ (2540: 219) ໃຫ້ຄວາມໝາຍໄວ້ວ່າ ແຜນການຈັດການຮຽນຮູ້ທີ່ດີຈະຊ່ວຍໃຫ້ການຮຽນ-ການສອນປະສົບຄວາມສຳເລັດໄດ້ດີ. ດັ່ງນັ້ນ, ລັກສະນະຂອງແຜນການສອນທີ່ດີມີດັ່ງນີ້

1. ສອດຄ່ອງກັບຫຼັກສູດ ແລະ ແນວທາງການສອນ

2. ນຳໄປໃຊ້ສອນໄດ້ຈິງ ແລະ ມີປະສິດທິພາບ

3. ຂຽນຢ່າງຖືກຕ້ອງຕາມຫຼັກວິຊາການ, ເໝາະສົມກັບຜູ້ຮຽນ ແລະ ເວລາທີ່ກຳນົດ

4. ມີຄວາມກະຈ່າງແຈ້ງ, ຊັດເຈນເຮັດໃຫ້ຜູ້ອ່ານເຂົ້າໃຈຕົງກັນ

5. ມີລາຍລະອຽດພຽງພໍທີ່ຈະເຮັດໃຫ້ຜູ້ອ່ານສາມາດນຳໄປໃຊ້ສອນໄດ້

6. ທຸກຫົວຂໍ້ໃນແຜນການສອນມີຄວາມສຳພັນ ແລະ ສອດຄ່ອງກັນ

## 4. ແນວຄິດທິດສະດີກ່ຽວກັບການຫາປະສິທິພາບຂອງແຜນການສອນ

1. ນຳແຜນການສອນທີ່ສ້າງຂຶ້ນນັ້ນສະເໜີຕໍ່ອາຈານທີ່ເປິກສາ ເພື່ອກວດສອບຄວາມຖືກຕ້ອງ ແລະ ຄວາມຊັດເຈນຂອງເນື້ອໃນ (Content Validity), ຄຳສັບທີ່ນຳໃຊ້ ແລະ ການປະເມີນຜົນ ແລ້ວນຳຂໍ້ມູນຄວາມຄິດເຫັນມາປັບປຸງ.

2. ນຳແຜນການສອນທີ່ສ້າງຂຶ້ນນັ້ນສະເໜີຕໍ່ຜູ້ຊ່ຽວຊານຈຳນວນ 3 ທ່ານ ເພື່ອກວດສອບຄວາມຖືກຕ້ອງ ແລະ ຄວາມຊັດເຈນຂອງເນື້ອໃນ, ຄຳສັບທີ່ນຳໃຊ້ ແລະ ການປະເມີນຜົນ ແລ້ວນຳຂໍ້ມູນຄວາມຄິດເຫັນມາຊອກຫາດັດສະນີຄວາມສອດຄ່ອງ (Index Of Item Objective Congruence: IOC) ລະຫວ່າງແຜນການສອນກັບຈຸດປະສົງ ລວມຜົນການປະເມີນຂອງຜູ້ຊ່ຽວຊານແຕ່ລະຂໍ້ ແລ້ວນຳຄະແນນໄປແທນຄ່າໃນສູດ ເພື່ອຄຳນວນຫາຄ່າດັດສະນີຄວາມສອດຄ່ອງ.

3. ນຳຄ່າດັດສະນີຄວາມສອດຄ່ອງມາປຽບກັບເກນການພິຈາລະນາຄ່າດັດສະນີຄວາມສອດຄ່ອງຄື ຖ້າດັດສະນີຄວາມສອດຄ່ອງຫຼາຍກວ່າ ຫຼື ເທົ່າກັບ 0.50 ສະແດງວ່າແຜນການສອນນັ້ນມີຄວາມເໝາະສົມ ແຕ່ຖ້າດັດສະນີຄວາມສອດຄ່ອງໜ້ອຍກວ່າ 0.50 ສະແດງວ່າແຜນການສອນນັ້ນບໍ່ມີຄວາມເໝາະສົມ ຕ້ອງນຳກັບໄປປັບປຸງ ແລະ ແກ້ໄຂໃຫ້ດີຂຶ້ນ.

4. ນຳແຜນການສອນທີ່ປັບປຸງ ແລະ ແກ້ໄຂຕາມຂໍ້ສະເໜີຂອງຜູ້ຊ່ຽວຊານ ແລ້ວນຳສະເໜີຕໍ່ອາຈານທີ່ເປິກສາເພື່ອກວດສອບຄວາມຖືກຕ້ອງ ແລ້ວນຳມາແກ້ໄຂກ່ອນນຳໄປທົດລອງ.

5. ນຳແຜນການສອນທີ່ໄດ້ຮັບການປັບປຸງໄປທົດລອງກັບກຸ່ມຕົວຢ່າງຈິງ.

❖ **ຄວາມໝາຍຂອງການທົດສອບປະສິດທິພາບຂອງແຜນການສອນ $E_1$ /$E_2$**

E1: ໝາຍເຖິງ ເປີເຊັນຂອງຄະແນນສະເລ່ຍທີ່ເກີດຈາກການເຮັດກິດຈະກຳລະຫວ່າງຮຽນທີ່ຈາກຊຸດການສອນຂອງຜູ້ຮຽນ (ປະສິດທິພາບຂອງຂະບວນການຮຽນຮູ້) ຫລື ໝາຍເຖິງການປະເມີນຜົດ ຕິກຳຍ່ອຍໆຈາກການເຮັດກິດຈະກຳຂອງຜູ້ຮຽນໃນບົດຮຽນທຸກກິດຈະກຳ.

E2: ໝາຍເຖິງ ເປີເຊັນຂອງຄະແນນສະເລ່ຍທີ່ເກີດຈາກການເຮັດແບບສອບຫລັງຈາກການຮຽນຂອງຜູ້ຮຽນ (ປະສິດທິພາບຂອງຜົນລັບການຮຽນ). ຫລື ໝາຍເຖິງ ການປະເມີນຜົນລັບ (Product) ຂອງນັກຮຽນໂດຍພິຈາລະນາຈາກຜົນການທົດສອບຫລັງຮຽນ (Post-test) ໃນການຂຽນປະສິດທິພາບຂອງນະວັດຕະກຳນັ້ນມັກຂຽນໃນລັກສະນະຂອງ $E_1$ / $E_2$ ເຊັ່ນ: 70/70, 80/80, 90/90 ເປັນຕົ້ນ.

- ❖ **ການກຳໜົດເກນປະສິດທິພາບຂອງຊຸດການສອນ**

ການກຳໜົດເກນ E1/E2 ໃຫ້ມີຄ່າເທົ່າໃດນັ້ນຄວນກຳໜົດໄວ້ກ່ອນວ່າໃນຄັ້ງນີ້ວ່າຈະໃຫ້ເກນມາດຕະຖານເທົ່າໃດ ໂດຍທົ່ວໄປການກຳໜົດເກນຄວນພິຈາລະນາດັ່ງນີ້:

1. ຖ້າເນື້ອໃນວິຊາທີ່ເປັນຄວາມຮູ້, ຄວາມຈຳ ຄວນຕັ້ງເກນໃຫ້ສູງໄວ້ ຄື: 80/80, 85/85, 90/90.
2. ຖ້າເນື້ອໃນວິຊາທີ່ເປັນທັກສະດ້ານການປະຕິບັດ ຄວນຕັ້ງເກນໃຫ້ຕ່ຳລົງມາໜ້ອຍໜຶ່ງ ຄື: 70/70, 75/75 ແຕ່ອາດຈະຕັ້ງເກນສູງກວ່ານີ້ກໍໄດ້.

- ❖ **ຂັ້ນຕອນການທົດສອບປະສິດທິພາບຂອງແຜນການສອນ**

ບຸນໄຊ ສີລິມະຫາສາຄອນ (2546: 102-103) ການທົດສອບປະສິດທິພາບຂອງແຜນການສອນປະຕິບັດຕາມຂັ້ນຕອນດັ່ງນີ້:

1). ດຳເນີນການແຕ່ງບົດສອນ, ແຕ່ງບົດສອນຜ່ານອາຈານທີ່ປຶກສາ

2). ນຳບົດສອນທີ່ໄດ້ປັບປຸງຕາມການແນະນຳຈາກອາຈານທີ່ປຶກສາແລ້ວ ນຳສະເໜີຜ່ານຜູ້ຊ່ຽວຊານ 3 ທ່ານ.

3). ໃຫ້ຜູ້ຊ່ຽວຊານປະເມີນຕາມເກນ ໂດຍນຳໃຊ້ເກນຂອງ

4). ນຳເອົາບົດສອນທີ່ໄດ້ຮັບການປັບປຸງລຳເລັດຕາມການແນະນຳຂອງຜູ້ຊ່ຽວຊານໄປສອນທົດລອງໃຊ້ກັບກຸ່ມທີ່ບໍ່ແມ່ນກຸ່ມຕົວຢ່າງ, ນຳຜົນທີ່ໄດ້ມາໄປຄຳນວນຫາປະສິດທິພາບແລ້ວນຳເອົາໄປປັບປຸງໃຫ້ດີຂຶ້ນ.

5). ທົດລອງໃຊ້ກັບກຸ່ມຕົວຢ່າງ, ນຳຜົນທົດລອງທີ່ໄດ້ມາຫາຄ່າປະສິດທິພາບ ແລ້ວນຳໄປປັບປຸງອີກຄັ້ງໜຶ່ງ, ຜົນທີ່ໄດ້ຮັບຄວນໃຫ້ໃກ້ຄຽງກັບເກນທີ່ຕັ້ງໄວ້.

6). ການພິຈາລະນາປະສິດທິພາບສາມາດພິຈາລະນາ 3 ລະດັບຄື:

6.1 ລະດັບສູງກ່ວາເກນ ໝາຍເຖິງ ປະສິດທິພາບຂອງເຄື່ອງມືສູງກ່ວາເກນທີ່ຕັ້ງໄວ້ມີເກນ 2.5% ຂຶ້ນໄປ.

6.2 ລະດັບເທົ່າກັບເກນທີ່ຕັ້ງໄວ້ ໝາຍເຖິງ ເທົ່າກັບ 2.5% ແລະ ຕໍ່າກ່ວາເກນແຕ່ບໍ່ຕໍ່າກ່ວາ 2.5% ຖືວ່າປະສິດທິພາບຍອມຮັບໄດ້.

6.3 ລະດັບຕໍ່າກ່ວາເກນ ໝາຍເຖິງ ເມື່ອປະສິດທິພາບຕໍ່າກ່ວາເກນທີ່ຕັ້ງໄວ້ຕໍ່າກ່ວາ 2.5% ຖືວ່າເຄື່ອງມືບໍ່ມີປະສິດທິພາບ.

❖ **ວິທີຊອກຫາປະສິທິພາບການຮຽນ**

ຜະເຊີນ ກິດຈະການ (2544: 46-52) ການຊອກຫາປະສິດທິພາບ ໂດຍໃຊ້ສູດ E1/E2

$$E_1 = \frac{\frac{\sum x}{n}}{A} \times 100$$

$E_1$ ແມ່ນ ປະສິດທິພາບຜົນການຮຽນ

$\sum x$ ແມ່ນ ຜົນບວກຂອງຄະແນນລະຫວ່າງການຮຽນ ແລະ ການສອບຍ່ອຍທຸກຊຸດ

$n$ ແມ່ນ ຈຳນວນນັກຮຽນທັງໝົດ

$A$ ແມ່ນ ຄະແນນເຕັມທັງໝົດ

$$E_2 = \frac{\frac{\sum x}{n}}{B} \times 100$$

$E_2$ ແມ່ນ ປະສິດທິພາບຜົນສຳເລັດຫຼັງການຮຽນ

$\sum x$ ແມ່ນ ຜົນບວກຂອງຄະແນນການສອບຜົນສຳເລັດຫຼັງຮຽນ

$n$ ແມ່ນ ຈຳນວນນັກຮຽນທັງໝົດ

$B$ ແມ່ນ ຄະແນນເຕັມທັງໝົດ

❖ **ການຊອກຫາຄ່າດັດສະນີປະສິດທິຜົນ**

❶ **ດັດສະນີປະສິດທິຜົນ**

ຜະເຊີນ ກິດຈະການ (2545: 31-35) ດັດຊະນີປະສິດທິຜົນ E.I ໝາຍເຖິງ ຕົວເລກທີ່ສະແດງເຖິງຄວາມກ້າວໜ້າໃນການຮຽນຂອງນັກຮຽນ ໂດຍປຽບທຽບຄະແນນທີ່ເພີ່ມຂຶ້ນຂອງການສອບຍ່ອຍກັບຄະແນນທີ່ໄດ້ຮັບຈາກການທົດສອບຜົນສຳເລັດການຮຽນຄື ໃຊ້ສູດ.

$$\textbf{ດັດຊະນີປະສິດທິ}\text{ຜົນ} = \frac{\text{ຄະແນນລວມຂອງການສອບຍ່ອຍ} - \text{ຄະແນນລວມຂອງການສອບຜົນສຳເລັດຂອງການຮຽນ}}{(\text{ຈຳນວນນັກຮຽນ})(\text{ຄະແນນເຕັມ}) - \text{ຄະແນນລວມຂອງການສອບຍ່ອຍ}}$$

❷ **ຂໍ້ສັງເກດບາງກໍລະນີຂອງ E.I**

ກ. E.I ເປັນອັດຕາສ່ວນຂອງຜົນຕ່າງຈະມີຄ່າສູງສຸດແມ່ນ 1.00 ເພາະຄ່າຕໍ່າສຸດບໍ່ສາມາດກຳນົດໄດ້ເພາະມີຄ່າຕໍ່າກ່ວາ -1.00 ກໍໄດ້ ແລະ ຖ້າເປັນຄ່າລົບສະແດງວ່າຄະແນນຂອງການສອບຍ່ອຍຫຼາຍກ່ວາຄະແນນຂອງການສອບຜົນສຳເລັດ ເຊິ່ງມີຄວາມໝາຍວ່າຂະບວນການຮຽນ-ການສອນ ຫຼື ການນຳໃຊ້ເຄື່ອງມືບໍ່ມີຄຸນນະພາບ.

**ຂ.** ຖ້າຜົນສອບຍ່ອຍຂອງນັກຮຽນທຸກຄົນ ໄດ້ຄະແນນລວມເທົ່າໃດກໍໄດ້ (ຍົກເວັ້ນຄະແນນເຕັມທຸກຄົນ) ແຕ່ຜົນສອບການສອບຜົນສຳເລັດຂອງນັກຮຽນທຸກຄົນເຮັດຖືກໝົດທຸກຂໍ້ (ໄດ້ຄະແນນເຕັມທຸກຄົນ) ຄ່າຂອງ E.I ເທົ່າກັບ 1.

**ຄ.** ຖ້າຜົນສອບຍ່ອຍຫຼາຍກ່ວາຜົນສອບຜົນສຳເລັດຄ່າຂອງ E.I ຈະເປັນຄ່າລົບ ເຊິ່ງຕໍ່າກ່ວາ -1 ກໍໄດ້ລັກສະນະແບບນີ້ຄືວ່າ ຂະບວນການຮຽນ-ການສອນ ຫຼື ການນຳໃຊ້ເຄື່ອງມືໃຊ້ການບໍ່ໄດ້ ແລະ ເຫດການແບບນີ້ບໍ່ໜ້າຈະເກີດຂຶ້ນ ເພາະວ່າຄ່າ E.I ຕໍ່າ ຫຼື ເປັນຄ່າລົບ.

**❸ ການແປຄວາມໝາຍ**

ການແປຄວາມໝາຍຄ່າຂອງ E.I ບໍ່ຄວນຈະແປຄວາມໝາຍສະເພາະຄ່າທີ່ຄຳນວນໄດ້ວ່ານັກຮຽນມີການພັດທະນາຂຶ້ນໄດ້ເທົ່າໃດ ຫຼື ຄິດເປັນສ່ວນຮ້ອຍໄດ້ເທົ່າໃດ, ແຕ່ຄວນຈະເບິ່ງຂໍ້ມູນເກົ່າ ແລະ ຫຼັງການຮຽນນັກຮຽນມີຄະແນນເພີ່ມຂຶ້ນເທົ່າໃດ. ມີບາງຄັ້ງນັກຮຽນມີຄະແນນຫຼັງການຮຽນມີຄະແນນເພີ່ມຂຶ້ນໜ້ອຍ ເພາະວ່ານັກຮຽນຍັງມີການຮັກສ້າງຄວາມຮູ້ເກົ່ານັ້ນຢູ່ ແຕ່ກໍບໍ່ເປັນເລື່ອງທີ່ຈະເສຍຫາຍ.

**ສະຫຼຸບໄດ້ວ່າຄ່າຂອງ E.I** ເກີດຈາກນັກຮຽນແຕ່ລະຄົນບໍ່ສາມາດມາສົມທຽມກັນ ເພາະບໍ່ໄດ້ເລີ້ມຈາກມາດຕະຖານຂອງຄວາມຮູ້ທີ່ເທົ່າກັນ. ຄ່າ E.I ຂອງແຕ່ລະຄົນໄດ້ອະທິບາຍພັດທະນາການສະເພາະຂອງບຸກຄົນເທົ່ານັ້ນ.

❹ ການແປຜົນວິເຄາະຂໍ້ມູນຂອງບົດວິທະຍານິພົນມັກໃຊ້ຂໍ້ຄວາມບໍ່ເໝາະສົມ ເຮັດໃຫ້ຜູ້ອ່ານເຂົ້າໃຈຄວາມໝາຍຂອງ E.I ຜິດຈາກຄວາມຈິງເຊັ່ນ: E.I ມີຄ່າເທົ່າກັບ 0.6324 ມັກຈະເອີ້ນວ່າ "ຄ່າດັດຊະນີປະສິດທິພາບມີຄ່າເທົ່າກັບ0.6324 ເຊິ່ງສະແດງວ່ານັກຮຽນມີຄວາມຮູ້ເພີ່ມຂຶ້ນ 63.24 ເປີເຊັນ ເຊິ່ງໃນຄວາມເປັນຈິງແລ້ວຄ່າ E.I ເທົ່າກັບ 0.6324 ເພາະທຽບກັບຄ່າ E.I ສູງສຸດແມ່ນ 1 ດັ່ງນັ້ນຖ້າຄິດເປັນຮ້ອຍລະ ກໍຄິດທຽມກັບຄ່າສູງສຸດແມ່ນ 1.00 E.I ມີຄ່າເທົ່າ 63.24 ຈຶ່ງຄວນໃຊ້ຂໍ້ຄວາມວ່າ: ຄ່າດັດຊະນີປະສິດທິຜົນເທົ່າກັບ 0.6324 ສະແດງວ່ານັກຮຽນມີຄວາມຮູ້ເພີ່ມຂຶ້ນ 0.6324 ຫຼື ຄິດເປັນເປີເຊັນ 63.24 (ບໍ່ໝາຍຄວາມວ່ານັກຮຽນມີຄວາມຮູ້  ເພີ່ມຂຶ້ນ 63.24 ເປີເຊັນ).

## 5. ແນວຄິດທິດສະດີກ່ຽວກັບວິທີການສ້າງແບບທົດສອບ

ສົມລວຍ ສຸດຕິຍະໄທ (2011:32-36) ແບບທົດສອບແມ່ນຊຸດຂອງຄຳຖາມທີ່ສ້າງຂຶ້ນເພື່ອກະຕຸ້ນໃຫ້ຜູ້ຕອບສະແດງພຶດຕິກຳໂຕ້ຕອບອອກມາເພື່ອໃຫ້ສັງເກດໄດ້ ຫຼື ວັດຜົນໄດ້. ການຕອບນັ້ນອາດຢູ່ໃນຮູບແບບເຊັ່ນຂຽນຕອບ, ຕອບປາກເປົ່າ, ການປະຕິບັດທີ່ສາມາດສັງເກດໄດ້ ແບບທົດສອບແບ່ງອອກເປັນຫຼາຍປະເພດແຕ່ຈະເວົ້າບາງປະເພດທີ່ສຳຄັນດັ່ງຕໍ່ໄປນີ້

**1. ແບບທົດສອບອັດຕະໄນ**

ຂໍ້ສອບອັດຕະໄນແມ່ນຂໍ້ສອບທີ່ມີສະເພາະແຕ່ຄຳຖາມແລ້ວເປີດໂອກາດໃຫ້ນັກຮຽນຕອບຢ່າງເສລີໂດຍການຂຽນບັນລະຍາຍຕາມຄວາມຮູ້ ແລະ ຕາມຄວາມຄິດເຫັນຂອງຕົນເອງ

**2. ແບບທົດສອບປາລາໄນ**

ຂໍ້ສອບປາລາໄນໂດຍທົ່ວໄປຈະປະກອບດ້ວຍ 2 ພາກສ່ວນຄື: ຄຳຖາມ ແລະ ຄຳຕອບ ຄຳຖາມຂອງຂໍ້ສອບປາລາໄນແຕ່ລະຂໍ້ຈະເຈາະຈົງສະເພາະຈຸດນ້ອຍໆຂອງເນື້ອໃນບົດຮຽນ ດັ່ງນັ້ນຈຶ່ງມີຄຳຖາມຫຼາຍຂໍ້ ສ່ວນຄຳຕອບນັ້ນຜູ້ຕອບຕ້ອງໃຊ້ເວລາໃນການຄິດແລ້ວຂຽນຕອບເປັນປະໂຫຍກສັ້ນໆ ຫຼື ຂີດເຄື່ອງໝາຍໃສ່ຄຳຕອບທີ່ຕ້ອງການເລືອກຜູ້ຕອບຕ້ອງປະຕິບັດດັ່ງນີ້

- ຕ້ອງອ່ານຂໍ້ສອບແຕ່ລະຂໍ້ພ້ອມກັບຄຳຖາມ ແລະ ຄຳຖາມທີ່ສົມບູນ
- ເລືອກຄຳຕອບທີ່ຖືກທີ່ສຸດຈາກຕົວເລືອກທີ່ຜູ້ຂຽນກຳນົດມາແລ້ວ
- ຕ້ອງຕອບຄຳຖາມຈາກແບບທົດສອບຫຼາຍຂໍ້

ແບບທົດສອບປາລາໄນແບ່ງອອກເປັນ 5 ແບບຄື:

- ແບບຕອບສັ້ນໆ
- ແບບຖືກ-ຜິດ
- ແບບຕື່ມຄຳ
- ແບບຈັບຄູ່
- ແບບເລືອກຕອບ

ສົມນຶກ ຖັດທິມີ (2537:45) ໄດ້ເວົ້າວ່າ ແບບທົດສອບວັດຜົນສຳເລັດທາງການຮຽນ ໝາຍເຖິງແບບທົດສອບທີ່ວັດຄວາມສາມາດທາງສະໝອງດ້ານຕ່າງໆ ທີ່ນັກສຶກສາໄດ້ຮັບການຮຽນຮູ້ຜ່ານມາແລ້ວວ່າມີຢູ່ເທົ່າໃດ.

ບຸນຊົມ ສີສະອາດ (2554: 56-57) ໄດ້ເວົ້າວ່າ ແບບທົດສອບວັດຜົນສຳເລັດທາງການຮຽນໝາຍເຖິງ ແບບທົດສອບທີ່ໃຊ້ວັດຄວາມຮູ້, ຄວາມສາມາດຂອງບຸກຄົນໃນດ້ານວິຊາ ເຊິ່ງເປັນຜົນຈາກການຮຽນຮູ້ໃນເນື້ອໃນບົດຮຽນ ແລະ ຕາມຈຸດປະສົງຂອງວິຊາ ທີ່ສອນນັ້ນ ໂດຍທົ່ວໄປແລ້ວຈະວັດຜົນສຳເລັດໃນວິຊາຕ່າງໆ ທີ່ຮຽນໃນວິທະຍາໄລ, ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຕ່າງໆ ອາດຈຳແນກໄດ້ 2 ປະເພດຄື:

1. ແບບທົດສອບແບບອີງເກນ (Criterion Referenced Test) ໝາຍເຖິງ ແບບທົດສອບທີ່ສ້າງຂຶ້ນຕາມຈຸດປະສົງທາງພຶດຕິກຳ ມີຄະແນນຈຸດຕັດ ຫຼື ຄະແນນເກນສຳລັບໃຊ້ຕັດສິນວ່າ ຜູ້ສອບມີຄວາມຮູ້ຕາມເກນທີ່ກຳນົດໄວ້ ຫຼື ບໍ່ ການວັດກົງຕາມຈຸດປະສົງເປັນຫົວໃຈສຳຄັນຂອງຂໍ້ສອບ ໃນແບບທົດສອບປະເພດນີ້ ເຊິ່ງສອດຄ່ອງກັບການຈັດການຮຽນ-ການສອນ ໂດຍໃຊ້ CAI ທີ່ຜູ້ຮຽນຈະຕ້ອງຮຽນເພື່ອໃຫ້ຜ່ານເກນຕາມທີ່ບົດຮຽນກຳນົດໄວ້ຈຶ່ງຈະຖືວ່າຜ່ານການປະເມີນຜົນ.

2. ແບບທົດສອບອີງກຸ່ມ (Norm Referenced Test) ໝາຍເຖິງ ແບບທົດສອບທີ່ມຸ່ງສ້າງເພື່ອວັດໃຫ້ຄອບຄຸມຫຼັກສູດ ຈຶ່ງສ້າງຕາມຕາລາງວິເຄາະຫຼັກສູດ, ຄວາມສາມາດໃນການຈຳແນກຜູ້ສອບຕາມຄວາມເກັ່ງ ອ່ອນໄດ້ດີ ເປັນຫົວໃຈຂອງຂໍ້ສອບໃນແບບທົດສອບປະເພດນີ້, ການລາຍງານຜົນການສອບອາໄສຄະແນນມາດຕະຖານ ເຊິ່ງເປັນຄະແນນທີ່ສາມາດໃຫ້ຄວາມໝາຍທີ່ສະແດງເຖິງສະຖານະພາບຄວາມສາມາດຂອງບຸກຄົນນັ້ນເມື່ອປຽບທຽບກັບບຸກຄົນອື່ນໆ ທີ່ໃຊ້ເປັນກຸ່ມປຽບທຽບ.

ແນວຄວາມຄິດ ແລະ ທິດສະດີທີເປັນແນວທາງໃນການສ້າງແບບທົດສອບວັດຜົນສໍາເລັດທາງການຮຽນທີນິຍົມກັນໄດ້ແກ່ ການຂຽນຂໍ້ສອບວັດຕາມການຈັດປະເພດຈຸດມຸ່ງໝາຍຂອງການສຶກສາດ້ານພຸດທິພິໄສ (Cognitive) ຂອງ Bloom, B.S (1959:219 ອ້າງຈາກ ວາລີ ຖິຣະຈິດ, 2534: 220-221) ເຊິ່ງຈໍາແນກຈຸດມຸ່ງໝາຍຂອງການສຶກສາດ້ານພຸດທິພິໄສອອກເປັນ 6 ປະເພດໄດ້ແກ່

1. ຄວາມຮູ້ (Knowledge) ເປັນເລື່ອງທີຕ້ອງການຮູ້ວ່າຜູ້ຮຽນຈື່ຈໍາໄດ້ຂໍ້ມູນທີເປັນຂໍ້ເທັດຈິງໄດ້ເພາະຂໍ້ເທັດຈິງບາງຢ່າງມີຄຸນຄ່າຕໍ່ການຮຽນຮູ້.

2. ຄວາມເຂົ້າໃຈ (Comprehension) ສະແດງເຖິງລະດັບຄວາມສາມາດ, ການແປຄວາມໝາຍການຕີຄວາມ ແລະ ຂະຫຍາຍຄວາມໃນເລື່ອງ ແລະ ເຫດການຕ່າງໆໄດ້.

3. ການນໍາໄປໃຊ້ (Application) ຕ້ອງອາໄສຄວາມເຂົ້າໃຈເປັນພື້ນຖານໃນການຊ່ວຍຕີຄວາມໝາຍຂອງຂໍ້ມູນເມື່ອຕ້ອງການຮູ້ວ່າຂໍ້ມູນນັ້ນມີປະເດັນສໍາຄັນຫຍັງແດ່, ຕ້ອງອາໄສຄວາມຮູ້ເພື່ອປຽບທຽບ, ຈໍາແນກຄວາມແຕກຕ່າງ, ພິຈາລະນານໍາເອົາຂໍ້ມູນໄປໃຊ້ໂດຍໃຫ້ເຫດຜົນໄດ້.

4. ການຄິດວິເຄາະ (Analysis) ເປັນທັກສະທາງປັນຍາໃນລະດັບທີສູງຈະເນັ້ນການຈໍາແນກຂໍ້ມູນອອກເປັນສ່ວນຍ່ອຍໆ ແລະ ພະຍາຍາມຊອກຫາສ່ວນປະກອບວ່າມີຄວາມສໍາພັນກັນແນວໃດ ໂດຍອີງໃສ່ຫຼັກການທີຈັດຮອບຮອມໄວ້ແລ້ວ.

5.ການສັງເຄາະ (Synthesis) ໝາຍເຖິງການນໍາເອົາອົງປະກອບຕ່າງໆທີແຈກຢາຍກັນຢູ່ມາຮວມເຂົ້າກັນໃນຮູບແບບໃໝ່, ຖ້າສາມາດສັງເຄາະໄດ້ກໍສາມາດປະເມີນໄດ້.

6.ການປະເມີນຄ່າ (Evaluation) ໝາຍເຖິງການໃຊ້ເກນ ແລະ ມາດຖານເພື່ອພິຈາລະນາວ່າຈຸດມຸ່ງໝາຍທີ່ຕ້ອງການນັ້ນບັນລຸ ຫຼື ບໍ່. ການທີ່ນັກຮຽນສາມາດປະເມີນຄ່າໄດ້ຕ້ອງອາໄສເກນ ຫຼື ມາດຖານເປັນແນວທາງໃນການຕັດສິນຄຸນຄ່າ. ການຕັດສິນໃດໆທີບໍ່ໄດ້ອາໄສເກນຈະເປັນລັກສະນະຄວາມຄິດເຫັນຫຼາຍກວ່າການປະເມີນ.

ຈາກຄວາມໝາຍແບບທົດສອບວັດຜົນສໍາເລັດທາງການຮຽນຂ້າງເທິງນັ້ນສາມາດສະຫຼຸບໄດ້ວ່າແບບທົດສອບວັດຜົນສໍາເລັດທາງການຮຽນ ໝາຍເຖິງແບບທົດສອບທີໃຊ້ວັດຄວາມຮູ້, ຄວາມສາມາດຂອງບຸກຄົນທີຜ່ານຈາກການຮຽນຮູ້ໃນເນື້ອໃນວິຊາທີສອນນັ້ນໆ. ໃນການຄົ້ນຄວ້າຄັ້ງນີ້ຜູ້ຄົ້ນຄວ້າໄດ້ໃຊ້ແບບທົດສອບວັດຜົນສໍາເລັດທາງການຮຽນທີເປັນແບບທົດສອບອີງເກນ.

### 5.1 ທິດສະດີການສ້າງແບບທົດສອບວັດຜົນສໍາເລັດທາງການຮຽນ

ບຸນຊົມ ສີສະອາດ (2554: 68-73) ກ່າວເຖິງການສ້າງແບບທົດສອບວັດຜົນສໍາເລັດທາງການຮຽນ ທາງການຮຽນແບບອີງເກນ ເຊິ່ງມີຂັ້ນຕອນດັ່ງນີ້:

**1. ວິເຄາະຈຸດປະສົງເນື້ອໃນວິຊາ**

ໃນການເຮັດການວິເຄາະຕ້ອງເບິ່ງເນື້ອໃນບົດຮຽນວ່າມີຫົວຂໍ້ເນື້ອໃດແດ່ທີຕ້ອງການໃຫ້ຜູ້ຮຽນເກີດການຮຽນຮູ້ ແລະ ການວັດ ແຕ່ລະຫົວຂໍ້ນັ້ນ ຕ້ອງການໃຫ້ຜູ້ຮຽນເກີດພຶດຕິກໍາແນວໃດໃຫ້ກໍານົດອອກມາຊັດເຈນ.

**2. ກຳນົດພຶດຕິກຳຍ່ອຍທີ່ຈະອອກຂໍ້ສອບ**

ກ່ອນອື່ນຕ້ອງ ພິຈາລະນາວ່າຈະວັດພຶດຕິກຳຍ່ອຍຫຍັງແດ່, ຢ່າງລະຈັກຂໍ້ ພຶດຕິກຳຍ່ອຍດັ່ງກ່າວຄື ຈຸດປະສົງທີ່ມີຕໍ່ພຶດຕິກຳນັ້ນເອງ ເມື່ອກຳນົດຈຳນວນຂໍ້ທີ່ຕ້ອງການຈິງສຳເລັດແລ້ວຕໍ່ມາແມ່ນພິຈາລະນາວ່າ ຈະຕ້ອງອອກຂໍ້ສອບເກີນໄວ້ຈັກຂໍ້ ຄວນອອກເກີນເກີນໄວບໍ່ຕ່ຳກວ່າ 25 ເປີເຊັນເຫດຜົນກໍເພາະວ່າຫຼັງຈາກ ທີ່ນຳໄປທົດລອງໃຊ້ ແລະ ວິເຄາະຫາຄຸນນະພາບຂອງຂໍ້ສອບລາຍຂໍ້ແລ້ວແມ່ນຈະຕ້ອງຕັດຂໍ້ທີ່ມີຄຸນຂະພາບບໍ່ ໄດ້ຕາມເກນອອກ ຂໍ້ສອບທີ່ເຫຼືອຈະໄດ້ບໍ່ໜ້ອຍກວ່າຈຳນວນທີ່ຕ້ອງການຈິງ.

**3. ກຳນົດຮູບແບບຂອງຂໍ້ຄຳຖາມ ແລະ ສຶກສາວິທີຂຽນຂໍ້ສອບ**

ຂັ້ນຕອນນີ້ຈະເໝືອນກັບຂັ້ນຕອນທີ 2 ຂອງການສ້າງຂໍ້ສອບແບບອີງກຸ່ມທຸກປະການ ຄືຈະຕ້ອງຕັດ ສິນໃຈວ່າຈະໃຊ້ຄຳຖາມຮູບແບບໃດພ້ອມທັງສຶກສາວິທີການຂຽນຂໍ້ສອບເຊັ່ນ ສຶກສາຫຼັກການຂຽນຂໍ້ຄຳ ຖາມ, ສຶກສາວິທີຂຽນຂໍ້ສອບເພື່ອວັດຈຸດປະສົງປະເພດຕ່າງໆ, ສຶກສາເຕັກໂນໂລຍີໃນການຂຽນຂໍ້ສອບເພື່ອ ທີ່ຈະໄດ້ນຳມາໃຊ້ໃນການຂຽນຂໍ້ສອບຂອງຕົນ.

**4. ຂຽນຂໍ້ສອບ**

ລົງມືຂຽນຂໍ້ສອບ ຕາມຈຸດປະສົງທາງພຶດຕິກຳ ຕາມຕາລາງທີ່ໄດ້ກຳນົດຈຳນວນຂໍ້ສອບຂອງແຕ່ລະ ຈຸດ

ປະສົງ ທາງພຶດຕິກຳ ແລະ ໃຊ້ຮູບແບບເຕັກນິກການຂຽນຂໍ້ສອບຕາມທີ່ໄດ້ສຶກສາໃນຂັ້ນຕອນທີ 3

**5. ກວດຄືນຂໍ້ສອບ**

ນຳຂໍ້ສອບທີ່ໄດ້ຂຽນແລ້ວໃນຂັ້ນຕອນ 4 ມາພິຈາລະນາທົບທວນອີກເທື່ອໜຶ່ງ ໂດຍພິຈາລະນາຄວາມ ຖືກຕ້ອງຕາມຫຼັກວິຊາ ແຕ່ລະຂໍ້ວັດພຶດຕິກຳຍ່ອຍ ຫຼື ຈຸດປະສົງທາງພຶດຕິກຳທີ່ຕ້ອງການ ຫຼື ບໍ,ພາສາທີ່ໃຊ້ ຂຽນມີຄວາມຊັດເຈນ ເຂົ້າໃຈງ່າຍ ຫຼື ບໍ, ຕົວຖືກ ຕົວລວງເໝາະສົມກັບເກນ ຫຼື ບໍ່ ເມື່ອພິຈາລະນາໄດ້ແລ້ວ ກໍ່ປັບປຸງໃຫ້ເໝາະສົມຫຼາຍຂຶ້ນ.

**6. ໃຫ້ຜູ້ຊ່ຽວຊານພິຈາລະນາຄວາມທ່ຽງກົງຕາມເນື້ອໃນບົດຮຽນ**

ນຳຈຸດປະສົງທາງພຶດຕິກຳ ແລະ ຂໍ້ສອບທີ່ວັດແຕ່ລະຈຸດປະສົງທາງພຶດຕິກຳໄປໃຫ້ຜູ້ຊ່ຽວຊານດ້ານ ການວັດຜົນ ແລະ ດ້ານເນື້ອໃນບົດຮຽນ ຈຳນວນ 3 ທ່ານ ພິຈາລະນາວ່າຂໍ້ສອບແຕ່ລະຂໍ້ວັດຕາມຈຸດປະສົງທີ່ ລະບຸໄວ້ນັ້ນ ຫຼື ບໍ່ໂດຍໃຊ້ວິທີຂອງ Rovinelli and Hambleton, R.K.

**7. ພິມແບບທົດສອບສະບັບທົດລອງ**

ນຳຂໍ້ສອບທັງໝົດທີ່ຜ່ານການພິຈາລະນາຄວາມເໝາະສົມກັບເກນໃນຂັ້ນຕອນ 6 ມາພິມເປັນແບບ ທົດສອບມີຄຳຊີ້ແຈງກ່ຽວກັບການສອບຕາມເນື້ອໃນຂອງແບບທົດສອບ ແລະ ວິທີຕອບຈັດວາງຮູບແບບ ການພິມໃຫ້ເໝາະສົມ.

**8. ທົດລອງໃຊ້, ວິເຄາະຄຸນນະພາບ ແລະ ປັບປຸງ**

ນຳເອົາແບບທົດສອບໄປທົດລອງສອບກັບກຸ່ມທີ່ຄ້າຍກັບກຸ່ມຕົວຢ່າງຈິງ ຈຳນວນປະມານ 34 ຄົນ ຫຼື

ຫຼາຍກວ່າ ໂດຍສອບໃນຊົ່ວໂມງທຳອິດຂອງການຮຽນວິຊານັ້ນ ຫຼື ມັກເອີ້ນວ່າການສອບກ່ອນຮຽນ, ຫຼັງຈາກທີ່ຮຽນວິຊານັ້ນຈົບແລ້ວ ແມ່ນນຳເອົາແບບທົດສອບເດີມມາສອບອີກຄັ້ງໜຶ່ງ ເຊິ່ງເຮົາເອີ້ນວ່າການສອບຫຼັງຮຽນ ຫຼັງຈາກນັ້ນນຳເອົາຜົນການສອບທັງສອງຄັ້ງມາວິເຄາະຫາຄ່າອຳນາດຈຳແນກຂອງຂໍ້ສອບລາຍຂໍ້ ໂດຍໃຊ້ວິທີການວິເຄາະຕາມແບບອີງເກນ ຄັດເລືອກຂໍ້ສອບທີ່ມີອຳນາດຈຳແນກເຂົ້າເກນ ຕາມຈຳນວນທີ່ຕ້ອງການ ຫາຄ່າຄວາມເຊື່ອໝັ້ນແບບອີງເກນ.

**9. ພິມແບບທົດສອບສະບັບຈິງ**

ນຳຂໍ້ສອບທີ່ມີຄ່າອຳນາດຈຳແນກເຂົ້າເກນ ຈາກຜົນການວິເຄາະໃນຂັ້ນຕອນທີ 8 ມາພິມເປັນແບບທົດສອບສະບັບຈິງຕໍ່ໄປໂດຍເນັ້ນຮູບແບບການພິມທີ່ເໝາະສົມ, ມີຄວາມຖືກຕ້ອງ, ມີຄຳຊີ້ແຈງທີ່ລະອຽດ ຊັດ ເຈນ ຜູ້ອ່ານເຂົ້າໃຈງ່າຍເນື່ອງຈາກຂໍ້ສອບປາລະໄນແບບເລືອກຕອບເປັນແບບທີ່ນິຍົມໃຊ້ກັນຫຼາຍທີ່ສຸດ ຈຶ່ງມີຜູ້ສະເໜີແນະຫຼັກການສ້າງໄວ້ຫຼາຍທ່ານດັ່ງນີ້

ສົມລວຍ ສຸຕິຍະໄທ (2011: 35-36) ໄດ້ສະຫຼຸບວ່າ ຂໍ້ສອບແບບເລືອກຕອບແມ່ນຂໍ້ສອບປະກອບດ້ວຍຄຳຖາມທີ່ເປັນປະໂຫຍກທີ່ສົມບູນເພື່ອວັດຄວາມຮູ້ຄວາມ ສາມາດກັບຕົວເລືອກຕັ້ງແຕ່ 3-5 ຕົວເລືອກ ນັ້ນຈະມີທັງຄຳຕອບຖືກ ແລະ ຄຳຕອບຜິດ ທີ່ເປັນຕົວລວງມາໃຫ້ນັກຮຽນພິຈາລະນາ. ເຊິ່ງມີຫຼັກການສ້າງດັ່ງນີ້:

1. ຄຳຖາມຄວນເປັນປະໂຫຍກທີ່ສົມບູນ ແລ້ວໃສ່ເຄື່ອງໝາຍ (?) ເພື່ອຈະຊ່ວຍໃຫ້ມີຄວາມຊັດເຈນ ແລະ ເຂົ້າໃຈງ່າຍ.
2. ເນັ້ນຈຸດທີ່ຈະຖາມໃຫ້ຊັດເຈນເຊັ່ນ:
3. ຄວນຫຼີກເວັ້ນຄຳຖາມທີ່ເປັນປະໂຫຍກປະຕິເສດ
4. ຄວນໃຊ້ຄຳຖາມສັ້ນກະທັດຮັດ ແລະ ໄດ້ໃຈຄວາມ.
5. ຖາມໃນສິ່ງທີ່ມີປະໂຫຍດເພາະເຮັດໃຫ້ນັກສຶກສາໄດ້ຮຽນຮູ້ສິ່ງທີ່ດີງາມ
6. ຖາມໃນສິ່ງທີ່ຫາຂໍ້ຍຸດຕິໄດ້ໃນບົດຮຽນ ເພື່ອໃຫ້ນັກສຶກໃຊ້ຄວາມຄິດບໍ່ຄວນຖາມໃນສິ່ງທີ່ເປັນຄວາມເຊື່ອຖື.
7. ຄວນຖາມພຶດຕິກຳ ທີ່ໃຊ້ຄວາມຄິດ ແລະ ຫຼີກເວັ້ນການຖາມຄວາມຈື່ຈຳຈາກບົດຮຽນ
8. ໃຊ້ພາສາໃຫ້ເໝາະສົມກັບນັກສຶກສາ
9. ຄວນໃຊ້ຄຳຖາມແບບນ້າວໂນ້ມ ຊັກຊວນໃຫ້ນັກຮຽນຄິດ ບາງຄັ້ງອາດຕັ້ງຄຳຖາມເປັນຮູບພາບສັນຍາລັກ, ສະຖານະການ ເພື່ອໃຫ້ນັກສຶກສາຢາກເຮັດ.
10. ຕົວເລືອກຄວນສັ້ນກະທັດຮັດ ແລະ ມີຄວາມໝາຍ.
11. ຕົວເລືອກແຕ່ລະຕົວຄວນມີຄວາມໝາຍຍາວເທົ່າໆກັນ ຖ້າມີຄວາມຍາວແຕກຕ່າງກັນໃຫ້ລຽງລຳດັບແຕ່ສັ້ນຫາຍາວ ຖ້າເປັນວັນເດືອນປີ ຫຼື ຈຳນວນໃຫ້ລຽງຈາກໜ້ອຍຫາຍ.
12. ຄວນຫຼີກເວັ້ນການຂຽນຕົວເລືອກ ຊ້ຳກັນ ຫຼື ມີຄວາມໝາຍຄືກັນ.
13. ຕົວເລືອກຕ້ອງມີການພົວພັນກັນ.

14. ຄວນລະມັດລະວັງໃນການໃຊ້ຄຳຖາມປາຍເປີດ ແລະ ປາຍປິດເຊັ່ນ ຖືກທຸກຂໍ້, ຜິດທຸກຂໍ້, ບໍ່ມີຂໍ້ຖືກ, ສະຫຼຸບແນ່ນອນບໍ່ໄດ້ ເປັນຕົ້ນ.

15. ຫຼີກເວັ້ນການແນະນຳຄຳຕອບ.

16. ບໍ່ຄວນຖາມໃນສິ່ງທີ່ນັກສຶກສາຈື່ກັບປາກ.

17. ຄວນກະຈາຍຕົວເລືອກທີ່ເປັນຂໍ້ຖືກຢູ່ໃນຕຳແໜ່ງທີ່ຕ່າງກັນ ແຕ່ລະຕົວຄວນມີໂອກາດເປັນຂໍ້ຖືກເທົ່າໆກັນ.

## 6. ທົດສະດີການຫາຄຸນນະພາບຂອງຂໍ້ສອບ

### 1. ການຊອກຫາອຳນາດຈຳແນກຂອງແບບທົດສອບ

ສົມລວຍ ສຸຕິຍະໄທ (2011:34-37) ການຊອກຫາຄ່າອຳນາດຈຳແນກແຕ່ລະຂໍ້ຂອງແບບທົດສອບແມ່ນການຊອກຫາຄ່າສະຫະສຳພັນຂອງຄະແນນຂອງຂໍ້ ໜຶ່ງກັບຄະແນນລວມໂດຍໃຊ້ສູດ.

$$r_{xy} = \frac{N\sum XY - \sum X \sum Y}{\sqrt{\left[N\sum X^2 - (\sum X)^2\right]\left[N\sum Y^2 - (\sum Y)^2\right]}}$$

$r_{xy}$ ແມ່ນຄ່າສຳປະສິດສະຫະສຳພັນລະຫວ່າງຄະແນນຊຸດX ກັບ ຊຸດY

N ແມ່ນຈຳນວນນັກຮຽນທັງໝົດ

$\sum X$ ແມ່ນຜົນບວກທັງໝົດຂອງຄະແນນ X

$\sum Y$ ແມ່ນຜົນບວກທັງໝົດຂອງຄະແນນ Y

$\sum X^2$ ແມ່ນຜົນບວກທັງໝົດຂອງຄະແນນ X ແຕ່ລະຕົວຂຶ້ນກຳລັງສອງ

$\sum Y^2$ ແມ່ນຜົນບວກທັງໝົດຂອງຄະແນນ Y ແຕ່ລະຕົວຂຶ້ນກຳລັງສອງ

$\sum XY$ ແມ່ນຜົນບວກທັງໝົດຂອງຜົນຄູນລະຫວ່າງຄະແນນ X ກັບຄະແນນ Y

### 2. ການຊອກຫາຄ່າຄວາມເຊື່ອໝັ້ນ

ຄວາມເຊື່ອໝັ້ນຂອງເຄື່ອງມືໝາຍຄວາມວ່າຜົນການວັດຂອງເຄື່ອງມືນັ້ນກັບກຸ່ມຕົວຢ່າງບໍ່ວ່າຈະທົດສອບເທົ່າໃດຄັ້ງກໍຕາມແຕ່ຜົນໄດ້ຮັບບໍ່ປ່ຽນແປງ ຫຼື ປ່ຽນແປງໜ້ອຍທີ່ສຸດເຊັ່ນເອົາເຄື່ອງມືໄປທົດສອບກັບນັກຮຽນຄົນໜຶ່ງໄດ້ຄະແນນ 19 ອີກປະມານອາທິດໜຶ່ງໄປທົດສອບອີກກໍໄດ້ຄະແນນ 19 ຄືເກົ່າສະແດງວ່າເຄື່ອງມືນັ້ນມີຄວາມເຊື່ອໝັ້ນ

- **ວິທີຊອກຫາຄວາມເຊື່ອໝັ້ນຂອງແບບທົດສອບມີຫຼາຍວິທີດັ່ງນີ້**

**1. ວິທີສອບຊ້ຳ**

ວິທີນີ້ແມ່ນເອົາເຄື່ອງມືໄປທົດສອບກັບນັກຮຽນຄັ້ງ 1 ແລ້ວອີກປະມານ ໜຶ່ງອາທິດໄປທົດສອບອີກແລ້ວເອົາຄະແນນສອບທັງສອງຄັ້ງນີ້ໄປຄິດໄລ່ຄ່າຄວາມເຊື່ອໝັ້ນໂດຍໃຊ້ສູດຂອງເພຍສັນ

$$r_{tt} = \frac{N\sum XY - \sum X \sum Y}{\sqrt{\left[N\sum X^2 - (\sum X)^2\right]\left[N\sum Y^2 - (\sum Y)^2\right]}}$$

ເມື່ອຮູ້ວ່າ: $r_{tt}$ ແທນຄ່າສຳປະສິດຂອງຄວາມເຊື່ອໝັ້ນ.

N ແທນຈຳນວນຄົນຂອງກຸ່ມຕົວຢ່າງແທ .

$\sum X$ ແທນຜົນບວກຂອງຄະແນນທັງໝົດຂອງການທົດສອບຄັ້ງທຳອິດ.

$\sum X$ ແທນຜົນບວກຂອງຄະແນນທັງໝົດຂອງການທົດສອບຄັ້ງທີ່ 2.

$\sum XY$ ແທນຜົນບວກທັງໝົດຂອງຜົນຄູນລະຫວ່າງຄະແນນການທົດສອບຄັ້ງທີ່ 1 (X) ແລະ ຄັ້ງທີ່ 2 (Y).

$\sum X^2$ ແທນຜົນບວກຂອງກຳລັງສອງຂອງຄະແນນແຕ່ລະຕົວຂອງການທົດສອບຄັ້ງທີ 1.

$\sum Y^2$ ແທນຜົນບວກຂອງກຳລັງສອງຂອງຄະແນນແຕ່ລະຕົວຂອງການທົດສອບຄັ້ງທີ 2

**2. ວິທີໃຊ້ແບບທົດສອບຄູ່ຂະໜານ**

ແບບທົດສອບແບບຄູ່ຂະໜານໝາຍເຖິງແບບທົດສອບສອງຊຸດທີມີເນື້ອໃນ, ຄວາມຍາກງ່າຍ, ຄ່າອຳນາດຈຳແນກຄືກັນ ແລະ ຈຳນວນຂໍ້ເທົ່າກັນເອົາໄປທົດສອບກັບກຸ່ມນັກຮຽນດຽວກັນທັງສອງສະບັບ, ແລ້ວນຳເອົາຄະແນນສອບທັງສອງຄັ້ງນີ້ໄປຄິດໄລ່ຄ່າຄວາມເຊື່ອໝັ້ນໂດຍໃຊ້ສະຫະສຳພັນຂອງເພຍສັນໃຊ້ສູດດ່ຽວກັນແບບສອບຊ້ຳ

**3. ວິທີແບ່ງເຄິ່ງແບບທົດສອບ**

ວິທີນີ້ແມ່ນການນຳເອົາເຄື່ອງມືທີ່ມີຈຳນວນຂໍ້ສອບຫຼາຍຂໍ້ມາແບ່ງເຄິ່ງເປັນສອງສະບັບເຊັ່ນ: ແບບທົດສອບຄະນິດສາດເມື່ອວິເຄາະຫາຄວາມຍາກງ່າຍຂອງແຕ່ລະຂໍ້ແລ້ວກໍລຽງຂໍ້ສອບຈາກງ່າຍຫາຂໍ້ສອບຍາກແລ້ວນຳເອົາໄປທົດສອບນັກຮຽນ, ຫຼັງຈາກນັ້ນກໍກວດໃຫ້ຄະແນນໂດຍການແຍກຄະແນນຂໍ້ຄູ່ກັບຂໍ້ຄີກອອກຈາກກັນ, ແລ້ວນຳເອົາຄະແນນທັງສອງຊຸດ (ຊຸດຂໍ້ຄູ່ກັບຊຸດຂໍ້ຄີກ) ໄປຄິດໄລ່ຫາຄ່າຄວາມເຊື່ອໝັ້ນໂດຍໃຊ້ສະຫະສຳພັນແບບ Pearson ໂດຍໃຊ້ສູດດ່ຽວກັນແບບສອບຊ້ຳ, ແຕ່ວ່າເຮົາຈະໄດ້ຄ່າຄວາມເຊື່ອໝັ້ນເຄິ່ງສະບັບ, ຈາກນັ້ນຈິ່ງນຳເອົາໄປຊອກຫາຄ່າຄວາມເຊື່ອໝັ້ນທັງສະບັບໂດຍໃຊ້ສູດຂອງສະເປຍແມນ

$$R_{tt} = \frac{2r_{1/2}}{1 + r_{1/2}}$$

ເມື່ອ $r_{tt}$ -ແທນຄ່າຄວາມເຊື່ອໝັ້ນ ຂອງແບບທົດສອບທັງສະບັບ

$r_{1/2}$ - ແທນຄ່າຄວາມເຊື່ອໝັ້ນ ຂອງແບບທົດສອບ ເຄິ່ງສະບັບ

**4. ວິທີຂອງ kuder-Richardson**

ວິທີນີ້ເຄື່ອງມືຈະຕ້ອງມີລັກສະນະທີວັດອີງປະກອບຮ່ວມກັນ ແລະ ຄະແນນແຕ່ລະຂໍ້ຕ້ອງຢູ່ໃນລັກສະນະທີ່ວ່າຖ້າຕອບຖືກໄດ້ 1 ຄະແນນຖ້າຕອບຜິດໄດ້ 0 ຄະແນນເທົ່ານັ້ນວິທີ່ນີ້ໃຊ້ສູດຄິດໄລ່ມີສອງສູດຄື

**ສູດ KR-20** $r_{tt} = \frac{n}{n-1}\left[1 - \frac{\sum pq}{s_t^2}\right]$

ເມື່ອຮູ້ວ່າ n ແທນຈຳນວນຂໍ້ສອບ

P ແທນອັດຕາສ່ວນຜູ້ທີ່ຕອບໄດ້ໃນຂໍ້ໜຶ່ງໆກັບຄົນທັງໝົດ

q ແທນອັດຕາສ່ວນຜູ້ທີ່ຕອບຜິດໃນຂໍ້ໜຶ່ງໆ ຫຼື 1-P

$s_t^2$ ແທນຄວາມຜັນປ່ຽນຂອງຄະແນນລວມ

**ສູດ KR-21** $r_{tt} = \frac{n}{n-1}\left[1-\frac{\overline{X}(n-\overline{X})}{ns_t^2}\right]$

n ແທນຈຳນວນຂໍ້ສອບເຄື່ອງວັດແທກ

$\overline{X}$ ແທນຄ່າສະເລ່ຍຂອງເຄື່ອງວັດ

$s_t^2$ແທນຄວາມຜັນປ່ຽນຂອງເຄື່ອງວັດ

**5. ວິທີຊອກຫາສຳປະສິດ α**

ການຊອກຫາຄ່າຄວາມເຊື່ອໝັ້ນຂອງເຄື່ອງມືບໍ່ຈຳເປັນກວດໃຫ້ຄະແນນເປັນ 1 ກັບ 0 ໂດຍໃຊ້ສູດຂອງ Cronbach ໄດ້ດັດແປງຈາກສູດ KR-20 ເມື່ອປີ ຄສ 1951 ໝາຍຄວາມວ່າຈະກວດແລ້ວໃຫ້ຄະແນນລັກສະນະໃດກໍໄດ້ເຊັ່ນຖ້າຕອບຖືກໃຫ້ຄະແນນ 10 ຫຼື ແບບສອບຖາມທີໃຫ້ຄະແນນແຕ່ລະຂໍ້ເປັນລຳດັບເຊັ່ນ 5, 4, 3, 2, 1

ໂດຍໃຊ້ສູດ $\alpha = \frac{n}{n-1}\left[1-\frac{\sum S_i^2}{S_t^2}\right]$

ເມື່ອ α ແທນຄ່າສຳປະສິດຂອງຄວາມເຊື່ອໝັ້ນ ແທ

n ແທນຈຳນວນຂໍ້ສອບ

$S_i^2$ ແທນຄ່າຄວາມຜັນປ່ຽນຂອງຄະແນນແຕ່ລະຂໍ້

$S_t^2$ ແທນຄ່າຄວາມຜັນປ່ຽນຂອງຄະແນນ ລວມ

- **ລັກສະນະຂອງຂໍ້ສອບທີດີ**

ສົມນຶກ ຖັດທິມີ (2537: 49-52) ໄດ້ເວົ້າເຖິງລັກສະນະຂອງແບບທົດສອບວັດຜົນສຳເລັດທີ່ດີໄວ້ດັ່ງນີ້:

**1. ຄວາມທ່ຽງຕົງ** ໝາຍເຖິງ ລັກສະນະຂອງຂໍ້ສອບທັງສະບັບ ທີ່ສາມາດວັດໄດ້ກົງກັບຈຸດປະສົງທີ່ຕ້ອງການ ຫຼື ວັດໃນສິ່ງທີຕ້ອງການວັດໄດ້ຢ່າງຖືກຕ້ອງແມ່ນຍຳ. ຄວາມທ່ຽງຕົງຂອງແບບທົດສອບແບ່ງອອກເປັນ 4 ຊະນິດຄື:

**1.1. ຄວາມທ່ຽງຕາມເນື້ອໃນບົດຮຽນ** ໝາຍເຖິງ ແບບທົດສອບທີ່ສາມາດວັດໄດ້ກົງກັບເນື້ອໃນບົດຮຽນທີໄດ້ຈາກການປະຕິບັດການສອນ ຫຼື ກົງກັບເນື້ອໃນບົດຮຽນທີກຳນົດໄວ້ຕາມຫຼັກສູດ ຫຼື ກົງກັບເນື້ອໃນບົດຮຽນທີຢູ່ໃນຕາຕະລາງການວິເຄາະຫຼັກສູດອາດເວົ້າອີກຢ່າງໜຶ່ງວ່າເມື່ອຈັດການສອນເນື້ອໃນບົດຮຽນໃດໜຶ່ງແມ່ນເຮັດແບບທົດສອບກົງກັບເນື້ອໃນບົດຮຽນນັ້ນ.

**1.2. ຄວາມທ່ຽງຕົງຕາມໂຄງສ້າງ** ໝາຍເຖິງ ແບບທົດສອບທີ່ສາມາດວັດໄດ້ຕາມຈຸດມຸ່ງໝາຍຂອງຫຼັກສູດ ຫຼື ວັດໄດ້ກົງກັບພຶດຕິກຳທີ່ຕ້ອງການໃຫ້ເກີດກັບຜູ້ຮຽນ ຫຼື ກົງກັບພຶດຕິກຳທີ່ຢູ່ໃນຕາຕະລາງການວິເຄາະຫຼັກສູດ.

**1.3. ຄວາມທ່ຽງຕົງຕາມສະພາບການ** ໝາຍເຖິງແບບທົດສອບທີ່ສາມາດວັດໄດ້ກົງກັບສະພາບຄວາມເປັນຈິງໃນຊີວິດປະຈຳວັນ ຫຼື ປັດຈຸບັນຂອງນັກສຶກສາ ຫຼື ອາດເວົ້າອີກຢ່າງໜຶ່ງວ່າເປັນຄວາມສາມາດຂອງແບບທົດສອບທີ່ຊ່ວຍໃຫ້ຄູປະເມີນສະມັດຕະພາບອັນແທ້ຈິງຂອງນັກສຶກສາ ໃນປັດຈຸບັນໄດ້ຖືກຕ້ອງ.

**1.4. ຄວາມທ່ຽງຕົງຕາມສະພາບຄວາມເປັນຈິງ** ໝາຍເຖິງແບບທົດສອບທີສາມາດວັດໄດ້ກົງກັບສະພາບຄວາມເປັນຈິງຂອງນັກສຶກສາ ທີຈະເກີດຂຶ້ນໃນອານາຄົດ.

**2. ຄວາມເຊື່ອໝັ້ນ** ໝາຍເຖິງລັກສະນະຂອງແບບທົດສອບທັງສະບັບທີ່ສາມາດວັດໄດ້ຄົງທີ ບໍ່ປ່ຽນແປງ ບໍ່ວ່າຈະເຮັດແບບທົດສອບໃໝ່ຈັກຄັ້ງກໍ່ຕາມ ເຊັ່ນ ສ້າງແບບທົດສອບຊຸດທີໜຶ່ງແລ້ວນຳໄປທົດສອບກັບນັກສຶກສາກຸ່ມໜຶ່ງ 2 ຄັ້ງ ໂດຍໃຫ້ມີເວລາຫ່າງກັນພໍປະມານ (1-8 ອາທິດ) ຖ້າພົບວ່ານັກສຶກສາແຕ່ລະຄົນໄດ້ຄະແນນຄືເກົ່າ ທັງ 2 ຄັ້ງ ສະແດງວ່າແບບທົດສອບນີ້ມີຄວາມເຊື່ອໝັ້ນສູງ.

**3. ຄວາມຍຸດຕິທຳ** ໝາຍເຖິງລັກສະນະຂອງແບບທົດສອບທີ່ບໍ່ເປີດໂອກາດໃຫ້ມີການໄດ້ປຽບເສຍປຽບໃນກຸ່ມຜູ້ເຂົ້າສອບດ້ວຍກັນ, ບໍ່ເປີດໂອກາດໃຫ້ນັກສຶກສາເຮັດການທົດສອບດ້ວຍການເດົາ.

**4. ຄວາມທ່ຽງຕົງຂອງຄຳຖາມ** ໝາຍເຖິງ ຂໍ້ສອບແຕ່ລະຂໍ້ນັ້ນຈະຕ້ອງບໍ່ຖາມແບບຜິວເຜີນ ຫຼື ຖາມປະເພດຄວາມ ຮູ້ຄວາມຈຳພຽງຢ່າງດຽວ ແຕ່ຕ້ອງຖາມໃຫ້ນັກສຶກສານຳຄວາມຮູ້ ຄວາມເຂົ້າໃຈໄປຄິດດັດແປງແກ້ບັນຫາ ແລ້ວຈຶ່ງຕອບໄດ້ ເຊິ່ງໄດ້ແກ່ ການຖາມພຶດຕິກຳທີ່ສູງກວ່າຄວາມຮູ້ ຄວາມຈຳ.

**5. ຄວາມຈຳເພາະເຈາະຈົງ** ໝາຍເຖິງ ຂໍ້ສອບທີ່ມີທັງການຖາມ, ການຕອບທີ່ຊັດເຈນ ບໍ່ມີຄວາມສະຫຼັບຊັບຊ້ອນຫຼາຍຈົນໃຫ້ນັກສຶກສາງົງ ເປັນຕົ້ນ.

**6. ຄວາມເປັນປະລາໄນ** ໝາຍເຖິງ ຄວາມເປັນປະລາໄນທີຈະຕ້ອງມີຄຸນສົມບັດ 3 ປະການຄື ຕັ້ງຄຳຖາມໃຫ້ຊັດເຈນ ເຮັດໃຫ້ຜູ້ເຂົ້າສອບທຸກຄົນເຂົ້າໃຈຄວາມໝາຍກົງກັນ, ກວດໃຫ້ຄະແນນໄດ້ກົງກັນ ເຖິງວ່າຈະກວດຫຼາຍຄັ້ງກໍ່ຕາມ ແລະ ແປຄວາມໝາຍຂອງຄະແນນໄດ້ເໝືອນກັນ

**7. ປະສິດທິພາບ** ໝາຍເຖິງແບບທົດສອບທີ່ມີຈຳນວນຫຼາຍພໍປະມານ ໃຊ້ເວລາສອບເໝາະສົມ, ປະຫຍັດຄ່າໃຊ້ຈ່າຍ, ຈັດແບບທົດສອບດ້ວຍຄວາມປານີດ, ກວດໃຫ້ຄະແນນໄດ້ໄວ ລວມເຖິງສິ່ງ ແວດລ້ອມໃນການສອບທີດີ ໄດ້ແກ່ ສະພາບຫ້ອງຮຽນບໍ່ມີສິ່ງລົບກວນຜູ້ເຂົ້າສອບ ກຳມະການຄຸມການສອບເຄັ່ງຄັດເປັນຕົ້ນ.

**8. ອຳນາດຈຳແນກ** ໝາຍເຖິງ ຄວາມສາມາດໃນການຈຳແນກຜູ້ສອບ ຂໍ້ສອບທີ່ດີຈະມີອຳນາດຈຳແນກສູງຕາມທິດການວັດຜົນແບບອີງເກນ (Crieterion Referenced Measurement) ໝາຍເຖິງຄວາມສາມາດຂອງຂໍ້ສອບນັ້ນໃນການຈຳແນກຜູ້ສອບອອກເປັນ 2 ກຸ່ມຄື ກຸ່ມຮອບຮູ້ກັບກຸ່ມບໍ່ຮອບຮູ້ ຖ້າຂໍ້ສອບມີອຳນາດຈຳແນກສູງສະແດງວ່າກຸ່ມຜູ້ຮອບຮູ້ເຮັດຂໍ້ສອບໄດ້ຖືກ, ແຕ່ກຸ່ມບໍຮອບຮູ້ເຮັດຂໍ້ສອບບໍ່ຖືກ.

**9. ຄວາມຍາກ** ກ່ຽວກັບຄວາມຍາກຂອງຂໍ້ສອບນັ້ນຂຶ້ນຢູ່ກັບທິດສະດີທີເປັນຫຼັກຍຶດຖື ເຊັ່ນດຽວກັບກໍລະນີຂອງອຳນາດຈຳແນກ ຕາມທິດສະດີການວັດແບບອີງເກນ ຖືວ່າການສ້າງຂໍ້ສອບກໍ່ເພື່ອຈະວັດວ່າ ຜູ້

ຮຽນໄດ້ບັນລຸຈຸດປະສົງ ຫຼື ບໍ ການທີ່ທຸກຄົນເຮັດການທົດສອບໄດ້ຖືກ ສະແດງວ່າເຂົາບັນລຸຈຸດປະສົງຕາມທີ່ຕ້ອງການ ຈະວ່າຂໍ້ສອບບໍ່ດີກໍບໍ່ໄດ້ ດັ່ງນັ້ນເລື່ອງຄວາມຍາກງ່າຍຈຶ່ງບໍ່ໄດ້ເປັນສິ່ງສໍາຄັນ ສິ່ງສໍາຄັນຢູ່ທີ່ຂໍ້ສອບນັ້ນໄດ້ວັດໃນຈຸດປະສົງທີ່ຕ້ອງການວັດໄດ້ຈິງ ຫຼື ບໍ ຖ້າວັດໄດ້ຈິງກໍ່ນັບວ່າເປັນຂໍ້ສອບທີ່ດີໄດ້ ເຖິງວ່າຈະເປັນຂໍ້ສອບທີ່ງ່າຍກໍ່ຕາມ.

ບຸນຊົມ ສີສະອາດ (2554: 94-104) ໄດ້ສະເໜີວ່າໃນການໃຊ້ເຄື່ອງມືຮວບຮວມຂໍ້ມູນໃນການຄົ້ນຄວ້າ, ເພື່ອໃຫ້ໄດ້ຂໍ້ມູນທີ່ດີມີຄຸນຄ່າດັ່ງຕ້ອງການຈໍາເປັນຕ້ອງໃຊ້ເຄື່ອງມືທີ່ເປັນມາດຕະຖານເຊິ່ງຜ່ານຂະບວນການສ້າງຢ່າງມີລະບົບ. ການກວດສອບຄຸນນະພາບຂອງແບບທົດສອບອາດຈໍາແນກໄດ້ເປັນ 2 ກຸ່ມຄື ແບບທົດສອບວັດຜົນສໍາເລັດອີງກຸ່ມ ແລະ ແບບທົດສອບວັດຜົນສໍາເລັດອີງເກນ. ແບບທົດສອບວັດຜົນສໍາເລັດທາງການຮຽນແບບທົດສອບອີງກຸ່ມເຊິ່ງມີຂັ້ນຕອນການຫາຄຸນນະພາບດັ່ງນີ້

1. ການວິເຄາະຂໍ້ສອບ

ການວິເຄາະຂໍ້ສອບຂອງແບບທົດສອບວັດຜົນສໍາເລັດອີງກຸ່ມມີຈຸດມຸ່ງໝາຍເພື່ອຮູ້ລະດັບຄວາມຍາກກັບອໍານາດຈໍາແນກ. ແບບທົດສອບທີ່ຈະນໍາມາວິເຄາະຕ້ອງເປັນແບບເລືອກຕອບທີ່ຖືການຕອບຖືກໃຫ້ 1 ຄະແນນ, ຕອບຜິດໃຫ້ 0 ຄະແນນ. ນໍາແບບທົດສອບທີ່ຈະວິເຄາະໄປທົດສອບກັບຜູ້ທີ່ຮຽນເລື່ອງນັ້ນຈົບແລ້ວ. ກວດໃຫ້ຄະແນນເປັນລາຍຂໍ້ແລ້ວລວມຄະແນນທຸກຂໍ້, ຈາກນັ້ນດໍາເນີນການວິເຄາະຕາມລໍາດັບຂັ້ນຕໍ່ໄປນີ້

1.1 ລຽງເຈ້ຍຄໍາຕອບຈາກຜູ້ທີ່ໄດ້ຄະແນນສູງສຸດລົງໄປເຖິງຜູ້ທີ່ໄດ້ຄະແນນຕໍ່າສຸດ.

1.2 ແບ່ງກຸ່ມສູງ, ກຸ່ມຕໍ່າ ກຸ່ມລະ 27% ຂອງຜູ້ທີ່ເຂົ້າສອບທັງໝົດ ໂດຍເອົາ 0.27 ໄປຄູນຈໍານວນຜູ້ເຂົ້າສອບ. ຖ້າມີຄະແນນຊໍ້າກັນກໍ່ເລືອກເອົາເຈ້ຍຄໍາຕອບຂອງຄົນໃດຄົນໜຶ່ງດ້ວຍວິທີສຸ່ມ.

1.3 ໃນແຕ່ລະຂໍ້, ນັບຈໍານວນຄົນຕອບຖືກໃນກຸ່ມສູງ ແລະ ຈໍານວນຄົນຕອບຖືກໃນກຸ່ມຕໍ່າ.

1.4 ຄິດໄລ່ຫາລະດັບຄວາມຍາກ ແລະ ອໍານາດຈໍາແນກຂອງແຕ່ລະຂໍ້ຈາກສູດລຸ່ມນີ້

$$P = \frac{H+L}{2N} \qquad \text{ແລະ} \qquad r = \frac{H-L}{N}$$

ເມື່ອ P ແທນ ຄ່າລະດັບຄວາມຍາກຂອງຂໍ້ສອບ

r ແທນ ຄ່າອໍານວດຈໍາແນກຂອງຂໍ້ສອບ

H ແທນ ຈໍານວນຄົນໃນກຸ່ມສູງຕອບຖືກ

L ແທນ ຈໍານວນຄົນໃນກຸ່ມຕໍ່າຕອບຖືກ

N ແທນ ຈໍານວນຄົນທັງໝົດໃນກຸ່ມໃດກຸ່ມໜຶ່ງ

## 7. ແນວຄິດທິດສະດີກ່ຽວກັບວິທີສ້າງແບບວັດຄວາມເພິ່ງພໍໃຈໃນການຮຽນຮູ້

• **ຄວາມໝາຍຂອງຄວາມເພິ່ງພໍໃຈ**

Good, C.V (1973: 161) ໄດ້ໃຫ້ຄວາມໝາຍວ່າ ຄວາມເພິ່ງພໍໃຈ ໝາຍເຖິງ ສະພາບ ຫຼື ລະດັບຄວາມເພິ່ງພໍໃຈທີເປັນຜົນມາຈາກຄວາມສົນໃຈ ແລະ ເຈຕະຄະຕິຂອງບຸກຄົນທີ່ມີຕໍ່ວຽກງານ.

Applewhit, P.B ( 1965) ເວົ້າວ່າ ຄວາມເພິ່ງພໍໃຈເປັນຄວາມຮູ້ສຶກສ່ວນຕົວຂອງບຸກຄົນໃນການປະຕິບັດວຽກງານ ເຊິ່ງມີຄວາມໝາຍກວ້າງ ລວມໄປເຖິງຄວາມເພິ່ງພໍໃຈໃນສະພາບແວດລ້ອມທາງກາຍະພາບດ້ວຍ ການມີຄວາມສຸກທີເຮັດວຽກຮ່ວມກັບຄົນອື່ນທີເຂົ້າກັນໄດ້ ມີທັດສະນະຄະຕິທີດີຕໍ່ວຽກງານດ້ວຍ.

ຖະໜອມຊັບ ມະລິຊ້ອນ (2540: 38 ອ້າງຈາກ ໂອເລັດ ແສງໄສ, 2554: 56) ຄວາມພຶງພໍໃຈ ຄືຄວາມຮູ້ສຶກນຶກຄິດ ຫຼື ທັດສະນະຄະຕິຂອງຜູ້ປະຕິບັດງານແຕ່ລະຄົນທີມີຕໍ່ງານ ແລະ ປັດໄຈ ຫຼື ອົງປະກອບທີກ່ຽວຂ້ອງກັບງານນັ້ນ ໆຈົນສາມາດຕອບສະໜອງຄວາມຕ້ອງການຂັ້ນພື້ນຖານທັງດ້ານຮ່າງກາຍ ແລະ ຈິດໃຈຕະຫຼອດຈົນສາມາດລຸດຄວາມຄຽດຂອງຜູ້ປະຕິບັດງານໃຫ້ຕໍ່າລົງໄດ້.

ສຸບສີລິ ໂສມາເກຕຸ (2544: 49 ອ້າງຈາກ ໂອເລັດ ແສງໄສ, 2554: 56) ກ່າວວ່າຄວາມພຶງພໍໃຈໝາຍເຖິງ ຄວາມຮູ້ສຶກນຶກຄິດ ຫຼື ເຈຕະຄະຕິຂອງບຸກຄົນທີມີຕໍ່ການເຮັດວຽກງານ ຫຼື ການປະຕິບັດງານ ຫຼືການປະຕິບັກິດຈະກໍາໃນທາງບວກ ດັ່ງນັ້ນຄວາມພຶງພໍໃຈໃນການຮຽນຮູ້ຈຶ່ງໝາຍເຖິງ ຄວາມຮູ້ພໍໃຈ ມັກໃຈໃນການຮ່ວມປະຕິບັດກິດຈະກໍາການຮຽນການສອນ ແລະ ຕ້ອງການດໍາເນີນກິດຈະກໍານັ້ນ ໆ ຈົນບັນລຸຜົນສໍາເລັດ.

ດໍາລິ ມຸສິພັນ (2544: 39 ອ້າງຈາກ ໂອເລັດ ແສງໄສ, 2554: 39) ໄດ້ໃຫ້ຄວາມໝາຍວ່າ ຄວາມພຶງພໍໃຈ ໝາຍເຖິງ ສະພາບຂອງສະພາວະຈິດໃຈທີປາສະຈາກຄວາມຄຽດ ທັງນີ້ເພາະທໍາມະຊາດຂອງມະນຸດນັ້ນມີຄວາມຕ້ອງການ ຖ້າຄວາມຕ້ອງການນັ້ນໄດ້ຮັບການຕອບສະໜອງທັງໝົດ ຫຼື ບາງສ່ວນຄວາມຄຽດຈະລຸດລົງ ຄວາມພຶງພໍໃຈຈະເກີດຂຶ້ນແລະໃນທາງກົງກັນ ຖ້າຄວາມຕ້ອງການນັ້ນບໍ່ໄດ້ຮັບການຕອບສະໜອງ ຄວາມຄຽດຄວາມບໍ່ພຶງພໍໃຈຈະເກີດຂຶ້ນຈາກຄວາມຫມາຍຂອງຄວາມພຶງພໍໃຈຂັ້ນຕົ້ນ ຜູ້ສຶກສາຄົ້ນຄວ້າສະຫລຸບໄດ້ວ່າ ຄວາມພຶງພໍໃຈຕໍ່ການຈັດການຮຽນຮູ້ ໝາຍເຖິງ ຄວາມຮູ້ສຶກພໍໃຈ ຫຼື ທັດສະນະຄະຕິຂອງຜູ້ຮຽນທີມີຕໍ່ການຈັດການຮຽນຮູ້ສາມາດປະຕິບັດກິດຈະກໍາການຮຽນຮູ້ຢ່າງມີຄວາມສຸກແລະປະສົບຄວາມສໍາເລັດແນວຄິດທິດສະດີກ່ຽວກັບຄວາມພຶງພໍໃຈທິດສະດີ ແລະ ແຮງຈູງໃຈທີເຮັດໃຫ້ເກີດຄວາມເພິ່ງພໍໃຈໃນການເຮັດວຽກງານຂອງຕົນໄດ້ສຶກສາຄົ້ນຄວ້າທິດສະດີທີເປັນມູນເຫດທີເຮັດໃຫ້ເກີດຄວາມພຶງພໍໃຈໃນການເຮັດວຽກງານ 2 ປັດໄຈ ຄື:

ປະສາດ ອິສົນປີດາ (2547: 11 ອ້າງຈາກ ໂອເລັດ ແສງໄສ, 2554:56) ປັດໄຈກະຕຸ້ນ (Motivation Factors) ເປັນປັດໄຈທີກ່ຽວກັບການງານ ເຊິ່ງມີຜົນກໍ່ໃຫ້ເກີດຄວາມພຶງພໍໃຈໃນການເຮັດວຽກງານ ເຊັ່ນຄວາມສໍາເລັດຂອງງານ ການໄດ້ຮັບການຍອມຮັບນັບຖືລັກສະນະຂອງງານຄວາມຮັບຜິດຊອບ ຄວາມກ້າວໜ້າໃນຕໍາແໜ່ງການງານປັດໄຈຄໍ້າຊູ (Hygiene Factors) ເປັນປັດໄຈທີກ່ຽວຂ້ອງກັບສິ່ງແວດລ້ອມໃນ

ການເຮັດວຽກງານແລະມີຫນ້າທີໃຫ້ບຸກຄົນເກີດຄວາມພຶງພໍໃຈໃນການເຮັດວຽກງານ ເຊັ່ນ ເງິນເດືອນໂອກາດທີຈະກ້າວໜ້າໃນອະນາຄົດ ຖານະຂອງອາຊີບ ສະພາບການເຮັດວຽກງານ ເປັນຕົ້ນ.

Scott, M.M (1970: 24) ໄດ້ສະເໜີແນວຄິດໃນເລື່ອງການຈູງໃຈໃຫ້ເກີດຄວາມເພິ່ງພໍໃຈຕໍ່ການເຮັດວຽກງານທີຈະໃຫ້ເກີດຜົນເຊິ່ງປະຕິບັດມີດັ່ງນີ້:

1. ວຽກງານຄວນມີສ່ວນສຳພັນກັບຄວາມປາຖະໜາສ່ວນຕົວ ວຽກງານນັ້ນຈະມີຄວາມໝາຍສຳລັບຜູ້ເຮັດ.

2. ວຽກງານນັ້ນຕ້ອງມີການວາງແຜນ ແລະ ວັດຄວາມສຳເລັດໄດ້ ໂດຍໃຊ້ລະບົບການເຮັດວຽກງານ ແລະ ການຄວບຄຸມທີ່ມີປະສິດທິພາບ.

3. ເພື່ອໃຫ້ໄດ້ຜົນໃນການສ້າງສິ່ງຈູງໃຈພາຍໃນເປົ້າໝາຍຂອງວຽກງານ ຈະຕ້ອງມີລັກສະນະດັ່ງນີ້:

3.1. ຄົນເຮັດວຽກງານມີສ່ວນໃນການຕັ້ງເປົ້າໝາຍ.

3.2. ຜູ້ປະຕິບັດໄດ້ຮັບຜົນສຳເລັດໃນການເຮັດວຽກງານໂດຍກົງ.

3.3. ວຽກງານນັ້ນສາມາດເຮັດໃຫ້ສຳເລັດໄດ້.

ສະຫຼຸບແລ້ວຄວາມເພິ່ງພໍໃຈໃນການຮຽນ ແລະ ຜົນການຮຽນຈະມີຄວາມສຳພັນກັນໃນທາງບວກໃນນີ້ຂຶ້ນຢູ່ກັບກິດຈະກຳທີຜູ້ຮຽນໄດ້ປະຕິບັດ ເຮັດໃຫ້ຜູ້ຮຽນໄດ້ຮັບການຕອບສະໜອງທາງດ້ານຮ່າງກາຍ ແລະ ຈິດໃຈ ເຊິ່ງເປັນສ່ວນສຳຄັນທີຈະເຮັດໃຫ້ເກີດຄວາມສົມບູນຂອງຊີວິດຫຼາຍໜ້ອຍພຽງໃດ ນັ້ນຄືສິ່ງທີຄູສອນ, ພໍ່ແມ່, ຜູ້ປົກຄອງຈະຕ້ອງຄຳນຶງເຖິງອົງປະກອບຕ່າງໆ ໃນການສ້າງເສີມຄວາມເພິ່ງພໍໃຈໃນການຮຽນຮູ້ໃຫ້ກັບຜູ້ຮຽນ.

**ການວັດຄວາມເພິ່ງພໍໃຈ**

ເນື່ອງຈາກຄວາມເພິ່ງພໍໃຈເປັນທັດສະນະຄະຕິໃນທາງບວກຂອງບຸກຄົນທີ່ມີຕໍ່ສິ່ງໃດໜຶ່ງ ການທີ່ຈະວັດວ່າບຸກຄົນມີຄວາມຮູ້ສຶກເພິ່ງພໍໃຈ ຫຼື ບໍ່ເພິ່ງພໍໃຈ ຈິ່ງມີຄວາມຈຳເປັນຈະສ້າງເຄື່ອງມືທີ່ຊ່ວຍໃນການວັດທັດສະນະຄະຕິນັ້ນ ເຊິ່ງນັກວິຊາການຫຼາຍທ່ານໄດ້ເວົ້າເຖິງການວັດຄວາມເພິ່ງພໍໃຈໄວ້ດັ່ງນີ້:

ຖະວິນ ສະຣາໂຣ (2536: 77-86) ໄດ້ເວົ້າວ່າການວັດຄວາມຮູ້ສຶກນັ້ນຈະວັດອອກມາໃນລັກສະນະຂອງທິດທາງ ເຊິ່ງມີຢູ່ 2 ທິດທາງ ຄື ທາງບວກ ຫຼື ທາງລົບ. ທາງບວກໝາຍເຖິງການປະເມີນຄ່າຄວາມຮູ້ສຶກໄປໃນທາງທີ່ດີມັກ ຫຼື ພໍໃຈ.ສ່ວນທາງລົບຈະເປັນການປະເມີນຄ່າຄວາມຮູ້ສຶກໄປໃນທາງທີ່ບໍ່ດີບໍ່ມັກ ຫຼື ບໍ່ພໍໃຈ ແລະ ການວັດໃນລັກສະນະປະລິມານ ເຊິ່ງເປັນຄວາມຮຸນແຮງ ຫຼື ລະດັບທັດສະນະຄະຕິໄປໃນທິດທາງທີ່ເພິ່ງປະສົງ ຫຼື ບໍ່, ເຊິ່ງວິທີການວັດມີຢູ່ຫຼາຍວິທີເຊັ່ນວິທີການສັງເກດ, ວິທີການສຳພາດ. ວິທີການສອບຖາມມີລາຍລະອຽດດັ່ງນີ້:

1. ວິທີການສັງເກດເປັນວິທີການໃຊ້ກວດສອບບຸກຄົນອື່ນໂດຍການຈອບເບິ່ງ ແລະ ຈົດບັນທຶກຢ່າງມີແບບແຜນ ວິທີນີ້ເປັນວິທີການສຶກສາທີ່ເກົ່າແກ່ ແລະ ຍັງເປັນທີ່ນິຍົມໃຊ້ຢ່າງຫຼວງຫຼາຍຈົນເຖິງປັດຈຸບັນແຕ່ກໍເໝາະສົມກັບການສຶກສາເປັນລາຍກໍລະນີເທົ່ານັ້ນ.

2.ວິທີການສຳພາດ ເປັນວິທີການທີຜູ້ວິໄຈທີຈະຕ້ອງອອກໄປສອບຖາມ ໂດຍການສົນທະນາກັບບຸກຄົນນັ້ນໆ ໂດຍມີການກະກຽມແຜນການລ່ວງໜ້າ ເພື່ອໃຫ້ໄດ້ຂໍ້ມູນທີເປັນຈິງຫຼາຍທີສຸດ.

4. ວິທີໃຊ້ແບບສອບຖາມ (Questionnaire) ວິທີການນີ້ຈະເປັນການໃຊ້ແບບສອບຖາມທີ່ມີຂໍ້ຄໍາອະທິບາຍໄວ້ຢ່າງຮຽບຮ້ອຍ ເພື່ອໃຫ້ຜູ້ຕອບທຸກຄົນຕອບມາເປັນແບບແຜນດຽວກັນ ມັກໃຊ້ໃນກໍລະນີທີ່ຕ້ອງການຂໍ້ມູນຈາກກຸ່ມຕົວຢ່າງຈໍານວນຫຼາຍໆ ວິທີນີ້ເປັນວິທີທີ່ນິຍົມໃຊ້ກັນຫຼາຍທີ່ສຸດໃນການວັດທັດສະນະຄະຕິ ຮູບແບບຂອງການສອບຖາມຈະໃຊ້ມາດຕາວັດທັດສະນະຄະຕິ ເຊິ່ງທີ່ນິຍົມໃຊ້ໃນປັດຈຸບັນວິທີໜຶ່ງຄື ມາດຕາສ່ວນແບບລິເກີທ (Liket Scales) ປະກອບດ້ວຍຂໍ້ຄວາມທີ່ສະແດງເຖິງທັດສະນະຄະຕິຂອງບຸກຄົນທີ່ມີຕໍ່ສິ່ງເປົ້າຍອນຢ່າງໃດຢ່າງໜຶ່ງ ແລ້ວມີຄໍາຕອບທີ່ສະແດງເຖິງລະດັບຄວາມຮູ້ສຶກ 5 ຄໍາຕອບ ເຊັ່ນ ການສັງເກດ, ການສໍາພາດ ແລະ ການໃຊ້ແບບສອບຖາມ ເປັນຕົ້ນ.

ໂຍລິນ ສັນສົມມຸດ (2530: 66-71) ໄດ້ເວົ້າເຖິງເຄື່ອງມືວັດຄວາມເພິ່ງພໍໃຈວ່າການຈະຄົ້ນຫາໄດ້ວ່າບຸກຄົນມີຄວາມເພິ່ງພໍໃຈຫຼືບໍ່ ວິທີທີ່ງ່າຍທີ່ສຸດກໍຄືການຖາມ ເຊິ່ງການສຶກສາໃນໄລຍະຫຼັງໆທີ່ຕ້ອງມີຜູ້ບອກຂໍ້ມູນຈໍານວນຫຼາຍໆ ມັກໃຊ້ແບບສອບຖາມ ທີ່ໃຊ້ມາດຕາສ່ວນປະມານຄ່າຕາມແບບຂອງລິເຄີທ (Liket) ປະກອບດ້ວຍຊຸດຂອງຄໍາຖາມ ແລະ ມີຕົວເລືອກ 5 ຕົວ ສໍາລັບເລືອກຕອບຄື ຫຼາຍທີ່ສຸດ, ຫຼາຍ, ປານກາງ ໜ້ອຍ ແລະ ໜ້ອຍທີ່ສຸດ, ຄະແນນຄວາມເພິ່ງພໍໃຈນັ້ນ ສາມາດນໍາມາວິເຄາະໄດ້ວ່າບຸກຄົນມີຄວາມເພິ່ງພໍໃຈດ້ານໃດສູງ ແລະ ດ້ານໃດຕໍ່າ ໂດຍໃຊ້ວິທີການທາງສະຖິຕິ ເຊິ່ງຕ້ອງການສຶກສາຂໍ້ມູນກ່ຽວກັບອົງກອນກໍ່ມີຄວາມຈໍາເປັນທີ່ຈະຕ້ອງໃຊ້ແບບສອບຖາມທີ່ມີຂໍ້ຄໍາຖາມຫຼາຍຂໍ້ ເພື່ອຈະຄອບຄຸມເຖິງລັກສະນະຕ່າງໆຂອງວຽກງານທຸກໆດ້ານຂອງອົງກອນ ແລະ ນອກຈາກການໃຊ້ແບບສອບຖາມແລ້ວອາດໃຊ້ວິທີການຂຽນຕອບຢ່າງເສລີໄດ້ເຊັ່ນກັນ.

- **ປັດໃຈທີ່ເຮັດໃຫ້ເກີດຄວາມເພິ່ງພໍໃຈ**

Bernard, C (1968) ກ່າວວ່າບຸກຄົນຈະມີຄວາມເພິ່ງພໍໃຈຕໍ່ການເຮັດວຽກ ຫຼື ເຮັດກິດຈະກໍານັ້ນຂຶ້ນຢູ່ກັບການກະຕຸ້ນຂອງສິ່ງຈູງໃຈ 8 ປະການຄື

1. ສິ່ງຈູງໃຈທີ່ເປັນວັດຖຸໄດ້ແກ່ ເງິນ, ຄໍາ, ສິ່ງຂອງ, ເຄື່ອງມື, ເຄື່ອງໃຊ້.

2. ສິ່ງຈູງໃຈທີ່ເປັນໂອກາດຂອງບຸກຄົນໄດ້ແກ່ ຊື່ສຽງ, ກຽດຕິຍົດ, ອໍານາດພິເສດ, ຕໍາແໜ່ງ.

3. ສິ່ງຈູງໃຈທີ່ເປັນສະພາບໄດ້ແກ່ ສະພາບແວດລ້ອມທີ່ກ່ຽວກັບການເຮັດວຽກ.

4. ສິ່ງຈູງໃຈທີ່ເປັນອຸດົມຄະຕິໄດ້ແກ່ ຄວາມເພິ່ງພໍໃຈຂອງບຸກຄົນທີ່ໄດ້ສະແດງຝີມື, ຄວາມຮູ້ສຶກທີ່ໄດ້ເຮັດຢ່າງເຕັມທີ່.

5. ສິ່ງຈູງໃຈທີ່ເປັນຄວາມດຶງດູດໃຈທາງສັງຄົມໄດ້ແກ່ ຄວາມສໍາພັນກັບເພື່ອນຮ່ວມງານ, ການຍົກຍ້ອງນັບຖືເຊິ່ງກັນ ແລະ ກັນ.

6. ສິ່ງຈູງໃຈທີ່ເປັນສະພາບການເຮັດວຽກໄດ້ແກ່ ການປັບປຸງວິທີການເຮັດວຽກໃຫ້ສອດຄ່ອງກັບຄວາມສາມາດ ແລະ ໃຫ້ສອດຄ່ອງກັບທັດສະນະຄະຕິຂອງແຕ່ລະບຸກຄົນ.

7. ສິ່ງຈູງໃຈທີ່ເອື້ອອໍານວຍໂອກາດໃຫ້ມີສ່ວນຮ່ວມໃນການເຮັດວຽກໄດ້ແກ່ ການມີໂອກາດສະແດງຄວາມຄິດເຫັນ ແລະ ມີສ່ວນຮ່ວມໃນໜ້າວຽກທຸກຢ່າງທີ່ທາງໜ່ວຍງານຈັດຂຶ້ນ.

8. ສິ່ງຈູງໃຈທີເປັນສະພາບການຢູ່ຮ່ວມກັນໄດ້ແກ່ ຄວາມພໍໃຈຂອງບຸກຄົນທີໄດ້ຢູ່ຮ່ວມກັນ, ການຮູ້ຈັກກັນຢ່າງກວ້າງຂວາງ, ຄວາມສະນິດສະໜົມ, ຄວາມຮ່ວມມືໃນການເຮັດວຽກ.

**ຈາກບັນຫາຂ້າງເທິງນັ້ນສາມາດສະຫຼຸບໄດ້ວ່າ:**

ຄວາມເພິ່ງພໍໃຈໝາຍເຖິງຄວາມຮູ້ສຶກນຶກຄິດຂອງບຸກຄົນທີມີຕໍ່ການເຮັດວຽກໃນທາງບວກເຊັ່ນ ຄວາມຮູ້ສຶກມັກ, ພໍໃຈ, ເຕັມໃຈ ແລະ ຍິນດີເຊິ່ງເກີດຈາກການໄດ້ຮັບການຕອບສະໜອງຄວາມຕ້ອງການຂອງມະນຸດ, ເປັນຄວາມຮູ້ສຶກທີມີຄວາມສຸກເມື່ອເຮັດສິ່ງໃດໜຶ່ງຈົນບັນລຸຜົນສຳເລັດ. ດັ່ງນັ້ນ, ຄວາມເພິ່ງພໍໃຈໃນການຮຽນ ໝາຍເຖິງ ຄວາມຮູ້ສຶກ, ຄວາມຄິດເຫັນຂອງຜູ້ຮຽນທີມີຕໍ່ການຈັດກິດຈະກຳການຮຽນ-ການສອນຂອງຄູ ຫຼື ກິດຈະກຳທາງການຮຽນທີໄດ້ຮັບມອບໝາຍ.

## 8. ບົດຄົ້ນຄວ້າທີ່ກ່ຽວຂອງ

ໂອເລັດ ແສງໄສ (2554) ໄດ້ສຶກສາເລື່ອງການອ່ານຈັບໃຈຄວາມສາລະການຮຽນຮູ້ພາສາໄທດ້ວຍວິທີສອນແບບ STAD

1. ພັດທະນາການຈັດກິດຈະກຳການຮຽນຮູ້ແບບ STAD ເລື່ອງການອ່ານຈັບໃຈຄວາມສຳຄັກຸ່ມສາລະການຮຽນຮູ້ພາສາໄທຊັ້ນປະຖົມປີທີ 6 ທີມີປະສິທິພາບຄາມເກນ 80/80

2. ສຶກສາດັດສະນີປະສິດທິຜົນຂອງກິດຈະກຳການຮຽນຮູ້ແບບ STAD

3. ສຶກສາຄວາມເພິ່ງພໍໃຈຂອງນັກຮຽນປະຖົມປີທີ 6 ທີມີຕໍ່ການຈັດກິດຈະກຳການຮຽນຮູ້ແບບກຸ່ມ STAD ເລື່ອງການອ່ານຈັບໃຈຄວາມ. ກຸ່ມຕົວຢ່າງທີໃຊ້ໃນການສຶກສາຄັ້ງນີ້ໄດ້ແກ່ນັກຮຽນຊັ້ປະຖົມປີທີ 6 ພາກຮຽນທີ 1 ປີສຶກສາ 2553 ໂຮງຮຽນບ້ານໂນນສະຫວ່າງສັງກັດສຳນັກງານເຂດພື້ນທີການສຶກສາອຸດຊານີເຂດ 4 ຈຳນວນ 16 ຄົນໄດ້ມາໂດຍການເລືອກແບບເຈາະຈົງ ເຄື່ອງມືໃນການສຶກສາຄົ້ນຄວ້າໄດແກ່

1. ແຜນການຈັດກິດຈະກຳການຮຽນຮູ້ແບບ STAD ເລື່ອງການອ່ານຈັບໃຈຄວາມຊັ້ນປະຖົມປີທີ 6 ຈຳນວນ 6 ແຜນໃຊ້ເວລາການຮຽນແຜນລະ 2 ຊົ່ວໂມງລວມ 12 ຊົ່ວໂມງ

2.ແບບທົດສອບວັດຜົນສຳເລັດທາງການຮຽນເປັນແບບປາລາໄນ 4 ຕົວເລືອກຈຳນວນ 30 ຂໍ້, ມີຄ່າອຳນາດຈຳແນກ B ຕັ້ງແຕ່ 0.23- 0.86 ມີຄວາມເຊື່ອໝັ້ນ r ເທົ່າກັບ 0.81

3. ແບບວັດຄວາມເພິ່ງພໍໃຈໃນການຮຽນເປັນແບບມາດຕາສ່ວນ 5 ລະດັບ, ຈຳນວນ 25 ຂໍ້, ມີອຳນາດຈຳແນກ ( rxy ) ຕັ້ງແຕ່ 0.35-0.69 ຄ່າຄວາມເຊື່ອໝັ້ນ $(\alpha)$ 0,82 ສະຖິຕິທີໃຊ້ໃນການວິເຄາະຄື ສ່ວນຮ້ອຍຄ່າສະເລ່ຍ ແລະ ຄ່າພັນປ່ຽນມາດຕະຖານຜົນການສຶກສາຄົ້ນຄວ້າມີດັ່ງນີ້:

1. ແຜນການຈັດກິດຈະກຳການຮຽນຮູ້ແບບ STAD ເລື່ອງການອ່ານຈັບໃຈຄວາມກຸ່ມສາລະການຮຽນຮູ້ພາສາໄທຊັ້ນປະຖົມທີ 6 ມີປະສິທິພາບເທົ່າກັບ 83.65/81,67.

2. ດັດຊະນີປະສິທິຜົນຂອງແຜນການຈັດກິດຈະກຳການຮຽນຮູ້ແບບ STAD ເລື່ອງການອ່ານຈັບໃຈຄວາມກຸ່ມສາລະການຮຽນຮູ້ພາສາໄທຊັ້ນປະຖົມປີທີ 6 ມີຄ່າເທົ່າກັບ0.6494 ໝາຍຄວາມວ່ານັກຮຽນມີຄວາມກ້າວໜ້າທາງການຮຽນຄິດເປັນສ່ວນຮ້ອຍ 64.94 ເປີເຊັນ.

3. ນັກຮຽນຊັ້ນປະຖົມສຶກສາປີທີ 6 ມີຄວາມເພິ່ງພໍໃຈໃນການຈັດກິດຈະກຳການຮຽນຮູ້ແບບ STAD ເລື່ອງການອ່ານຈັບໃຈຄວາມໂດຍລວມ ແລະ ລາຍຂໍ້ຢູ່ໃນລະດັບດີ.

ໂດຍສະຫຼຸບແຜນການຈັດກິດຈະກຳການຮຽນຮູ້ແບບ STAD ກຸ່ມສາລະການຮຽນຮູ້ພາສາໄທນັກຮຽນປະຖົມສຶກສາປີທີ 6 ມີປະສິທິພາບ ແລະ ປະສິທິຜົນເໝາະສົມສາມາດນຳໄປປະຍຸກໃຊ້ພັດທະນາການຮຽນຮູ້ຂອງຜູ້ຮຽນດ້ານການອ່ານຈັບໃຈຄວາມ ແລະ ເຮັດໃຫ້ນັກຮຽນມີຜົນສຳເລັດສູງຂຶ້ນ ເກີດມີຄວາມເພິ່ງພໍໃຈໃນການຮຽນຮູ້ສາມາດນຳໄປໃຊໃນການຈັດການຮຽນ-ການສອນພາສາໄທ ແລະ ກຸ່ມອື່ນໆ.

ກັນຍາ ໂຄຈຳນົງ (2555) ໄດ້ສຶກສາເລື່ອງການອ່ານຈັບໃຈຄວາມຊັ້ນປະຖົມສຶກສາປີທີ 6 ດ້ວຍວິທີການສອນເທັກນິກ STAD ຜົນການຄົ້ນຄວ້າພົບວ່າ.

1. ແຜນການຈັດກິດຈະກຳການຮຽນຮູ້ພາສາໄທດ້ວຍກຸ່ມຮ່ວມມືແບບ STAD ເລື່ອງ ການອ່ານຈັບໃຈຄວາມ ຊັ້ນປະຖົມສຶກສາປີທີ 6 ມີປະສິດທິພາບເທົ່າກັບ 85.37/83.40 ຊຶ່ງສູງກວ່າເກນທີ່ຕັ້ງໄວ້80/80

2. ດັດນີປະສິດທິຜົນຂອງແຜນການຈັດກິດຈະກຳການຮຽນຮູ້ພາສາໄທດ້ວຍກຸ່ມຮ່ວມມືແບບ STAD ເລື່ອງ ການອ່ານຈັບໃຈຄວາມ ຊັ້ນປະຖົມສຶກສາປີທີ 6 ມີຄ່າ 0.7335 ໝາຍຄວາມວ່ານັກຮຽນມີຄະແນນຫລັງຮຽນສູງກວ່າກ່ອນຮຽນຄິດເປັນຮ້ອຍລະ 73.35.

3. ນັກຮຽນທີໄດ້ຮັບການຈັດກິດຈະກຳການຮຽນຮູ້ພາສາໄທດ້ວຍກຸ່ມຮ່ວມມືແບບ STAD ເລື່ອງການອ່ານຈັບໃຈຄວາມ ຊັ້ນປະຖົມສຶກສາປີທີ 6 ມີການຄິດວິເຄາະຫລັງຮຽນສູງກວ່າກ່ອນຮຽນຢ່າງມີໄນສຳຄັນທາງສະຖິຕິລະດັບ.05.

ນິລະວັນ ຣົງທອງ ໄດ້ສຶກສາເລື່ອງການອ່ານຈັບໃຈຄວາມດ້ວຍກຸ່ມຮ່ວມມືເທັກນິກຊັ້ນປະຖົມສຶກສາປີທີ 6 STAD ຊັ້ນປະຖົມສຶກສາປີທີ 6 ຜົນການຄົ້ນຄວ້າພົບວ່າ.

1. ຜົນການຈັດກິດຈະກຳການຮຽນຮູ້ດ້ານການອ່ານຈັບໃຈຄວາມດ້ວຍກຸ່ມຮ່ວມມືແບບ STAD ຊັ້ນປະຖົມສຶກສາປີທີ່ 6 ມີປະສິທິພາບເທົ່າກັບ 90.7/89.07 ເຊິ່ງສູງກວ່າເກນທີຕັ້ງໄວ້ເກນ 80/80

2. ດັດຊະນີປະສິທິຜົນຂອງແຜນການຈັດກິດຈະກຳການຮຽນຮູ້ເທົ່າກັບ 0.76.25 ໝາຍຄວາມວ່ານັກຮຽນມີຄວາມກ້າວໜ້າທາງການຮຽນເພີ່ມຂຶ້ນຮ້ອຍລະ 76.25 ແລະ ພົນການຈັດການຮຽນຮູ້ດ້ວຍແຜນການຈັດການຮຽນຮູ້ພາສາໄທ.

3. ຜົນການຈັດກິດຈະກຳການຮຽນຮູ້ຂອງແຜນການຈັດການຮຽນຮູ້ທັງ 8 ແຜນນັກຮຽນສາມາດພັດທະນາທັກສະການອ່ານຈັບໃຈຄວາມໄດ້ດີຂຶ້ນໂດຍສັງເກດການປະຕິບັດກິດຈະກຳກຸ່ມ ແລະ ຄະແນນທົດສອບຜົນສຳເລັດທາງການຮຽນຄະແນນເພີ່ມຂຶ້ນ.

ໂດຍສະຫຼຸບແຜນການຈັດການຮຽນຮູ້ພາສາໄທທັກສະການອ່ານຈັບໃຈຄວາມໂດຍໃຊ້ກຸ່ມຮ່ວມມື ແບບ STAD ມີປະສິທິພາບ ແລະ ປະສິທິຜົນເໝາະສົມໂດຍເຮັດໃຫ້ນັກຮຽນມີປະຕິສຳພັນກັບຜູ້ອື່ນມີສ່ວນຮ່ວມໃນການເຮັດວຽກຢ່າງມີຄວາມສຸກຮ່ວມມື ແລະ ຊ່ວຍເຫຼືອກັນເພື່ອໃຫ້ເກີດທັກສະການອ່ານຢ່າງມີປະສິທິພາບຈຶ່ງຄວນສົ່ງເສີມໃຫ້ຄູຜູ້ສອນພາສາໄທ ແລະ ກຸ່ມທີສອນສາລະການຮຽນຮູ້ອື່ນໄດ້ຈັດກິດຈະກຳການຮຽນຮູ້ທີສົ່ງເສີມໃຫ້ຜູ້ຮຽນມີສ່ວນຮ່ວມໃນການເຮັດວຽກກຸ່ມຮ່ວມມື ແລະ ຊ່ວຍເຫຼືອກັນເພື່ອໃຫ້ການເຮັດວຽກກຸ່ມຂອງຕົນປະສົບຜົນສຳເລັດ.

ພິມສິຣິ ຊຸນມາກ (2554) ໄດ້ສຶກສາການພັດທະນາການຈັດກິດຈະກຳການຮຽນຮູ້ແບບ STAD ເລື່ອງການອ່ານ ແລະການຂຽນສະກົດຄຳກຸ່ມສາລະການຮຽນຮູ້ພາສາໄທຊັ້ນປະຖົມສຶກສາປີທີ 1 ຜົນການຄົ້ນຄວ້າພົບວ່າ

1. ແບບເຝິກທັກສະການອ່ານ ແລະ ການຂຽນສະກົດຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ 1 ມີປະສິທິພາບ 82.58/84.20 ສູງກວ່າເກນຕັ້ງໄວ້.

2. ຜົນສຳເລັດທາງການຮຽນຫຼັງຮຽນທີສອນໂດຍຮູບແບບການຮຽນແບບ STAD ສູງກວ່າການສອນແບບປົກກະຕິຢ່າງມີໄນສຳຄັນທາງສະຖິຕິລະດັບ 01.

3. ຜົນສຳເລັດທາງການຮຽນທີສອນໂດຍຮູບແບບການຮຽນແບບ STAD ຫຼັງຮຽນສູງກວ່າກ່ອນຮຽນຢ່າງມີໄນສຳຄັນທາງສະຖິຕິລະດັບ 01.

4. ນັກຮຽນທີຮຽນໂດຍຮູບແບບການຮຽນແບບ STAD ກັບການສອນແບບປົກກະຕິມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍທັງ 2 ກຸ່ມ ໂດຍກຸ່ມທີຮຽນແບບ STAD ມີຄ່າສະເລ່ຍເທົ່າ 4.39 ກຸ່ມທີຮຽນແບບການສອນປົກກະຕິມີຄ່າສະເລ່ຍເທົ່າກັບ 3.73

# ບົດທີ 3

# ວິທີດຳເນີນການສຶກສາ

ການຄົ້ນຄວ້າຄັ້ງນີ້ຜູ້ຄົ້ນຄວ້າ ມີຈຸດປະສົງເພື່ອທົດລອງການນຳໃຊ້ວິທີສອນແບບSTAD ເຂົ້າໃນການສອນວິຊາພາສາລາວໃນຊັ້ນປະລິນຍາຕີປີທີ 1 ຂອງໂຮງຮຽນວິທະຍາໄລຄູຫຼວງພະບາງ ດັ່ງນັ້ນຜູ້ຄົ້ນຄວ້າດຳເນີນການຄົ້ນຄວ້າຕາມຂັ້ນຕອນດັ່ງນີ້:

## 1. ປະຊາກອນ ແລະ ກຸ່ມຕົວຢ່າງ

### 1.1. ປະຊາກອນ

ປະຊາກອນທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ຄື ນັກຮຽນຊັ້ນປະລິນຍາຕີປີ 1 ໂຮງຮຽນວິທະຍາໄລຄູຫຼວງພະບາງ ຮຽນວິຊາພາສາລາວ 2 ໃນພາກຮຽນທີ 1 ສົກຮຽນ 2014-2015 ຈຳນວນ 69 ຄົນ.

### 1.2. ກຸ່ມຕົວຢ່າງ

ກຸ່ມຕົວຢ່າງໃນການຄົ້ນຄວ້າຄັ້ງນີ້ຄື:ນັກຮຽນນັກຮຽນຊັ້ນປະລິນຍາຕີປີ 1 ຫ້ອງ ຂ ໂຮງຮຽນວິທະຍາໄລຄູຫຼວງພະບາງທີຮຽນວິຊາພາສາລາວ 2 ໃນພາກຮຽນທີ 1 ສົກຮຽນ 2014-2015 ຈຳນວນ 30 ຄົນ.

## 2. ເນື້ອໃນທີນຳມາໃຊ້ໃນການທົດລອງ

- ວິຊາທີນຳມາທົດລອງຄັ້ງນີ້ແມ່ນ ວິຊາພາສາລາວ 2 ກ່ຽວກັບການອ່ານ, ລວມມີ 1 ບົດ ມີ 5 ຂໍ້ ຄືບັນຫາໃນການອ່ານ, ການເຝິກອ່ານເພື່ອຄວາມເຂົ້າໃຈ, ອັດຕາຄວາມໄວໃນການອ່ານໃນໃຈ, ການເຝິກອ່ານໃນໃຈ,ທົດສອບຄວາມໄວໃນການອ່ານໃນໃຈ.

## 3. ໄລຍະເວລາທີ່ດຳເນີນການທົດລອງ

ການທົດລອງຄັ້ງນີ້ແມ່ນໄດ້ດຳເນີນໃນພາກຮຽນທີ 2, ສົກຮຽນ 2013-2014, ແຕ່ວັນທີ 23 ເດືອນ 4 ປີ 2014 ເຖິງວັນທີ 7 ເດືອນ 5 ປີ 2014, ໂດຍໄດ້ດຳເນີນການຈັດກິດຈະກຳ ການຮຽນ-ການສອນ ທັງໝົດ 10 ຊົ່ວໂມງ, ລາຍລະອຽດມີຂັ້ນຕອນການດຳເນີນດັ່ງນີ້:

**ຕາຕະລາງທີ 2:** ແຜນເວລາການຈັດກິດຈະກຳການຮຽນ-ການສອນ

| ວັນ ເດືອນປີ | ກິດຈະກຳການຮຽນ-ການສອນ | ເວລາສອນ |
|---|---|---|
| 23/4/2014 | ທົດສອບກ່ອນຮຽນ | 8:00 -8:50 :00 ມ |
| 24/4/2014 | ບັນຫາໃນການອ່ານໃນໃຈ | 1:30-3:10 ມ |
| 30/4/2014 | ການເຝິກອ່ານເພື່ອຄວາມເຂົ້າໃຈ, ອ່ານບົດເລື່ອງ 3 ອ້າຍນ້ອງ | 8:00-9:40 ມ |
| 1/5/2014 | ອັດຕາຄວາມໄວໃນການອ່ານໃນໃຈ, ອ່ານເລື່ອງລູກນົກແຂກ | 8:00-9:40 ມ |

**ຕາຕະລາງທີ 2:** (ຕໍ່)

| ວັນ ເດືອນ ປີ | ກິດຈະກຳການຮຽນ-ການສອນ | ເວລາສອນ |
|---|---|---|
| 2/5/2014 | ການເຝິກອ່ານໃນໃຈ, ອ່ານບົດເລື່ອງໂຮງໜໍ່ເສດຖາທິລາດ | 1:30-3:10 ມ |
| 5/5/2014 | ອ່ານບົດເລື່ອງຄວາມເປັນມາຂອງຊິນເຜົາລີ້ | 1:30-3:50 ມ |
| 7/5/2014 | ສອບຫຼັງຮຽນ | 8:00-8::50 ມ |

## 4. ເຄື່ອງມືທີ່ໃຊ້ໃນການທົດລອງ

### 4.1. ເຄື່ອງມືສຳລັບພັດທະນານັກຮຽນ ປະກອບດ້ວຍ

ບົດສອນເລື່ອງ ການອ່ານຈັບໃຈຄວາມໂດຍນຳໃຊ້ວິທີສອນແບບຮ່ວມມືໂດຍ

1. ເທັກນິກ STAD ລວມມີ 5 ບົດຄື:

- ບັນຫາໃນການອ່ານ.
- ການເຝິກອ່ານເພື່ອຄວາມເຂົ້າໃຈ.
- ອັດຕາຄວາມໄວໃນການອ່ານໃນໃຈ.
- ການເຝິກອ່ານໃນໃຈ
- ທົດສອບຄວາມໄວໃນການອ່ານໃນໃຈ

### 4.2. ເຄື່ອງມືທີ່ໃຊ້ເກັບຂໍ້ມູນ ປະກອບດ້ວຍ

1. ແບບທົດສອບວັດຜົນສຳເລັດທາງການຮຽນ ເລື່ອງ ການອ່ານຈັບໃຈຄວາມ ໂດຍນຳໃຊ້ວິທີສອນແບບຮ່ວມມືເທັກນິກ STAD ຈຳນວນ 6 ສະບັບຄື:

- ແບບທົດສອບລວມກ່ອນຮຽນ ແລະ ຫຼັງຮຽນ 1 ສະບັບ ຈຳນວນ 40 ຂໍ້.
- ແບບທົດສອບຍ່ອຍບົດທີ 1 ກ່ຽວກັບ ບັນຫາໃນການອ່ານ 1 ສະບັບຈຳນວນ 8 ຂໍ້.
- ແບບທົດສອບຍ່ອຍບົດທີ 2 ກ່ຽວການເຝິກອ່ານເພື່ອຄວາມເຂົ້າໃຈ. 1 ສະບັບຈຳນວນ 8 ຂໍ້.
- ແບບທົດສອບຍ່ອຍບົດທີ 3 ກ່ຽວກັບອັດຕາຄວາມໄວໃນການອ່ານໃນໃຈ. 1 ສະບັບ ຈຳນວນ 8 ຂໍ້.
- ແບບທົດສອບຍ່ອຍບົດທີ 4 ກ່ຽວກັບການເຝິກອ່ານໃນໃຈ 1 ສະບັບ ຈຳນວນ 8 ຂໍ້.
- ແບບທົດສອບຍ່ອຍບົດທີ 5 ກ່ຽວທົດສອບຄວາມໄວໃນການອ່ານໃນໃຈ 1 ສະບັບ ຈຳນວນ 8 ຂໍ້.

2. ແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາ ຕໍ່ກັບການຈັດກິດຈະກຳການຮຽນ-ການສອນ ເລື່ອງ ການອ່ານຈັບໃຈຄວາມໂດຍໃຊ້ວິທີການສອນແບບຮ່ວມມືເທັກນິກ STAD.ຈຳນວນ 24 ຂໍ້

**ລະດັບຄະແນນສະເລ່ຍເກນການປະເມີນ.**

4.51-5.00 ຫຼາຍທີ່ສຸດ

3.51-4.50 ຫຼາຍ

2.51-3.50 ປານກາງ

1.51-2.50 ໜ້ອຍ

1.00-1.51 ໜ້ອຍທີ່ສຸດ

## 5. ການສ້າງ ແລະ ການກວດສອບຄຸນນະພາບຂອງແຜນການສອນ.

**1. ການສ້າງ ແລະ ການຫາຄຸນນະພາບ ຂອງແຜນການ**ຈັດກິດຈະກຳຮຽນ-ການສອນ ກ່ອນນຳໄປໃຊ້ໃນການສ້າງ ຜູ້ຄົ້ນຄວ້າໄດ້ດຳເນີນຕາມຂັ້ນຕອນດັ່ງນີ້:

**ຂັ້ນຕອນທີ 1.** ສຶກສາແນວຄິດທິດສະດີ ແລະ ເທັກນິກການສອນແບບ STAD ຈາກເອກະສານເພື່ອນຳມາເປັນແນວທາງໃນການສ້າງແຜນການສອນເລື່ອງການອ່ານຈັບໃຈຄວາມ.

**ຂັ້ນຕອນທີ 2.** ສຶກສາຫຼັກສູດລາຍວິຊາ ພາສາລາວ 2, ປີທີ 1 ສາຍຄູ ພາສາລາວ-ວັນນະຄະດີ, ລະບົບ 12+4 ຈາກນັ້ນກໍ່ດຳເນີນການວິເຄາະຫຼັກສູດໂດຍເນັ້ນທີຈຸດປະສົງ, ກິດຈະກຳ ແລະ ເນື້ອໃນທີ່ຈະນຳມາສ້າງເປັນແຜນການສອນ

**ຂັ້ນຕອນທີ 3.** ສ້າງແຜນການສອນໂດຍໃຫ້ສອດຄ່ອງກັບເນື້ອໃນການຮຽນຮູ້ ແລະ ຜົນການຮຽນຮູ້ທີ່ຄາດຫວັງ. ເຊິ່ງແຜນການສອນມີອົງປະກອບສຳຄັນດັ່ງນີ້:

- ຊື່ແຜນການສອນ
- ໃຈຄວາມສຳຄັນ
- ຈຸດປະສົງ
- ເນື້ອໃນ
- ກິດຈະກຳການຮຽນ-ການສອນ
- ສື່ການຮຽນ-ການສອນ
- ການວັດ ແລະ ປະເມີນ

**ຂັ້ນຕອນທີ 4.** ນຳແຜນການສອນທັງ 5 ແຜນໄປໃຫ້ອາຈານທີ່ເປັກສາກວດກ່ອນແລ້ວເອົາໄປໃຫ້ຜູ້ຊ່ຽວຊານ ຈຳນວນ 3 ທ່ານ ໄດ້ ແກ່:

1). ທ່ານບຸນກອງ ພວງສະຫວັດ, 2). ທ່ານ ທອງຫຼໍ່ ຄຸນສະຫວັດ, 3) ທ່ານ ນ. ພອນຈັນ ສໍພີມພາ ເພື່ອກວດສອບຄວາມທ່ຽງຕົງຂອງເນື້ອໃນຄ່າ IOC ( Index of Item Objective Congruence), ຄວາມຊັດເຈນ, ຄວາມຖືກຕ້ອງເໝາະສົມ ແລະ ຄວາມສອດຄ່ອງລະຫວ່າງຈຸດປະສົງ, ເນື້ອໃນ, ກິດຈະກຳ, ສື່ການສອນ ແລະ ການປະເມີນຜົນເພື່ອນຳຂໍ້ສະເໜີມາປັບປຸງແກ້ໄຂ. ເຊິ່ງການປະເມີນມີຄ່າດັ່ງນີ້:

ມີຄວາມເຫັນວ່າ ສອດຄ່ອງ ກຳນົດຄະແນນເປັນ +1

ມີຄວາມເຫັນວ່າ ບໍ່ແນ່ໃຈ ກຳນົດຄະແນນເປັນ 0

ມີຄວາມເຫັນວ່າ ບໍ່ສອດຄ່ອງ ກຳນົດຄະແນນເປັນ -1

**ຂັ້ນຕອນທີ 5.** ວິເຄາະຄ່າຄວາມທ່ຽງຕົງຂອງເນື້ອໃນ ຄ່າ IOC ແລະ ຄວາມຄິດເຫັນຂໍ້ສະເໜີຂອງຜູ້ຊ່ຽວຊານ. ຄ່າ IOC ມີຄ່າລະຫວ່າງ 0.67 -1.00 ຈາກນັ້ນນຳຜົນການວິເຄາະມາເປັນຂໍ້ມູນສຳລັບປັບປຸງແກ້ໄຂແຜນການສອນ.

**ຂັ້ນຕອນທີ 6.** ນຳເອົາບົດສອນ ທັງ 5 ບົດທີ່ຜ່ານການປັບປຸງແກ້ໄຂແລ້ວໄປທົດລອງໃຊ້ ກັບນັກສຶກສາຫ້ອງ 1 ກ ລະບົບ 12+4, ສາຍຄູພາສາລາວ-ວັນນະຄະດີ, ຈຳນວນ 34 ຄົນ, ທີ່ບໍ່ແມ່ນກຸ່ມຕົວຢ່າງ. ການທົດລອງໄດ້ດຳເນີນລະຫວ່າງວັນທີ 7 ເດືອນ 4 ປີ 2014 ເຖິງ ວັນທີ 18 ເດືອນ 4 ປີ 2014ໃນລະຫວ່າງການທົດລອງ ຜູ້ຄົ້ນຄວ້າໄດ້ຕິດຕາມບັນທຶກຢ່າງໃກ້ຊິດກ່ຽວກັບບັນຫາຕ່າງໆທີ່ເກີດຂຶ້ນໃນລະຫວ່າງທົດລອງເພື່ອເປັນແນວທາງໃນການປັບປຸງແຜນການສອນ ໂດຍຜູ້ຄົ້ນຄວ້າໄດ້ພົບບັນຫາຕ່າງໆດັ່ງນີ້:

1. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນຂອງສາມະຊິກບາງກຸ່ມຍັງບໍ່ທັນໄດ້ດີ,ເນື່ອງຈາກການແນະນຳ ແລະ ການຊຸກຍູ້ຂອງຄູໃນເວລາເຮັດກິດຈະກຳຍັງບໍ່ທັນທົ່ວເຖິງ ແລະ ເລິກເຊິ່ງ.

2.ການເວລາທີ່ກຳນົດຕໍ່ການປະຕິບັດກິດຈະກຳບໍ່ພຽງພໍ

3. ການປະຕິບັດ ກິດຈະກຳບາງຄັ້ງບໍ່ໄປຕາມແຜນທີ່ວາງໄວ້.

**ຂັ້ນຕອນທີ 7.** ປັບປຸງແກ້ໄຂແຜນການສອນຕາມຂໍ້ມູນທີ່ໄດ້ຈາກການທົດລອງການສອນ ຈາກນັ້ນດຳເນີນການທົດລອງກັບກຸ່ມຕົວຢ່າງເຊິ່ງແມ່ນນັກສຶກສາປີທີໜຶ່ງ ຫ້ອງ 1 ຂ ລະບົບ 12+4, ສາຍຄູພາສາລາວ-ວັນນະຄະດີ, ຈຳນວນ 30 ຄົນ. ຜູ້ທົດລອງໄດ້ບັນທຶກຄະແນນລະຫວ່າງຮຽນ ແລະ ຄະແນນຫຼັງຮຽນໄວ້ເພື່ອຫາຄ່າປະສິດທິພາບ ຕາມເກນ 80/80, ເຊິ່ງຄ່າປະສິດທິພາບເທົ່າກັບ 82.33/85.33

## 6. ການສ້າງ ແລະ ການກວດສອບຄຸນນະພາບບົດທົດສອບ

### 1. ໂຄງສ້າງ ລັກສະນະ ແລະ ລາຍລະອຽດຂອງແບບທົດສອບໂດຍຫຍໍ້

ແບບທົດສອບທີ່ໃຊ້ໃນການວິໄຈຄັ້ງນີ້ມີ ແບບທົດສອບຍ່ອຍຫຼັງການສອນແຕ່ລະແຜນ ແລະ ແບບທົດສອບຜົນສຳເລັດທາງການຮຽນກ່ຽວກັບການອານຈັບໃຈຄວາມ 5 ແຜນ ຫຼື ເອີ້ນວ່າແມ່ນສອບຫຼັງຮຽນ ຈຳນວນ 40. ເຊິ່ງມີລັກສະນະແບບເລືອກຕອບ ມີ 4 ຕົວເລືອກຕົວຢ່າງມີດັ່ງນີ້ :

**1. ຕົວລະຄອນເອກຂອງເລື່ອງ 3 ອ້າຍນ້ອງແມ່ນ**

ກ. ນ້ອງຊາຍຜູ້ທີ 1      ຂ. ອ້າຍກົກ

ຄ. ນ້ອງຊາຍຫຼ້າ      ງ. ແມ່ນທັງ 3 ຄົນ

### 2. ຂັ້ນຕອນການສ້າງ ແລະ ຫາປະສິທິພາບຂອງແບບທົດສອບ.

**ຂັ້ນຕອນທີ 1** ສຶກສາວິທີສ້າງແບບທົດສອບວັດຜົນສຳເລັດທາງການຮຽນ ຈາກເອກະສານການວັດ ແລະ ປະເມີນຜົນການຮຽນ-ການສອນຂອງອາຈານສົມລວຍ ສຸດທິຍະໄທປີ 2011 ໜ້າ31-36 ມາເປັນແນວທາງໃນການສ້າງ.

**ຂັ້ນຕອນທີ 2** ສຶກສາຫລັກສູດ, ຈຸດປະສົງ ແລະ ເນື້ອໃນວິຊາທີ່ນຳມາຈັດ ການຮຽນ-ການສອນ.

**ຂັ້ນຕອນທີ 3** ສ້າງຕາຕະລາງວິເຄາະຈຳນວນຂໍ້ສອບທີສອດຄ່ອງກັບຈຸດປະສົງ ແລະ ເນື້ອໃນຂອງການຮຽນຮູ້.

**ຂັ້ນຕອນທີ 4** ຂຽນຂໍ້ຄຳຖາມຂອງແບບທົດສອບວັດຜົນສຳເລັດທາງການຮຽນວິຊາ ພາສາລາວ ເລື່ອງການອ່ານຈັບໃຈຄວາມຈຳນວນ 60 ຂໍ້ໂດຍເປັນຂໍ້ຄຳຖາມຊະນິດເລືອກຕອບ.

**ຂັ້ນຕອນທີ 5** ນຳແບບທົດສອບໄປໃຫ້ຜູ້ຊ່ຽວຊານຈຳນວນ 3 ທ່ານ ເພື່ອກວດສອບຄວາມເໝາະສົມຂໍ້ຄຳຖາມ, ພາສາ ແລະ ຄວາມທ່ຽງຕົງເນື້ອໃນຂອງຂໍ້ຄຳຖາມແຕ່ລະຂໍ້ໂດຍໃຊ້ຄ່າດັດສະນີຄວາມສອດຄ່ອງ (ຄ່າ IOC) ດັ່ງນີ້:

+1 ໝາຍເຖິງ ແນ່ໃຈວ່າຂໍ້ສອບນັ້ນສາມາດວັດຜົນການຮຽນຮູ້ໄດ້.

0 ໝາຍເຖິງ ບໍ່ແນ່ໃຈວ່າຂໍ້ສອບນັ້ນສາມາດວັດຜົນການຮຽນຮູ້ໄດ້.

-1 ໝາຍເຖິງ ແນ່ໃຈວ່າຂໍ້ສອບນັ້ນບໍ່ສາມາດວັດຜົນການຮຽນຮູ້ໄດ້.

**ຂັ້ນຕອນທີ 6.** ຄຳນວນຫາຄ່າດັດສະນີຄວາມສອດຄ່ອງ. ຈາກນັ້ນຈຶ່ງເລືອກເອົາ ຂໍ້ສອບທີມີ ຄ່າ IOC ລະຫວ່າງ 0.5 -1.00

**ຂັ້ນຕອນທີ 7.** ນຳແບບສອບທີແກ້ໄຂປັບປຸງໄປທົດລອງສອບກັບສຶກສາ ຫ້ອງ **1** ກ ລະບົບ 12+4, ສາຍຄູພາສາລາວ-ວັນນະຄະດີ, ຈຳນວນ 30 ຄົນ, ທີ່ວິທະຍາໄລຄູຫຼວງພະບາງ ທີເຄີຍໄດ້ຮຽນເລື່ອງ ການອ່ານ ມາແລ້ວ.

**ຂັ້ນຕອນທີ 8.** ດຳເນີນການວິເຄາະຄຸນນະພາບຂໍ້ສອບເປັນລາຍຂໍ້ໂດຍຫາຄ່າ ຄວາມຍາກງ່າຍຂອງຂໍ້ສອບ (p) ແລະ ຄ່າອຳນາດຈຳແນກ (r).

**ຂັ້ນຕອນທີ 9.** ຄັດເລືອກຂໍ້ສອບທີມີຄຸນນະພາບຕາມເກນຄື: ມີຄ່າຄວາມຍາກ ງ່າຍ p=0.31 - 0.88 ແລະ ຄ່າອຳນາດຈຳແນກ ລະຫວ່າງ r=0.13-0.75 ເຊິ່ງມີ ຂໍ້ສອບທັງໝົດເທົ່າ 40 ຂໍ້.

**ຂັ້ນຕອນທີ 10.** ນຳແບບທົດສອບທີ່ຜ່ານການຄັດເລືອກໄປທົດສອບກັບ ນັກຮຽນຊັ້ນ ປີ 2 ໂຮງຮຽນ ວິທະຍາໄລຄູທີເຄີຍຮຽນເລື່ອງການອ່ານມາແລ້ວຈຳນວນ 30 ຄົນ ເພື່ອນຳມາຫາ ຄ່າຄວາມເຊື່ອໝັ້ນ. ຄ່າຄວາມເຊື່ອໝັ້ນທີໄດ້ rtt=0.81.

## 7. ການວິເຄາະຂໍ້ມູນ

ຫາປະສິດທິພາບຂອງແຜນການສອນ ເລື່ອງ ການອ່ານຈັບໃຈຄວາມ ໂດຍໃຊ້ເກນຄວາມສຳພັນລະຫວ່າງຄະແນນທີໄດ້ລະຫວ່າງຮຽນກັບຄະແນນທີໄດ້ຈາກການວັດຫຼັງການຮຽນໂດຍຄິດເປັນເປີເຊັນ ເຊິ່ງຄ່າປະສິດທິພາບ $E_1/E_2$ ໂດຍໃຊ້ເກນ 80/80.

## 8. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

**1. ຫາດັດສະນີຄວາມສອດຄ່ອງ IOC** (Index of Item – Objective Congruence) ແທນສູດຄິດໄລ່ດັ່ງນີ້:

$IOC = \frac{\sum R}{N}$ ຄ່າ IOC ລະຫວ່າງ 0.5 -1.00

$IOC$ ແທນ ດັດສະນີຄວາມສອດຄ່ອງລະຫວ່າງຂໍ້ສອບກັບຈຸດປະສົງ

$\sum R$ ແທນ ຜົນລວມຂອງຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານ

$N$ ແທນຈຳນວນຜູ້ຊ່ຽວຊານ.

**2. ຫາຄວາມຍາກງ່າຍ (p)** ຂອງແບບທົດສອບວັດຜົນສຳເລັດທາງການຮຽນໂດຍໃຊ້ສູດດັ່ງນີ້:

$$P = \frac{R}{N}$$

ເມື່ອ p ແທນຄວາມຍາກງ່າຍຂອງແຕ່ລະຂໍ້

R ແທນຈຳນວນຂອງຜູ້ຕອບຖືກແຕ່ລະຂໍ້

N ແທນຈຳນວນຜູ້ເຂົ້າສອບທັງໝົດ

(ຄ່າຄວາມຍາກ-ງ່າຍຢູ່ລະຫວ່າງ 0.20-0.80)

**3. ຄ່າອຳນາດຈຳແນກ (r) ຂອງແບບທົດສອບ**

$$r = \frac{R_U - R_L}{\frac{N}{2}}$$

**ເມື່ອ r** ແທນ ຄ່າອຳນາດຈຳແນກເປັນລາຍຂໍ້

$R_U$ ແທນ ຈຳນວນຜູ້ຕອບຖືກໃຂຂໍ້ນັ້ນໃນກຸ່ມເກັ່ງ

$R_L$ ແທນ ຈຳນວນຜູ້ຕອບຖືກໃນຂໍ້ນັ້ນກຸ່ມອ່ອນ

N ແທນຈຳນວນຜູ້ເຂົ້າສອບທັງໝົດ

(ຄ່າອຳນາດຈຳແນກຕ້ອງເປັນຄ່າບວກ ແຕ່ບໍ່ໃຫ້ຕໍ່າກວ່າ 0.20)

**4.** ຄ່າຄວາມເຊື່ອໝັ້ນຂອງແບບທົດສອບວັດຜົນສຳເລັດທາງການຮຽນໂດຍໃຊ້ສູດ KR-20 (Kuder-Richardson-20) ດັ່ງນີ້:

$$r_{tt} = \frac{k}{k-1}\left[1 - \frac{\sum pq}{s_t^2}\right]$$

$r_{tt}$

**ເມື່ອ** ແທນ ຄວາມເຊື່ອໝັ້ນຂອງຂໍ້ສອບ

$k$ ແທນ ຈຳນວນຂໍ້ສອບຂອງແບບທົດສອບ

$p$ ແທນ ສັດສ່ວນຂອງຜູ້ຕອບຖືກ

$q$ ແທນ ສັດສ່ວນຂອງຜູ້ຕອບຜິດ

$S_t^2$ ແທນ ຄວາມແປປວນຂອງຄະແນນລວມທັງໝົດ

**5. ສະຖິຕິທີໃຊ້ໃນການທົດສອບຄຸນນະພາບຂອງແຜນການສອນ.**

**ໃຊ້ສູດ** $E_1$ /$E_2$ **ເພື່ອທົດສອບປະສິທິພາບຕາມເກນ** 80/80

$$E_1 = \frac{\sum X_1}{NxA} x100$$

ເມື່ອ $E_1$ ຄື: ປະສິດທິພາບຂອງຂະບວນການ

$\sum X_1$ ຄື: ຄະແນນລວມຂອງແບບເຝິກຫັດ ຫລື ກິດຈະກຳໃນບົດຮຽນ

A ຄື: ຄະແນນເຕັມຂອງແບບເຝິກຫັດ ຫລື ກິດຈະກຳໃນບົດຮຽນ

N ຄື: ຈຳນວນຜູ້ຮຽນ

$$E_2 = \frac{\sum X_2}{NxB} x100$$

ເມື່ອ $E_2$ ຄື: ປະສິດທິພາບຂອງຜົນລັບ

$\sum X_2$ ຄື: ແນນລວມຂອງແບບທົດສອບຫຼັງຮຽນ

B ຄື: ແນນເຕັມຂອງແບບທົດສອບຫຼັງຮຽນ

N ຄື: ຈຳນວນຜູ້ຮຽນ

ເຜີດຊະຣາວະດີ ຈິງປະດັບກຽດ (2551: 2-3)

1) ການຫາດັດສະນີປະສິດທິຜົນ (Effectiveness Index)

ການຫາດັດສະນີປະສິດທິຜົນ (Effectiveness Index) ກໍລະນີລາຍບຸກຄົນຕາມແນວຄິດຂອງ Hofland ຈະໃຫ້ເນື້ອໃນທີ່ຊັດເຈນໂດຍໃຊ້ສູດດັ່ງນີ້:

$$\text{ດັດສະນີປະສິດທິຜົນ} = \frac{\text{ຄະແນນຫຼັງຮຽນ} - \text{ຄະແນນກ່ອນຮຽນ}}{\text{ຄະແນນເຕັມ} - \text{ຄະແນນກ່ອນຮຽນ}}$$




**ພາບປະກອບທີ 3:** ສະຫຼຸບຂະບວນການທັງໝົດ

# ບົດທີ 4

# ການວິເຄາະຂໍ້ມູນ

ການສຶກສາຄົ້ນຄວ້າຄັ້ງນີ້ຜູ້ສຶກສາມີຈຸດປະສົງເພື່ອສຶກສາການຈັດການຮຽນ-ການສອນພາສາລາວ ເລື່ອງການອ່ານຈັບໃຈຄວາມໂດຍໃຊ້ວິທີສອນແບບແບບ STAD ປີ 1 ລະບົບ 12+4 ວິທະຍາໄລຄູຫຼວງພະບາງສົກ 2014-2015. ດັ່ງນັ້ນຜູ້ຄົ້ນຄວ້າຂໍນໍາສະເໜີການວິເຄາະຂໍ້ມູນດັ່ງນີ້:

1. ຜົນການວິເຄາະຫາປະສິດທິພາບຂອງບົດສອນ
2. ຜົນການວິເຄາະປະສິດທິຜົນການຮຽນຂອງນັກຮຽນ
3. ຜົນການວິເຄາະປະສິດທິພາບການສອນຂອງຄູ

## 1. ຜົນການວິເຄາະປະສິດທິພາບຂອງບົດສອນ

### 1.1 ຜົນການວິເຄາະປະສິດທິພາບຂອງຂະບວນການຈັດການຮຽນ-ການສອນ ($E_1$)

**ຕາຕະລາງທີ 3:** ສະແດງປະສິດທິພາບຂະບວນການຮຽນ-ການສອນແຕ່ລະບົດສອນ ($E_1$)

| ລ/ດ | ແຜນ 1 | ແຜນ 2 | ແຜນ 3 | ແຜນ 4 | ແຜນ 5 | ລວມ |
|---|---|---|---|---|---|---|
| 1 | 8 | 7 | 7 | 6 | 8 | 36 |
| 2 | 6 | 6 | 7 | 8 | 8 | 35 |
| 3 | 6 | 7 | 6 | 7 | 7 | 33 |
| 4 | 6 | 6 | 7 | 6 | 8 | 33 |
| 5 | 6 | 6 | 6 | 6 | 8 | 32 |
| 6 | 6 | 6 | 7 | 7 | 7 | 33 |
| 7 | 8 | 8 | 6 | 6 | 7 | 35 |
| 8 | 6 | 7 | 6 | 6 | 8 | 33 |
| 9 | 6 | 7 | 6 | 6 | 8 | 33 |
| 10 | 6 | 6 | 6 | 6 | 6 | 30 |
| 11 | 7 | 8 | 6 | 7 | 8 | 36 |
| 12 | 8 | 6 | 7 | 7 | 7 | 35 |
| 13 | 7 | 7 | 6 | 6 | 8 | 34 |

**ຕາຕະລາງທີ 3:** (ຕໍ່)

| ລ/ດ | ແຜນ 1 | ແຜນ 2 | ແຜນ 3 | ແຜນ 4 | ແຜນ 5 | ລວມ |
|---|---|---|---|---|---|---|
| 14 | 4 | 6 | 7 | 7 | 8 | 32 |
| 15 | 4 | 7 | 6 | 7 | 7 | 31 |
| 16 | 7 | 7 | 6 | 6 | 6 | 32 |
| 17 | 7 | 6 | 7 | 6 | 8 | 34 |
| 18 | 7 | 7 | 6 | 6 | 8 | 34 |
| 19 | 7 | 6 | 7 | 6 | 8 | 34 |
| 20 | 6 | 6 | 7 | 6 | 8 | 33 |
| 21 | 7 | 6 | 6 | 6 | 7 | 32 |
| 22 | 7 | 7 | 7 | 6 | 7 | 34 |
| 23 | 7 | 7 | 6 | 6 | 6 | 32 |
| 24 | 6 | 5 | 6 | 6 | 6 | 29 |
| 25 | 6 | 6 | 6 | 6 | 6 | 30 |
| 26 | 6 | 6 | 7 | 6 | 7 | 32 |
| 27 | 6 | 6 | 6 | 6 | 8 | 32 |
| 38 | 6 | 7 | 6 | 8 | 8 | 35 |
| 39 | 7 | 6 | 6 | 7 | 5 | 31 |
| 30 | 6 | 6 | 7 | 7 | 7 | 33 |
| **ລວມ** | **192** | **194** | **192** | **192** | **218** | **988** |
| **ສະເລ່ຍ** | **6.40** | **6.47** | **6.40** | **6.40** | **7.27** | **32.93** |
| **S.D.** | **0.93** | **0.68** | **0.50** | **0.62** | **0.87** | **1.74** |
| **$E_1$** | **80.00** | **80.83** | **80.00** | **80.00** | **90.83** | **82.33** |

ຈາກຕາຕະລາງທີ 3 ພົບວ່າ ຄ່າສະເລ່ຍຂອງຄະແນນການເຮັດແບບທົດສອບຍ່ອຍທ້າຍແຜນເຫັນວ່າ ແຜນທີ 1 $E_1$ =80.00, ແຜນທີ່ 2 $E_1$ =80.83, ແຜນທີ 3 $E_1$ =80.00 ແຜນທີ 4 $E_1$ =80.00

ແລະ ແຜນທີ 5 1 $E_1$ =90.83. ສະນັ້ນ, ຄ່າສະເລ່ຍລວມເທົ່າກັບ 32.93 ຈາກຄະແນນລວມ 988,ປະສິທິພາບຂອງແຜນການສອນ $E_1$ ລວມເທົ່າກັບ 82.33 ເຫັນວ່າສູງກວ່າເກນທີຕັ້ງໄວ້ 80.

### 1.2 ຜົນການວິເຄາະປະສິດທິພາບຂອງຜົນການຮຽນ ($E_2$)

**ຕາຕະລາງທີ 4:** ສະແດງປະສິດທິພາບຂອງຜົນການຮຽນ ($E_2$)

| ລຳດັບ | ເສັງກ່ອນ | ເສັງຫຼັງ | ຄວາມກ້າວໜ້າ |
|---|---|---|---|
| 1 | 20 | 36 | 16 |
| 2 | 20 | 36 | 16 |
| 3 | 24 | 40 | 16 |
| 4 | 24 | 36 | 12 |
| 5 | 20 | 36 | 16 |
| 6 | 24 | 40 | 16 |
| 7 | 20 | 40 | 20 |
| 8 | 24 | 32 | 8 |
| 9 | 20 | 32 | 12 |
| 10 | 20 | 36 | 16 |
| 11 | 24 | 28 | 4 |
| 12 | 20 | 40 | 20 |
| 13 | 20 | 28 | 8 |
| 14 | 20 | 28 | 8 |
| 15 | 20 | 28 | 8 |
| 16 | 24 | 32 | 8 |
| 17 | 20 | 28 | 8 |
| 18 | 24 | 28 | 4 |
| 19 | 20 | 36 | 16 |
| 20 | 20 | 36 | 16 |

**ຕາຕະລາງທີ 4:** (ຕໍ່)

| ລຳດັບ | ເສັງກ່ອນ | ເສັງຫຼັງ | ຄວາມກ້າວໜ້າ |
|---|---|---|---|
| 21 | 20 | 40 | 20 |
| 22 | 24 | 40 | 16 |
| 23 | 20 | 40 | 20 |
| 24 | 20 | 32 | 12 |
| 25 | 20 | 32 | 12 |
| 26 | 20 | 32 | 12 |
| 27 | 24 | 28 | 4 |
| 28 | 20 | 32 | 12 |
| 29 | 20 | 32 | 12 |
| 30 | 20 | 40 | 20 |
| ລວມ | **636** | **1024** | |
| $\overline{X}$ | **21.20** | **34.13** | |
| **S.D.** | **1.86** | **4.55** | |
| $E_2$ | | **85.33** | |

ຈາກຕາຕະລາງທີ 4 ຄະແນນສະເລ່ຍຈາກການເຮັດແບບທົດສອບວັດຜົນສຳເລັດທາງການຮຽນຫລັງຮຽນ ເລື່ອງ ການອ່ານຈັບໃຈຄວາມ ມີຄ່າເທົ່າກັບ 34.13 ຄະແນນ ຈາກຄະແນນລວມ 1024 ຄະແນນ ຄິດເປັນສ່ວນຮ້ອຍ 85.33 ນັ້ນຄື ປະສິດທິຜົນຂະບວນການຫລື $E_2$ ມີຄ່າເທົ່າກັບ 85.33 ເປັນໄປຕາມເກນທີ່ຕັ້ງໄວ້.

### 1.3 ຜົນການວິເຄາະປະສິດທິພາບ ($E_1/E_2$)

**ຕາຕະລາງທີ 5:** ສະແດງປະສິດທິພາບບົດສອນ ($E_1/E_2$)

| ປະສິດທິພາບຂອງບົດສອນ | ຄະແນນລວມ | $\overline{X}$ | S.D. | ເປີເຊັນ | $E_1$/ $E_2$ |
|---|---|---|---|---|---|
| ປະສິດທິພາບຂອງຂະບວນການ $E_1$ | 988 | 32.93 | 1.74 | 82.33 | 82.33/85.33 |
| ປະສິດທິພາບຂອງຂະບວນການ $E_2$ | 40 | 34.13 | 4.55 | 85.33 | |

ຈາກຕາຕະລາງ 5 ພົບວ່າ ແຜນການຈັດກິດຈະກຳການຮຽນຮູ້ແບບກຸ່ມຮ່ວມມືເທກນິກ STAD ເລື່ອງ ການອ່ານຈັບໃຈຄວາມ ກຸ່ມສາລະການຮຽນຮູ້ພາສາລາວນັກສຶກສາ ຊັ້ນປະລິນຍາຕີຫ້ອງປີທີ່ 1 ມີປະສິດທິພາບຂອງບົດສອນ $E_1$/ $E_2$ ເທົ່າກັບ 82.33/85.33.

## 2. ຜົນການວິເຄາະປະສິດທິຜົນການຮຽນ

**ຕາຕະລາງທີ 6:** ສະແດງດັດສະນີປະສິດທິຜົນ

| ການທົດສອບ | ຈຳນວນນັກຮຽນ | ຄະແນນເຕັມ | ຄະແນນລວມ | ເປີເຊັນ |
|---|---|---|---|---|
| ສອບກ່ອນ | 30 | 40 | 636 | 53.00 |
| ສອບຫຼັງ | 30 | 40 | 1024 | 85.33 |
| | | 0.6879 | | |

ຈາກຕາລາງທີ 6 ພົບວ່າຄະແນນຈາກການທົດສອບວັດຜົນສຳລິດທາງການຮຽນດ້ວຍແຜນການຈັກິດຈະກຳການຮຽນຮູ້ແບບກຸ່ມຮ່ວມມືເທກນິກ STAD ເລື່ອງ ການອ່ານຈັບໃຈຄວາມຂອງນັກສຶກສາຊັ້ນປະລິນຍາຕີຫ້ອງປີທີ່ 1 ໄດ້ຄະແນນທົດສອບກ່ອນຮຽນຄະແນນລວມເທົ່າກັບ 636 ຄະແນນ ແລະຄະແນນທົດສອບຫລັງຮຽນ ໄດ້ຄະແນນລວມເທົ່າກັບ 1024 ຄະແນນ ນຳມາຄິດໄລ່ຫາຄ່າດັດນີປະສິດທິຜົນ ໄດ້ດັ່ງນີ້:
ດັດສະນີປະສິດທິຜົນ $= \frac{\text{ຄະແນນຫຼັງຮຽນ} - \text{ຄະແນນກ່ອນຮຽນ}}{\text{ຄະແນນເຕັມ} - \text{ຄະແນນກ່ອນຮຽນ}}$ ດັດສະນີປະສິດທິຜົນຂອງການຮຽນແບບ STAD ເລື່ອງ ການອ່ານຈັບໃຈຄວາມຂອງນັກສຶກສາຊັ້ນປະລິນຍາຕີຫ້ອງປີທີ່ 1 ມີຄ່າເທົ່າກັບ 0.6879 ຊຶ່ງສະແດງວ່ານັກຮຽນມີຄວາມກ້າວໜ້າທາງການຮຽນຄິດສ່ວນຮ້ອຍເທົ່າກັບ 68.97.

## 3. ຜົນການວິເຄາະປະສິດທິພາບຄວາມເພິ່ງພໍໃຈ

**ຕາຕະລາງທີ 7:** ຜົນການວິເຄາະຄວາມພຶງພໍໃຈ

| ລ/ດ | ລາຍການປະເມີນ | $\overrightarrow{X}$ | S.D | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| **I** | **ດ້ານບັນຍາກາດການຮຽນຮູ້** | | | |
| 1 | ສົ່ງເສີມໃຫ້ນັກສຶກສາຮູ້ຈັກເຮັດວຽກຮ່ວມກັບຜູ້ອື່ນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນຮັບຜິດຊອບຮ່ວມກັນ | 4.43 | 0.72 | ຫຼາຍ |
| 2 | ນັກຮຽນມີໂອກາດແລກປ່ຽນຄວາມຄິດເຫັນຮ່ວມກັບເພື່ອນ | 4.63 | 0.55 | ດີຫຼາຍ |
| 3 | ນັກຮຽນມີຄວາມຫ້າວຫັນ ສົນໃຈທີ່ຈະຮ່ວມກັນຮຽນຮູ້ເພື່ອຄວາມສຳເລັດຂອງກຸ່ມ | 4.56 | 0.56 | ຫຼາຍ |
| 4 | ຄູ ແລະ ນັກຮຽນມີການສົນທະນາແລກປ່ຽນຄວາມຄິດເຫັນ | 4.06 | 0.74 | ຫຼາຍ |
| | **ລວມ** | **4.42** | **0.64** | **ຫຼາຍ** |

ຕາຕະລາງທີ 7: (ຕໍ່)

| ລ/ດ | ລາຍການປະເມີນ | $\overrightarrow{X}$ | S.D | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| II | **ດ້ານການຈັດກິດຈະກຳການຮຽນຮູ້** | | | |
| 5 | ນັກສຶກສາໄດ້ຮຽນຮູ້ ແລະ ເຮັດວຽກຮ່ວມກັນໂດຍເນັ້ນການເຮັດວຽກເປັນກຸ່ມ | 4.40 | 0.67 | ຫຼາຍ |
| 6 | ນັກສຶກສາໄດ້ຊ່ວຍເຫຼືອກັນປະຕິບັດກິດຈະກຳຈົນໄດ້ຮັບຜົນສຳເລັດ | 4.70 | 0.60 | ຫຼາຍ |
| 7 | ນັກສຶກສາມີປະຕິສຳພັນທີ່ດີຕໍ່ກັນໃນການປະຕິບັດກິດຈະກຳກຸ່ມ | 4.20 | 0.66 | ຫຼາຍ |
| 8 | ນັກສຶກສາເປັນຜູ້ປະຕິບັດກິດຈະກຳເອງ, ຄູເປັນຜູ້ແນະນຳຊ່ວຍເຫຼືອ | 4.27 | 0.64 | ຫຼາຍ |
| 9 | ນັກສຶກສາມີແນວຄິດແຂ່ງຂັນກັບກຸ່ມອື່ນ | 4.53 | 0.57 | ຫຼາຍ |
| 10 | ນັກສຶກສາປະຕິບັດກິດຈະກຳແຂ່ງຂັນກັບເວລາ | 4.27 | 0.69 | ຫຼາຍ |
| 11 | ຄູໃຊ້ສື່ການສອນທີ່ໜ້າສົນໃຈ ແລະ ຫຼາກຫຼາຍ | 3.87 | 0.90 | ຫຼາຍ |
| 12 | ນັກສຶກສາຍອມຮັບຜົນການປະຕິບັດຂອງຕົນເອງ ແລະ ຂອງກຸ່ມ | 4.30 | 0.65 | ຫຼາຍ |
| | **ລວມ** | **4.31** | **0.67** | **ຫຼາຍ** |
| III | **ດ້ານປະໂຫຍດທີ່ໄດ້ຮັບ** | | | ຫຼາຍ |
| 13 | ຊ່ວຍໃຫ້ນັກສຶກສາສາມາດເຮັດວຽກຮ່ວມກັບຜູ້ອື່ນໄດ້ | 4.47 | 0.51 | ຫຼາຍ |
| 14 | ຊ່ວຍໃຫ້ນັກສຶກສາມີຄວາມຮັບຜິດຊອບຕໍ່ຕົນເອງ ແລະ ຂອງກຸ່ມ | 4.37 | 0.56 | ຫຼາຍ |
| 15 | ຊ່ວຍສົ່ງເສີມ ແລະ ພັດທະນາທັກສະການອ່ານຂອງຕົນເອງ ແລະ ຂອງກຸ່ມ | 4.27 | 0.58 | ຫຼາຍ |
| 16 | ຊ່ວຍໃຫ້ນັກສຶກສາຄິດ ແລະ ຕັດສິນໃຈໄດ້ຢ່າງມີເຫດຜົນ | 4.43 | 0.68 | ຫຼາຍ |
| 17 | ຊ່ວຍໃຫ້ນັກສຶກສາມີຄວາມຮູ້ ແລະ ຄວາມເຂົ້າໃຈໃນເລື່ອງທີ່ຮຽນລາຍຂຶ້ນ | 4.33 | 0.71 | ຫຼາຍ |
| 18 | ນັກສຶກສາສາມາດປັບຕົວເຂົ້າກັບສັງຄົມໄດ້ | 4.17 | 0.70 | ຫຼາຍ |
| 19 | ນັກສຶກສາກ້າຄິດກ້າຕັດສິນບັນຫາດ້ວຍຕົນເອງ | 4.23 | 0.63 | ຫຼາຍ |
| 20 | ນັກສຶກສາປັບປຸງນິໄສບໍ່ອີງເອືອຍກັນ | 4.13 | 0.73 | ຫຼາຍ |

**ຕາຕະລາງທີ 7:** (ຕໍ່)

| ລ/ດ | ລາຍການປະເມີນ | $\overrightarrow{X}$ | S.D | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 21 | ນັກສຶກສາເກັ່ງຊ່ວຍເຫຼືອນັກຮຽນອ່ອນ | 4.40 | 0.67 | ຫຼາຍ |
| 22 | ນັກສຶກສາຮູ້ໃຊ້ເວລາເປັນປະໂຫຍດ | 4.23 | 0.73 | ຫຼາຍ |
| 23 | ນັກສຶກສາຮູ້ວິທີການຈັດການຮຽນ-ການສອນແບບຮ່ວມມືກັນເທັກນິກ STAD | 4.23 | 0.63 | ຫຼາຍ |
| 24 | ນັກສຶກສາຮູ້ວິທີແບ່ງວຽກບຸກຄົນຮັບຜິດຊອບ | 4.43 | 0.50 | ຫຼາຍ |
| | **ລວມ** | **3.93** | **0.59** | **ຫຼາຍ** |
| | **ໂດຍລວມ** | **4.33** | **0.65** | **ຫຼາຍ** |

ຈາກຕາຕະລາງທີ 7 ພົບວ່ານັກສຶກສາຊັ້ນປະລິນຍາຕີຫ້ອງປີທີ 1 ຂ ມີຄວາມພຶງພໍໃຈຕໍ່ການຈັດກິດຈະກໍາການຮຽນຮູ້ແບບ STAD ເລື່ອງການອ່ານຈັບໃຈຄວາມໂດຍລວມແລ້ວຢູ່ໃນລະດັບຫລາຍ ($\overline{X}$ =4.33) (S.D.=0.65) ເມື່ອພິຈາລະນາດ້ານທີຫຼາຍກວ່າໝູຄື: ດ້ານທີ 1 ບັນຍາກາດໃນການຮຽນຮູ້ຢູ່ໃນລະດັບຫຼາຍ($\overline{X}$ =4.42), ( S.D.=0.64) ທັດລົງມາແມ່ນດ້ານທີ 2 ດ້ານການຈັດກິດຈະກໍາການຮຽນຮູ້ ($\overline{X}$ =4.31), ( S.D=0.67) ດ້ານທີໜ້ອຍສຸດແມ່ນດ້ານທີ 3 ດ້ານປະໂຫຍດທີໄດຮັບ ($\overline{X}$ =3.93) (S.D.=0.59) ເມື່ອພິຈາລະນາເປັນລາຍຂໍ້ໆທີຫຼາຍກວ່າໝູ່ແມ່ນຂໍ້ທີ 2 ນັກຮຽນມີໂອກາດແລກປ່ຽນຄວາມຄິດເຫັນຮ່ວມກັບເພື່ອນ ($\overline{X}$ =4.63), ( S.D.=0.55) ຂໍ້ທີ່ໜ້ອຍສຸດແມ່ນຂໍ້ທີ 11 ຄູ ໃຊ້ສື່ການສອນທີໜ້າສົນໃຈ ແລະ ຫຼາກຫຼາຍ($\overline{X}$ =3.87), ( S.D.=0.90).

# ບົດທີ 5

## ສະຫລຸບຜົນ ອະພິປາຍຜົນ ແລະ ຂໍ້ສະເໜີແນະ

ການສຶກສາຄົ້ນຄວ້າຄັ້ງນີ້ຜູ້ສຶກສາມີຈຸດປະສົງເພື່ອສຶກສາການຈັດການຮຽນ-ການສອນພາສາລາວ ເລື່ອງການອ່ານຈັບໃຈຄວາມໂດຍໃຊ້ວິທີສອນແບບ STAD ປີ 1 ລະບົບ 12+4 ວິທະຍາໄລຄູຫຼວງພະບາງ ສົກ 2014-2015. ກຸ່ມຕົວຢ່າງໃນການຄົ້ນຄວ້າຄັ້ງນີ້ຄືນັກຮຽນຫ້ອງປີ 1 ສາຍພາສາລາວ-ວັນນະຄະດີຈຳນວນ 30 ຄົນ, ເຄື່ອງມືທີໃຊ້ໃນການທົດລອງມີບົດສອນຈຳນວນ 5 ບົດ, ແບບທົດສອບຈຳນວນ 40 ຂໍ້ ແລະ ແບບວັດຄວາມເພິ່ງພໍໃຈຈຳນວນ 24 ຂໍ້,ໄດ້ໃຊ້ທົດລອງສອນຄັ້ງວັນທີ 23 /4/-2/5/2014 ການວິເຄາະຂໍ້ມູນຜູ້ຄົ້ນຄວ້າໄດ້ນຳໃຊ້ program Excel ໂດຍຫາຄ່າປະສິດທິພາບຂອງບົດສອນ, ປະສິທິຜົນຂອງການຮຽນ, ປະສິທິພາບການສອນ ແລະ ຄວາມເພິ່ງພໍໃຈຂອງນັກສຶກສາ, ເຊິ່ງຈະນຳສະເໜີສະຫຼຸບຜົນການຄົ້ນຄວ້າ, ອະພິປາຍຜົນ ແລະ ຂໍ້ສະເໜີແນະຕາມລຳດັບດັ່ງນີ້.

1. ສະຫຼຸບຜົນການຄົ້ນຄວ້າ.
2. ອະພິປາຍຜົນ.
3. ຂໍ້ສະເໜີແນະ.

### 1. ສະຫລຸບຜົນ

1. ແຜນການຈັດກິດຈະກຳການຮຽນຮູ້ແບບເທັກນິກ STAD ເລື່ອງ ການອ່ານຈັບໃຈຄວາມ ກຸ່ມສາລະການຮຽນຮູ້ພາສາລາວ ຊັ້ນປະລິນຍາຕີນັກສຶກສາປີທີ 1 ມີປະສິດທິພາບເທົ່າກັບ 82.33/85.33.

2. ດັດນີປະສິດທິຜົນຂອງແຜນການຈັດກິດຈະກຳການຮຽນຮູ້ແບບເທັກນິກ STAD ເລື່ອງ ການອ່ານຈັບໃຈຄວາມ ກຸ່ມສາລະການຮຽນຮູ້ພາສາລາວ ຊັ້ນປະລິນຍາຕີສຶກສາປີທີ່ 1 ມີຄ່າເທົ່າກັບ 0.6879 ໝາຍຄວາມວ່ານັກຮຽນມີຄວາມກ້າວໜ້າທາງການຮຽນຄິດເປັນສ່ວນຮ້ອຍເທົ່າກັບ 68.79.

3. ນັກຮຽນຊັ້ນປະລິນຍາຕີນັກສຶກສາປີທີ 1 ມີຄວາມພຶງພໍໃຈຕໍ່ການຈັດກິດຈະກຳການຮຽນຮູ້ແບບເທັກນິກ STAD ເລື່ອງ ການອ່ານຈັບໃຈຄວາມ ກຸ່ມສາລະການຮຽນຮູ້ພາສາລາວ ໂດຍສະເລ່ຍແລ້ວໃນແຕ່ລະຂໍ້ຢູ່ໃນລະດັບຫລາຍ

### 2. ອະພິປາຍຜົນ

ຜົນການພັດທະນາແຜນການຈັດກິດຈະກຳການຮຽນຮູ້ແບບເທັກນິກ STAD ເລື່ອງ ການອ່ານຈັບໃຈຄວາມ ກຸ່ມສາລະການຮຽນຮູ້ພາສາລາວ ຊັ້ນປະລິນຍາຕີນັກສຶກສາປີທີ 1 ສາມາດອະພິປາຍຜົນ ຕາມລຳດັບຂອງຈຸດປະສົງຂອງການສຶກສາຄົ້ນຄວ້າ ດັ່ງນີ້

1. ປະສິດທິພາບຂອງແຜນການຈັດກິດຈະກຳການຮຽນຮູ້ແບບເທັກນິກ STAD ເລື່ອງ ການອ່ານຈັບໃຈຄວາມ ກຸ່ມສາລະການຮຽນຮູ້ພາສາລາວ ຊັ້ນປະລິນຍາຕີນັກສຶກສາປີທີ່ 1 ມີປະສິດທິພາບເທົ່າກັບ 82.33/85.33 ຊຶ່ງປະສິດທິພາບດ້ານກະບວນການ (E1) (E2) ສູງກວ່າເກນ 80 ທີຕັ້ງໄວ້ ທັງນີ້ອາດເປັນຜົນເນື່ອງມາຈາກໃນການຈັດເຮັດແຜນການຈັດກິດຈະກຳການຮຽນຮູ້ ຜູ້ສຶກສາໄດ້ສຶກສາຫລັກສູດພາສາລາວ 2 ສຶກສາຈຸດປະສົງຂອງຫລັກສູດ, ເນື້ອໃນ ຕະຫລອດຈົນມາດຕະຖານແລະຕົວຊີ້ວັດທີກ່ຽວຂ້ອງນອກຈາກນັ້ນຍັງໄດ້ສຶກສາເອກະສານແລະງານວິໄຈທີກ່ຽວຂ້ອງ ເນື່ອງຈາກການວາງແຜນການສອນຂອງຄູເປັນຫົວໃຈຂອການນຳຜູ້ຮຽນໄປສູ່ຈຸດໝາຍປາຍທາງທີກຳນົດວ່າຈະຕ້ອງເລືອກໃຊ້ກິດຈະກຳຂະບວນການຮຽນການສອນລັກສະນະໃດ ຈຶ່ງສາມາດເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ໄປຕາມຈຸດປະສົງຂອງຫລັກສູດໃນການກຳນົດເນື້ອໃນໃຫ້ເໝາະສົມກັບໄວ ຈຶ່ງເຮັດໃຫ້ນັກຮຽນໜ້າສົນໃຈ ຊຶ່ງສອດຄ້ອງກັບຜົນການສຶກສາຂອງ ໂອເລັດ ແສງໄສ (2554: 39-99) ພົບວ່າ ແຜນການຈັດການຮຽນຮູ້ພາສາໄທ ທັກສະການອ່ານຈັບໃຈຄວາມໂດຍໃຊ້ແບບເທັກນິກ STAD ທີສ້າງຂຶ້ນມີປະສິດທິພາບເທົ່າກັບ 83.65/81.67 ສອດຄ້ອງກັບຜົນການສຶກສາຂອງ ນິຣະວັນ ຣົງທອງ (2555: 72-74) ພົບວ່າແຜນການຮຽນຮູ້ໂດຍໃຊ້ແບບຝຶກທັກສະການອ່ານຈັບໃຈຄວາມ ດ້ວຍການຮຽນແບບເທັກນິກ (STAD) ກຸ່ມສາລະການຮຽນຮູ້ພາສາໄທຊັ້ນມັດຍົມສຶກສາປີທີ 6 ມີປະສິດທິພາບ 90.7/81.07 ສອດຄ້ອງກັບຜົນການສຶກສາຂອງ ກັນຍາ ໂຄຈຳນົງ (2555 : 71 - 73) ພົບວ່າ ການພັດທະນາການຈັດກິດຈະກຳການຮຽນຮູ້ພາສາໄທແບບເທັກນິກ (STAD) ເລື່ອງການອ່ານຈັບໃຈຄວາມຊັ້ນປະຖົມປີທີ 6 ມີປະສິດທິພາບເທົ່າກັບ 85.37/83.40 ສອດຄ້ອງກັບຜົນການສຶກສາຂອງ ພິມສີລີ ຂຸນມາກ (2554 : 120 - 121) ພົບວ່າ ການພັດທະນາການຈັດກິດຈະກຳການຮຽນຮູ້ແບບເທັກນິກ STAD ເລື່ອງການອ່ານ ແລະ ການຂຽນສະກົດຄຳກຸ່ມສາລະການຮຽນຮູ້ພາສາໄທຊັ້ນປະຖົມສຶກສາປີທີ 1 ມີປະສິດທິພາບເທົ່າກັບ 82.78/84.20

2. ດັດນີປະສິດທິຜົນຂອງແຜນການຈັດກິດຈະກຳການຮຽນຮູ້ແບບກຸ່ມຮ່ວມມືເທັກນິກ STAD ເລື່ອງ ການອ່ານຈັບໃຈຄວາມ ກຸ່ມສາລະການຮຽນຮູ້ພາສາລາວ ຊັ້ນປະລິນຍາຕີນັກສຶກສາປີທີ 1 ມີຄ່າເທົ່າກັບ 0.6879 ຫລືຄິດເປັນຮ້ອຍ 68.69 ໝາຍຄວາມວ່ານັກຮຽນມີຄວາມຮູ້ເພີ່ມຂຶ້ນ ຄິດເປັນຮ້ອຍລະ 68.7 ສະແດງໃຫ້ເຫັນວ່ານັກຮຽນໄດ້ຮັບການພັດທະນາເປັນໄປຕາມສາລະ ແລະ ມາດຕະຖານການຮຽນຮູ້ໂດຍນັກຮຽນໃຊ້ກະບວນການອ່ານສ້າງຄວາມຮູ້ ແລະ ຄວາມຄິດເພື່ອນຳໄປໃຊ້ໃນການຕັດສິນໃຈ ແກ້ບັນຫາໃນການດຳເນີນຊີວິດ ແລະ ມີນິໄສຮັກການອ່ານ ຕາມແນວທາງຂອງໂຄງການສົ່ງເສີມການອ່ານການຮຽນຮູ້ພາສາລາວສະແດງໃຫ້ເຫັນວ່ານັກຮຽນເຫັນຄຸນຄ່າ ແລະ ຄວາມສຳຄັນຂອງການອ່ານຈັບໃຈຄວາມເນື່ອງຈາກນັກຮຽນສາມາດອ່ານແລ້ວເຂົ້າໃຈໃນເລື່ອງທີ່ກຳນົດໃຫ້ ໂດຍຄູເປັນຄົນຕັ້ງຄຳຖາມໃຫ້ນັກຮຽນຕອບເປັນຕອນ ໆ ຕາມເນື້ອໃນຂອງເລື່ອງນັ້ນ ໆ

3. ນັກຮຽນມີຄວາມພຶງພໍໃຈຕໍ່ກິດຈະກຳການຮຽນຮູ້ແບບເທັກນິກ STAD ເລື່ອງ ການອ່ານຈັບໃຈຄວາມ ກຸ່ມສາລະການຮຽນຮູ້ພາສາລາວ ຊັ້ນປະລິນຍາຕີນັກສຶກສາປີທີ 1 ໂດຍສະເລ່ຍຢູ່ໃນລະດັບຫລາຍ ທັງນີ້ອາດເປັນຜົນເນື່ອງມາຈາກການຈັດກິດຈະກຳການຮຽນຮູ້ແບບເທັກນິກ STAD ເລື່ອງ ການອ່ານຈັບໃຈຄວາມ ກຸ່ມສາລະການຮຽນຮູ້ພາສາລາວ ຊັ້ນປະລິນຍາຕີນັກສຶກສາປີທີ 1 ສາມາດຈັດສະພາບເພື່ອສ້າງບັນຍາກາດໃນການຮຽນໃຫ້ຜູ້ຮຽນເກີດແຮງຈູງໃຈແລະມີເປົ້າໝາຍໃນການຮຽນ ຊຶ່ງການຈັດການຮຽນຮູ້ແບບເທັກນິກ STAD ນັກຮຽນແຕ່ລະຄົນໃນກຸ່ມມີຈຸດມຸ້ງໝາຍຮ່ວມກັນແລະການໄປສູ່ຈຸດໝາຍນັ້ນຕ້ອງອາໄສຄວາມຊ່ວຍເຫຼືອຊຶ່ງກັນແລະກັນ ບຸກຄົນໜຶ່ງຈະບັນລຸຈຸດມຸ້ງໝາຍຂອງຕົນໄດ້ກໍຕໍ່ເມື່ອບຸກຄົນອື່ນທີ່ມີຈຸດມຸ້ງໝາຍຮ່ວມກັນ, ສາມາດບັນລຸຈຸດໝາຍຂອງພວກເຂົາໄດ້ເຊັ່ນດຽວກັນໃນສະພາບການຮຽນແບບຮ່ວມມືນັກຮຽນຈະຊ່ວຍກັນຮຽນ ເພື່ອໃຫ້ທຸກຄົນບັນລຸຜົນໃນການຮຽນຮ່ວມກັນຈຶ່ງຈະເຮັດໃຫ້ການຮຽນສຳເລັດຜົນ, ນັກຮຽນມີຄວາມພຶງພໍໃຈຕໍ່ກິດຈະກຳການຮຽນດ້ວຍແຜນການຈັດການຮຽນຮູ້ການອ່ານເຊີງວິເຄາະໂດຍໃຊ້ແບບຝຶກທັກສະປະກອບກິດຈະກຳດ້ວຍກຸ່ມຮ່ວມມືແບບເທັກນິກ STAD ຢູ່ໃນລະດັບຫລາຍ ສອດຄ່ອງກັບຜົນການສຶກສາຂອງໂອເລັດ ແສງໄສ (2554 : 95) ພົບວ່ານັກຮຽນມີຄວາມພຶງພໍໃຈຕໍ່ການຈັດກິດຈະກຳການຮຽນຮູ້ຢູ່ໃນລະດັບຫລາຍ ແລະ ສອດຄ່ອງກັບຜົນການສຶກສາຂອງ ພິມສີລິ ຂຸນມາກ (2554 : 116-117 ) ພົບວ່ານັກຮຽນມີຄວາມພຶງພໍໃຈຕໍ່ການຮຽນດ້ວຍແຜນການຈັດກິດຈະກຳການຮຽນຮູ້ ແບບກຸ່ມຮ່ວມມືເທັກນິກ STAD ເພື່ອການພັດທະນາທັກສະການອ່ານເຊີງວິເຄາະ ຢູ່ໃນລະດັບຫລາຍ

## 3. ຂໍ້ສະເໜີແນະ

### 3.1 ຂໍ້ສະເໜີແນະໃນການນຳໄປໃຊ້

- ຄູຜູ້ສອນຕ້ອງຕຽມສື່ການສອນໃຫ້ຫຼາຍ
- ຄວນຈັດຈະກຳທີ່ຫລາກຫລາຍ ອາດໃຊ້ເວລາຫຼາຍກວ່າທີ່ກຳນົດໄວ້
- ການຈັດກິດຈະກຳສາມາດປັບກິດຈະກຳໃຫ້ເໝາະສົມກັບລະດັບຂອງນັກສຶກສາ
- ຄວນຈັດບັນຍາກາດໃຫ້ເໝາະສົມ ເພື່ອຊ່ວຍກະຕຸ້ນຜູ້ຮຽນເກີດການແລກປ່ຽນຮຽນຮູ້
- ໃຫ້ນັກຮຽນຝຶກເຮັດກິດຈະກຳຈາກການອ່ານຈັບໃຈຄວາມເປັນລາຍບຸກຄົນເພື່ອປະເມີນຄວາມສາມາດດ້ານການອ່ານຈັບໃຈຄວາມ

### 3.2 ຂໍ້ສະເໜີແນະໃນການສຶກສາຄົ້ນຄວ້າເທື່ອຕໍ່ໄປ

- ຄວນມີການພັດທະນາແຜນການຈັດກິດຈະກຳການຮຽນຮູ້ທີ່ຜູ້ສຶກສາສ້າງຂຶ້ນສາມາດນຳໄປໃຊ້ໃນການຈັດກິດຈະກຳການຮຽນຮູ້ພາສາລາວ ເລື່ອງອື່ນ ໆ ຫລືຊັ້ນອື່ນ

- ຄວນມີການສຶກສາຄວາມສະຫລາດທາງອາລົມ,ທັກສະການເວົ້າ ການຂຽນ ຫລືເຈຕະຄະຕິຕໍ່ການຮຽນຂອງນັກຮຽນ

- ຄວນສຶກສາປຽບທຽບຜົນການຮຽນຂອງນັກຮຽນລະຫວ່າງການຈັດກິດຈະກຳການຮຽນຮູ້ແບບກຸ່ມຮ່ວມມືເທັກນິກ STAD ກັບການສອນແບບອື່ນ

# ເອກະສານອ້າງອີງ

# ເອກະສານອ້າງອີງ

ກັນຍາ ໂຄຈຳນົງ. (2555). *ການພັດທະນາການຈັດກິດຈະກຳການຮຽນຮູ້ພາສາໄທດ້ວຍກຸ່ມຮ່ວມມືແບບ STAD ເລື່ອງການອ່ານຈັບໃຈຄວາມຊັ້ນປະຖົມສຶກສາປີທີ່ 6.* [ວິທະຍານິພົນ]. ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ຄຳເມິງ ດວງມາລາ ແລະ ມອນຄຳ ໄຊຍະວົງ. (2008). *ພາສາລາວ 1.* ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ.

ສະໜອງ ອິນລະຄອນ. (2546). *ເທັກນິກວິທີການ ແລະ ນະວັດຕະກຳທີ່ໃຊ້ໃນການຈັດກິດຈະກຳ ການຮຽນ-ການສອນທີ່ເນັ້ນນັກຮຽນເປັນສູນກາງ.* ຫຈກ.ອຸບົນກິດອອບເຊດການພິມ. ກຸງເທບ: ມະຫາວິທະຍາໄລສີນະຄະລິນ.

ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ. (2545). *19 ວິທີການຈັດການຮຽນຮູ້ ເພື່ອພັດທະນາຄວາມຮູ້ ແລະ ທັກສະ.* ກຸງເທບ: ໂຮງພິມພາບພິມ.

ສຸວິດ ມູນຄຳ. (2551). *19 ວິທີການຈັດການຮຽນຮູ້.* ກຸງເທບ: ຫ້າງຫຸ້ນສ່ວນຈຳກັດ ພາບພິມ.

ສົມນຶກ ຖັດທິນີ. (2537). *ການວັດຜົນການສຶກສາ.* ກາຍາສິນ: ປະສານການພິມ.

ສົມລວຍ ສຸຕິຍະໄທ. (2011). *ການວັດຜົນ ແລະ ການປະເມີນຜົນການສຶກສາ.* ວິທະຍາໄລຄູຫຼວງພະບາງ.

ສັກສີ ປະນະກຸນ. (2549). *ຫຼັກສູດ ແລະ ການຈັດການຮຽນຮູ້.* ສຳນັກພິມມະຫາວິທະຍາໄລລາມຄຳແຫງ.

ໂຍລິນ ສັນສົມມຸດ. (2530). *ຈິດຕະວິທະຍາ.* ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

ຖະວິນ ສະຣາໂຣ. (2536). *ການສ້າງເຄື່ອງມື ທາງຈິດຕະວິທະຍາ.* ກຸງເທບ: ວັດທະນາພານິດ.

ນິຣະວັນ ຣົງທອງ. (2555). *ຜົນການຈັດກິດຈະກຳການຮຽນຮູ້ດ້ານການອ່ານຈັບໃຈຄວາມດ້ວຍກຸ່ມຮ່ວມມືເທັກນິກ STAD ຊັ້ນປະຖົມສຶກສາປີທີ 6.* [ວິທະຍານິພົນ]. ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ບຸນໄຊ ສີລິມະຫາສາຄອນ(2546). *ແຜນການຈັດການຮຽນຮູ້ທີ່ເນັ້ນຜູ້ຮຽນເປັນສູນກາງ.* (ພິມຄັ້ງທີ 2). ກຸງເທບ.

ບຸນຊົມ ສີສະອາດ. (2554). *ການວິໄຈຂັ້ນເບື້ອງຕົ້ນ.* ກຸງເທບ: ສຸວິຣິຍາສາດ.

ຜະເຊີນ ກິດຈະການ. (2545). *ດັດສະນີປະສິດທິຜົນ.* ການວັດຜົນການສຶກສາ.

ຜະເຊີນ ກິດຈະການ. (2544). ການວິເຄາະສີ່ ແລະ ເທັກໂນໂລຊີການສຶກສາ. *ວາລະສານການວັດຜົນການສຶກສາ.*

ພິມສີລີ ຊຸນມາກ. (2554). *ການພັດທະນາການຈັດກິດຈະກຳການຮຽນຮູ້ແບບຮ່ວມມືເທັກນິກ STAD ເລື່ອງການອ່ານ ແລະ ການຂຽນສະກົດຄຳກຸ່ມສາຣະການຮຽນຮູ້ພາສາໄທຊັ້ນປະຖົມປີທີ່ 1.* [ວິທະຍານິພົນ]. ມະຫາສາຣາຄາມ: ມະຫາວິທະຍາໄລມະຫາສາຣາຄາມ.

ວາລີ ຖືຣະຈິດ. (2534). *ຈິດຕະວິທະຍາການສຶກສາ.* ກຸງເທບ: ພາກວິຊາຕິດຕະວິທະຍາ ແລະ ການແນະແນວວິທະຍາໄລພະນະຄອນ.

ວິທະຍາໄລຄັງໄຂ. (2012). *ໂຄງສ້າງຫຼັກສູດພາສາລາວ-ວັນນະຄະດີລະບົບ 12+4.* ວິທະຍາໄລຄູຄັງໄຂ.

ວິມົນ ສູນທອນໂລດ. (2545). *ນະວັດຕະກຳເພື່ອການຮຽນຮູ້.* (ພິມຄັ້ງທີ 5) . ກາລະສິນ: ປະສານການພິມ.

ວິມົນ ສູນທອນໂລດ. (2545). *ພັດທະນາການຮຽນ-ການສອນ.* ມະຫາສາລະຄາມພາກວິຊາຫຼັກສູດ ແລະ ການສອນຄະນະສຶກສາສາດ. ມະຫາວິທະຍາໄລມະຫາສາລະຄາມ.

ວັດທະນາພອນ ຣະງັບທຸກ. (2542). *ແຜນການສອນທີ່ເນັ້ນນັກຮຽນເປັນສູນກາງ.* ກຸງເທບ: ແອລທີເພຣສ.

ອາພອນ ໃຈທ່ຽງ. (2540). *ຫຼັກການສອນ.* ກຸງເທບ: ໂອດຽນສະໂຕ.

ເພັດຊະຣາວະດີ ຈີງປະດັບກຽດ. (2551, 11 23). ການຫາປະສິດທິພາບຂອງແຜນການສອນ-Retrieved January, 212014 from-petcharawadee3: www.petcharawadee3.blogspot.com/2008/11/12.html

ໂອເລັດ ແສງໄສ. (2554). *ຜົນການຈັດກິດຈະກຳການຮຽນຮູ້ແບບກຸ່ມຮ່ວມມືເທັກນິກ STAD ເລື່ອງການອ່ານຈັບໃຈຄວາມກຸ່ມສາລະການຮຽນຮູ້ພາສາໄທຊັ້ນປະຖົມສຶກສາປີທີ 6.* [ວິທະຍານິພົນ]. ມະຫາສາລາຄາມ: ມະຫາວິທະຍາໄລມະຫາສາລາຄາມ.

Applewhite, P. B. (1965). *Organization and Behavior.* New York: Prentice-hall.

Bernard, C. (1968). *Thefunetions of the Excecutive.* Massachusett:: HerWard universitypress

Good, C.V. (1973). *Dictionary of Education.* 3rd ed. new york: Mc Graw3 Hill.

Scott, M. M. (1970). *More Meaningful work Through Jop Enveronment.* New York: McGraw-Hall.

# ເອກະສານຊ້ອນທ້າຍ

# ເອກະສານຊ້ອນທ້າຍ ກ

# ໜັງສືສະເໜີຕ່າງໆ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**********0000**********

ກະຊວງສຶກສາທິການ ແລະ ກິລາ
ມະຫາວິທະຍາໄລແຫ່ງຊາດ
ຄະນະສຶກສາສາດ

ເລກທີ 2 1 3 ......../ຄສສ.2014
ວັນທີ 2 2 JUL 2014

**ໜັງສືສະເໜີ**

ເຖິງ: ທ່ານ ອາຈານ ທອງຫຼໍ່ ຄູນສະຫວັດ ຫົວໜ້າຫ້ອງການຈັດຕັ້ງ-ພະນັກງານ ວິທະຍາໄລຄູຫຼວງພະບາງ.

ເລື່ອງ: ຂໍຄວາມຊ່ວຍເຫຼືອເປັນຜູ້ຊ່ຽວຊານກວດສອບເຄື່ອງມືການຄົ້ນຄ້ວາຂອງນັກສຶກສາປະລິນຍາໂທ ສຶກສາສາດ ສາຂາ ຫຼັກສູດ ແລະ ການສອນ.

ເນື່ອງຈາກ ທ້າວ ທອມ ຈະເລີນສີ ລະຫັດນັກສຶກສາ MFED0053/11 ເຊິ່ງເປັນນັກສຶກສາປະລິນຍາໂທ ສຶກສາສາດ ສາຂາ ຫຼັກສູດ ແລະ ການສອນ ຊຸດ 1 ກຳລັງດຳເນີນການຂຽນວິທະຍານິພົນໃນຫົວຂໍ້ "ການຈັດການຮຽນ-ການສອນພາສາລາວ ເລື່ອງ ການອ່ານຈັບໃຈຄວາມ ໂດຍໃຊ້ ວິທີສອນແບບຮ່ວມມືເທັກນິກ STAD ປີ 1 ລະບົບ 12+4 ວິທະຍາໄລຫຼວງພະບາງ ສົກຮຽນ 2014-2015" ໂດຍມີ ທ່ານ ຣສ.ດຣ ໄຫງວ ແກ້ວສະດາ ເປັນປະທານທີ່ປຶກສາວິທະຍານິພົນ, ທ່ານ ອາຈານ ບຸດຕາ ສີມສະນິດ ເປັນຜູ້ຊ່ວຍ.

ສະນັ້ນ, ເພື່ອໃຫ້ການຂຽນວິທະຍານິພົນເປັນໄປດ້ວຍຄວາມຮຽບຮ້ອຍ ແລະ ບັນລຸຕາມຈຸດປະສົງ ຄະນະບໍດີຄະນະສຶກສາສາດຈິ່ງພິຈາລະນາແລ້ວເຫັນວ່າທ່ານແມ່ນຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບການໃນເລື່ອງນີ້ເປັນຢ່າງດີ, ຈິ່ງຂໍຄວາມຊ່ວຍເຫຼືອຈາກທ່ານເປັນຜູ້ຊ່ຽວຊານສຳລັບກວດສອບເຄື່ອງມືການຄົ້ນຄ້ວາໃນຄັ້ງນີ້ດ້ວຍ.

ຫວັງວ່າຈະໄດ້ຮັບການຮ່ວມມືຈາກທ່ານເປັນຢ່າງດີ.

ຄະນະບໍດີ

ຣສ. ບົວສັນ ລີເດດມູນສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**********0000**********

ກະຊວງສຶກສາທິການ ແລະ ກິລາ
ມະຫາວິທະຍາໄລແຫ່ງຊາດ
ຄະນະສຶກສາສາດ

ເລກທີ 213 - .../ຄສສ.2014
ວັນທີ 22 JUL 2014

**ໜັງສືສະເໜີ**

ເຖິງ: ທ່ານ ອາຈານ ບຸນກອງ ພວງສະຫວັດ ຮອງຫົວໜ້າຫ້ອງການ ICT ວິທະຍາໄລຄູ ຫຼວງພະບາງ.

ເລື່ອງ: ຂໍຄວາມຊ່ວຍເຫຼືອເປັນຜູ້ຊ່ຽວຊານກວດສອບເຄື່ອງມືການຄົ້ນຄ້ວາຂອງນັກສຶກສາປະລິນຍາໂທ ສຶກສາສາດ ສາຂາ ຫຼັກສູດ ແລະ ການສອນ.

ເນື່ອງຈາກ ທ້າວ ທອມ ຈະເລີນສີ ລະຫັດນັກສຶກສາ MFED0053/11 ເຊິ່ງເປັນນັກສຶກສາປະລິນຍາໂທ ສຶກສາສາດ ສາຂາ ຫຼັກສູດ ແລະ ການສອນ ຊຸດ 1 ກຳລັງດຳເນີນການຂຽນວິທະຍານິພົນໃນຫົວຂໍ້ "ການຈັດການຮຽນ-ການສອນພາສາລາວ ເລື່ອງ ການອ່ານຈັບໃຈຄວາມ ໂດຍໃຊ້ ວິທີສອນແບບຮ່ວມມືເທັກນິກ STAD ປີ 1 ລະບົບ 12+4 ວິທະຍາໄລຫຼວງພະບາງ ສົກຮຽນ 2014-2015" ໂດຍມີ ທ່ານ ຮສ.ດຣ ໄຫງວ ແກ້ວສະດາ ເປັນປະທານທີ່ປຶກສາວິທະຍານິພົນ, ທ່ານ ອາຈານ ບຸດຕາ ສິມສະນິດ ເປັນຜູ້ຊ່ວຍ.

ສະນັ້ນ, ເພື່ອໃຫ້ການຂຽນວິທະຍານິພົນເປັນໄປດ້ວຍຄວາມຮຽບຮ້ອຍ ແລະ ບັນລຸຕາມຈຸດປະສົງ ຄະນະບໍດີຄະນະສຶກສາສາດຈຶ່ງພິຈາລະນາແລ້ວເຫັນວ່າທ່ານແມ່ນຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບການໃນເລື່ອງນີ້ເປັນຢ່າງດີ, ຈຶ່ງຂໍຄວາມຊ່ວຍເຫຼືອຈາກທ່ານເປັນຜູ້ຊ່ຽວຊານສຳລັບກວດສອບເຄື່ອງມືການຄົ້ນຄ້ວາໃນຄັ້ງນີ້ດ້ວຍ.

ຫວັງວ່າຈະໄດ້ຮັບການຮ່ວມມືຈາກທ່ານເປັນຢ່າງດີ.

ຄະນະບໍດີ

ຄະນະສຶກສາສາດ

ຮສ. ບົວພັນ ລີເດດມູນສອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********0000**********

ກະຊວງສຶກສາທິການ ແລະ ກິລາ
ມະຫາວິທະຍາໄລແຫ່ງຊາດ
ຄະນະສຶກສາສາດ

ເລກທີ 2...1...3.../ຄສສ.2014
ວັນທີ 2 2 JUL 2014

## ໜັງສືສະເໜີ

ເຖິງ: ທ່ານ ອາຈານ ພອນຈັນ ສໍພິມພາ ຫົວໜ້າໜ່ວຍງານ ພາສາລາວ-ວັນນະຄະດີ ວິທະຍາໄລຄູຫຼວງພະບາງ.

ເລື່ອງ: ຂໍຄວາມຊ່ວຍເຫຼືອເປັນຜູ້ຊ່ຽວຊານກວດສອບເຄື່ອງມືການຄົ້ນຄ້ວາຂອງນັກສຶກສາປະລິນຍາໂທ ສຶກສາສາດ ສາຂາ ຫຼັກສູດ ແລະ ການສອນ.

ເນື່ອງຈາກ ທ້າວ ຫອມ ຈະເລີນສີ ລະຫັດນັກສຶກສາ MFED0053/11 ເຊິ່ງເປັນນັກສຶກສາປະລິນຍາໂທ ສຶກສາສາດ ສາຂາ ຫຼັກສູດ ແລະ ການສອນ ຊຸດ 1 ກຳລັງດຳເນີນການຂຽນວິທະຍານິພົນໃນຫົວຂໍ້ "ການຈັດການຮຽນ-ການສອນພາສາລາວ ເລື່ອງ ການອ່ານຈັບໃຈຄວາມ ໂດຍໃຊ້ ວິທີສອນແບບຮ່ວມມືເທັກນິກ STAD ປີ 1 ລະບົບ 12+4 ວິທະຍາໄລຫຼວງພະບາງ ສົກຮຽນ 2014-2015" ໂດຍມີ ທ່ານ ຮສ.ດຣ ໄຫງວ ແກ້ວສະດາ ເປັນປະທານທີ່ປຶກສາວິທະຍານິພົນ, ທ່ານ ອາຈານ ບຸດຕາ ສິມສະນິດ ເປັນຜູ້ຊ່ວຍ.

ສະນັ້ນ, ເພື່ອໃຫ້ການຂຽນວິທະຍານິພົນເປັນໄປດ້ວຍຄວາມຮຽບຮ້ອຍ ແລະ ບັນລຸຕາມຈຸດປະສົງ ຄະນະບໍດີຄະນະສຶກສາສາດຈຶ່ງພິຈາລະນາແລ້ວເຫັນວ່າທ່ານແມ່ນຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບການໃນເລື່ອງນີ້ເປັນຢ່າງດີ, ຈຶ່ງຂໍຄວາມຊ່ວຍເຫຼືອຈາກທ່ານເປັນຜູ້ຊ່ຽວຊານສຳລັບກວດສອບເຄື່ອງມືການຄົ້ນຄ້ວາໃນຄັ້ງນີ້ດ້ວຍ.

ຫວັງວ່າຈະໄດ້ຮັບການຮ່ວມມືຈາກທ່ານເປັນຢ່າງດີ.

ຄະນະບໍດີ

ຮສ. ບົວພັນ ລີເດດມູນສອນ

# ເອກະສານຊ້ອນທ້າຍ ຂ

# ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

# ແຜນການສອນທີ 1

ວິຊາພາສາລາວ 2 | ຫ້ອງປີ 1. ຂ. 12+4 ພ/ວ

ບົດທີ 1 ການອ່ານໃນໃຈ | ວັນທີ........./......./2014

ຫົວຂໍ້: ບັນຫາໃນການອ່ານໃນໃຈ | ເວລາ 100 ນາທີ

**1. ໃຈຄວາມສຳຄັນ**

ບັນຫາໃນການອ່ານໃນໃຈປະກອບມີ 2 ບັນຫາຄື: ການອ່ານບໍ່ເຂົ້າໃຈ ແລະ ອ່ານຊັກຊ້າສອງບັນຫານີ້ມີການພົວພັນກັນເພາະຄົນບໍ່ເຂົ້າໃຈຈະອ່ານຊັກຊ້າ

**2. ຈຸດປະສົງເພື່ອໃຫ້ນັກສຶກສາມາດ:**

- ອະທິບາຍສາເຫດທີ່ພາໃຫ້ມີບັນຫາໃນການອ່ານໄດ້

**3. ເນື້ອໃນ**

**1. ບັນຫາໃນການອ່ານ**

**1.1. ສະຕິປັນຍາ ແລະ ພື້ນຖານຕວາມຮູ້**

**1.2. ສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດໃຈ**

**1.3. ສິ່ງແວດລ້ອມ**

**1.4. ຄວາມສົນໃຈ**

**1.5. ວິທີການອ່ານ**

**1. ກິດຈະກຳການຮຽນ-ການສອນໂດຍວິທີສອນແບບຮ່ວມມືເທັກນິກ STAD**

**1.1. ຂັ້ນກະກຽມເນື້ອໃນ(5ນາທີ)**

• ຄູຈັດກຽມເນື້ອໃນບົດຮຽນ, ໃບຄວາມຮູ້, ໃບກິດຈະກຳ, ບົດທົດສອບຍ່ອຍເປັນຕົ້ນ

• ຄູແຈ້ງຈຸດປະສົງໃຫ້ນັກຮຽນຮູ້ວ່າ ການຈັດການຮຽນຮູ້ແບບຮ່ວມມືເທັກນິກ STAD ໂດຍໃຫ້ນັກຮຽນຮູ້ວ່າການຮຽນແບບນີ້ແມ່ນເນັ້ນການຮ່ວມມືກັນເພື່ອຜົນງານຂອງກຸ່ມ, ທຸກຄົນຈະປະຕິບັດໜ້າທີຂອງຕົນເອງຢ່າງສຸດຄວາມສາມາດ ຄູເປັນຜູ້ສັງເກດ ແລະ ໃຫ້ຄຳແນະນຳ ພ້ອມທັງແຈ້ງໃຫ້ຮູ້ວ່າພວກນ້ອງມີຄວາມຮູ້ແນວໃດກ່ຽວກັບບັນຫາໃນການອ່ານໃນໃຈ

**1.2. ຂັ້ນກິດຈະກຳກຸ່ມ (5ນາທີ)**

- ຄູແບ່ງນັກຮຽນອອກເປັນ 10 ກຸ່ມໆລະ 4 ຄົນທີ່ມີຄວາມຮູ້ແຕກຕ່າງກັນຄື: ນັກຮຽນເກັ່ງ 1 ຄົນ, ກາງ 2 ຄົນ, ອ່ອນ 1 ຄົນ

- ນັກຮຽນແບ່ງໜ້າທີ່ຮັບຜິດຊອບໃນກຸ່ມ ສະມາຊິກຕ້ອງປ່ຽນໜ້າທີ່ເພື່ອເຝິກຮັບຜິດຊອບ ເຊັ່ນ ປະສານວຽກງານ, ຈົດບັນທຶກ ປະເມີນ ຄົ້ນຫາຄຳຕອບ

1.3.ຂັ້ນສອນ (40ນາທີ)

- ຄູໃຫ້ນັກຮຽນອ່ານໃບຄວາມຮູ້ທີ 1 ກ່ຽວກັບບັນຫາໃນການອ່ານປະກອບມີບັນຫາໃດແດ່ ນັກຮຽນຄົ້ນຄວ້າສົນທະນາຊອກຫາຄຳຕອບໂດຍໃຫ້ນັກຮຽນແບ່ງວຽກກັນຮັບຜິດຊອບ.

- ຄູມອບໃບກິດຈະກຳ 1 ໃຫ້ແຕ່ລະກຸ່ມຊອກຫາຄຳຕອບຈາກໃບຄວາມຮູ້ທີ 1.

- ນັກຮຽນຄົ້ນຄວ້າບົດຮຽນ ແລະ ແກ້ກິດຈະກຳ, ຖ້າບຸກຄົນໃດບໍ່ເຂົ້າໃຈ ໃຫ້ເພື່ອນໃນກຸ່ມທີ່ເຂົ້າໃຈອະທິບາຍໃຫ້ໝູ່ໃນກຸ່ມຟັງຈົນເຂົ້າໃຈ. ການອະທິບາຍມີຈຸດປະສົງເພື່ອໃຫ້ສະມາຊິກທຸກຄົນເຂົ້າໃຈບົດຮຽນເປັນຢ່າງດີ ສາມາດເຮັດແບບທົດສອບຍ່ອຍໄດ້ຄະແນນສູງຊ່ວຍໃຫ້ກຸ່ມບັນລຸເປົ້າໝາຍ.

- ຄູຕິດຕາມສັງເກດການເຮັດວຽກແຕ່ລະກຸ່ມ, ສະໜັບສະໜູນ ຕຳນິ, ແນະນຳ ແລະ ຊ່ວຍເຫຼືອສິ່ງເສີມໃຫ້ແຕ່ລະກຸ່ມໃຊ້ຂະບວນການຮຽນແບບຮ່ວມມືກັນຮຽນຮູ້ໂດຍກະຕຸ້ນໃຫ້ນັກຮຽນເກັ່ງຊ່ວຍອະທິບາຍເນື້ອໃນບົດຮຽນໃຫ້ສະມາຊິກໃນກຸ່ມທີ່ຍັງບໍ່ທັນເຂົ້າໃຈ.

- ເມື່ອນັກຮຽນເຮັດກິດຈະກຳແຕລະຕອນສຳເລັດແລ້ວ,ໃຫ້ປ່ຽນກັນກວດຜົນງານຂອງໝູ່ເພື່ອນສະມາຊິກໃນກຸ່ມຈົນຄົບທຸກຄົນ ຖ້າພົບຂໍ້ຜິດພາດໃຫ້ເພື່ອນອະທິບາຍຊ້ຳອີກຈົນເຂົ້າໃຈ.

- ຄູແຈກໃບສະເຫຼີຍຄຳຕອບໃບກິດຈະກຳ ທີ່ນັກຮຽນຮ່ວມກັນແກ້ ໂດຍສັບປ່ຽນກຸ່ມກວດ ຄູໃຫ້ຄຳແນະນຳເນື້ອໃນເພີ່ມເຕີມ

- ນັກຮຽນ ແລະ ຄູຊ່ວຍກັນສະຫຼຸບບົດຮຽນ ຖ້າມີສິ່ງທີ່ນັກຮຽນຍັງບໍ່ເຂົ້າໃຈຄູອະທິບາຍເພີ່ມເຕີມ ແລະ ຜູ້ຮຽນຊ່ວຍກັນປະເມີນຜົນ ການເຮັດວຽກເປັນກຸ່ມ ແລະ ພິຈາລະນາວ່າແມ່ນສິ່ງໃດທີ່ເປັນຈຸດເດັ່ນຂອງການເຮັດວຽກຮ່ວມກັນ ແລະ ແມ່ນສິ່ງໃດຄືສິ່ງທີ່ຄວນປັບປຸງ.

1.4. **ຂັ້ນທົດສອບຍ່ອຍ (20ນາທີ)**

- ຄູທົດສອບນັກຮຽນໂດຍມີແບບທົດສອບໃຫ້ແຕ່ລະຄົນເຮັດໂດຍບໍ່ຊ່ວຍເຫຼືອກັນ, ເພື່ອວັດຄວາມຮູ້, ຄວາມເຂົ້າໃຈເນື້ອໃນບົດຮຽນ.

- ຄູບັນທຶກຄະແນນເປັນລາຍບຸກຄົນ ແລະ ລວມເປັນຄະແນນກຸ່ມໂດຍລຽງຄະແນນແຕ່ຫຼາຍຫານ້ອຍ.

1. 5. **ຂັ້ນຮັບຮອງຜົນງານ ແລະມອບລາງວັນ (30ນາທີ)**

- ຄູ ແລະ ນັກຮຽນພ້ອມກັນຕອບແບບທົດສອບ ພ້ອມທັງລວມຄະແນນໂດຍເອົາຄະແນນແຕ່ລະຄົນຂອງສະມາຊິກມາບວກເຂົ້າກັນ ແລ້ວຫານຈຳນວນຄົນໃນກຸ່ມ.

- ຄູປະກາດຄະແນນບຸກຄົນ ແລະ ຄະແນນກຸ່ມໃຫ້ນັກຮຽນຮັບຮູ້, ຊົມເຊີຍ, ຍົກຍ້ອງ, ຫຼື ມອບລາງວັນບຸກຄົນ ແລະ ກຸ່ມທີ່ໄດ້ຄະແນນສູງເພື່ອໃຫ້ນັກຮຽນແຕ່ລະຄົນຮັບຮູ້ຄະແນນຕົນເອງ ແລະ ຄະແນນຂອງກຸ່ມ ເພື່ອນຳໄປແກ້ໄຂປັບປຸງພັດທະນາຕົນເອງຕໍ່ໄປ.

- **ສື່ປະກອບການສອນ ແລະ ແຫຼ່ງການຮຽນຮູ້**

1). ປື້ມແບບຮຽນພາສາລາວ 2 2) .ໃບສະເຫຼີຍຄຳຕອບກິດຈະກຳ 1 3). ໃບຄວາມຮູ້ 1

4).ໃບກິດຈະກຳ 1 5).ໃບສະເຫຼີຍຄຳຕອບແບບທົດສອບຍ່ອຍ 6). ບົດທົດສອບຍ່ອຍ 1

# ໃບຄວາມຮູ້ 1

ເລື່ອງ: ບັນຫາໃນການອ່ານ

**1. ບັນຫາໃນການອ່ານ**

**1.1. ສະຕິປັນຍາ ແລະ ພື້ນຖານຕວາມຮູ້**

ຄົນທີ່ມີສະຕິປັນຍາ ແລະ ພື້ນຖານຄວາມຮູ້ໃນເລື່ອງທີ່ອ່ານບໍ່ດີເປັນການອ່ານບໍ່ເຂົ້າໃຈ, ການອ່ານເຂົ້າໃຈຊ້າເປັນເລື່ອງທຳມະດາ ແຕ່ຖ້າຢາກເຂົ້າໃຈຕ້ອງອ່ານໃຫ້ລາຍໆຄັ້ງ.

**1.2.ສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດໃຈ**

ສຸຂະພາບຮ່າງກາຍ, ມັນສະໝອງ ແລະ ສາຍຕາເປັນສິ່ງສຳຄັນຕໍ່ການອ່ານຜູ້ທີ່ເຈັບປ່ວຍ,ປວດຫົວ, ອິດນອນ, ໜ້າມືດຕາລາຍ ສາຍຕາສັ້ນ,ສາຍຕາຍາວມີບັນຫາຕໍ່ການອ່ານຄືອ່ານບໍ່ເຂົ້າໃຈ ແລະອ່ານຊ້າ, ສຸຂະພາບຈິດກໍ່ມີຄວາມສຳຄັນ, ຜູ້ມີບັນຫາອື່ນໆເຊັ່ນ ມີບັນຫາຕໍ່ຄອບຄົວ, ຈິດໃຈບໍ່ສະຫງົບ, ເປັນໂລກຫົວໃຈວາຍ, ສິ່ງເລົ່ານີ້ລ້ວນແຕ່ເຮັດໃຫ້ການອ່ານບໍ່ໄດ້ຮັບຜົນດີ, ສະນັ້ນຕ້ອງຮັກສາສຸຂະພາບໃຫ້ດີບໍ່ໃຫ້ເຄັ່ງຄຽດເກີນໄປ.

**1.3. ສິ່ງແວດລ້ອມ**

ບາງຄົນສຸຂະພາບດີ, ສະຕິປັນຍາດີ, ແຕ່ອ່ານຢູ່ໃນສະແວດລ້ອມທີ່ບໍ່ດີເຊັ່ນມີສຽງລົບກວນ, ແສງແດດ, ຫຼື ໜາວເກີນໄປ, ມີກິ່ນເໝັນສິ່ງເລົ່ານີ້ເຮັດໃຫ້ການອ່ານບໍ່ໄດ້ຮັບຜົນດີ, ສະນັ້ນຄວນເລືອກບ່ອນອ່ານໃຫ້ເໝາະສົມດີ.

**1.4. ຄວາມສົນໃຈ**

ເຖິງແມ່ນວ່າສະຕິປັນຍາດີ, ພື້ນຖານຄວາມຮູ້ດີ, ສຸຂະພາບຮ່າງກາຍ, ຈິດໃຈດີ ແລະ ສິ່ງແວດລ້ອມດີ, ແຕ່ວ່າຂາດຄວາມສົນໃຈໃນເລື່ອງທີ່ອ່ານ ເຊັ່ນ ອ່ານເພາະຖືກຄູບັງຄັບ, ອ່ານເລື່ອງທີ່ຕົນເອງບໍ່ມັກ, ຈິດໃຈເລື່ອນລອຍໄປບ່ອນອື່ນ, ສິ່ງເລົ່ານີ້ເຮັດໃຫ້ການອ່ານມີບັນຫາ, ສະນັ້ນຕ້ອງຕັ້ງໃຈໃຫ້ມີສະມາທິທີ່ດີສ້າງສິ່ງແວດລ້ອມທີ່ດີ ແລະ ຕັ້ງຈຸດມຸ່ງໝາຍວ່າ ອ່ານເພື່ອຫຍັງ ?, ອ່ານແລ້ວຈະໄດ້ຫຍັງ.

**1.5. ວິທີການອ່ານ**

ອ່ານບໍ່ຖືກວິທີເຊັ່ນ ອ່ານເລື່ອງແລ້ວແຕ່ບໍ່ວິເຄາະ, ອ່ານຟ້າວ ບໍ່ຮູ້ຈັກຈັບໃຈຄວາມສຳຄັນສະນັ້ນເວລາອ່ານຈົບແລ້ວຄວນຕັ້ງຄຳຖາມໃຫ້ຕົນເອງວ່າຕົນເອງເຂົ້າໃຈ ຫຼື ບໍ່ຈັບໃຈຄວາມສຳຄັນໄດ້ໜ້ອຍ, ຫຼາຍປານໃດ.

# ໃບກິດຈະກຳ 1 (20ນາທີ)

1.ຍ້ອນຫຍັງຄົນເຮົາຈຶ່ງອ່ານຊັກຊ້າ ?

..........................................................................................................................

..........................................................................................................................

..........

2.ຍ້ອນຫຍັງຄົນເຮົາອ່ານບໍ່ເຂົ້າໃຈ ?

..........................................................................................................................

3. ຄົນທີ່ມີສະຕິປັນຍາ ແລະ ພື້ນຖານຄວາມຮູ້ບໍ່ດີຈະເຮັດໃຫ້ການອ່ານເປັນແນວໃດ ?

..........................................................................................................................

4. ຈົ່ງຍົກຕົວຢ່າງສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດ

ກ. ສຸຂະພາບຮ່າງກາຍ

ຕົວຢ່າງ

..............................................................................................................

ຂ. ສຸຂະພາບຈິດ

ຕົວຢ່າງ

..............................................................................................................

5. ຈົ່ງຍົກຕົວຢ່າງສະພາບແວດລ້ອມທີ່ສິ່ງຜົນສະທ້ອນຕໍ່ການອ່ານມີຫຍັງແດ່ ?

..........................................................................................................................

.........................................................................................................................

6. ຍ້ອນຫຍັງຄົນເຮົາບໍ່ມີຄວາມສົນໃຈໃນການອ່ານ ? ຍົກຕົວຢ່າງໜ້ອຍສຸດ 3 ຢ່າງ

.........................................................................................................................

7. ຢາກອ່ານຈັບໃຈຄວາມສຳຄັນເຮົາຄວນມີວິທີອ່ານແນວໃດ ?

..........................................................................................................................

# ໃບສະເຫຼີຍຍຄຳຕອບກິດຈະກຳ 1

1. ຍ້ອນອ່ານບໍ່ເຂົ້າໃຈ

2. ສະຕິປັນຍາ, ພື້ນຖານຄວາມຮູ້,ສຸຂະພາບຮ່າງກາຍ ແລະ ສຸຂະພາບຈິດບໍ່ດີ

3. ຈະເຮັດໃຫ້ການອ່ານບໍ່ເຂົ້າໃຈ

4. ສຸຂະພາບຮ່າງກາຍປະກອບມີ ເຈັບປ່ວຍ, ສາຍຕາສັ້ນ, ປວດຫົວ, ຕາລາຍ.
   ສຸຂະພາບຈິດປະກອບມີ ຈິດໃຈບໍ່ສະຫງົບ, ເປັນໂລກຫົວໃຈວາຍ

5. ສະພາບແວດລ້ອມທີ່ສິ່ງຜົນສະທ້ອນຕໍ່ການອ່ານປະກອບມີຄື: ອາກາດໜາວໂພດ, ຮ້ອນໂພດ, ມີສຽງລົບກວນ, ກິນເໝັນ, ຂີ້ຝຸ່ນ,ໂຕະຕັ່ງບໍ່ສະດວກ.

6. ຍ້ອນມີສິ່ງລໍ້ຈິດໃຈ ຕົວຢ່າງ: ໝູ່ຊວນໄປທ່ຽວ,ລໍ່ຖ້າຮັບໂທລະສັບ,ອ່ານເລື່ອງທີ່ຕົນເອງບໍ່ມັກ.

7. ຢາກອ່ານຈັບໃຈຄວາມສຳຄັນເຮົາຄວນອ່ານດ້ວຍຄວາມຕັ້ງໃຈ, ອ່ານແລ້ວວິເຄາະ,ອ່ານແລ້ວສັງເກດປະເດັນສຳຄັນຂອງເລື່ອງ, ອ່ານແລ້ວຕັ້ງຄຳຖາມໆຕົນເອງວ່າເຂົ້າໃຈ ຫຼື ບໍ່?

# ບົດທົດສອບຍ່ອຍ 1 (20 ນາທີ)

**1. ອັນໃດແມ່ນບັນຫາຂອງການອ່ານ**

ກ. ອ່ານບໍ່ເຂົ້າໃຈ ແລະ ອ່ານຊັກຊ້າ

ຂ. ອຸປະສັກພາຍໃນ ແລະ ອຸປະສັກພາຍນອກ

ຄ. ສຸຂະພາບ ແລະ ສະພາບແວດລ້ອມ

ງ. ຄວາມຢາກຮູ້, ຢາກເຫັນ

2. **ສະຕິປັນຍາ, ສຸຂະພາບ, ສິ່ງແວດລ້ອມ, ຄວາມສົນໃຈ ແລະ ວິທີການອ່ານ ແມ່ນຂໍ້**
ໃດ ?

ກ. ພື້ນຖານຄວາມຮູ້ຂອງຄົນເຮົາ ຂ.ສາເຫດທີ່ພາໃຫ້ມີບັນຫາໃນການອ່ານ

ຄ. ຄວາມສົນໃຈໃນການອ່ານ ງ. ຄວາມຕ້ອງການທາງທຳມະຊາດຂອງຄົນ

3. **ຄຳເວົ້າໃດແມ່ນບັນຫາໃນການອ່ານ**

ກ. ສັງຄົມ ຂ. ວິຊາຮຽນທີ່ຍາກ

ຄ. ຄວາມຮັກມັກ ງ. ສະພາບແວດລ້ອມ

**4. ອັນໃດແມ່ນສຸຂະພາບຈິດ**

**ກ.** ສາຍຕາສັ້ນ ຫຼື ຍາວ ຂ. ປວດຫົວ, ເຈັບທ້ອງ

**ຄ.**ໂລກຫົວໃຈ, ຫົວໃຈອ່ອນ **ງ.** ອາລົມງຸດງິດ

5. **ມັນສະໝອງ, ສາຍຕາ., , ປວດຫົວ, ອິດນອນ, ສະໝອງມຶນງົງ. ແມ່ນນອນຢູ່ໃນຂໍ້ໃດ**

**ກ.** ສຸຂະພາບຮ່າງກາຍ ຂ. ສຸຂະພາບຈິດ

**ຄ.** ສະຕິປັນຍາ ງ. ອຸປາສັກຮ່າງກາຍ

**6. ອັນໃດແມ່ນວິທີການອ່ານ**

ກ. ອ່ານດ້ວຍຄວາມຕັ້ງໃຈ ຂ.ອ່ານຫຼາຍໆຄັ້ງ

**ຄ.** ອ່ານແລ້ວຕັ້ງຄຳຖາມວ່າເຂົ້າໃຈບໍ່ ງ. ອ່ານແລ້ວທົບທວນຄືນ

**7. ອາກາດຮ້ອນ, ມີກິ່ນເໝັນ, ຫ້ອງຮຽນຮົກເຮື້ອ. ແມ່ນນອນຢູ່ຂໍ້ໃດ ?**

**ກ.** ສະຖານທີ່ບໍ່ສະດວກ, ຂ. ຂາດການບູລະນະຮັກສາ

**ຄ.** ສະພາບແວດລ້ອມ ງ. ເງື່ອນໄຂບໍ່ສະດວກ

# ໃບສະເຫຼີຍຄຳຕອບແບບທົດສອບຍ່ອຍ

1. ກ
2. ຂ
3. ກ
4. ງ
6. ຄ
7. ຂ
8. ຄ

# ແຜນການສອນທີ 2

ວິຊາພາສາລາວ 2 ຫ້ອງ ປີ 1. ຂ. 12+4 ພ/ວ

ບົດທີ 2 ການອ່ານໃນໃຈ (ຕໍ່) ວັນທີ......./......./2014

ຫົວຂໍ້: ການເຝິກອ່ານເພື່ອຄວາມເຂົ້າໃຈ ເວລາ 100 ນາທີ

**1. ໃຈຄວາມສຳຄັນ**

ການເຝິກອ່ານເພື່ອຄວາມເຂົ້າໃຈກ່ອນອື່ນຕ້ອງສຶກສາອົງປະກອບຂອງປຶ້ມເສຍກ່ອນຈຶ່ງລົງມືອ່ານເປັນຂັ້ນຕອນ, ເມື່ອອ່ານຈົບແລ້ວກໍ່ທົດສອບຄວາມເຂົ້າໃຈຂອງຕົນເອງ

**2. ຈຸດປະສົງເພື່ອໃຫ້ນັກສຶກສາມາດ**

ຮູ້ວິທີເຝິກອ່ານເພື່ອຄວາມເຂົ້າໃຈ

**3. ເນື້ອໃນ**

1. ການເຝິກອ່ານເພື່ອຄວາມເຈົ້າໃຈ

1.1 ສຶກສາອົງປະກອບຂອງປຶ້ມ

1.2 ຂັ້ນຕອນໃນການອ່ານ

**1.3 ທົດສອບຄວາມເຂົ້າໃຈຂອງຕົນເອງ**

1.4 ບົດເລື່ອງ: 3 ອ້າຍນ້ອງ

1. ກິດຈະກຳການຮຽນ-ການສອນ

**1. ຂັ້ນກະກຽມເນື້ອໃນ (5ນາທີ)**

- ຄູຈັດກຽມເນື້ອໃນບົດຮຽນ, ໃບຄວາມຮູ້, ໃບກິດຈະກຳ, ບົດທົດສອບຍ່ອຍເປັນຕົ້ນ
- ຄູແຈ້ງຈຸດປະສົງໃຫ້ນັກຮຽນຮູ້ວ່າ ການຈັດການຮຽນຮູ້ແບບຮ່ວມມືເທັກນິກ STAD ໂດຍໃຫ້ນັກຮຽນຮູ້ວ່າການຮຽນແບບນີ້ແມ່ນເນັ້ນການຮ່ວມມືກັນເພື່ອຜົນງານຂອງກຸ່ມ, ທຸກຄົນຈະປະຕິບັດໜ້າທີ່ຂອງຕົນເອງຢ່າງສຸດຄວາມສາມາດ ຄູເປັນຜູ້ສັງເກດ ແລະ ໃຫ້ຄຳແນະນຳ ພ້ອມທັງແຈ້ງໃຫ້ຮູ້ວ່າພວກນ້ອງມີຄວາມຮູ້ແນວໃດກ່ຽວກັບການເຝິກອ່ານເພື່ອຄວາມເຂົ້າໃຈ

**2. ຂັ້ນກິດຈະກຳກຸ່ມ (5ນາທີ)**

ຄູແບ່ງນັກຮຽນອອກເປັນ 10 ກຸ່ມໆລະ 4 ຄົນທີ່ມີຄວາມຮູ້ແຕກຕ່າງກັນຄື: ນັກຮຽນເກັ່ງ 1 ຄົນ, ກາງ 2 ຄົນ, ອ່ອນ 1 ຄົນ(ໂດຍບໍ່ແມ່ນກຸ່ມເກົ່າ)

ນັກຮຽນແບ່ງໜ້າທີ່ຮັບຜິດຊອບໃນກຸ່ມ ສະມາຊິກຕ້ອງປ່ຽນໜ້າທີ່ເພື່ອເຝິກຮັບຜິດຊອບ ເຊັ່ນ ປະສານວຽກງານ, ຈົດບັນທຶກ ປະເມີນ ຄົ້ນຫາຄຳຕອບ.

3. ຂັ້ນຈັດກິດຈະກຳການຮຽນ-ການສອນ (40ນາທີ)

ຄູໃຫ້ນັກຮຽນອ່ານໃບຄວາມຮູ້ທີ 1 ກ່ຽວກັບການເຝິກອ່ານເພື່ອຄວາມເຂົ້າໃຈປະກອບມີບັນຫາໃດແດ່ ແລະ ອ່ານເລື່ອງ 3 ອ້າຍນ້ອງ. ນັກຮຽນຄົ້ນຄວ້າສົນທະນາຊອກຫາຄຳຕອບໂດຍໃຫ້ນັກຮຽນແບ່ງວຽກກັນຮັບຜິດຊອບ

- ຄູມອບໃບກິດຈະກຳ 1 ໃຫ້ແຕ່ລະກຸ່ມຊອກຫາຄຳຕອບຈາກໃບຄວາມຮູ້ທີ 2

- ນັກສຶກສາຄົ້ນຄວ້າບົດຮຽນ ແລະ ແກ້ກິດຈະກຳ, ຖ້າບຸກຄົນໃດບໍ່ເຂົ້າໃຈ ໃຫ້ເພື່ອນໃນກຸ່ມທີ່ເຂົ້າໃຈອະທິບາຍໃຫ້ໝູ່ໃນກຸ່ມຟັງຈົນເຂົ້າໃຈ. ການອະທິບາຍມີຈຸດປະສົງເພື່ອໃຫ້ສະມາຊິກທຸກຄົນເຂົ້າໃຈບົດຮຽນເປັນຢ່າງດີ ສາມາດເຮັດແບບທົດສອບຍ່ອຍໄດ້ຄະແນນສູງຊ່ວຍໃຫ້ກຸ່ມບັນລຸເປົ້າໝາຍ

- ຄູຕິດຕາມສັງເກດການເຮັດວຽກແຕ່ລະກຸ່ມ, ສະໜັບສະໜູນ ຕຳນິ, ແນະນຳ ແລະ ຊ່ວຍເຫຼືອສົ່ງເສີມໃຫ້ແຕ່ລະກຸ່ມໃຊ້ຂະບວນການຮຽນແບບຮ່ວມມືກັນຮຽນຮູ້ໂດຍກະຕຸ້ນໃຫ້ນັກຮຽນເກັ່ງຊ່ວຍອະທິບາຍເນື້ອໃນບົດຮຽນໃຫ້ສະມາຊິກໃນກຸ່ມທີ່ຍັງບໍ່ທັນເຂົ້າໃຈ.

- ເມື່ອນັກຮຽນເຮັດກິດຈະກຳແຕ່ລະຕອນສຳເລັດແລ້ວ,ໃຫ້ປ່ຽນກັນກວດຜົນງານຂອງໝູ່ເພື່ອນສມາຊິກໃນກຸ່ມຈົນຄົບທຸກຄົນ ຖ້າພົບຂໍ້ຜິດພາດໃຫ້ເພື່ອນອະທິບາຍຊ້ຳອີກຈົນເຂົ້າໃຈ.

- ຄູແຈກໃບສະເລີຍຄຳຕອບໃບກິດຈະກຳ ທີ່ນັກຮຽນຮ່ວມກັນແກ້ ໂດຍສັບປ່ຽນກຸ່ມກວດ ຄູໃຫ້ຄຳແນະນຳເນື້ອໃນເພີ່ມເຕີມ

- ນັກຮຽນ ແລະ ຄູຊ່ວຍກັນສະຫຼຸບບົດຮຽນ ຖ້າມີສິ່ງທີ່ນັກຮຽນຍັງບໍ່ເຂົ້າໃຈຄູອະທິບາຍເພີ່ມເຕີມ ແລະ ຜູ້ຮຽນຊ່ວຍກັນປະເມີນຜົນ ການເຮັດວຽກເປັນກຸ່ມ ແລະ ພິຈາລະນາວ່າແມ່ນສິ່ງໃດທີ່ເປັນຈຸດເດັ່ນຂອງການເຮັດວຽກຮ່ວມກັນ ແລະ ແມ່ນສິ່ງໃດຄືສິ່ງທີ່ຄວນປັບປຸງ

**4. ຂັ້ນທົດສອບຍ່ອຍ (20ນາທີ)**

- ຄູທົດສອບນັກຮຽນໂດຍມີແບບທົດສອບໃຫ້ແຕ່ລະຄົນເຮັດໂດຍບໍ່ຊ່ວຍເຫຼືອກັນ, ເພື່ອວັດຄວາມຮູ້, ຄວາມເຂົ້າໃຈເນື້ອໃນບົດຮຽນ

- ຄູບັນທຶກຄະແນນເປັນລາຍບຸກຄົນ ແລະ ລວມເປັນຄະແນນກຸ່ມໂດຍລຽງຄະແນນແຕ່ຫຼາຍຫາໜ້ອຍ

**5. ຂັ້ນສະຫຼຸບ ແລະມອບລາງວັນ (30ນາທີ)**

- ຄູ ແລະ ນັກຮຽນພ້ອມກັນຕອບແບບທົດສອບ ພ້ອມທັງລວມຄະແນນໂດຍເອົາຄະແນນແຕ່ລະຄົນຂອງສະມາຊິກມາບວກເຂົ້າກັນ ແລ້ວຫານຈຳນວນຄົນໃນກຸ່ມ.

- ຄູປະກາດຄະແນນບຸກຄົນ ແລະ ຄະແນນກຸ່ມໃຫ້ນັກຮຽນຮັບຮູ້, ຊົມເຊີຍ, ຍົກຍ້ອງ, ຫຼື ມອບລາງວັນບຸກຄົນ ແລະ ກຸ່ມທີ່ໄດ້ຄະແນນສູງເພື່ອໃຫ້ນັກຮຽນແຕ່ລະຄົນຮັບຮູ້ຄະແນນຕົນເອງ ແລະ ຄະແນນຂອງກຸ່ມ ເພື່ອນຳໄປແກ້ໄຂປັບປຸງພັດທະນາຕົນເອງຕໍ່ໄປ.

• **ສື່ປະກອບການສອນ ແລະ ແຫຼ່ງການຮຽນຮູ້**

1. ປື້ມແບບຮຽນພາສາລາວ 2  2 .ໃບສະເລີຍຄຳຕອບກິດຈະກຳ 2  3.ບົດທົດສອບຍ່ອຍ
4. ໃບກິດຈະກຳ 2  5. ໃບສະເລີຍຄຳຕອບແບບທົດສອບຍ່ອຍ  6.ໃບຄວາມຮູ້

# ໃບຄວາມຮູ້ 2

1. ການເຝິກອ່ານເພື່ອຄວາມເຈົ້າໃຈ

1.1 ສຶກສາອົງປະກອບຂອງປື້ມ

- ຄຳນຳ

ເມື່ອເປີດປື້ມໜ້າທຳອິດທີຄວນອ່ານກໍຄືຄຳນຳເພາະເປັນຈຸດມຸ່ງໝາຍຄວາມຮູ້ສຶກຂອງຜູແຕ່ງ ສ່ວນຫຼາຍຜູ້ອ່ານມັກເປີດຂ້າມໄປ ທັງໆທີ່ເປັນສ່ວນສຳຄັນອັນດັບໜຶ່ງຂອງປື້ມ

- ສາລະບານ

ແມ່ນເຂັມທິດທີ່ຈະຊີ້ນຳຜູ້ອ່ານໄປຍັງເລື່ອງທີຕ້ອງການອ່ານ, ປື້ມທີມີສາລະບານລະອຽດ, ຄວນເປີດເບິ່ງສາລະບານກ່ອນເພື່ອຮູ້ທິດທາງຂອງເລື່ອງ ແລະ ເພື່ອກວດເບິ່ງວ່າມີຫົວຂໍ້ເລື່ອງທີຄ້ອງການອ່ານຫຼືບໍ່

- ເນື້ອເລື່ອງ

ແມ່ນເນື້ອໃນທີ່ເປັນອົງປະກອບຫຼັກຂອງປື້ມ

- ເຊີງອັດ

ແມ່ນຂໍ້ຄວາມບາງຕອນຂອງປື້ມ ໂດຍສະເພາະຕຳລາວິຊາການມັກມີການອ້າງອີງຂໍ້ຄວາມຈາກປື້ມອື່ນ, ມີການອະທິບາຍຂະຫຍາຍຕວາມບາງເລື່ອງໂດຍໃສ່ຕົວເລກໄວ້ທ້າຍຂອງປື້ມ. ຖ້າວ່າຜູ້ອ່ານສົນໃຈຢາກຮູ້ເລື່ອງໂດຍລະອຽດ, ຕ້ອງການຄົ້ນຫາແຫຼ່ງທີມາຂອງຂອງຂໍ້ຄວາມນັ້ນ ເຊິ່ງຕ້ອງເບິ່ງຢູ່ທ້າຍປື້ມນັ້ນ

- ດັດສະນີ

ໃນຕຳລາຂອງລາວບໍ່ຄ່ອຍມີ, ສ່ວນຫຼາຍຢູ່ໃນຕຳລາຕ່າງປະເທດ, ດັດສະນີມີລັກສະນະຄ້າຍຄືສາລະບານຢ່າງລະອຽດ ໂດຍລຽງລຳດັບຕົວອັກສອນ ຖ້າຜູ້ອ່ານຕ້ອງການອ່ານຫົວເລື່ອງໃດກໍເປີດຫາໄດ້ຢ່າງວ່ອງໄວທັນໃຈໂລດ

- ບັນນານຸກົມ

ເປັນລາຍຊື່ປື້ມທີຜູ້ຂຽນໃຊ້ໄວ້ຄົ້ນຄວ້າ, ໃຊ້ປະກອບການຂຽນ, ລຽງລຳດັບຕົວອັກສອນ, ຊື່ຜູ້ແຕ່ງ, ຜູ້ອ່ານທີສົນໃຈຢາກອ່ານເລື່ອງປະເພດດຽວກັນໃຫ້ກວ້າງຂວາງຍິ່ງຂຶ້ນກໍຈະກາໄດ້ໂດຍສະດວກ

1.2. ຂັ້ນຕອນໃນການອ່ານ

- ການອ່ານຜ່ານໆ

ຂັ້ນຕອນເບື້ອງຕົ້ນຂອງການອ່ານຄວນອ່ານຄຳນຳ ແລະ ສາລະບານກ່ອນເພື່ອໃຫ້ຮູ້ໂຄງເລື່ອງ ການອ່ານຂັ້ນທຳອິດນີ້ຈະອ່ານເຫຼັ້ມໃດກໍຄວນອ່ານຜ່ານໆເພື່ອໃຫ້ເຫັນພາບລວມຂອງປື້ມ

- ການອ່ານເອົາເລື່ອງ

ເປັນການອ່ານເພື່ອໃຫ້ຮູ້ເລື່ອງຈັບໃຈຄວາມສຳຄັນໄດ້ການອ່ານຂັ້ນນີ້ຄວນອ່ານຕິດຕໍ່ກັນຈົນກ່ວາຈະຈົບເນື້ອຄວາມເພື່ອໃຫ້ໄດ້ແນວຄິດ, ໃຈຄວາມສຳຄັນໂດຍບໍ່ຂາດຕອນ ຖ້າຫາກມີສັບຍາກ ຫຼື ຂໍ້ຄວາມຍາກອາດອ່ານຜ່ານເລີຍກ່ອນ ອາດເຮັດເຄື່ອງໝາຍຂໍ້ຄວາມທີຍັງບໍ່ທັນເຂົ້າໃຈ ຫຼື ຂີດເສັ້ນລຸ່ມຂໍ້ຄວາມສຳຄັນໄວ້

ບໍ່ຄວນຈົດບັນທຶກສາລະສຳຄັນໃນລະຫວ່າງນີ້ຈົນກ່ວາຈະອ່ານໃຫ້ເຂົ້າໃຈໂດຍຕະຫຼອດຫົວເລື່ອງແຕ່ລະໄລຍະເສຍກ່ອນ.

• ການອ່ານຊ້ຳ

ຫຼັງຈາກທີ່ອ່ານໂດຍລະອຽດແລ້ວຫາກມີຕອນໃດ ຫຼື ຄຳສັບໃດບໍ່ເຂົ້າໃຈຕ້ອງຊອກຫາຄວາມໝາຍຂອງຄຳສັບ ແລະ ທຳຄວາມເຂົ້າໃຈໃຫ້ລະອຽດເສຍກ່ອນ.

• ການບັນທຶກສາລະສຳຄັນ

ເພື່ອເຂົ້າໃຈຢ່າງລະອຽດ ທັງພາກສ່ວນລວມ ແລະ ພາກສ່ວນຍ່ອຍແລ້ວຈຶ່ງຄ່ອຍລົງມືບັນທຶກເອົາສາລະສຳຄັນຈາກການອ່ານ. ການບັນທຶກສາລະສຳຄັນຕ້ອງບັນທຶກໂດຍຫຍໍ້.

1,3. **ທົດສອບຄວາມເຂົ້າໃຈຂອງຕົນເອງ**

ການທົດສອບຄວາມເຂົ້າໃຈຈະເຮັດໃຫ້ຮູ້ວ່າຕົນເອງມີຄວາມຮູ້ໃນເລື່ອງທີ່ອ່ານພຽງໃດ, ອາດເຮັດວິທີທົດສອບທ້າຍເລື່ອງ ໂດຍໃຫ້ໝູ່ເພື່ອນເປັນຜູ້ຕັ້ງຄຳຖາມສ່ວນຕົວເອງເປັນຜູ້ຕອບ ຫຼື ຕັ້ງຄຳຖາມແລ້ວຕອບດ້ວຍຕົນເອງ

**ບົດເລື່ອງ: 3 ອ້າຍນ້ອງ**

ໃນສະໄມກ່ອນ, ຢູ່ນະຄອນພະລານະສີມີຄອບຄົວໜຶ່ງ ເຊິ່ງມີອ້າຍນ້ອງ 3 ຄົນໄດ້ດຳລົງຊີວິດຮ່ວມກັນພາຍຫຼັງພໍ່ແມ່ຂອງເຂົາເຈົ້າໄດ້ຕາຍໄປ, ອ້າຍກົກເປັນຜູ້ເບິ່ງແຍງຄອບຄົວ. ເຂົາເຈົ້າໄດ້ພ້ອມກັນອອກເຫື່ອເທແຮງເພີ່ມພູນພະລິດຜົນ ຈົນມີຊື່ວ່າ ຄອບຄົວເລົ່າເຂົ້າຫຼວງ ຍ້ອນແນວນັ້ນພວກໂຈນຈຶ່ງມາປອງລັກເຂົ້າ ແລະ ຄວາຍ 3 ອ້າຍນ້ອງສາມັກຄີປ້ອງກັນເປັນຢ່າງດີ, ໂຈນທີ່ມາປອງລັກນັ້ນຕ້ອງພ່າຍໜີໄປ.

ຢູ່ມາໄລຍະໜຶ່ງນ້ອງຊາຍຫຼ້າໄດ້ຟັງຄວາມໂຈນຜູ້ໜຶ່ງ ກໍມີແນວຄິດຂັດແຍ່ງກັນ ແລະ ຢາກພາເມຍຂອງຕົນອອກຈາກເຮືອນຕ່າງຫາກ. ມື້ໜຶ່ງອ້າຍນ້ອງທັງ 3 ໄດ້ແບ່ງນາທີ່ພໍ່ໄດ້ປະໄວ້ນັ້ນ,ອ້າຍກົກໄດ້ຫງ່ວມເຫົງາເສົ້າໂສກ ພ້ອມທັງຮ້ອງໄຫ້ ເມື່ອເຫັນງ່າໄມ້ງ່າໜຶ່ງຢູ່ໜ້າເຮືອນ ແຫ່ວແຫ້ງຫຼົ່ນລົງດິນ ນ້ອງທັງ 2 ເຫັນສະພາບຂອງອ້າຍ ຈຶ່ງຖາມວ່າ ກົກໄມ້ນັ້ນມັນມີອັນໃດທີ່ພາໃຫ້ອ້າຍຮ້ອງໄຫ້ ?ອ້າຍກົກຕອບວ່າ ແຕ່ກ່ອນງ່າໄມ້ທີ່ຖືກແຫ່ວແຫ້ງນີ້ ມັນຂຽວງາມດີ, ມັນມີຊີວິດຄືກັນກັບງ່າອື່ນ ພ້ອມກັນສົ່ງຜົດຜົນຄວາມເຢືອກເຢັນມາສູ່ຄອບຄົວເຮົາ; ມາເຖິງດຽວນີ້, ຄວາມແຫ່ວແຫ້ງຂອງມັນເກີດຂຶ້ນຍ້ອນມີບົ້ງເຈາະລຳຕົ້ນ, ກິ່ງກ້ານສາຂາໃກ້ຈະຫຼົ່ນອອກຈາກລຳມັນແລ້ວ ປຽບເໝືອນນ້ອງຊາຍຫຼ້າຮ່ວມທ້ອງແມ່ດຽວກັນ ທີ່ຈະຈາກພວກເຮົາໄປໃນເວລານີ້ ຄິດເຖິງບ່ອນນີ້ຈຶ່ງພາໃຫ້ອ້າຍຮ້ອງໄຫ້ເພາະວ່າເປັນຫ່ວງໃນຄອບຄົວ.

ນ້ອງຊາຍຫຼ້າສະເດີດຂຶ້ນ ເພາະວ່າຮູ້ຄວາມຜິດຂອງຕົນ ແລະ ກໍຮ້ອງໄຫ້ພ້ອມກັນ, ຍ້ອນເຫັນຄວາມຜິດພາດ. ແຕ່ນັ້ນມາພວກເຂົາເຂົ້າກໍໄດ້ປຸ້ມລຸມກັນສ້າງສາ ແລະ ຂະຫຍາຍການເພີ່ມພູນຈົນໄດ້ກາຍເປັນຄອບຄົວແບບຢ່າງ.

# ໃບກິດຈະກຳ 2

1. ຄຳນຳ, ສາລະບານ, ເຊີງອັດ, ດັດສະນີ ແລະ ບັນນານຸກົມ ໃຊ້ໄວ້ເຮັດຫຍັງ ?

ກ. ຄຳນຳ

..............................................................................................................................

ຂ. ສາລະບານ

..............................................................................................................................

ຄ. ເຊີງອັດ

..............................................................................................................................

ງ. ດັດສະນີ

..............................................................................................................................

ຈ. ບັນນານຸກົມ

..............................................................................................................................

2 ອ່ານເອົາເລື່ອງແມ່ນອ່ານແບບໃດ ?

..............................................................................................................................

3. ທົດສອບຄວາມເຂົ້າໃຈຂອງຕົນເອງຄວນເຮັດແນວໃດ ?

..............................................................................................................................

..............................................................................................................................

4. ບົດເລື່ອງ 3 ອ້າຍນ້ອງໄດ້ສຶກສາໃຫ້ເຮົາຮູ້ບັນຫາໃດແດ່ ?

..............................................................................................................................

5. ເລື່ອງ 3 ອ້າຍນ້ອງ ເປັນຫຍັງ ? ອ້າຍກົກຈຶ່ງຮ້ອງໄຫ້ ?

..............................................................................................................................

6. ຈົ່ງບອກເລື່ອງ 3 ອ້າຍນ້ອງແມ່ນບົດເລື່ອງປະເພດໃດ ຕົວຢ່າງ : ບົດເລື່ອງ, ບົດລະຄອນ, ບົອາລົມຈິດ

# ໃບສະເຫຼີຍກິດຈະກຳ 2

1. ຄຳນຳ, ສາລະບານ, ເຊີງອັດ, ດັດສະນີ ແລະ ບັນນານຸກົມ ໃຊ້ໄວ້ເພື່ອ

    ກ. ເພື່ອຮູ້ຈຸດມຸ່ງໝາຍຂອງຜູ້ຂຽນ

    ຂ. ເພື່ອຮູ້ທິດທາງຂອງເລື່ອງ ແລະຮູ້ຫົວຂໍ້ເລື່ອງທີ່ຈະອ່ານ

    ຄ. ໃຊ້ໄວ້ເພື່ອຄົ້ນຫາແຫຼ່ງຂໍ້ມູນທີ່ຕ້ອງການ

    ງ. ໃຊ້ໄວ້ເພື່ອສະດວກໃນເວລາຕ້ອງການອ່ານຫົວ ຂໍ້ໃດໜຶ່ງ

2. ອ່ານໃຫ້ຮູ້ເລື່ອງ, ຈັບໃຈຄວາມສຳຄັນໄດ້.

3. ທົດສອບຄວາມເຂົ້າໃຈຂອງຕົນເອງຄວນໃຫ້ຜູ້ອື່ນຕັ້ງຄຳຖາມ ສ່ວນຕົນເອງເປັນຜູ້ຕອບ

4. ບົດເລື່ອງ 3 ອ້າຍນ້ອງໄດ້ສິກສາໃຫ້ເຮົາຮູ້ຄວາມສາມັກຄີຮັກແພງ ລະຫ່ວາງອ້າຍນ້ອງ ແລະບໍ່ຄວນເຊື່ອງ ຟັງຄຳເວົ້າຂອງສັດຕູ

5. ຍ້ອນວ່າອ້າຍໄດ້ປຽບທຽບງ່າໄມ້ທີ່ແຫ່ວແຫ້ງກັບນ້ອງຊາຍ

6. ປະເພດບົດເລື່ອງ

# ໃບທົດສອບຍ່ອຍ 2

**1. ຢາກອ່ານເພື່ອຄວາມເຂົ້າໃຈເຮົາຈະຕ້ອງສຶກສາດ້ານໃດແດ່?**

**ກ.** ສຶກສາອົງປະກອບຂອງປຶ້ມ,ຂັ້ນຕອນການອ່ານ, ທົດສອບຄວາມເຂົ້າໃຈຂອງຕົນເອງ

**ຂ.** ສຶກສາເນື້ອໃນ, ສ່ວນປະກອບ, ອ່ານຫຼາຍຄັ້ງ

ຄ. ສຶກສາອົງປະກອບຂອງເລື່ອງ, ຄວາມເປັນມາ

ງ ສຶກສາຕົວລະຄອນ, ຮູບແບບການແຕ່ງຂອງຜູ້ຂຽນ

**2. ເຮົາຄວນສຶກສາອົງປະກອບຂອງປຶ້ມອັນໃດແດ່ ?**

ກ. ຄຳນຳ, ສາລະບານ, ເນື້ອໃນ... ຂ. ຕົວລະຄອນ, ວິທີການແຕ່ງ

ຄ. ເນື້ອໃນ, ປະຫວັດຄວາມເປັນມາ ງ. ເນື້ອໃນ, ຄຳສັບ, ປະໂຫຍກ

**3. ອັນໃດແມ່ນຂັ້ນຕອນຂອງການອ່ານ**

ກ. ສຶກສາໂຄງເລື່ອງ, ອ່ານ ແລະ ຈົດບັນທຶກ, ຂ. ອ່ານຜ່ານ, ອ່ານລະອຽດ

ຄ. ອ່ານຜ່ານໆ, ອ່ານເອົາເລື່ອງ, ອ່ານຊ້ຳ ງ. ອ່ານເອົາເລື່ອງ, ຈົດບັນທຶກ

**4. ການອ້າງອີງຂໍ້ຄວາມຈາກປຶ້ມອື່ນ, ມີການອະທິບາຍຂະຫຍາຍຄວາມບາງເລື່ອງໂດຍໃຊ້ຕົວເລກໄວ້ທ້າຍປຶ້ມ ແມ່ນຂໍ້ໃດ ?**

ກ. ບັນນານຸກົມ ຂ. ດັດສະນີ

ຄ. ສາລະທີຄວນຮູ້ ງ. ເຊີງອັດ

**5. ອົງປະກອບຫຼັກຂອງປຶ້ມແມ່ນ**

ກ. ເນື້ອໃນ ຂ. ດັດສະນີ

ຄ. ເຊີງອັດ ງ. ສາລະບານ

**6. ການເບິ່ງສາລະບານເພື່ອຈຸດປະສົງຫຍັງ ?**

ກ. ເພື່ອຮູ້ບົດ ຂ. ເພື່ອຮູ້ເນື້ອໃນ

ຄ. ເພື່ອຮູ້ອົງປະກອບ ງ. ເພື່ອເບິ່ງຫົວຂໍ້ທີ່ຈະຕ້ອງອ່ານ

**7. ເຊີງອັດໃຊ້ໄວ້ເພື່ອຫຍັງ ?**

ກ. ໃຊ້ເບິ່ງຫົວຂໍ້ ຂ. ໃຊ້ອະທິບາຍ

ຄ. ເພື່ອຊອກຫາເນື້ອໃນ ງ. ຕ້ອງການຄົ້ນຫາແຫຼ່ງທີ່ມາຂອງຂໍ້ຄວາມນັ້ນ

**8. ຕົວລະຄອນເອກຂອງເລື່ອງ 3 ອ້າຍນ້ອງແມ່ນ**

ກ. ນ້ອງຊາຍຜູ້ທີ 1 ຂ. ອ້າຍກົກ

ຄ. ນ້ອງຊາຍຫຼ້າ ງ. ແມ່ນທັງ 3 ຄົນ

# ໃບສະເຫຼີຍຄຳຕອບບົດທົດສອບຍ່ອຍ 2

1. ກ
2. ຄ
3. ຂ
4. ງ
5. ຄ
6. ງ
7. ກ
8. ຂ

# ແຜນການສອນທີ 3

ວິຊາພາສາລາວ 2 ຫ້ອງປີ 1. ຂ. 12+4 ພ/ວ

ບົດທີ 3 ການອ່ານໃນຈໃຈ (ຕໍ່) ວັນທີ......./......./2014

ຫົວຂໍ້: ອັດຕາຄວາມໄວໃນການອ່ານໃນໃຈ ເວລາ 100 ນາທີ

**1. ໃຈຄວາມສຳຄັນ**

ອັດຕາຄວາມໄວໃນການອ່ານໃນໃຈແບ່ງອອກເປັນ 3 ຢ່າງຄື: ອັດຕາຄວາມໄວໃນການອ່ານຂອງນັກຮຽນ, ການປັບປ່ຽນຂອງອັດຕາຄວາມໄວໃນການອ່ານ ແລະ ວິທີຫາອັດຕາຄວາມໄວໃນການອ່ານ

**2. ຈຸດປະສົງເພື່ອໃຫ້ນັກສຶກສາມາດ**

ຮູ້ອັດຕາຄວາມໄວໃນການອ່ານໃນໃຈ

**3. ເນື້ອໃນ**

**1. ອັດຕາຄວາມໄວໃນການອ່ານໃນໃຈ**

**1.1. ອັດຕາຄວາມໄວໃນການອ່ານຂອງນັກຮຽນ**

**1.2. ການປັບປ່ຽນຂອງອັດຕາຄວາມໄວໃນການອ່ານ**

**• ເລື່ອງ ລູກນົກແຂກ**

**4. ກິດຈະກຳການຮຽນ-ການສອນ**

**1. ຂັ້ນກະກຽມເນື້ອໃນ (5ນາທີ)**

• ຄູຈັດກຽມເນື້ອໃນບົດຮຽນ, ໃບຄວາມຮູ້, ໃບກິດຈະກຳ, ບົດທົດສອບຍ່ອຍເປັນຕົ້ນ

• ຄູແຈ້ງຈຸດປະສົງໃຫ້ນັກຮຽນຮູ້ວ່າ ການຈັດການຮຽນຮູ້ແບບຮ່ວມມືເທັກນິກ STAD ໂດຍໃຫ້ນັກຮຽນຮູ້ວ່າການຮຽນແບບນີ້ແມ່ນເນັ້ນການຮ່ວມມືກັນເພື່ອຜົນງານຂອງກຸ່ມ, ທຸກຄົນຈະປະຕິບັດໜ້າທີ່ຂອງຕົນເອງຢ່າງສຸດຄວາມສາມາດ ຄູເປັນຜູ້ສັງເກດ ແລະ ໃຫ້ຄຳແນະນຳ ພ້ອມທັງແຈ້ງໃຫ້ຮູ້ວ່າພວກນ້ອງມີຄວາມຮູ້ແນວໃດກ່ຽວກັບບັນຫາໃນການອ່ານໃນໃຈ.

**2. ຂັ້ນຈັດກຸ່ມ (5ນາທີ)**

- ຄູແບ່ງນັກຮຽນອອກເປັນ 10 ກຸ່ມໆລະ 4 ຄົນທີ່ມີຄວາມຮູ້ແຕກຕ່າງກັນຄື: ນັກຮຽນເກ່ງ 1 ຄົນ, ກາງ 2 ຄົນ, ອ່ອນ 1 ຄົນ(ໂດຍບໍ່ແມ່ນກຸ່ມເກົ່າ) .

ຄູໃຫ້ນັກຮຽນຄົ້ນຄວ້າຂໍ້ທີ 3 ຂອງບົດທີ 2 ອັດຕາຄວາມໄວໃນການອ່ານໃນໃຈ ແລະ ອ່ານ ເລື່ອງ ລູກນົກແຂກ ເພື່ອທົດສອບຄວາມໄວຂອງແຕ່ລະກຸ່ມ(ອ່ານໄວ ແລະ ຈັບບັນຫາສຳຄັນໃຫ້ໄດ້) ໂດຍໃຫ້ນັກຮຽນແບ່ງວຽກບຸກຄົນຮັບຜິດຊອບນັກຮຽນແບ່ງໜ້າທີ່ຮັບຜິດຊອບໃນກຸ່ມ ສະມາຊິກຕ້ອງປ່ຽນໜ້າທີ່ເພື່ອເຝິກຮັບຜິດຊອບ ເຊັ່ນ;ປະສານວຽກງານ, ຈົດບັນທຶກ ປະເມີນ ຄົ້ນຫາຄຳຕອບ.

**3. ຂັ້ນສອນ (40 ນາທີ)**

-ຄູໃຫ້ນັກຮຽນອ່ານໃບຄວາມຮູ້ທີ 1 ກ່ຽວກັບອັດຕາຄວາມໄວໃນການອ່ານໃນໃຈປະກອບມີບັນຫາໃດແດ່ ແລະ ອ່ານເລື່ອງລູກນົກແຂກ ນັກຮຽນຄົ້ນຄວ້າສົນທະນາຊອກຫາຄຳຕອບໂດຍໃຫ້ນັກຮຽນແບ່ງວຽກກັນຮັບຜິດຊອບ.

- ຄູມອບໃບກິດຈະກຳ 1 ໃຫ້ແຕ່ລະກຸ່ມຊອກຫາຄຳຕອບຈາກໃບຄວາມຮູ້ທີ 3

- ນັກຮຽນຄົ້ນຄວ້າບົດຮຽນ ແລະ ແກ້ກິດຈະກຳ, ຖ້າບຸກຄົນໃດບໍ່ເຂົ້າໃຈ ໃຫ້ເພື່ອນໃນກຸ່ມທີເຂົ້າໃຈອະທິບາຍໃຫ້ໝູ່ໃນກຸ່ມຟັງຈົນເຂົ້າໃຈ. ການອະທິບາຍມີຈຸດປະສົງເພື່ອໃຫ້ສະມາຊິກທຸກຄົນເຂົ້າໃຈບົດຮຽນເປັນຢ່າງດີ ສາມາດເຮັດແບບທົດສອບຍ່ອຍໄດ້ຄະແນນສູງຊ່ວຍໃຫ້ກຸ່ມບັນລຸເປົ້າໝາຍ

- ຄູຕິດຕາມສັງເກດການເຮັດວຽກແຕ່ລະກຸ່ມ, ສະໜັບສະໜູນ ຕຳນິ, ແນະນຳ ແລະ ຊ່ວຍເຫຼືອສິ່ງເສີມໃຫ້ແຕ່ລະກຸ່ມໃຊ້ຂະບວນການຮຽນແບບຮ່ວມມືກັນຮຽນຮູ້ໂດຍກະຕຸ້ນໃຫ້ນັກຮຽນເກັ່ງຊ່ວຍອະທິບາຍເນື້ອໃນບົດຮຽນໃຫ້ສະມາຊິກໃນກຸ່ມທີ່ຍັງບໍ່ທັນເຂົ້າໃຈ.

- ເມື່ອນັກຮຽນເຮັດກິດຈະກຳແຕ່ລະຕອນສຳເລັດແລ້ວ,ໃຫ້ປ່ຽນກັນກວດຜົນງານຂອງໝູ່ເພື່ອນສະມາຊິກໃນກຸ່ມຈົນຄົບທຸກຄົນ ຖ້າພົບຂໍ້ຜິດພາດໃຫ້ເພື່ອນອະທິບາຍຊ້ຳອີກຈົນເຂົ້າໃຈ.

- ຄູແຈກໃບສະເຫຼີຍຄຳຕອບໃບກິດຈະກຳ ທີ່ນັກຮຽນຮ່ວມກັນແກ້ ໂດຍສັບປ່ຽນກຸ່ມກວດ ຄູໃຫ້ຄຳແນະນຳເນື້ອໃນເພີ່ມເຕີມ.

- ນັກຮຽນ ແລະ ຄູຊ່ວຍກັນສະຫຼຸບບົດຮຽນ ຖ້າມີສິ່ງທີນັກຮຽນຍັງບໍ່ເຂົ້າໃຈຄູອະທິບາຍເພີ່ມເຕີມ ແລະ ຜູ້ຮຽນຊ່ວຍກັນປະເມີນຜົນ ການເຮັດວຽກເປັນກຸ່ມ ແລະ ພິຈາລະນາວ່າແມ່ນສິ່ງໃດທີ່ເປັນຈຸດເດັ່ນຂອງການເຮັດວຽກຮ່ວມກັນ ແລະ ແມ່ນສິ່ງໃດຄືສິ່ງທີ່ຄວນປັບປຸງ.

**4.ຂັ້ນທົດສອບຍ່ອຍ (20 ນາທີ)**

- ຄູທົດສອບນັກຮຽນໂດຍມີແບບທົດສອບໃຫ້ແຕ່ລະຄົນເຮັດໂດຍບໍ່ຊ່ວຍເຫຼືອກັນ, ເພື່ອວັດຄວາມຮູ້, ຄວາມເຂົ້າໃຈເນື້ອໃນບົດຮຽນ.

- ຄູບັນທຶກຄະແນນເປັນລາຍບຸກຄົນ ແລະ ລວມເປັນຄະແນນກຸ່ມໂດຍລຽງຄະແນນແຕ່ຫຼາຍຫາໜ້ອຍ

**5.ຂັ້ນຮັບຮອງຜົນງານ ແລະມອບລາງວັນ (30 ນາທີ)**

- ຄູ ແລະ ນັກຮຽນພ້ອມກັນຕອບແບບທົດສອບ ພ້ອມທັງລວມຄະແນນໂດຍເອົາຄະແນນແຕ່ລະຄົນຂອງສະມາຊິກມາບວກເຂົ້າກັນ ແລ້ວຫານຈຳນວນຄົນໃນກຸ່ມ.

ຄູປະກາດຄະແນນບຸກຄົນ ແລະ ຄະແນນກຸ່ມໃຫ້ນັກຮຽນຮັບຮູ້, ຊົມເຊີຍ, ຍົກຍ້ອງ, ຫຼື ມອບລາງວັນບຸກຄົນ ແລະ ກຸ່ມທີ່ໄດ້ຄະແນນສູງເພື່ອໃຫ້ນັກຮຽນແຕ່ລະຄົນຮັບຮູ້ຄະແນນຕົນເອງ ແລະ ຄະແນນຂອງກຸ່ມເພື່ອນຳໄປແກ້ໄຂປັບປຸງພັດທະນາຕົນເອງຕໍ່ໄປ.

• **ສື່ປະກອບການສອນ ແລະ ແຫຼ່ງການຮຽນຮູ້**

1. ປຶ້ມແບບຮຽນພາສາລາວ 2 2 .ໃບສະເຫຼີຍຄຳຕອບກິດຈະກຳ 1 3. ບົດທົດສອບຍ່ອຍ 1
4.ໃບກິດຈະກຳ 1 5. ໃບສະເຫຼີຍຄຳຕອບແບບທົດສອບຍ່ອຍ 6.ໃບຄວາມຮູ້ 1

# ໃບຄວາມຮູ້ທີ 3

## 1. ອັດຕາຄວາມໄວໃນການອ່ານໃນໃຈ

### 1.1. ອັດຕາຄວາມໄວໃນການອ່ານຂອງນັກຮຽນ

ອັດຕາຄວາມໄວໃນການອ່ານ ໝາຍເຖິງອັດຕາຄວາມໄວໃນການອ່ານພາສາລາວໃນໃຈໂດຍກຳນົດຄຳຕໍ່ນາທີ ,ການຫາອັດຕາຄວາມໄວໃນການອ່ານຂອງບຸກຄົນອາດຈະທົດລອງເບິ່ງວ່ານາທີໜຶ່ງອ່ານໄດ້ຈັກຄຳ ແລະ ເຂົ້າໃຈປະມານຮ້ອຍລະເທົ່າໃດ

ຕົວຢ່າງຜົນການວິໄຈ

- ນັກຮຽນປ 5 ອ່ານໄດ້ 153 ຄຳຕໍ່ນາທີລະດັບຄວາມເຂົ້າໃຈສະເລຍຮ້ອຍລະ74,07%
- ນັກຮຽນມ 1 ອ່ານໄດ້ 308 ຄຳຕໍ່ນາທີ ລະດັບຄວາມເຂົ້າໃຈຮ້ອຍລະ 82%
- ນັກຮຽນ ມ 2 ອ່ານໄດ້ 279 ຄຳຕໍ່ນາທີ ລະດັບຄວາມເຂົ້າໃຈຮ້ອຍລະ 60 %
- ນັກຮຽນ ມ 3 ອ່ານໄດ້ 263 ຄຳຕໍ່ນາທີ ລະດັບຄວາມເຂົ້າໃຈຮ້ອຍລະ 64 %

ນັກສຶກສາມະຫາວິທະຍາໄລປີ 1 ອ່ານໄດ້ 389 ຄຳຕໍ່ນາທີ ລະດັບຄວາມເຂົ້າໃຈຮ້ອຍລະ 71,19 %

### 1.2. ການປັບປຸງຂອງອັດຕາຄວາມໄວໃນການອ່ານ

ການປັບປຸງນີ້ອາດຈັດເປັນ 3 ລະດັບ ຄື

- ການອ່ານທີ່ມີອັດຕາຄວາມໄວລະດັບສູງ, ໃຊ້ໃນການອ່ານເພື່ອຄວາມເພີດເພີນ, ອ່ານຜ່ານໆເພື່ອຮູ້ເຄົ້າເລື່ອງ ຫຼື ທົບທວນເລື່ອງທີ່ອ່ານມາແລ້ວ
- ການອ່ານທີ່ມີອັດຕາຄວາມໄວປານກາງ, ໃຊ້ໃນການອ່ານເອົາເລື່ອງເພື່ອຈັບໃຈຄວາມສຳຄັນ ຫຼື ເພື່ອໃຫ້ໄດ້ລາຍລະອຽດພໍສົມຄວນ.
- ການອ່ານທີ່ມີຄວາມໄວລະດັບຕ່ຳ ຄືການອ່ານຢ່າງຊ້າໆເປັນການອ່ານທີ່ມີຈຸດປະສົງເພື່ອໃຫ້ເກີດພຶດຕິກຳຂັ້ນສູງ ເຊັ່ນວິເຄາະ ແລະ ປະເມີນຜົນເປັນຕົ້ນແມ່ນ ບົດກາວີ, ປັດສະຍາ, ສາສະໜາ.

- **ເລື່ອງ ລູກນົກແຂກ**

ດູລາລູກທັງສອງ ພໍ່ເອີຍ ອັນໜຶ່ງເປັນດັ່ງນົກແຂກເຕົ້າລູກແມ່ຮັ່ງດຽວ ລົມກໍມາພານ ພັດພາກກັນຄົນລະເບື້ອງ. ແຕ່ນັ້ນເຈົ້າລັດສີມາເຫັນກໍເອົາໄປລ້ຽງ ສອນໃຫ້ປາກຕ້ານຈາກ່າວຄຳຄົນ ນົກກໍເລີຍຮ່ຳຮູ້ຈາລະນາ ມາຍັງຄຳອັນມ່ວນເພາະເສາະໃສໃຈກູນາແຜ່ກ້ວາງຄຳເວົ້າຊອບທຳ. ຕົວໜຶ່ງນັ້ນນາຍພານເນື້ອເດີນມາເຫັນກໍເອົາໄປລ້ຽງແຕ່ນັ້ນນົກກໍເລີຍຮ່ຳຮູ້ຄຳປາກນາຍພານມັນກໍຈາຄຳແຂງວ່າຂ້າຕີເລີງເລື້ອຍຊາດຜູ້ເປັນນາຍພານນີ້ມັນກໍຫາກຈາແຕ່ຄຳຮ້າຍນັ້ນແລ ບຸກຄົນໃດຜູ້ໃດກໍດີເພິ່ນວ່າພໍ່ແມ່ຫາກຖ່ອຍຮ້າຍລູກກໍເປັນຄົນຖ່ອຍຮ້າຍດັ່ງນັ້ນແລ.

# ໃບກິດຈະກໍາ 3

## ທົດສອບຄວາມໄວການອ່ານຂອງນັກຮຽນ

1. ເນື້ອໃນລວມຂອງເລື່ອງລູກນົກແຂກເວົ້າເຖິງຫຍັງ ?

.......................................................................................................................

.......................................................................................................................

.......................................................................................................................

.......................................................................................................................

2. ເລື່ອງລູກນົກແຂກສຶກສາໃຫ້ເຮົາຮູ້ບັນຫາໃດແດ່ ?

.......................................................................................................................

.......................................................................................................................

.......................................................................................................................

3. ລູກນົກແຂກແມ່ນໃຜແດ່ເອົາໄປລ້ຽງ

.......................................................................................................................

.......................................................................................

4. ລີສີ ແລະ ນາຍພານແມ່ນໃຜສັ່ງສອນລູກນົກແຂກເວົ້າດີຫຼືວມ່ອນ ?

.......................................................................................................................

.......................................................................................................................

5. ນັກຮຽນຂັ້ນໃດອ່ານໜັງສືໄດ້ຫຼາຍກ່ວາໝູ່ ?

.......................................................................................................................

.......................................................................................................................

6. ນັກຮຽນຂັ້ນໃດອ່ານໜັງສືໄດໜ້ອຍກ່ວາໝູ່ ?

.......................................................................................................................

.......................................................................................................................

# ໃບສະເຫຼີຍຄຳຕອບ 3

1. ເນື້ອໃນລວມຂອງເລື່ອງລູກນົກແຂກເວົ້າເຖິງຄົນເຮົາຕົກຢູ່ໃນສະພາບແວດລ້ອມໃດກໍຍອມຂຶ້ນກັບສະພາບແວດລ້ອມນັ້ນ
2. ເລື່ອງລູກນົກແຂກສຶກສາໃຫ້ເຮົາຮູ້ກ່ຽວກັບສະພາບແວດລ້ອມສາມາດຕັດສິນການຄົງຕົວ ແລະ ຂະຫຍາຍຕົວຄວາມຮູ້ ແລະ ຄວາມສາມາດຂອງຄົນເຮົາ
3. ລູກນົກແຂກແມ່ນ ລີສີ ແລະ ນາຍພານເປັນຜູ້ເອົາໄປລ້ຽງ
4. ແມ່ນລີສີເປັນຜູ້ສອນໃຫ້ລູກນົກແຂກເວົ້າດີຫຼືວມ່ອນ
5. ນັກຮຽນຂັ້ນມະຫາວິທະຍາໄລອ່ານໄດ້ໄວຫຼາຍກ່ວາໝູ່
6. ນັກຮຽນ ປ 5 ອ່ານໄດ້ໜ້ອຍກ່ວາໝູ່

# ໃບທົດສອບຍ່ອຍ 3

1. **ອັດຕາຄວາມໄວໃນການອ່ານໃນໃຈອ່ານໄດ້ 153 ຄຳຕໍ່ນາທີແມ່ນນັກຮຽນ**

   ກ.ນັກຮຽນ ມ1   ຂ. ນັກຮຽນ ປ 5

   ຄ. ນັກຮຽນ ມ2   ງ. ນັກຮຽນ ມ3

2. **ອັດຕາຄວາມໄວໃນການອ່ານໃນໃຈອ່ານໄດ້ 308 ຄຳຕໍ່ນາທີແມ່ນນັກຮຽນ**

   ກ. ນັກຮຽນ ມ3   ຂ. ນັກຮຽນ ມ2

   ຄ. ນັກຮຽນ ມ1   ງ. ນັກຮຽນ ປ5

3. **ການອ່ານລະດັບ 250 ຄຳ/ນາທີແມ່ນການອ່ານລະດັບໃດ ?**

   ກ. ຊ້າ   ຂ. ທຳມະດາ

   ຄ. ໄວທຳມະດາ   ໄວຫຼາຍ

4. **ການອ່ານລະດັບ 250-350 ຄຳ/ນາທີແມ່ນການອ່ານລະດັບໃດ ?**

   ກ. ຊ້າ   ຂ. ທຳມະດາ

   ຄ. ໄວທຳມະດາ   ງ. ໄວຫຼາຍ

5. **ການອ່ານທີ່ມີຄວາມໄວສູງ, ກາງ ແລະຕ່ຳ. ແມ່ນຫຍັງ ?**

   ກ. ການເຝິກອ່ານ   ຂ. ການປັບປຸງອັດຕາຄວາມໄວຂອງການ
ອ່ານ

   ຄ. ການທົດສອບຄວາມໄວຂອງການອ່ານ ງ. ຂັ້ນຕອນການອ່ານ

6. **ການອ່ານເພື່ອຄວາມເພີດເພີນ, ແມ່ນກົງກັບຂໍ້ໃດ ?**

   ກ. ຄວາມໄວສູງ   ຂ. ໄວປານກາງ

   ຄ. ໄວລະດັບຕ່ຳ   ງ. ການທົດສອບຄວາມໄວ

7. **ອ່ານເອົາເລື່ອງເພື່ອຈັບໃຈຄວາມ, ແມ່ນການອ່ານລະດັບໃດ ?**

   ກ. ລະດັບສູງ   ຂ. ລະດັບປານກາງ

   ຄ. ລະດັບຕ່ຳ   ງ. ລະດັບຊ້າ

8. **ການອ່ານລະດັບ 350-500 ຄຳ/ນາທີແມ່ນການອ່ານລະດັບໃດ ?**

   ກ. ຊ້າ   ຂ. ທຳມະດາ

   ຄ. ໄວທຳມະດາ   ງ. ໄວຫຼາຍ

# ໃບສະເຫຼີຍແບບທົດສອບ 3

1. ຂ
2. ຄ
3. ກ
4. ຂ
5. ຂ
6. ກ
7. ຂ
8. ກ

# ແຜນການສອນທີ 4

ວິຊາພາສາລາວ 2 ຫ້ອງປີ 1. ຂ. 12+4 ພ/ວ

ບົດທີ 4 ການອ່ານໃນໃຈ (ຕໍ່) ວັນທີ......./......./2014

ຫົວຂໍ້: ການເຝິກອ່ານໃນໃຈ ເວລາ 100 ນາທີ

**1. ໃຈຄວາມສຳຄັນ**

ການເຝິກອ່ານໃນໃຈເປັນການອ່ານທີ່ຜູ້ອ່ານສາມາດທຳຄວາມເຂົ້າໃຈ ແລະ ສະຫຼຸບປະເດັນສຳຄັນ

**2. ຈຸດປະສົງເພື່ອໃຫ້ນັກສຶກສາມາດ**

-ຮູ້ວິທີຝຶກອ່ານໃນໃຈ

-ຈັບໃຈຄວາມສຳຄັນຂອງເລື່ອງໂຮງໜໍເສດຖາທິລາດ

**3. ເນື້ອໃນ**

**ການເຝິກອ່ານໃນໃຈ**

**ບົດເລື່ອງ: ໂຮງໝໍເສດຖາທິລາດ**

**4. ກິດຈະກຳການຮຽນ-ການສອນ**

**1. ຂັ້ນກະກຽມເນື້ອໃນ (5ນາທີ)**

• ຄູຈັດກຽມເນື້ອໃນບົດຮຽນ, ໃບຄວາມຮູ້, ໃບກິດຈະກຳ, ບົດທົດສອບຍ່ອຍເປັນຕົ້ນ

• ຄູແຈ້ງຈຸດປະສົງໃຫ້ນັກຮຽນຮູ້ວ່າ ການຈັດການຮຽນຮູ້ແບບຮ່ວມມືເທັກນິກ STAD ໂດຍໃຫ້ນັກຮຽນຮູ້ວ່າການຮຽນແບບນີ້ແມ່ນເນັ້ນການຮ່ວມມືກັນເພື່ອຜົນງານຂອງກຸ່ມ, ທຸກຄົນຈະປະຕິບັດໜ້າທີ່ຂອງຕົນເອງຢ່າງສຸດຄວາມສາມາດ ຄູເປັນຜູ້ສັງເກດ ແລະ ໃຫ້ຄຳແນະນຳ ພ້ອມທັງແຈ້ງໃຫ້ຮູ້ວ່າພວກນ້ອງມີຄວາມຮູ້ແນວໃດກ່ຽວກັບການເຝິກອ່ານໃນໃຈ.

**2.ຂັ້ນຈັດກຸ່ມ (5ນາທີ)**

- ຮັບຜິດຊອບຄູແບ່ງນັກຮຽນອອກເປັນ 10 ກຸ່ມໆລະ 4 ຄົນທີ່ມີຄວາມຮູ້ແຕກຕ່າງກັນຄື: ນັກຮຽນເກ່ງ 1 ຄົນ, ກາງ 2 ຄົນ, ອ່ອນ 1 ຄົນ(ໂດຍບໍ່ແມ່ນກຸ່ມເກົ່າ) .

- ຄູໃຫ້ນັກຮຽນຄົ້ນຄວ້າຂໍ້ທີ 4 ຂອງບົດທີ 2 ການຝຶກອ່ານໃນໃຈ ແລະ ອ່ານ ເລື່ອງ ໂຮງໝໍເສດຖາທິລາດເພື່ອຈັບໃຈຄວາມສຳຄັນ ໂດຍໃຫ້ນັກຮຽນແບ່ງວຽກບຸກຄົນ.

- ນັກຮຽນແບ່ງໜ້າທີ່ຮັບຜິດຊອບໃນກຸ່ມ ສະມາຊິກຕ້ອງປ່ຽນໜ້າທີ່ເພື່ອເຝິກຮັບຜິດຊອບ ເຊັ່ນ ປະສານວຽກງານ, ຈົດບັນທຶກ ປະເມີນ ຄົ້ນຫາຄຳຕອບ.

**3.ຂັ້ນສອນ 40ນາທີ)**

- ຄູໃຫ້ນັກຮຽນອ່ານໃບຄວາມຮູ້ທີ 1 ກ່ຽວກັບການເຝິກອ່ານໃນໃຈປະກອບມີບັນຫາໃດແດ່ນັກຮຽນຄົ້ນຄວ້າສົນທະນາຊອກຫາຄຳຕອບໂດຍໃຫ້ນັກຮຽນແບ່ງວຽກກັນຮັບຜິດຊອບ

- ຄູມອບໃບກິດຈະກຳ 1 ໃຫ້ແຕ່ລະກຸ່ມຊອກຫາຄຳຕອບຈາກໃບຄວາມຮູ້ທີ 1

- ນັກສຶກສາຄົ້ນຄວ້າບົດຮຽນ ແລະ ແກ້ກິດຈະກຳ, ຖ້າບຸກຄົນໃດບໍ່ເຂົ້າໃຈ ໃຫ້ເພື່ອນໃນກຸ່ມທີ່ເຂົ້າໃຈອະທິບາຍໃຫ້ໝູ່ໃນກຸ່ມຟັງຈົນເຂົ້າໃຈ. ການອະທິບາຍມີຈຸດປະສົງເພື່ອໃຫ້ສະມາຊິກທຸກຄົນເຂົ້າໃຈບົດຮຽນເປັນຢ່າງດີ ສາມາດເຮັດແບບທົດສອບຍ່ອຍໄດ້ຄະແນນສູງຊ່ວຍໃຫ້ກຸ່ມບັນລຸເປົ້າໝາຍ.

- ຄູຕິດຕາມສັງເກດການເຮັດວຽກແຕ່ລະກຸ່ມ, ສະໜັບສະໜູນ ຕຳນິ, ແນະນຳ ແລະ ຊ່ວຍເຫຼືອສິ່ງເສີມໃຫ້ແຕ່ລະກຸ່ມໃຊ້ຂະບວນການຮຽນແບບຮ່ວມມືກັນຮຽນຮູ້ໂດຍກະຕຸ້ນໃຫ້ນັກຮຽນເກັ່ງຊ່ວຍອະທິບາຍເນື້ອໃນບົດຮຽນໃຫ້ສະມາຊິກໃນກຸ່ມທີ່ຍັງບໍ່ທັນເຂົ້າໃຈ.

- ເມື່ອນັກຮຽນເຮັດກິດຈະກຳແຕ່ລະຕອນສຳເລັດແລ້ວ,ໃຫ້ປ່ຽນກັນກວດຜົນງານຂອງໝູ່ເພື່ອນສະມາຊິກໃນກຸ່ມຈົນຄົບທຸກຄົນ ຖ້າພົບຂໍ້ຜິດພາດໃຫ້ເພື່ອນອະທິບາຍຊ້ຳອີກຈົນເຂົ້າໃຈ.

- ຄູແຈກໃບສະເຫຼີຍຄຳຕອບໃບກິດຈະກຳ ທີ່ນັກຮຽນຮ່ວມກັນແກ້ ໂດຍສັບປ່ຽນກຸ່ມກວດ ຄູໃຫ້ຄຳແນະນຳເນື້ອໃນເພີ່ມເຕີມ

- ນັກຮຽນ ແລະ ຄູຊ່ວຍກັນສະຫຼຸບບົດຮຽນ ຖ້າມີສິ່ງທີ່ນັກຮຽນຍັງບໍ່ເຂົ້າໃຈຄູອະທິບາຍເພີ່ມເຕີມ ແລະ ຜູ້ຮຽນຊ່ວຍກັນປະເມີນຜົນ ການເຮັດວຽກເປັນກຸ່ມ ແລະ ພິຈາລະນາວ່າແມ່ນສິ່ງໃດທີ່ເປັນຈຸດເດັ່ນຂອງການເຮັດວຽກຮ່ວມກັນ ແລະ ແມ່ນສິ່ງໃດຄືສິ່ງທີ່ຄວນປັບປຸງ.

**4. ຂັ້ນທົດສອບຍ່ອຍ ( 20ນາທີ)**

-ຄູທົດສອບນັກຮຽນໂດຍມີແບບທົດສອບໃຫ້ແຕ່ລະຄົນເຮັດໂດຍບໍ່ຊ່ວຍເຫຼືອກັນ, ເພື່ອວັດຄວາມຮູຄວາມເຂົ້າໃຈເນື້ອໃນບົດຮຽນ.

-ຄູບັນທຶກຄະແນນເປັນລາຍບຸກຄົນ ແລະ ລວມເປັນຄະແນນກຸ່ມໂດຍລຽງຄະແນນແຕ່ຫຼາຍຫາໜ້ອຍ

**5. ຂັ້ນຮັບຮອງຜົນງານ ແລະມອບລາງວັນ (30ນາທີ)**

- ຄູ ແລະ ນັກຮຽນພ້ອມກັນຕອບແບບທົດສອບ ພ້ອມທັງລວມຄະແນນໂດຍເອົາຄະແນນແຕ່ລະຄົນຂອງສະມາຊິກມາບວກເຂົ້າກັນ ແລ້ວຫານຈຳນວນຄົນໃນກຸ່ມ.

- ຄູປະກາດຄະແນນບຸກຄົນ ແລະ ຄະແນນກຸ່ມໃຫ້ນັກຮຽນຮັບຮູ້, ຊົມເຊີຍ, ຍົກຍ້ອງ, ຫຼື ມອບລາງວັນບຸກຄົນ ແລະ ກຸ່ມທີໄດ້ຄະແນນສູງເພື່ອໃຫ້ນັກຮຽນແຕ່ລະຄົນຮັບຮູ້ຄະແນນຕົນເອງ ແລະ ຄະແນນຂອງກຸ່ມ ເພື່ອນຳໄປແກ້ໄຂປັບປຸງພັດທະນາຕົນເອງຕໍ່ໄປ.

- **ສື່ປະກອບການສອນ ແລະ ແຫຼ່ງການຮຽນຮູ້**

1. ປຶ້ມແບບຮຽນພາສາລາວ 2 2 .ໃບສະເຫຼີຍຄຳຕອບກິດຈະກຳ 1 3. ບົດທົດສອບຍ່ອຍ 1
4. ໃບກິດຈະກຳ 1 6. ໃບສະເຫຼີຍຄຳຕອບແບບທົດສອບຍ່ອຍ 4.ໃບຄວາມຮູ້

# ໃບຄວາມຮູ້ 4

**1. ການເຝິກອ່ານໃນໃຈ**

ການເຝິກອ່ານໃນໃຈແມ່ນການອ່ານທີ່ຜູ້ອ່ານສາມາດທຳຄວາມເຂົ້າໃຈ ແລະ ສະຫຼຸບປະເດັນສຳຄັນຂອງເລື່ອງໄດ້ຢ່າງຖືກຕ້ອງວ່ອງໄວພາຍໃນສະໝອງຂອງຕົນ, ໂດຍບໍ່ເປັ່ງສຽງອອກມາ. ການອ່ານອອກສຽງ ຫຼື ການອ່ານໃນໃຈໄດ້ຫຼາຍ ຫຼື ໜ້ອຍນັ້ນແມ່ນຂຶ້ນກັບຄວາມໄວໃນການອ່ານເປັນສຳຄັນ.

• ວິທີເຝິກອ່ານໃຫ້ວ່ອງໄວ ແລະ ມີປະສິດທິພາບມີດັ່ງນີ້

- ອ່ານຂໍ້ຄວາມງ່າຍໆບໍ່ມີຄຳສັບຫຼາຍ
- ຈັບເວລາໃນການອ່ານຂໍ້ຄວາມນັ້ນ
- ຕັ້ງຄຳຖາມໆຕົນເອງກ່ຽວກັບເລື່ອງຕ່າງໆ ຫຼື ຂໍ້ຄວາມນັ້ນ
- ຕອບຄຳຖາມໄດ້ຫຼາຍ, ໜ້ອຍພຽງໃດ
- ອ່ານຂໍ້ຄວາມນັ້ນລື້ມຄືນ, ພະຍາຍາມໃຊ້ເວລາໃຫ້ໜ້ອຍກ່ວາຄັ້ງທຳອິດ
- ຕອບຄຳຖາມທີ່ຕັ້ງໄວ້ໃນຂໍ້ທີ 3 ອີກຄັ້ງໜຶ່ງວ່າຕອບໄດ້ດີກວ່າຄັ້ງກ່ອນ ຫຼື ບໍ່ ຫາກປະຕິບັດເຖິງ 6 ຂໍ້ແລ້ວປະກົດວ່າຕອບຄຳຖາມໄດ້ຫຼາຍຂຶ້ນ ແລະ ໃຊ້ເວລາການອ່ານໜ້ອຍລົງກໍສາມາດອ່ານໄດ້ໄວຂຶ້ນ. ຈາກນັ້ນກໍຊອກບົດຄວາມທີ່ຍາກຂຶ້ນມາເຝິກອ່ານຕໍ່ໄປເລື້ອຍໆຕາມລຳດັບ

**ບົດເລື່ອງ: ໂຮງໝໍເສດຖາທິລາດ**

ໂຮງໝໍເສດຖາທິລາດຕັ້ງຢູ່ນະຄອນຫຼວງວຽງຈັນແມ່ນໂຮງໝໍແຫ່ງທຳອິດຂອງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໄດ້ສຳເລັດການຜ່າຕັດກະໂຫຼກຫົວຂອງຄົນເຈັບທີມີເລືອດຕົກຄ້າງຢູ່ເຍື່ອສະໝອງອັນເນື່ອງມາຈາກຖືກກະທົບຢ່າງແຮງຍ້ອນເກີດອຸປະຕິເຫດຕາມທ້ອງຖະໜົນ.

ເວລາ 11:30 ນາທີ ຂອງວັນທີ 27 ກໍລະກົດໄດ້ມີຄົນເຈັບມາປິ່ນປົວຢູ່ໂຮງໝໍເຊດຖາທິລາດຄົນເຈັບດັ່ງກ່າວຖືກອຸປະຕິເຫດລົດຕຳ ພາຍຫຼັງການສ່ອງໄຟຟ້າແລ້ວໄດ້ເຫັນກ້ອນເລືອດຕົກຄ້າງຢູ່ໃນສະໝອງ, ມາເຖິງວັນທີ 2 ສິງຫານີ້ຄົນເຈັບໄດ້ເຂົ້າຮັບການຜ່າຕັດກະໂຫຼກຫົວ ແລະ ມາເຖິງວັນທີ 3 ສິ່ງຫາຄົນເຈັບຈຶ່ງຢູ່ໃນສະພາບປົກກະຕິໂດຍອາການດີຂຶ້ນ ແລະ ສາມາດກິນເຂົ້າໄດ້.

ຜົນສຳເລັດດັ່ງກ່າວເປັນສິ່ງຢັ້ງຢືນໃຫ້ເຫັນຄວາມສາມາດຂອງພະນັກງານແພດລາວທີ່ໄດ້ເອົາໃຈໃສ່ກອບກູ້ຊ່ວຍເຫຼືອຊີວິດຂອງຄົນເຈັບ ແລະ ຄວາມກ້າວໜ້າໃນວົງການແພດລາວໂດຍບໍ່ຈຳເປັນໄປປິ່ນປົວຢູ່ຕ່າງປະເທດ ແລະ ທັງປະຢັດລາຍຈ່າຍອີກດ້ວຍ.

# ໃບກິດຈະກຳ 4

1. ການເຝິກອ່ານໃນໃຈປະກອບມີຫຍັງແດ່ ?

ກ.......................................................................................................................

ຂ.......................................................................................................................

ຄ.......................................................................................................................

ງ.......................................................................................................................

ຈ.......................................................................................................................

ສ.......................................................................................................................

2. ເນື້ອໃນລວມຂອງເລື່ອງໂຮງໝໍເສດຖາທິລາດເວົ້າເຖິງຫຍັງແດ່ ?

.........................................................................................................................

.........................................................................................................................

.........................................................................................................................

3. ເລື່ອງໂຮງໝໍເສດຖາທິລາດສຶກສາໃຫ້ເຮົາຮູ້ບັນຫາໃດ ?

.........................................................................................................................

.........................................................................................................................

4.ໂຮງໝໍເສດຖາທິລາດຕັ້ງຢູ່ໃສ?

.........................................................................................................................

5. ບັນຫາຕົ້ນຕໍ່ຂອງເລື່ອງໂຮງໝໍເສດຖາທິລາດແມ່ນຫຍັງ ?

.........................................................................................................................

6. ເວລາຈັກໂມງຂອງວັນທີ, ເດືອນໃດ ຄົນເຈັບເຂົ້າມາປິ່ນປົວຢູ່ໂຮງໝໍເສດຖາທິລາດ ?

# ໃບສະເຫຼີຍກິດຈະກຳ 4

ກ. ອ່ານຂໍ້ຄວາມງ່າຍໆບໍ່ມີຄຳສັບຫຼາຍ

ຂ. ຈັບເວລາໃນການອ່ານຂໍ້ຄວາມນັ້ນ

ຄ. ຕັ້ງຄຳຖາມໆຕົນເອງກ່ຽວກັບເລື່ອງຕ່າງໆ ຫຼື ຂໍ້ຄວາມນັ້ນ

ງ. ຕອບຄຳຖາມໄດ້ຫຼາຍ, ໜ້ອຍພຽງໃດ

ຈ. ອ່ານຂໍ້ຄວາມນັ້ນລື້ມຄືນ, ພະຍາຍາມໃຊ້ເວລາໃຫ້ໜ້ອຍກວ່າຄັ້ງທຳອິດ

ສ. ຕອບຄຳຖາມທີ່ຕັ້ງໄວ້ໃນຂໍ້ທີ 3 ອີກຄັ້ງໜຶ່ງວ່າຕອບໄດ້ດີກວ່າຄັ້ງກ່ອນ ຫຼື ບໍ່

2.ເນື້ອໃນລວມຂອງເລື່ອງໂຮງໝໍເສດຖາທິລາດເວົ້າເຖິງການຜ່າຕັດກະໂຫຼກຫົວຄົນເຈັບທີ່ຖືກອຸປະຕິເຫດ ລົດຕຳ

3.ເລື່ອງໂຮງໝໍເສດຖາທິລາດສຶກສາໃຫ້ເຮົາຮູ້ກ່ຽວກັບການເກີດອຸປະຕິເຫດ, ຮູ້ຄວາມສາມາດຂອງແພດລາວ ເຮົາ

ແລະ ບໍ່ຈຳເປັນທີ່ຈະໄປປິ່ນປົວຢູ່ຕ່າງປະເທດ

4. ຕັ້ງຢູ່ກຳແພງນະຄອນຫຼວງວຽງຈັນ

5. ຄວາມສາມາດໃນການຜ່າຕັດກະໂຫຼກຫົວທີ່ຖືກກະທົບ

6. ເວລາ 11:30 ນາທີ ຂອງວັນທີ 27 ກໍລະກົດ

# ໃບທົດສອບ 4

**1. ຢາກເຝິກການອ່ານໃນໃຈເຮົາຈະຕ້ອງ**

**ກ.** ອ່ານບໍ່ອອກສຽງ, ອ່ານດ້ວຍຄວາມຕັ້ງໃຈ ຂ. ອ່ານບໍ່ອອກສຽງ, ຈົດບັນທຶກຂໍ້ຄວາມທີ່ສຳຄັນ

ຄ. ອ່ານເລື່ອງງ່າຍ, ຈັບເວລາ, ຕັ້ງຄຳຖາມ, ຕອບຄຳຖາມ ງ. ອ່ານເລື່ອງງ່າຍ, ອ່ານຊ້ຳ, ຈັບ ໃຈຄວາມ**2. ການອ່ານທີ່ໃຊ້ຫຼາຍກ່ວາໝູ່ ແລະ ດົນນານກ່ວາແມ່ນ**

ກ. ການອ່ານອອກສຽງ ຂ. ການອ່ານໃນໃຈ

ຄ. ການອ່ານຊ້ຳ ງ. ການອ່ານທຳມະດາ

**3.ການອ່ານໃນໃຈມີຈັກລະດັບຂັ້ນ**

ກ. ມີ 1 ລະດັບຂັ້ນ ຂ. ມີ 2 ລະດັບຂັ້

ຄ. ມີ 3 ລະດັບ ງ. ມີ 4 ລະດັບຂັ້ນ

**4.ຢູ່ໃນ 4 ທັກສະພາສາລາວທັກສະໃດແມ່ນທັກສະທີເນັ້ນການຮຽນຮູ້**

**ກ.** ທັກສະການຂຽນ, ຟັງ ຂ. ທັກສະການອ່ານ, ຂຽນ

**ຄ.** ທັກສະການເວົ້າ, ຟັງ ງ. ທັກສະການຟັງ, ອ່ານ

**5.ຢູ່ໃນ 4 ທັກສະພາສາລາວທັກສະໃດແມ່ນທັກສະສະແດງອອກຂອງການຮຽນຮູ້**

**ກ.** ການເວົ້າ ແລະ ການຂຽນ ຂ. ການຟັງ ແລະ ການອ່ານ

**ຄ.** ການຂຽນ ແລະ ການອ່ານ ງ. ການການເວົ້າ ແລະ ການຟັງ

**6. ໃຈຄວາມສຳຄັນຂອງບົດເລື່ອງ ໂຮງໜໍເສດຖາທິລາດແມ່ນ**

ກ. ການເກີດອຸປະຕິເຫດຢູ່ກາງທະໜົນ ຂ. ເວົ້າເຖິງຄວາມສຳເລັດໃນການຜ່າຕັດຂອງແພດລາວ

ຄ. ການປິ່ນປົວຄົນເຈັບຂອງແພດລາວງ. ເວົ້າເຖິງຄວາມອາດສາມາດຂອງແພດລາວ

**7. ເລື່ອງໂຮງໜໍເສດຖາທິລາດ ອຸປະຕິເຫດເກີດຂຶ້ນເວລາຈັກໂມງ**

ກ. ເວລາ 10 ໂມງ30 ນາທີ ວັນທີ 27 ກໍລະກົດຂ. ເວລາ 12:30ໂມງ ວັນທີ 27/7

ຄ. ເວລາ 11 ໂມງ30 ນາທີ ວັນທີ 27 ກໍລະກົດ ງ.ເວລາ 1:30ໂມງ ວັນທີ 27/7

**8. ເລື່ອງໂຮງໜໍເສດຖາທິລາດຜູ້ຂຽນຢາກໃຫ້ຄົນລາວຮູ້ເຖິງບັນຫາໃດ ?**

ກ. ອັນຕະລາຍຂອງອຸປະຕິເຫດ ຂ. ຮູ້ເຖິງຄວາມສາມາດຂອງແພດລາວ

ຄ. ອາການຂອງຄົນເຈັບດີຂຶ້ນ ງ. ໂຮງໜໍເສດຖາທິລາດໄດ້ເປີດບໍລິການແລ້ວ

# ໃບຄຳຕອບ 4

1. ຄ
2. ຂ
3. ຂ
4. ງ
5. ກ
6. ຂ
7. ຄ
8. ຂ

# ແຜນການສອນທີ 5

ວິຊາພາສາລາວ 2 ຫ້ອງ ປີ 1. ຂ. 12+4 ພ.ວ

ບົດທີ 5 ການອ່ານໃນໃຈ (ຕໍ່) ວັນທີ......./......./2014

ຫົວຂໍ້:ທົດສອບຄວາມໄວໃນການອ່ານໃນໃຈ ເວລາ 100 ນາທີ

**1. ໃຈຄວາມສຳຄັນ**

• ປະຫັວດສາດແຫ່ງການຂະຫຍາຍຕົວຂອງຊົນເຜົ່າລື້ມີການພົວພັນຢ່າງສະໜິດແໜ້ນກັບປະຫວັດສາດແຫ່ງການຂະຫຍາຍຕົວຂອງຊາດລາວ.

**2. ຈຸດປະສົງ ເພື່ອໃຫ້ນັກສຶກສາສາສາມາດ**

-ເພື່ອຈັບໃຈຄວາມສຳຄັນຂອງເລື່ອງຄວາມເປັນມາຂອງຊົນເຜົ່າລື້

**3. ເນື້ອໃນ**

- **ທົດສອບຄວາມໄວໃນການອ່ານໃນໃຈ**

- ບົດເລື່ອງຄວາມເປັນມາຂອງຊົນເຜົ່າລື້

**• ກິດຈະກຳການຮຽນ-ການສອນ**

**1. ຂັ້ນຕຽມເນື້ອໃນ (5 ນາທີ)**

• ຄູຈັດກຽມເນື້ອໃນບົດຮຽນ, ໃບຄວາມຮູ້, ໃບກິດຈະກຳ, ບົດທົດສອບຍ່ອຍເປັນຕົ້ນ

• ຄູແຈ້ງຈຸດປະສົງໃຫ້ນັກຮຽນຮູ້ວ່າ ການຈັດການຮຽນຮູ້ແບບຮ່ວມມືເທັກນິກ STAD ໂດຍໃຫ້ນັກຮຽນຮູ້ວ່າການຮຽນແບບນີ້ແມ່ນເນັ້ນການຮ່ວມມືກັນເພື່ອຜົນງານຂອງກຸ່ມ, ທຸກຄົນຈະປະຕິບັດໜ້າທີ່ຂອງຕົນເອງຢ່າງສຸດຄວາມສາມາດ ຄູເປັນຜູ້ສັງເກດ ແລະ ໃຫ້ຄຳແນະນຳ ພ້ອມທັງແຈ້ງໃຫ້ຮູ້ວ່າພວກນ້ອງມີຄວາມຮູ້ແນວໃດກ່ຽວກັບບັນຫາໃນການອ່ານໃນໃຈ.

**2. ຂັ້ນຈັດກຸ່ມ (5 ນາທີ)**

- ຄູແບ່ງນັກຮຽນອອກເປັນ 10 ກຸ່ມໆລະ 4 ຄົນທີ່ມີຄວາມຮູ້ແຕກຕ່າງກັນຄື: ນັກຮຽນເກ່ງ 1 ຄົນ, ກາງ 2 ຄົນ, ອ່ອນ 1 ຄົນ(ໂດຍບໍ່ແມ່ນກຸ່ມເກົ່າ) .

-ຄູຢາຍບົດເລື່ອງຄວາມເປັນມາຂອງຊົນເຜົ່າລື້ໃຫ້ນັກຮຽນອ່ານ ເພື່ອຈັບໃຈຄວາມສຳຄັນ ໂດຍໃຫ້ນັກຮຽນແບ່ງວຽກບຸກຄົນຮັບຜິດຊອບ.

- ນັກຮຽນແບ່ງໜ້າທີ່ຮັບຜິດຊອບໃນກຸ່ມ ສະມາຊິກຕ້ອງປ່ຽນໜ້າທີ່ເພື່ອເຝິກຮັບຜິດຊອບ ເຊັ່ນ ປະສານວຽກງານ, ຈົດບັນທຶກ ປະເມີນ ຄົ້ນຫາຄຳຕອບ.

**3. ຂັ້ນສອນ (40 ນາທີ)**

- ຄູໃຫ້ນັກຮຽນອ່ານໃບຄວາມຮູ້ທີ 1 ກ່ຽວກັບເລື່ອງຄວາມເປັນມາຂອງຊົນເຜົ່າລື້ປະກອບມີບັນຫາໃດແດ່ນັກຮຽນຄົ້ນຄວ້າສົນທະນາຊອກຫາຄຳຕອບໂດຍໃຫ້ນັກຮຽນແບ່ງວຽກກັນຮັບຜິດຊອບ

- ຄູມອບໃບກິດຈະກຳ 1 ໃຫ້ແຕ່ລະກຸ່ມຊອກຫາຄຳຕອບຈາກໃບຄວາມຮູ້ທີ 1

-ນັກສຶກສາຄົ້ນຄວ້າບົດຮຽນ ແລະ ແກ້ກິດຈະກຳ, ຖ້າບຸກຄົນໃດບໍ່ເຂົ້າໃຈ ໃຫ້ເພື່ອນໃນກຸ່ມທີ່ເຂົ້າໃຈອະທິບາຍໃຫ້ໝູ່ໃນກຸ່ມຟັງຈົນເຂົ້າໃຈ. ການອະທິບາຍມີຈຸດປະສົງເພື່ອໃຫ້ສະມາຊິກທຸກຄົນເຂົ້າໃຈບົດຮຽນເປັນຢ່າງດີ ສາມາດເຮັດແບບທົດສອບຍ່ອຍໄດ້ຄະແນນສູງຊ່ວຍໃຫ້ກຸ່ມບັນລຸເປົ້າໝາຍ.

- ຄູຕິດຕາມສັງເກດການເຮັດວຽກແຕ່ລະກຸ່ມ, ສະໜັບສະໜູນ ຕຳນິ, ແນະນຳ ແລະ ຊ່ວຍເຫຼືອສົ່ງເສີມໃຫ້ແຕ່ລະກຸ່ມໃຊ້ຂະບວນການຮຽນແບບຮ່ວມມືກັນຮຽນຮູ້ໂດຍກະຕຸ້ນໃຫ້ນັກຮຽນເກັ່ງຊ່ວຍອະທິບາຍເນື້ອໃນບົດຮຽນໃຫ້ສະມາຊິກໃນກຸ່ມທີຍັງບໍ່ທັນເຂົ້າໃຈ.

- ເມື່ອນັກຮຽນເຮັດກິດຈະກຳແຕລະຕອນສຳເລັດແລ້ວ,ໃຫ້ປ່ຽນກັນກວດຜົນງານຂອງໝູ່ເພື່ອນສະມາຊິກໃນກຸ່ມຈົນຄົບທຸກຄົນ ຖ້າພົບຂໍ້ຜິດພາດໃຫ້ເພື່ອນອະທິບາຍຊ້ຳອີກຈົນເຂົ້າໃຈ.

- ຄູແຈກໃບສະເຫຼີຍຄຳຕອບໃບກິດຈະກຳ ທີນັກຮຽນຮ່ວມກັນແກ້ ໂດຍສັບປ່ຽນກຸ່ມກວດ ຄູໃຫ້ຄຳແນະນຳເນື້ອໃນເພີ່ມເຕີມ.

- ນັກຮຽນ ແລະ ຄູຊ່ວຍກັນສະຫຼຸບບົດຮຽນ ຖ້າມີສິ່ງທີ່ນັກຮຽນຍັງບໍ່ເຂົ້າໃຈຄູອະທິບາຍເພີ່ມເຕີມ ແລະ ຜູ້ຮຽນຊ່ວຍກັນປະເມີນຜົນ ການເຮັດວຽກເປັນກຸ່ມ ແລະ ພິຈາລະນາວ່າແມ່ນສິ່ງໃດທີ່ເປັນຈຸດເດັ່ນຂອງການເຮັດວຽກຮ່ວມກັນ ແລະ ແມ່ນສິ່ງໃດຄືສິ່ງທີ່ຄວນປັບປຸງ.

**4. ຂັ້ນທົດສອບຍ່ອຍ (20ນາທີ)**

- ຄູທົດສອບນັກຮຽນໂດຍມີແບບທົດສອບໃຫ້ແຕ່ລະຄົນເຮັດໂດຍບໍ່ຊ່ວຍເຫຼືອກັນ, ເພື່ອວັດຄວາມຮູ້, ຄວາມເຂົ້າໃຈເນື້ອໃນບົດຮຽນ.

- ຄູບັນທຶກຄະແນນເປັນລາຍບຸກຄົນ ແລະ ລວມເປັນຄະແນນກຸ່ມໂດຍລຽງຄະແນນແຕ່ຫຼາຍຫາໜ້ອຍ.

**5. ຂັ້ນຮັບຮອງແລະມອບລາງວັນ (30ນາທີ)**

- ຄູ ແລະ ນັກຮຽນພ້ອມກັນຕອບແບບທົດສອບ ພ້ອມທັງລວມຄະແນນໂດຍເອົາຄະແນນແຕ່ລະຄົນຂອງສະມາຊິກມາບວກເຂົ້າກັນ ແລ້ວຫານຈຳນວນຄົນໃນກຸ່ມ.

- ຄູປະກາດຄະແນນບຸກຄົນ ແລະ ຄະແນນກຸ່ມໃຫ້ນັກຮຽນຮັບຮູ້, ຊົມເຊີຍ, ຍົກຍ້ອງ, ຫຼື ມອບລາງວັນບຸກຄົນ ແລະ ກຸ່ມທີ່ໄດ້ຄະແນນສູງເພື່ອໃຫ້ນັກຮຽນແຕ່ລະຄົນຮັບຮູ້ຄະແນນຕົນເອງ ແລະ ຄະແນນຂອງກຸ່ມ ເພື່ອນຳໄປແກ້ໄຂປັບປຸງພັດທະນາຕົນເອງຕໍ່ໄປ.

- **ສື່ປະກອບການສອນ ແລະ ແຫຼ່ງການຮຽນຮູ້**

1. ປຶ້ມແບບຮຽນພາສາລາວ 2 2 .ໃບສະເຫຼີຍຄຳຕອບກິດຈະກຳ 1
3. ໃບກິດຈະກຳ 1 4. ໃບສະເຫຼີຍຄຳຕອບແບບທົດສອບຍ່ອຍ
5. ບົດທົດສອບຍ່ອຍ 1 6. ໃບຄວາມຮູ້ 1

# ໃບຄວາມຮູ້ 5

ບົດເລື່ອງຄວາມເປັນມາຂອງຊົນເຜົ່າລື້

ເມື່ອສະຕະວັດທີ VI-VII ຊົນເຜົ່າໄຕດໍາຈໍານວນໜຶ່ງໄດ້ເຄື່ອນຍ້າຍຈາກອານາຈັກໜອງແສລົງມາເມືອງຊຽງຮຸ່ງ, ຊຽງຕຸງ ແລະ ເມືອງສິງ ເມື່ອໂຮມສາມເມືອງນີ້ເຂົ້າກັນແລ້ວເອີ້ນວ່າແຄວ້ນສິບສອງປັນນາ.

ຄໍາວ່າ: ສິບສອງປັນນາ ແມ່ນໝາຍເຖິງພື້ນທີ່ນາເຊິ່ງໄດ້ແນວເຂົ້າປູກຫວ່ານລົງໄປເຖິງ 12.000 ຕະລາງ(ກະບຸງໃຊ້ຜອງເຂົ້າເປືອກບັນຈຸໄດ້ 15,5ກິໂລ).

ສິບສອງປັນນານີ້ແມ່ນແຄ້ວນໜຶ່ງໃນປະຫວັດສາດທີ່ເຄີຍມີອໍານາດປົກຄອງຕົນເອງປະກອບດ້ວຍຊາວແປດຫົວເມືອງມີເມືອງຊຽງຮຸ່ງເປັນເມືອງເອກ. ປະຊາຊົນດໍາລົງຊີວິດຢູ່ແຄ້ວນສິບສອງປັນນານີ້ສ່ວນຫຼາຍແມ່ນເຜົ່າລື້ເຊິ່ງມີເຊື້ອສາຍ ແລະ ລາຍລ່ອງອັນດຽວກັນກັບປະຊາຊົນລາວ,ປັດຈຸບັນດິນແດນສິບສອງປັນນາສ່ວນໃຫຍ່ແມ່ນຕົກຢູ່ໃນເຂດປົກຄອງຂອງສາທາລະນະລັດປະຊາຊົນຈີນ.

ໃນແຄ້ວນສິບສອງປັນນາລື້ມີຫຼາຍຊົນເຜົ່າອາໄສຢູ່ເປັນຕົ້ນແມ່ນຊານ(ງ້ຽວ), ເຂີນ ແລະ ລື້. ຊົນເຜົ່າເລົ່ານີ້ລ້ວນແຕ່ສືບເຊື້ອສາຍມາຈາກຊົນຊາດລາວອັນດຽວກັນ. ໃນບັນດາເຜົ່າທີ່ດໍາລົງຊີວິດຢູ່ໃນດິນແດນແຫ່ງນີ້, ລື້ເປັນຊົນເຜົ່າທີ່ມີຈໍານວນ ແລະ ອິດທິພົນຫຼາຍກ່ວາໝູ່ເມືອໄດ້ເຂົ້າມາຕັ້ງຖິ່ນຖານຢູ່ສິບສອງປັນນາແລ້ວ ເຜົ່າລື້ກໍໄດ້ຢູ່ໃກ້ຊິດຕິດແທດກັບຊົນເຜົ່າມອນ-ພະມ້າ ແລະ ອິດທິພົນທາງດ້ານວັດທະນະທໍາຂອງມອນ-ພະມ້າກໍ່ຄ່ອຍໆຊຶມເຂົ້າເທື່ອລະເລັກລະໜ້ອຍ, ດ້ວຍເຫດນັ້ນວັດທະນະທໍາຕ່າງໆຂອງປະຊາຊົນໃນໂຊງເຂດນີ້ຈຶ່ງໄດ້ແບບຢ່າງມາຈາກມອນ-ພະມ້າໂດຍກົງເຊັ່ນ ມີວັດວາອາລາມ, ມີພະສົງສາມະເນນບວດຮຽນຂຽນອ່ານ, ມີການເຮັດບຸນສິນກິນທານ ແລະ ມີຄໍາພິທີກາຕ່າງໆ.

ຢູ່ໃນລາວ, ລື້ກໍແມ່ນຊົນເຜົ່າໜຶ່ງທີ່ມີປະຫວັດສາດ ແລະ ສິລະປະວັດທະນະທໍາທີ່ກ້າວໜ້າສົມຄວນ, ນັບແຕ່ສະຕະວັດທີ XVI ເປັນຕົ້ນມາ, ເຜົ່າລື້ໄດ້ມີຜູ້ນໍາຕໍ່ໆກັນມາໃນການສ້າງບ້ານແປງເມືອງ, ພ້ອມກັນຕໍ່ສູ້ສັດຕູຜູ້ຮຸກຮານ ເຊັ່ນສັກດີນາພະມ້າ, ສັກດີນາຈີນ, ສັກດີນາສະຫຍາມໃນເມື່ອກ່ອນ, ສະໄໝມີຜັກນໍາພາ, ຊົນເຜົ່າລື້ກໍໄດ້ເຂົ້າຮ່ວມກັບຊົນເຜົ່າອື່ນຕ້ານກັບຈັກກະພັດຝຣັ່ງ ແລະ ຈັກກະພັດອາເມລິກາ ເຊັ່ນ ເຈົ້າຟ້າຊຽງແຂງ(1820)ເພຍຄໍາ(1912)ເຈົ້າຟ້າລຸງຄໍາ(1915)ພະຍາເມືອງກາງ, ພະຍາເຊກອງ(1945) ແລະ ຜູ້ອື່ນໆ.

ເມື່ອເວົ້າເຖິງປະຫວັດສາດແຫ່ງການຂະຫຍາຍຕົວຂອງຊົນເຜົ່າລື້ແລ້ວແມ່ນມີການພົວພັນຢ່າງສະໜິດແໜ້ນກັບປະຫວັດສາດແຫ່ງການຂະຫຍາຍຕົວຂອງຊາດລາວ. ຈໍານວນພົນລະເມືອງຊົນເຜົ່າລື້ໃນປັດຈຸບັນມີປະມານ 20.000 ຄົນສ່ວນລາຍແມ່ນດໍາລົງຊີວິດຢູ່ 5 ແຂວງພາກເໜືອຂອງລາວ, ສະເພາະເມືອງສິງແຂວງຫຼວງນໍ້າທາເຜົ່າລື້ມີຮອດ 10.000 ກ່ວາຄົນ.

ທາງດ້ານວັດທະນະທໍາສັງຄົມເຜົ່າລື້ແມ່ນມີມູນເຊື້ອດຸໝັ່ນຂະຫັຍນພຽນໃນການເຮັດທູກເຂັນຝາຍ, ມີສິລະປະລວດລາຍທີ່ສວຍງາມ, ການເວົ້າຈາປາໄສທີ່ມີສໍານຽງສຽງເວົ້າອ່ອນຫວານ, ມີນິໄສຖະໜອມຖ່ອມຕົວຮັບແຂກບ້ານແຂກເມືອງ ການນຸ່ງຖືແບບພື້ນເມືອງ, ມີການປະດິດສ້າງລະອຽດ, ປານີດ ແລະ ຈີບງາມ, ນັບຖືສາສະໜາພຸດ, ດ້ານສິລະປະວັນນະຄະດີມີຂັບລື້, ອ່ານໜັງສື ແລະ ມີປີ່ເປັນດົນຕີພື້ນເມືອ

# ໃບກິດຈະກໍາ 5

1. ສິບສອງປັນນາໝາຍເຖິງຫຍັງ ?

........................................................................................................................

........................................................................................................................

........................................................................................................................

2. ບົດຄວາມເປັນມາຂອງຊົນເຜົ່າລື້ເນື້ອໃນລວມເວົ້າເຖິງຫຍັງ?

........................................................................................................................

........................................................................................................................

........................................................................................................................

........................................................................................................................

3. ໃນແຄວ້ນສິບສອງປັນນາລື້ປະກອບມີຊົນເຜົ່າໃດແດ່ ?

........................................................................................................................

........................................................................................................................

........................................................................................................................

4. ແຄວ້ນສິບສອງປັນນາປະກອບມີຈັກຫົວເມືອງ ?

........................................................................................................................

5.ຊື່ເມືອງເອກຂອງແຄວ້ນສິບສອງປັນນາມີຊື່ວ່າແນວໃດ ?

........................................................................................................................

6. ຊົນເຜົ່າລື້ໃນປັດຈຸບັນມີປະມານເທົ່າໃດ ແລະ ດໍາລົງຊີວິດຢູ່ເຂດໃດ ?

........................................................................................................................

7. ນັບແຕ່ສະຕະວັດທີ່ເທົ່າໃດຊົນເຜົ່າລື້ເລີ່ມມີຜູ້ນໍາປົກຄອງ ?

........................................................................................................................

8.ການຕໍ່ສູ້ຂອງຊົນເຜົ່າລື້ໃນປີ 1945 ນໍາພາໂດຍຜູ້ໃດ ?

........................................................................................................................

# ໃບສະເຫຼີຍກິດຈະກຳ 5

1. ຄຳວ່າ: ສິບສອງປັນນາ ແມ່ນໝາຍເຖິງພື້ນທີ່ນາເຊິ່ງໄດ້ແບວເຂົ້າປູກທ່ວານລົງໄປເຖິງ 12.000 ຕະລາງ (ກະບຸງໃຊ້ຜອງເຂົ້າເປືອກບັນຈຸໄດ້ 15,5ກິໂລ).

2. ບົດຄວາມເປັນມາຂອງຊົນເຜົ່າລື້ມີເນື້ອໃນເວົ້າເຖິງປະຫວັດຄວາມເປັນມາ ຂອງຊົນເຜົ່າລື້

3.ໃນແຄ້ວນສິບສອງປັນນາລື້ປະກອບມີຊົນເຜົ່າຄື: ຊົນເຜົ່າຊານ( ງ້ຽວ), ເຂີນ ແລະ ລື້

4.ແຄວ້ນສິບສອງປັນນາປະກອບມີ 28 ຫົວເມືອງ

5.ຊື່ເມືອງເອກຂອງແຄວ້ນສິບສອງປັນນາແມ່ນເມືອງຊຽງຮຸ່ງ

6.ຊົນເຜົ່າລື້ໃນປັດຈຸບັນມີປະມານ 20.000 ຄົນສ່ວນຫຼາຍຢູ່ 5 ແຂວງພາກເໜືອ

7.ນັບແຕ່ສະຕະວັດທີ XVI ຊົນເຜົ່າລື້ເລີ່ມມີຜູ້ປົກຄອງ

8. ການຕໍ່ສູ້ຂອງຊົນເຜົ່າລື້ປີ 1945 ນຳພາໂດຍພະຍາເມືອງກາງ ແລະ ພະຍາເຊກອງ

## ໃບທັດສອບຍ່ອຍທີ 5

1. ຄຳວ່າ ສິບສອງປັນນາແມ່ນ

   ກ. ພື້ນທີ່ນາ    ຂ. ເນື້ອທີ່ນາ

   ຄ. ແນວເຂົ້າປູກ    ງ, ເປັນຊື່ເມືອງເອກ

2. ສິບສອງປັນນາປະກອບມີຈັກຫົວເມືອງ ?

   ກ. 25 ຫົວເມືອງ    ຂ. 26 ຫົວເມືອງ

   ຄ. 27 ຫົວເມືອງ    ງ. 28 ຫົວເມືອງ

3. ເມືອງເອກຂອງສິບສອງປັນນາຊື່ວ່າແນວໃດ ?

   ກ. ສິບສອງປັນນາ    ຂ. ຊຽງຮຸ່ງ

   ຄ. ຊຽງແສນ    ງ. ຊຽງຕຸງ

4. ສິບສອງປັນນາປະກອບມີຊົນເຜົ່າໃດແດ່ ?

   ກ. ງ້ຽວ, ເຂີນ ແລະ ລື້    ຂ. ຍວນ, ມອນລື້

   ຄ. ໄທດຳ, ມອນ ແລະ ລື້    ງ. ໄທດຳ, ເຂີນ, ລື້

5. ສິບສອງປັນນາສ່ວນລາຍຢູ່ໃນການປົກຄອງຂອງປະເທດໃດ ?

   ກ. ປະເທດລາວ    ຂ. ປະເທດຈີນ

   ຄ. ຫວຽດນາມ    ງ. ພະມ້າ

6. **ຊົນເຜົ່າລື້ສ່ວນຫຼາຍໄດ້ຮັບອິດທິພົນທາງດ້ານວັດທະນະທຳມາຈາກ**

   ກ. ຈີນ    ຂ. ລາວ

   ຄ. ຫວຽດນາມ    ງ. ມອນ-ພະມ້າ

7. **ແຄວ້ນສິບສອງປັນນາມີຊື່ເອີ້ນມາຈາກໃສ ?**

   ກ. ການເຕົ້າໂຮມປະຊາຊົນ    ຂ. ພາສາໄທດຳ

   ຄ. ເຕົ້າໂຮມ 3 ເມືອງ    ງ. ເຕົ້າໂຮມ 3 ຊົນເຜົ່າ

8. **ສາມເມືອງມີຊື່ວ່າແນວໃດ ?**

   ກ. ຊຽງແສນ, ຊຽງຮຸ່ງ, ໜອງແສ    ຂ. ຊຽງຮຸ່ງ, ຊຽງຕຸງ, ເມືອງສິງ

   ຄ. ເມືອງສິງ, ໜອງແສ,ຊຽງຕຸງ    ງ. ໜອງແສ, ຊຽງຮຸ່ງ, ຊຽງຕຸງ

# ໃບສະເຫຼີຍຄຳຕອບທີ 5

1. ກ
2. ງ
3. ຂ
4. ກ
5. ຂ
6. ງ
5. ຂ
6. ງ
7. ຄ
8. ຂ

## ແບບທົດ 60 ຂໍ້

## ແຜນການສອນທີ 1 ຈຳນວນ 12 ຂໍ້

**1. ອັນໃດແມ່ນບັນຫາຂອງການອ່ານ**

ກ. ອ່ານບໍ່ເຂົ້າໃຈ ແລະ ອ່ານຊັກຊ້າ ຄ. ສຸຂະພາບ ແລະ ສະພາບແວດລ້ອມ

ຂ. ອຸປະສັກພາຍໃນ ແລະ ອຸປະສັກພາຍນອກ ງ. ຄວາມຢາກຮູ້, ຢາກເຫັນ

**2. ສະຕິປັນຍາ, ສຸຂະພາບ, ສິ່ງແວດລ້ອມ, ຄວາມສົນໃຈ ແລະ ວິທີການອ່ານ ແມ່ນຂໍ້ໃດ**

ກ. ພື້ນຖານຄວາມຮູ້ຂອງຄົນເຮົາ ຂ.ສາເຫດທີ່ພາໃຫ້ມີບັນຫາໃນການອ່ານ

ຄ. ຄວາມສົນໃຈໃນການອ່ານ ງ. ຄວາຕ້ອງການທາງທຳມະຊາດຂອງຄົນ

**3. ຢາກມີສະຕິປັນຍາ ແລະ ຄວາມຮູ້ພື້ນຖານທີ່ດີຕໍ່ກັບເລື່ອງໃດໜຶ່ງເຮົາຈະຕ້ອງ**

ກ. ສຶກສາໃຫ້ລະອຽດ, ອ່ານຫຼາຍໆຄັ້ງ ຂ. ສຶກສາຫຼາຍໆບັນຫາ

ຄ.ຮຽນຫຼາຍໆວິຊາ ງ. ສຶກສາທາງດ້ານວິຊາການ ແລະ ນອກຫຼັກສູດ

**4. ອັນໃດແມ່ນສຸຂະພາບຮ່າງກາຍ**

ກ.ຫົວໃຈວາຍ, ຂ. ຫົວໃຈ ອ່ອນ

ຄ.ໂລກຫົວໃຈ **ງ. ປວດຫົວ**

**5. ອັນໃດແມ່ນສຸຂະພາບຈິດ**

**ກ.** ສາຍຕາສັ້ນ ຫຼື ຍາວ ຂ. ປວດຫົວ, ເຈັບທ້ອງ

**ຄ.**ໂລກຫົວໃຈ, ຫົວໃຈອ່ອນ **ງ.** ອາລົມງຸດງິດ

6. **ອັນໃດແມ່ນແມ່ນສິ່ງແວດລ້ອມ**

ກ. ສຸຂະພາບຮ່າງກາຍ ຄ. ສາຍຕາສັ້ນ

ຂ. ມີສຽງລົບກວນງ. ງ. ຄວາມເຫງົາ

**7. ອັນໃດແມ່ນວິທີການອ່ານ**

ກ. ອ່ານດ້ວຍຄວາມຕັ້ງໃຈ ຂ.ອ່ານຫຼາຍໆຄັ້ງ

